

# ການທົບທວນຍຸດທະສາດ ການຄໍ້າປະກັນ ສະບຽງອາຫານ ແລະ ໂພຊະນາການ ຢູ່ ສປປ ລາວ

ວຽງຈັນ, ກໍລະກົດ 2016

ດຣ. ລີລາວ ບົວປາວ (ຫົວໜ້າທີມ)
ທ່ານ ນາງ ຈັນສຸກ ອິນສຸວັນ
ທ່ານ ນາງ ມີນາວັນ ພົລເສນາ
ທ່ານ ເຈນນີ ອາມສຕຣອງ
ທ່ານ ແມນເຟຣດ ສະຕາບ

Photos: Sengpaseuth Simmanivong (cover page)
Mariko Hall (p.59)
Sarah Rabl (p.15, 27, 32, 48, 61)
Michelle Sanson (p.12, 13, 17, 18, 31, 38, 49, 50, 51,62)
Bouavone Phasouk (p.42, 63)
Aachal Chand (p.30, 52)

ການທົບທວນເອກະລາດ ປະເມີນໂດຍ ອົງການອາຫານໂລກ (WFP)
(ບັນດານັກຂຽນບົດທົບທວນແຫລມນີ້ ເປັນຜູ້ຮັບຜິດຊອບ ຕໍ່ເນື້ອໃນຂອງກາບົດທົບທວນ ແລະ ຄໍາເຫັນທີ່ໄດ້ລະບຸໄວ້ໃນບົດທົບທວນສະບັບນີ້
ບໍ່ແມ່ນຄໍາເຫັນຂອງ ອົງການອາຫານໂລກ, WFP)

# ສາລະບານ


*ສະແດງຄວາມຮູ້ບູນຄຸນ* 5
*ຄຳນຳ* 6
*ບົດສັງເຂບ* 7
*ພາກສະເໜີ* 13

1.1 ການລິເລີ່ມເປົ້າໝາຍການພັດທະນາແບບຍືນຍົງ ຢູ່ ສປປ ລາວ 13
1.2 ການທົບທວນຍຸດທະສາດການວາງແຜນ ແລະ ວິທີການ 15
1.2.1 ການປຶກສາຫາລື ສຳພາດ ກັບບຸກຄົນທີ່ມີບົດບາດສຳຄັນ 16
1.2.2 ການປຶກສາຫາລື ສຳພາດ ຮ່ວມກັບບັນດາແຂວງຕ່າງໆ 16

*ເງື່ອນໄຂໃນການວິເຄາະ* 18

2.1 ເປົ້າໝາຍທີ່ 2 ຂອງການພັດທະນາແບບຍືນຍົນ ໃນການພັດທະນາຂອງສາກົນ 18
2.2 ຄວາມຄືບໜ້າ ຂອງເປົ້າໝາຍທີ່ 2 ໃນ ສປປ ລາວ: ສະພາບໃນປີ 2015 20
2.2.1 ລຶບລ້າງຄວາມອຶດຫິວ ແລະ ຮັບປະກັນການເຂົ້າເຖິງ 22
2.2.2 ລຶບລ້າງການຂາດສານອາຫານທຸກຮູບແບບ 24
2.2.3 ການເພີ່ມສະມັດຕະພາບການຜະລິດ ຂອງຜູ້ຜະລິດສະບຽງອາຫານຂະໜາດນ້ອຍ 25
2.2.4 ຮັບປະກັນການຜະລິດສະບຽງອາຫານ ແລະ ເຮັດກະສິກຳແບບມີຄວາມທົນທານ, ເຊິ່ງຊ່ວຍຮັກສາລະບົບນິເວດ ຕໍ່ກັບ ການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ 27
2.2.5 ຮັກສາຄວາມຫຼາກຫຼາຍດ້ານພັນທຸກຳຂອງແນວພັນພືດ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳ 29
2.3 ສິ່ງທ້າທາຍຂອງໂຄງສ້າງ ສຳລັບການຄຸ້ມຄອງລັດ ຕໍ່ກັບ ວຽກງານ ຄໍ້າປະກັນສະບຽງອາຫານ 30

*ຂໍ້ມູນໃນ ການວິເຄາະ* 35

3.1 ກອບໜ້າວຽກຂອງສະຖາບັນ 33
3.1.1 ຍຸດທະສາດດ້ານໂພຊະນາການແຫ່ງຊາດ ແລະ ແຜນດຳເນີນງານ 2016-2020 37
3.1.2 ຍຸດທະສາດການພັດທະນາກະສິກຳ 2025 ແລະ ວິໄສທັດ 2030 38
3.1.3 ຖະແຫຼງການສະມາຄົມ ອາຊຽນ ຕໍ່ກັບການປົກປ້ອງສັງຄົມ 2013 38
3.1.4 ຍຸດທະສາດແຫ່ງຊາດ ເພື່ອຄວາມສະເໝີພາບ ຕໍ່ກັບ ບົດບາດຍິງ-ຊາຍ 39
3.1.5 ຍຸດທະສາດດ້ານການປ່ຽນແປງດິນຟ້າອາກາດ2010 ແລະ ແຜນດຳເນີນງານແຫ່ງຊາດໃນການປັບຕົວເຂົ້າກັບ ການປ່ຽນ ແປງດິນຟ້າອາກາດ 2009 40
3.1.6 ຍຸດທະສາດອື່ນໆທີ່ກ່ຽວຂ້ອງຂອງລັດຖະບານ 40
3.2 ຄູ່ຮ່ວມພັດທະນາ 42
3.2.1 ກົນໄກການປະສານງານ ຂອງຄະນະກຳມະການແຫ່ງຊາດ ດ້ານໂພຊະນາການ ແລະ ໜ່ວຍງານຂະແໜງການ ຂອງ ກະສິກຳ ແລະພັດທະນາຊົນນະບົດ 44
3.2.2 ອົງການຈັດຕັ້ງທາງສັງຄົມ 45
3.2.3 ການເລັ່ງລັດ ພາຍໃຕ້ລະບົບ ຂອງ ອົງການ ສະຫະປະຊາຊາດ ແລະ ທະນາຄານໂລກ 45
3.2.4 ການມີສ່ວນຮ່ວມຂອງພາກເອກະຊົນໃນ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ 45
3.2.5 ສະຖາບັນການສຶກສາ ແລະ ສະຖາບັນຄົ້ນຄວ້າ 46
3.2.6 ສື່ມວນຊົນ, ການສື່ສານ ແລະ ຂໍ້ມູນສາທາລະນະ 47
3.3 ພື້ນຖານດ້ານງົບປະມານ ໃນການ ຈັດຕັ້ງ ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 48
3.3.1 ການໄຫຼວຽນຂອງ ທຶນຊ່ວຍເຫຼືອເພື່ອການພັດທະນາ: 48
3.3.2 ທຶນຈາກພາກເອກະຊົນ 49
3.3.3 ກອບວຽກງົບປະມານ ສຳລັບ ຈັດຕັ້ງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 49
3.3.4 ຄວາມຍືນຍົງຂອງແຫລ່ງທຶນ 51

*ຊ່ອງວ່າງ ແລະ ຄຳແນະນຳ* 53

4.1 ຮັບປະກັນການເຂົ້າເຖິງ 53
4.2 ລຶບລ້າງການຂາດສານອາຫານ 55
4.3 ການປັບປຸງສະມັດຕະພາບການຜະລິດ 57
4.4 ການຜະລິດສະບຽງອາຫານແບບຍືນຍົງ, ການບໍລິການ ລະບົບນິເວດ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ 59
4.5 ການປົກປ້ອງພັນທຸກຳ ແລະ ຊີວະນາໆພັນ 61
4.6 ການປັບຕົວຂອງລະບົບໂດຍລວມ (ໂດຍເໜັ້ນໃສ່ ຄວາມສະເໝີພາບທາງດ້ານ ບົດບາດ ຍິງ-ຊາຍ, ການປົກປ້ອງສັງຄົມ ແລະການປັບຕົວກັບການປ່ຽນແປງດິນຟ້າອາກາດ) 62

*ການປະສານງານ ແລະ ກອບວຽກໃນການຈັດຕັ້ງປະຕິບັດ* 65

5.1 ການປະສານງານຢູ່ຂັ້ນສູນກາງ 65
5.2 ການແບ່ງຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນ 66
5.3 ອົງການຈັດຕັ້ງສາກົນ ແລະພາກເອກະຊົນ ຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະໂພຊະນາການ 67
5.4 ບົດບາດສຳຄັນດ້ານຍຸດທະສາດ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ 68

*ສັງລວມຫຍໍ້ ຄຳແນະນຳທີ່ສຳຄັນ* 69

ການປຶກສາຫາລື ຮູບແບບສອງຝ່າຍ ແລະ ຂັ້ນແຂວງ 79
ຄຳນິຍາມຄຳສັບ 80
ຄຳຫຍໍ້ 82
ເອກະສານຄົ້ນຄວ້າ 85

# ສະແດງຄວາມຮູ້ບຸນຄຸນ

ຂໍສະແດງຄວາມຂອບໃຈພິເສດ ມາຍັງ ທ່ານຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ (ຜລທ), ດຣ ກິແກ້ວ ຈັນທະບູຣີ, ເຊິ່ງເປັນປະທານຂອງຄະນະຊີ້ນໍາ ນັບແຕ່ຕົ້ນມາຂອງການລາຍງານທຸກຂັ້ນຕອນ ແລະ ໄດ້ໃຫ້ການສະໜັບສະໜູນຢ່າງເອົາໃຈໃສ່  ໃນນາມການທົບທວນ ຍຸດທະສາດ ແລະ ຂັ້ນຕອນຂອງ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຢູ່ ສປປ ລາວ ພວກຂ້າພະເຈົ້າຮັບຮູ້ ແລະ ຂໍສະແດງຄວາມຮູ້ບຸນຄຸນມາຍັງທ່ານ ທີ່ໄດ້ ປະກອບສ່ວນ ສໍາຄັນດັ່ງກ່າວນີ້.

ຂໍສະແດງຄວາມຂອບໃຈຕໍ່ຄໍາແນະນໍາທີ່ສໍາຄັນຈາກຄະນະຊີ້ນໍາວິຊາການ, ໂດຍສະເພາະແມ່ນທ່ານນາງສີສົມບູນອຸນນະວົງ, ຫົວໜ້າກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ; ດຣ ຈັນດາວອນ ໂພໄຊ, ຮອງຫົວໜ້າກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກະຊວງສາທາລະນະສຸກ; ທ່ານ ສະຫວັນ ຫານພົມ, ຮອງຫົວໜ້າກົມແຜນການ ແລະ ການຮ່ວມມື, ກະຊວງກະສິກໍາ ແລະ ປ່າໄມ້; ແລະ ທ່ານ ດາວວີ ວົງໄຊ, ຫົວໜ້າພະແນກ ເສດຖະກິດ ສັງຄົມ ສະຫະປະຊາຊາດ, ກົມຈັດຕັ້ງສາກົນ, ກະຊວງການຕ່າງປະເທດ.

ພ້ອມນີ້ ຂໍສະແດງຄວາມຂອບໃຈມາຍັງ ທ່ານ ມໍລະກົດ ວົງໄຊ, ຫົວໜ້າພະແນກ ສະຫະປະຊາຊາດ, ກົມຮ່ວມມືສາກົນ ຂອງກະຊວງແຜນການ ແລະ ການລົງທຶນ, ບັນດາຄະນະພະແນກ ແລະ ພ້ອມດ້ວຍທີມງານທຸກທ່ານ ທີ່ໄດ້ນໍາພາທີມງານແລະ ຕິດຕາມການທົບທວນ ຢູ່ 17 ແຂວງ ແລະ ອໍານວຍຄວາມສະດວກ ຂັ້ນຕອນໃນການປຶກສາຫາລືຢູ່ຂັ້ນແຂວງ.

ທີມງານທົບທວນ ຂໍສະແດງຄວາມຮູ້ບຸນຄຸນຢ່າງເລິກເຊິ່ງ ມາຍັງ ທ່ານ ນາງ ຄາຣິນນາ ອິມໂມເນັນ (Kaarina Immonen), ຜູ້ຕາງໜ້າ ຫ້ອງການປະສານງານ ອົງການສະຫະ ປະຊາຊາດ ປະຈໍາ ສປປ ລາວ ແລະ ທີມງານຂອງທ່ານ ທີ່ໄດ້ໃຫ້ການສະໜັບສະໜູນຢ່າງເອົາໃຈໃສ່ , ທ່ານ ດຣ ສະຕີເວັນ ຣຸດກາດ (Stephen Rudgard) ຂອງ ອົງການອາຫານ ແລະ ການກະເສດແຫ່ງສະຫະປະຊາຊາດ (FAO) ແລະ ທ່ານ ນາງ ດຣ ວິອໍຣິກາ ເບີດາກາ (Viorica Berdaga) ຈາກອົງການ ສປຊ ສໍາລັບເດັກ UNICEF ທີ່ໄດ້ປະກອບຄໍາເຫັນທີ່ເລິກເຊິ່ງ ຕະຫຼອດໄລຍະການທົບທວນ.

ຂໍສະແດງຄວາມຂອບໃຈມາຍັງອົງການອາຫານໂລກ (WFP), ຫົວໜ້າພາກພື້ນ ທ່ານ ດຣ ເດວິດ ກາຕຣຸດ (David Kaatrud) ທີ່ໄດ້ເຂົ້າຮ່ວມໃນການປຶກສາ ຫາລື ຕ່າງໆຢູ່ຂັ້ນສູນກາງ, ແລະ ທີມງານອົງການ ອາຫານໂລກ ປະຈໍາ ສປປ ລາວ ທີ່ໄດ້ໃຫ້ການສະໜັບສະໜູນແກ່ທີມງານ ໃນການທົບທວນຢ່າງເອົາຈິງເອົາຈັງ. ຂໍສະແດງຄວາມຮູ້ບຸນຄົນມາຍັງ ທ່ານນາງ ຊາວເວີ້ຍ ລີ່ (Hsiao-Wei Lee) ແລະ ທ່ານ ຄຣິສໂຕເຟີ້ ຮອບວູດ (Christopher Hopwood) ຈາກ ໜ່ວຍງານນະໂຍບາຍຂອງ ອົງການອາຫານໂລກ ຢູ່ ກຸງໂຣມ ທີ່ໃຫ້ ແນວຄວາມຄິດທີ່ເປັນປະໂຫຍດຕ່າງໆ. ສຸດທ້າຍນີ້ ຂໍສະແດງ ຄວາມຂອບໃຈຢ່າງສຸດຊຶ້ງ ຕໍ່ການປະກອບສ່ວນທີ່ເຂັ້ມແຂງຂອງຜູ້ອໍານວຍການ ແລະ ທັງເປັນຜູ້ຕາງໜ້າ ອົງການ ອາຫານໂລກ ປະຈໍາ ສປປລາວ ທ່ານນາງ ຊາຣາ ກໍເດີນ ກິບສັນ (Sarah Gordon-Gibson) ທີ່ມີບົດບາດສໍາຄັນໃນຂັ້ນຕອນການທົບທວນ ນັບແຕ່ຂັ້ນຕອນເລີ້ມຕົ້ນຈົນເຖິງຂັ້ນຕອນສຸດທ້າຍ.

ບົດລາຍງານສະບັບນີ້ ສາມາດສ້າງຂຶ້ນໄດ້ສໍາເລັດດ້ວຍດີ ຍ້ອນຄວາມພະຍາຍາມຂອງບັນດາທ່ານທີ່ໄດ້ກ່າວມາຂ້າງເທິງນັ້ນ, ລວມທັງບັນດາທ່ານອື່ນໆ ຈໍານວນຫຼາຍຮ້ອຍຄົນ ທີ່ໄດ້ສະລະເວລາເພື່ອແລກປ່ຽນແນວຄວາມຄິດກັບທີມງານທົບທວນ ໃນທຸກໆ ຂັ້ນຕອນຂອງຂະບວນ ການປຶກສາຫາລື. ບົດລາຍງານສະບັບນີ້ແມ່ນໄດ້ສ້າງຂຶ້ນບົນພື້ນຖານຄໍາຄິດເຫັນທີ່ເລິກເຊິ່ງຂອງພາກສ່ວນກ່ຽວຂ້ອງເຊິ່ງພວກເຮົາ ຂໍສະແດງຄວາມຮູ້ບຸນຄຸນຢ່າງຍິ່ງມາຍັງທຸກທ່ານ.

ຂໍສະແດງຄວາມຮູ້ບຸນຄຸນຕໍ່ການສະໜັບສະໜູນທາງດ້ານການເງິນຈາກ ອົງການອາຫານໂລກ.

# *ຄຳນຳ*

ໃນເດືອນພະຈິກ 2015, ກົມຮ່ວມມືສາກົນ ຂອງກະຊວງແຜນການ ແລະ ການລົງທຶນ ໄດ້ຮັບຮອງເອົາບົດສະເໜີຈາກ ອົງການອາຫານໂລກ ເພື່ອດຳເນີນການທົບທວນ ຍຸດທະສາດການຄໍ້າປະກັນສະບຽງອາຫານ ແລະໂພຊະນາການ ຢູ່ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວຊຶ່ງສ່ວນໜຶ່ງຂອງຂັ້ນຕອນ ແລະ ການປຶກສາຫາລື ກ່ຽວກັບການເຊື່ອມສານເອົາ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ມາເປັນແຜນງານຂອງປະເທດ, ການທົບທວນດັ່ງກ່າວນີ້ຈະເປັນ ການຊຸກຍູ້ຄວາມຄືບໜ້າ ການຈັດຕັ້ງປະຕິບັດເປົ້າໝາຍ ການພັດທະນາແບບຍືນຍົງ ໃນເປົ້າໝາຍທີ 2 (ລຶບລ້າງຄວາມອຶດຫິວ, ບັນລຸການຄໍ້າປະກັນສະບຽງອາຫານ ແລະໂພຊະນາການ ແລະ ສົ່ງເສີມການກະສິກຳແບບຍືນຍົງ, ການປັບຕົວທາງດ້ານກະສິກຳພາຍໃຕ້ສະພາບຂອງລະບົບນິເວດວິທະຍາ ແລະ ຄວາມຫຼາກຫຼາຍ ທາງຊີວະນາໆພັນທີ່ອຸດົມສົມບູນ), ບົນພື້ນຖານຜົນສຳເລັດ ຂອງການຈັດຕັ້ງປະຕິບັດ ເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDG).

ດັ່ງທີ່ໄດ້ຮັບຮູ້ແລ້ວວ່າຄວາມຄືບໜ້າຂອງວຽກງານການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ແມ່ນຮຽກຮ້ອງໃຫ້ມີການ ປະສົມປະ ສານວຽກງານ ເຊິ່ງກັນແລະກັນ ຂອງຫລາຍຂະແໜງການຢ່າງພ້ອມພຽງກັນ ໂດຍເລີ່ມຈາກການທົບທວນຍຸດທະສາດທີ່ ຄາດວ່າຈະນຳເອົາ ທຸກ ມູມມອງ ຢ່າງກວ້າງຂວາງຮອບດ້ານ ຂອງ ວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ຢູ່ໃນ ສປປ ລາວ.

ເພື່ອເກັບກຳອົງປະກອບທີ່ສະຫຼັບສັບຊ້ອນ ແລະ ຫຼາກຫຼາຍຂະແໜງການ ຂອງວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ທີມງານທົບທວນ ໄດ້ ດຳເນີນການປຶກສາຫາລືແບບມີສ່ວນຮ່ວມຂອງຫລາຍພາກສ່ວນຢ່າງກວ້າງຂວາງ ທັງໃນຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ, ເຊິ່ງໄດ້ມີການປຶກສາຫາລືກັບທຸກພາກສ່ວນຂະແໜງການຢ່າງກວ້າງຂວາງໃນທົ່ວປະເທດ. ເຊິ່ງຜົນຂອງການທົບທວນ ແລະ ຄຳແນະນຳ ແມ່ນໄດ້ຈາກການປຶກສາຫາລືດັ່ງກ່າວ ແລະ ໄດ້ຮັບການ ຮັບຮອງໃນລະດັບສູນກາງ ພ້ອມດຽວກັນນັ້ນໄດ້ມີການປຶກສາຫາລືເພີ່ມເຕີມ ໃນເດືອນພຶດສະພາ 2016 ໂດຍມີຜູ້ເຂົ້າຮ່ວມ ຫຼາຍກວ່າ 80 ທ່ານ, ແລະ ໄດ້ຈັດກອງ ປະຊຸມສອງຝ່າຍຮ່ວມກັບຜູ້ມີສ່ວນຮ່ວມຫຼັກຂອງວຽກງານດັ່ງກ່າວນີ້ຕື່ມອີກ.

ບົດລາຍງານນີ້ແມ່ນການຮວບຮວມເອົາຄຳຄິດຄຳເຫັນ ແລະ ຄຳແນະນຳຕ່າງໆຈາກທຸກພາກສ່ວນທີ່ກ່ຽວຂ້ອງຈາກພາກລັດຢູ ຂັ້ນສູນກາງ ແລະ ຂັ້ນແຂວງ, ອົງການ ສະຫະປະຊາຊາດ, ສະຖາບັນການເງິນສາກົນ, ອົງການຈັດຕັ້ງບໍ່ສັງກັດລັດຖະບານ, ສະຖາບັນຄົ້ນຄ້ວາ ແລະອົງການຈັດຕັ້ງສາກົນ , ທີມງານການທົບທວນປະກອບດ້ວຍ ຊ່ຽວຊານ ວິຊາການດ້ານຕ່າງໆ ເຊັ່ນ ການ ປັບຕົວດ້ານການປ່ຽນແປງດິນຟ້າອາກາດ, ບົດບາດຍິງ-ຊາຍ, ການປົກປ້ອງສັງຄົມ, ແລະ ວຽກງານຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ, ໄດ້ວິເຄາະ ແລະ ໃຫ້ຄຳເຫັນແລະທິດທາງ ການດຳເນີນວຽກງານໃນອີກ 15 ປີ ຂ້າງໜ້າ ວ່າຈະເປັນໄປໃນຮູບແບບໃດ ເພື່ອຈະສາມາດບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDG) ທີ່ວາງໄວ້.

ບົດລາຍງານນີ້ ໄດ້ເນັ້ນໃຫ້ເຫັນເຖິງຄວາມສຳຄັນໃນການເຊື່ອມສານ ແຜນພັດທະນາແບບຍືນຍົງຂອງ ລັດຖະບານ ໃນສາມດ້ານຄື: ການພັດທະ ນາຊັບພະຍາກອນມະນຸດ,ເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ.

ບົດລາຍງານສະບັບນີ້ແມ່ນການທົບທວນຈຸດໝາຍສຳຄັນດ້ານຍຸດທະສາດ ທີ່ຈຳເປັນ ໃຫ້ແກ່ຄວາມຄືບໜ້າ ໃນການບັນລຸ ເປົ້າໝາຍທີ 2 ຂອງການພັດທະນາແບບຍືນຍົງ, ແຕ່ວ່າ ບົດລາຍງານສະບັບນີ້ບໍ່ແມ່ນຍຸດທະສາດອັນໃໝ່. ການເບິ່ງບັນຫາ

ຢ່າງຖີ່ຖ້ວນເຖິງຖອງທີ່ໄດ້ຮັບຈາກການທົບທວນຄັ້ງນີ້ຈະມີການປັບປຸງໃຫສອດຄ່ອງກັບຫຼາຍຂະແໜງການຢ່າງມີຍຸດທະສາດ , ໃນນັ້ນໄດ້ ເນັ້ນ ເຖິງເປົ້າໝາຍ *SDG* ທີ່ຮຽກຮ້ອງໃຫ້ມີຄວາມກົມກຽວກັນ, ວິທີການ ທີ່ເປັນອັນໜຶ່ງອັນດຽວກັນ ເຊິ່ງລັດຖະບານແຫ່ງ ສປປ ລາວ ຈະເປັນ ຜູ້ເອື້ອອຳນວຍຄວາມສະດວກໃຫ້ແກ່ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ. ເຖິງແມ່ນວ່າ ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງຫລວງຫຼາຍ ແລະ ມີຜົນສຳເລັດທີ່ດີໃນຕະຫຼອດ 15 ປີຜ່ານມາ ໃນການຈັດຕັ້ງປະ ຕິບັດເປົ້າໝາຍສະຫັດສະວັດດ້ານການພັດທະນາ (*MDGs)* ກໍ່ຕາມ, ແຕ່ກໍ່ຍັງມີສິ່ງທ້າທາຍຫຼາຍ ຢ່າງທີ່ຈະຕ້ອງໄດ້ແກ້ໄຂ ເຊິ່ງມັນຮຽກຮ້ອງໃຫ້ມີໃນການຄົ້ນຄິດແບບໃຫມ່ ແລະ ມີການປະສານສົມທົບ ຈາກ ລັດຖະບານ ສປປ ລາວ, ຄູ່ຮ່ວມພັດທະນາ ແລະ ພາກສ່ວນອື່ນໆ. ກະຊວງແຜນການ ແລະ ການລົງທຶນ ພ້ອມແລ້ວ ທີ່ຈະເປັນສ່ວນໜຶ່ງຂອງຄວາມພະຍາຍາມນີ້ ເພື່ອໃຫ້ສາມາດບັນລຸເປົ້າໝາຍພັດທະນາແບບຍືນຍົງ *SDG* ແລະ ຍິນດີທີ່ຈະໃຫ້ການ ສະໜັບສະໜູນ ແລະ ຮ່ວມມືກັບທຸກພາກສ່ວນ ເພື່ອບັນລຸ ການຈັດຕັ້ງປະຕິບັດ ເປົ້າໝາຍດັ່ງກ່າວ.

ພວກຂ້າພະເຈົ້າ ຍິນດີທີ່ຈະໄດ້ຮັບຄຳຄິດຄຳເຫັນຈາກບັນດາທ່ານ ຕໍ່ກັບບົດລາຍງານສະບັບນີ້, ແລະ ຫວັງຢ່າງຍິ່ງວ່າການທົບທວນນີ້ ຈະເປັນ ບົດລາຍງານທີ່ມີເນື້ອໃນຄົບຖ້ວນ ແລະ ປະກອບສ່ວນສຳຄັນຕໍ່ການປຶກສາຫາລື ວາລະສຳຄັນຂອງ ການພັດທະນາ ແຕ່ນີ້ ຮອດ 2030. ພວກຂ້າພະເຈົ້າ ຂໍສະແດງຄວາມຂອບໃຈຢ່າງສຸດຊຶ້ງມາຍັງທຸກພາກສ່ວນທີ່ໄດ້ໃຫ້ການສະໜັບສະໜູນ ແລະ ເຂົ້າຮ່ວມໃນຂັ້ນຕອນ ການສ້າງບົດລາຍງານສະບັບນີ້ຂຶ້ນມາ.

ດຣ. ກິແກ້ວ ຈັນທະບູຣີ

ຮອງລັດຖະມົນຕີ

ກະຊວງແຜນການ ແລະ ການລົງທຶນ

# ບົດສັງເຂບ

ບົດລາຍງານສະບັບນີ້ ນຳສະເໜີຜົນຮັບຂອງ ການທົບທວນຍຸດທະສາດ ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ຢູ່ ສປປ ລາວ, ເຊິ່ງເປັນການປະເມີນແບບຍຸດທະສາດດັ່ງກ່າວໄດ້ດຳເນີນ ແຕ່ເດືອນມັງກອນ ຫາ ເດືອນມິຖຸນາ 2016.
ການທົບທວນຍຸດທະສາດຄັ້ງນີ້ ບໍ່ແມ່ນຍຸດທະສາດໃໝ່ຂອງປະເທດ ສຳລັບການຄ້ຳປະກັນສະບຽງອາຫານ ແຕ່ແມ່ນການ ທົບທວນຄືນຢ່າງລະອຽດ ດ້ານຍຸດທະສາດ ທີ່ມີຄວາມສຳຄັນທີ່ສຸດຕໍ່ຜົນສຳເລັດ ໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ, ໂດຍສະເພາະແມ່ນເປົ້າໝາຍ SGD2.

ໂດຍການມອບຫມາຍຈາກອົງການອາຫານໂລກ ຕາມການສະເໜີຂອງກະຊວງແຜນການ ແລະ ການລົງທຶນ, ການທົບທວນຍຸດທະສາດ ດັ່ງກ່າວນີ້ ປະກອບດ້ວຍ ວິທີການທີ່ພົວພັນກັບຫລາຍຂະແໜງການ, ມີຜູ້ມີສ່ວນຮ່ວມຈາກຫຼາຍພາກສ່ວນ ເພື່ອໃຫ້ມີຄວາມເຂົ້າໃຈດ້ານຍຸດທະສາດໄດ້ດີກວ່າ ເພື່ອໃຫ້ຮູ້ວ່າຈະເຮັດແນວໃດໃຫ້ ສປປ ລາວ ສາມາດບັນລຸ ໄດ້ເປົ້າ ໝາຍທີ່ສຳຄັນ ຕາມເປົ້າໝາຍການພັດທະນາແບບຍືນຍົງ, ໂດຍ ເນັ້ນໜັກໃສ່ ເປົ້າໝາຍທີ 2 (SDG2): ລຶບລ້າງຄວາມອຶດຫິວ, ບັນລຸ ວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ແລະ ສົ່ງເສີມການກະສິກຳທີ່ປັບຕົວເຂົ້າກັບສະພາບແວດລ້ອມ ແລະ ແບບຍືນຍົງພາຍໃຕ້ລະບົບນິເວດວິທະຍາ ແລະ ຊີວະນາໆພັນທີ່ອຸດົມສົມບູນ.

ໂດຍນຳໃຊ້ວິທີການແບບມີສ່ວນຮ່ວມໃນການປຶກສາຫາລື ວິທີການການປຶກສາຫາລື ແບບສອງຝ່າຍ ເຊິ່ງໄດ້ຈັດຂຶ້ນ ຮ່ວມກັບ 49 ພາກສ່ວນກ່ຽວຂ້ອງທີ່ສຳຄັນ ທີ່ນະຄອນຫຼວງວຽງຈັນ, ແລະ ການປຶກສາຫາລືຢູ່ 17 ແຂວງ ທົ່ວປະເທດ ໂດຍມີຜູ້ເຂົ້າຮ່ວມ ຫຼາຍກວ່າ 500 ທ່ານ, ທັດສະນະຄະຕິ ແລະ ປະສົບການ ຂອງຜູ້ມີອຳນາດ ຕັດສິນໃຈທີ່ຢູ່ຂັ້ນສູນກາງ ປະກອບກັບປະສົບການ ແລະ ການນຳໃຊ້ຄວາມຮູ້ຂອງຄູ່ຮ່ວມງານຂັ້ນແຂວງ. ການທົບທວນຍຸດທະສາດຄັ້ງນີ້ ນຳສະເໜີ ການຮວບຮວມຜົນຮັບຂອງການທົບທວນ ທັງຈາກແຫຼ່ງຂໍ້ມູນປະຖົມພູມ ແລະ ແຫຼ່ງຂໍ້ມູນທຸຕິຍະພູມ, ສັງລວມການ ອອກແບບໂຄງສ້າງສະຖາບັນ ແລະ ຄຳແນະນຳແບບຍຸດທະສາດ, ໃນຮູບແບບທີ່ສາມາດເຂົ້າເຖິງໄດ້ງ່າຍ ສຳລັບທຸກພາກສ່ວນທີ່ກ່ຽວຂ້ອງລະດັບຊາດ.

ເປັນທີ່ຮູ້ຈັກກັນຢ່າງເປັນທາງການວ່າ ວາລະການພັດທະນາແບບຍືນຍົງ 2030, ເປົ້າໝາຍການພັດທະນາແບບຍືນຍົງ (SDG) ນຳສະເໜີກອບວຽກລວມຂອງສາກົນ ເພື່ອການພັດທະນາ ສຳລັບໄລຍະ 15 ປີ ຂ້າງໜ້າ. ທຸກໆເປົ້າໝາຍການພັດທະນາແບບຍືນຍົງ (SDG) ແມ່ນມີການເຊື່ອມໂຍງເຊິ່ງກັນແລະກັນ ແລະ ຕ້ອງໄດ້ຖືກຄົ້ນຄວ້າ, ຖືກວິເຄາະ ແລະ ໄດ້ຮັບການປະຕິບັດໃນລັກສະນະທີ່ເຊື່ອມສານກັນ.

ເນື່ອງຈາກການທົບທວນໃນເບື້ອງຕົ້ນ ແມ່ນເນັ້ນໜັກ ສະເພາະໃສ່ເປົ້າໝາຍການພັດທະນາແບບຍືນຍົງ (SDG) ພຽງເປົ້າໝາຍດຽວ, ການທົບທວນຍຸດທະສາດ ຈະເຮັດໜ້າທີ່ເປັນການປະກອບສ່ວນອັນສຳຄັນໃຫ້ແກ່ ຂັ້ນຕອນທີ່ ການຫັນວາລະການພັດທະນາແບບຍືນຍົງ 2030 ໃຫ້ເຂົ້າກັບສະພາບການພັດທະນາ ຂອງປະເທດ. ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2) ເປັນຈຸດສູນກາງຂອງຄວາມພະຍາຍາມຮ່ວມກັນ, ການເນັ້ນຢ້ຳເຖິງ ຄວາມຮັບຜິດຊອບ ຂອງລັດຖະບານແຫ່ງ ສປປ ລາວ ໃນການແກ້ໄຂ ວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ດັ່ງທີ່ໄດ້ສະແດງໃຫ້ເຫັນໃນກອງປະຊຸມໂຕະມົນ (RTM) ປີ 2015 (ກະຊວງແຜນການ ແລະ ການລົງທຶນ 2015a). ເປົ້າໝາຍຍ່ອຍຂອງຫ້າເປົ້າໝາຍຫຼັກ ພາຍໃຕ້ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2) (ບວກກັບສາມເປົ້າໝາຍເພີ່ມເຕີມ, 2a-2c) ແມ່ນເປັນສິ່ງທ້າທາຍ, ສັບຊ້ອນ ແລະ ບາງສ່ວນກໍ່ຕັ້ງເປົ້າໄວ້ຂ້ອນຂ້າງສູງ.

ອີງໃສ່ຄວາມຄືບໜ້າທີ່ໄດ້ຖືກເກັບກຳ ໃນການຈັດຕັ້ງປະຕິບັດ ເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDG) ໃນຊ່ວງປີ (2000 – 2015), ການທົບທວນດັ່ງກ່າວໄດ້ຮັບຜົນສຳເລັດໃນທາງບວກ ໃນການປະຕິບັດວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ໃນຫລາຍໆດ້ານ ລວມມີ: ຄວາມເປັນຜູ້ນຳດ້ານນະໂຍບາຍ, ການເຕີບໂຕດ້ານເສດຖະກິດ, ການຫຼຸດ ຜ່ອນຄວາມທຸກຍາກ, ແລະ ວຽກງານຄ້ຳປະກັນສະບຽງອາຫານທີ່ມີ ໂດຍທົ່ວໄປ. ເຖິງແນວໃດກໍ່ດີ ບັນດາສິ່ງທ້າທາຍຕ່າງໆ ຍັງຄືງແມ່ນດ້ານນະໂຍບາຍສິ່ງແວດລ້ອມ ແລະ ການປັບຕົວເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ, ການປົກປ້ອງທາງສັງຄົມ, ການແບ່ງຄວາມຮັບຜິດຊອບດ້ານການບໍລິຫານ ແລະ ການແຜ່ຂະຫຍາຍຂອງການຂາດສານອາຫານແບບຊ້ຳເຮື້ອ.

ຄວາມເປັນຫ່ວງທີ່ເກີດຂຶ້ນມາໃໝ່ ລວມມີການຫັນປ່ຽນຂອງຕົວເມືອງ ແລະ ການເຄື່ອນຍ້າຍ, ການຈ້າງງານນອກຂະແໜງກະສິກຳ, ຄວາມປອດໄພດ້ານສະບຽງອາຫານ (ສຳລັບຜູ້ຜະລິດ ແລະ ຜູ້ບໍລິໂພກ), ຄວາມສ່ຽງດ້ານໄພພິບັດ ແລະ ຄວາມທົນທານຕໍ່ໄພພິບັດ, ແລະ ຄວາມຍືນຍົງທາງດ້ານສະຖາບັນ.

ອີງຕາມການວິເຄາະຂອງສະພາບການໃນປະຈຸບັນ ແລະ ທ່າອ່ຽງໃນອະນາຄົດ, ການທົບທວນຄັ້ງນີ້ ສະເຫນີສະພາບການ, ການຕອບໂຕ້ ແລະ ການວິເຄາະຊ່ອງຫວ່າງ ສຳລັບ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ທີ 2.1 ຫາ 2.5, ການປະເມີນເງື່ອນໄຂເບື້ອງຕົ້ນດ້ານຍຸດທະສາດ ເພື່ອບັນລຸເປົ້າໝາຍ ດັ່ງກ່າວ ໃຫ້ໄດ້ພາຍໃນ ປີ 2030, ໃຫ້ໃກ້ຄຽງຄວາມເປັນຈິງທີ່ສຸດເທົ່າທີ່ຈະເປັນໄປໄດ້.

## 2.1 ຮັບປະກັນການເຂົ້າເຖິງສະບຽງອາຫານ

ເພື່ອໃຫ້ສາມາດບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ທີ 2.1, ການເຂົ້າເຖິງສະບຽງອາຫານ ຈຳເປັນຈະຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນ ສຳລັບປະຊາກອນໃນເຂດຊົນນະບົດ ແລະ ເຂດຕົວເມືອງ ກໍ່ເຊັ່ນດຽວກັນ. ຖ້າຫາກວິຖີທາງຂອງການເຕີບໂຕດ້ານເສດຖະກິດໃນປະຈຸບັນ ສາມາດຮັກສາໄວ້ໃຫ້ຢູ່ໃນລະດັບເດີມ, ຈະມີການປັບປຸງການຂົ້າເຖິງສະບຽງອາຫານບາງສ່ວນສຳລັບປະຊາກອນທີ່ສາມາດຊອກຫາວຽກເຮັດງານທຳໄດ້. ຖ້າຫາກວິທີທາງໃນປະຈຸບັນລວມກັບການເພີ່ມຂື້ນຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ໃນການພັດທະນາສັງຄົມ, ການເຂົ້າເຖິງ ສະບຽງອາຫານ ຍິ່ງຈະໄດ້ຮັບການແບ່ງປັນຢ່າງເທົ່າທຽມກັນ ຍິ່ງຂຶ້ນ, ດ້ວຍການຊ່ວຍໃຫ້ຄົວເຮືອນ ທີ່ທຸກຍາກກວ່າ ແລະ ມີຄວາມສ່ຽງ ໃຫ້ສາມາດເຂົ້າເຖິງແຫຼ່ງທືນໄດ້ຫຼາຍຂຶ້ນ ແລະ ການປົກປ້ອງສັງຄົມໂດຍພື້ນຖານທີ່ຈຳເປັນ ເພື່ອ ຮັບປະກັນທາງດ້ານສະບຽງ ອາຫານ ທີ່ພວກເຂົາຕ້ອງການ.

## 2.2 ລຶບລ້າງການຂາດສານອາຫານທຸກຮູບແບບ

ການຂາດສານອາຫານ ຍັງຄົງເປັນບັນຫາດ້ານສາທາລະນະສຸກທີ່ໜ້າເປັນຫ່ວງ ເຊິ່ງການຂາດສານອາຫານ ເປັນປັດໃຈໜຶ່ງໃນສາມຂອງການ ເສຍຊີວິດຂອງເດັກຕ່ຳກວ່າ 5 ປີ (UNICEF 2016). ການຂາດສານອາຫານແບບຊ້ຳເຮື້ອ (ຄວາມສູງບໍ່ໄດ້ມາດຖານ) ຢູ່ ສປປ ລາວ ແມ່ນຢູ່ໃນລະດັບອັດຕາສ່ວນຮ້ອຍ, ໂດຍມີອັດຕາສ່ວນທີ່ສູງຂອງ ເດັກເກີດໃໝ່ ທີ່ມີນ້ຳໜັກບໍ່ໄດ້ມາດຖານ, ການຂາດສານອາຫານ (ທີ່ເຫັນຊັດເຈນແມ່ນໂລກເລືອດຈາງ), ອັດຕາສ່ວນຕ່ຳໃນການລ້ຽງລູກດ້ວຍນົມແມ່ຢ່າງດຽວ, ແລະ ການຂາດສານອາຫານແບບຮ້າຍແຮງ (ຈ່ອຍຜອມ) ຢູ່ໃນອັດຕາ 5.9 ເປີເຊັນ (UNICEF 2015). ຜົນຂອງການສຶກສາ ທີ່ດຳເນີນໂດຍກະຊວງສາທາລະນະສຸກ ປີ 2016 ສະແດງໃຫ້ເຫັນວ່າ ອັດຕາການຂາດສານອາຫານແບບຊ້ຳເຮື້ອ ແມ່ນປະມານ 35.6% ໃນປີ 2016.

ອີງໃສ່ປະຫວັດການປ່ຽນແປງທາງດ້ານອັດຕາສ່ວນທີ່ຖືກບັນທຶກໄວ້ ນັບແຕ່ປີ 1990, ການຫລຸດລົງຂອງບັນຫາຂາດສານອາຫານແບບຊ້ຳເຮື້ອ ແມ່ນສອດຄ່ອງກັບແນວໂນ້ມທີ່ໄດ້ບັນທຶກໄວ້ແຕ່ປີ 1990-2015 ເຊິ່ງຄາດວ່າຈະຢູ່ໃນໄລຍະກາງ, ແຕ່ອາດມີຄວາມເປັນໄປໄດ້ ທີ່ຈະບໍ່ເປັນໄປຕາມທີ່ຄາດໄວ້ ຕາມເປົ້າໝາຍທີ່ກຳນົດໄວ້ໃນ ກອງປະຊຸມສະມັດຊາໃຫຍ່ ຂອງ ອະນາໄມໂລກ (World Health Assembly) 2025. ການຮັບຮູ້ວ່າ ການຂາດສານອາຫານຊ້ຳເຮື້ອ ແລະ ຄວາມສູງບໍ່ໄດ້ມາດຖານ ບໍ່ແມ່ນເປັນພຽງດັດຊະນີຄວາມສູງເທົ່ານັ້ນ, ແຕ່ເປັນຕົວຊີ້ວັດ ຂອງຂີດຄວາມສາມາດທາງດ້ານສະຕິປັນຍາ ແລະ ສັກກະຍະພາບໃນການດຳລົງຊີວິດ (World Bank 2014a), ຕະຫຼອດໄລຍະກາງ, ເພື່ອໃຫ້ປະເທດສາມາດສ້າງຂີດຄວາມສາມາດຂອງຊັບພະຍາກອນມະນຸດ, ການປັບປຸງວຽກງານການສຶກສາ ແລະ ການພັດທະນາກຳລັງແຮງງານ, ຄວາມສູງບໍ່ໄດ້ມາດຖານ ຈະຕ້ອງໄດ້ຖືກຮັບຮູ້ວ່າເປັນບັນຫາຕໍ່ການພັດທະນາເສດຖະກິດ ແລະ ສັງຄົມ ເຊິ່ງເປັນການ ກີດຂວາງຕໍ່ອັດຕາການພັດທະນາໃນໄລຍະຍາວ. ດ້ວຍອັດຕາຕົວຊີ້ວັດດ້ານໂພຊະນາການທັງໝົດທີ່ສູງກວ່າ ໃນ ເຂດຊົນນະບົດ ແລະ ເຂດດ້ອຍພັດທະນາ, ການແກ້ໄຂບັນຫາການຂາດໂພຊະນາການໃນທຸກໆຮູບແບບ ກາຍເປັນສູນກາງ ຂອງຄວາມ ພະຍາຍາມ ເພື່ອສົ່ງເສີມການເຕີບໂຕຮອບດ້ານ ແບບມີສ່ວນຮ່ວມ ແລະ ຍືນຍົງ.

## 2.3 ການປັບປຸງສະມັດຕະພາບການຜະລິດ

ໂດຍຖືເອົາຕາມເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.3 (SDG2.3) ດັ່ງທີ່ກຳນົດໄວ້, ການເພີ່ມຂື້ນແບບເທົ່າຕົວຂອງຜະລິດຕະຜົນກະສິກຳດ້ວຍການ ວັດແທກບໍລິມາດທັງໝົດ ແມ່ນຈະມີຄວາມຫຍຸ້ງຍາກທີ່ຈະບັນລຸຜົນສຳເລັດ, ແຕ່ວ່າສິ່ງທີ່ສຳຄັນກວ່ານັ້ນ, ການເພີ່ມສະມັດຕະພາບການ ຜະລິດກະສິກຳເປັນສອງເທົ່າ ຢ່າງທົ່ວເຖິງສຳລັບ ປະຊາກອນ ຢູ່ທຸກຂົງເຂດ ທີ່ກ່າວມາ ຍິ່ງມີຄວາມທ້າທາຍຫຼາຍຂື້ນກວ່າເກົ່າ. ເຖິງແມ່ນ ຈະເປັນເຊັ່ນນັ້ນກໍ່ຕາມ, ເປົ້າໝາຍດັ່ງກ່າວແມ່ນຄຸ້ມຄ່າ ທີ່ສຸດ: ສະໜັບສະໜູນ ແລະ ເສີມສ້າງ ຜູ້ຜະລິດສະບຽງອາຫານຂະໜາດນ້ອຍ ທີ່ຢູ່ເຂດຊົນນະບົດ ແມ່ນມີຜົນກະທົບສຸດທິດ້ານບວກຕໍ່ເສດຖະກິດ ແລະສັງຄົມ, ແລະ ຍັງເປັນການຮັກສາຄວາມອຸດົມສົມບູນ ທາງດ້ານສັງຄົມ ແລະ ມໍລະດົກທາງວັດທະນະທຳຂອງປະເທດ. ເພື່ອຮັບປະກັນການຜະລິດສະບຽງ ອາຫານ, ຜູ້ຜະລິດສະບຽງອາຫານ ຂະໜາດໃຫຍ່ ແລະ ຂະໜາດນ້ອຍ ຕ້ອງການໂອກາດທີ່ເທົ່າທຽມກັນ ໃນການເຂົ້າເຖິງຊັບພະຍາກອນ ແລະ ປັດໃຈຈຳເປັນອື່ນໆ. ປະຈຸບັນ, ນະໂຍບາຍດ້ານກະສິກຳ ແມ່ນສົ່ງເສີມການຂະຫຍາຍການຜະລິດລວມເປັນຫຼັກ ໂດຍວັດແທກ ປະລິມານທີ່ເກັບກ່ຽວໄດ້, ແລະ ບໍ່ໄດ້ແຍກໃຫ້ເຫັນຄວາມແຕກຕ່າງລະຫວ່າງຮູບແບບການຜະລິດ ຫຼື ລະດັບຂອງຄວາມຫຼາກຫຼາຍ ເຊິ່ງຈະ ສະໜັບສະໜູນ ຄຸນນະພາບຂອງສະບຽງອາຫານ ແລະ ໂພຊະນາການທີ່ດີ.

## 2.4 ກະສິກຳທີ່ທົນທານຕໍ່ສະພາບດິນຟ້າອາກາດ ແລະ ລະບົບນິເວດວິທະຍາ

ຄວາມສຳຄັນຂອງ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.4 ຮຽກຮ້ອງໃຫ້ມີການທົບທວນປັບປຸງບັນດານະໂຍບາຍທີ່ມີຄວາມຍືດຍຸ່ນ, ຍຸດທະສາດ ແລະ ຄຳແນະນຳຕ່າງໆ ແລະ ເທັກໂນໂລຊີທີ່ມີຢູ່ຢ່າງເໝາະສົມ, ພ້ອມທັງມີການທົບທວນປັບປຸງທີ່ຊັດເຈນຂອງທົ່ວທຸກຂະແໜງການ ແລະ ຫຼັກການຄຸ້ມຄອງບໍລິຫານໂດຍລວມ ເພື່ອວາງແຜນ, ປະສານງານ ແລະ ຈັດຕັ້ງປະຕິບັດການດຳເນີນງານດັ່ງກ່າວ. ບໍ່ມີຂໍ້ສົງໄສວ່າ ສປປ ລາວ ມີ ບັນດານະໂຍບາຍ ແລະ ຍຸດທະສາດ ທີ່ແນໃສ່ເສີມສ້າງຜະລິດຕະຜົນ ແລະ ຜົນຜະລິດກະສິກຳ ຕ່າງໆແບບຄົບຊຸດ. ເຖິງຢ່າງໃດກໍ່ຕາມ, ເຖິງແມ່ນວ່າ ຈະນຳເອົາບັນດາຍຸດທະສາດທີ່ມີຢູ່ມາຮວມເຂົ້າກັນ, ຍັງມີຄວາມເປັນໄປໄດ້ສູງວ່າຈະພົບຄວາມຫຍຸ້ງຍາກຫຼາຍຢ່າງ, ຫຼືອາດຈະບໍ່ເປັນໄປໄດ້ເລີຍ, ໃນການທີ່ຈະບັນລຸເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.4 ໂດຍສະເພາະແມ່ນການຍົກລະດັບສະມັດຕະພາບດ້ານຜົນຜະລິດກະສິກຳ ແລະ ລາຍຮັບຂຶ້ນເປັນສອງທົບ (SDG 2.3).

ຄວາມຄືບໜ້າກ່ຽວກັບເປົ້າໝາຍດັ່ງກ່າວນີ້ ແມ່ນຈະນຳມາເຊິ່ງການຍອມຮັບ ແລະ ການປົກປ້ອງຄຸນປະໂຫຍດ ຕ່າງໆທີ່ລະບົບນິເວດໄດ້ສະໜອງໃຫ້. ອັນນີ້ ຮຽກຮ້ອງໃຫ້ມີການປັບປຸງດ້ານນະໂຍບາຍ ມຸ່ງສູ່ຄຸນຄ່າທີ່ແທ້ຈິງຂອງລະບົບນິເວດ, ບໍ່ພຽງແຕ່ກ່ຽວກັບຄວາມສາມາດບົ່ມຊ້ອນທາງຜົນປະໂຫຍດດ້ານການຄ້າ, ແຕ່ ໃນຮູບແບບ ຄຸນຄ່າ ທີ່ບໍ່ແມ່ນດ້ານການເງິນ ຂອງສະບົບດັ່ງກ່າວຕໍ່ປະຊາກອນ ແລະ ສັງຄົມ.

## 2.5 ການປົກປ້ອງພັນທຸກຳ ແລະ ຄວາມຫຼາກຫຼາຍທາງຊີວະນາໆພັນ

ກອບເວລາສຳລັບເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.5 (ກຳນົດເປົ້າໝາຍ ແນໃສ່ 2020) ແມ່ນບໍ່ໄດ້ໝາຍເຖິງຄວາມເປັນໄປໄດ້ສຳລັບ ສປປ ລາວ ໃນການທີ່ຈະບັນລຸ ແຕ່ຢ່າງໃດ. ຫຼັກການພັດທະນາໂດຍລວມຂອງປະເທດໃນໄລຍະຜ່ານມາແມ່ນບໍ່ໄດ້ຮັບຮູ້ຢ່າງພຽງພໍເຖິງ ການປົກປ້ອງ ແລະ ການນຳໃຊ້ແບບຍືນຍົງ ຂອງຄວາມຫຼາກຫຼາຍທາງດ້ານຊີວະນາໆພັນກະສິກຳ ແລະ ຜະລິດຕະພັນເຄືອງປ່າຂອງດົງ ໃນຮູບແບບທີ່ເປັນຫຼັກການຍຸດທະສາດທີ່ສຳຄັນ ສຳລັບການຄ້ຳປະກັນສະບຽງອາຫານ ແລະໂພຊະນາການ ຢູ່ໃນ ສປປ ລາວ. ມີພືດພັນຫຼາກຫຼາຍຊະນິດ ທີ່ ເໝາະສົມສຳລັບການປ່ຽນແປງສະພາບເງື່ອນໄຂຂອງດິນຟ້າອາກາດ ແຕ່ວ່າຍັງບໍ່ທັນ ໄດ້ມີການກຳນົດສັກກະຍາພາບດ້ານປະລິມານ ຫຼື ຄຸນຄ່າດ້ານໂພຊະນາການທີ່ສູງຂອງພືດພັນ ເຫຼົ່ານັ້ນເທື່ອ, ທີ່ຈະເປັນໂອກາດ ໃຫ້ຜູ້ຜະລິດສະບຽງອາຫານຂະໜາດນ້ອຍ ຈະສາມາດປັບປຸງໃຫ້ແທດເໝາະກັບການປ່ຽນແປງຂອງດິນຟ້າອາກາດ.

ການປ່ຽນແປງທາງດ້ານໂຄງສ້າງໃນການວິເຄາະສິ່ງທ້າທາຍທາງດ້ານໂຄງສ້າງຂອງວຽກງານຄ້ຳປະກັນສະບຽງອາຫານ, ການທົບທວນນີ້ໄດ້ສັງເກດວ່າ ລະບົບການບໍລິຫານ ພາຍໃຕ້ໂຄງສ້າງທີ່ມີຢູ່ນີ້ ແມ່ນມີຄວາມທ້າທາຍ ໃນການຄຸ້ມຄອງແກ້ໄຂຄວາມຊັບຊ້ອນຂອງຂະແໜງ ການທີ່ປີ່ນອ້ອມ ແລະ ໃນເຊີງແບບ ວິຊາການ. ບັນຫານີ້ ແມ່ນສິ່ງທ້າທາຍລະດັບສາກົນ ບໍ່ແມ່ນບັນຫາສະເພາະຂອງ ສປປ ລາວເທົ່ານັ້ນ. ຄຳຖາມ ແມ່ນມີຢູ່ວ່າ ສິ່ງທ້າທາຍເກີດຂຶ້ນ ຈາກການຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງເພື່ອແກ້ໄຂ ພາຍໃນໂຄງສ້າງຂອງລັດທີ່ມີແລ້ວ ທັງຫມົດນີ້ແມ່ນສິ່ງທ້າທາຍ ທີ່ ສຳຄັນທີ່ສຸດ ທີ່ລັດຖະບານຄວນຍຶດຖື ແມ່ນບັນຫາດ້ານຍຸດທະສາດ ທີ່ເປັນອັນໜຶ່ງທີ່ເປັນນະໂຍບາຍ ສະເພາະຂອງຂະແໜງການ ແລະ ແຜນປະຕິບັດ ການທີ່ດີກວ່າ.

ລັດຖະບານ ສປປ ລາວ ໄດ້ມີນະໂຍບາຍທີ່ຫຼາກຫຼາຍ, ມີແຜນດຳເນີນງານ, ມີນະໂຍບາຍສະເພາະຂອງຂະແໜງການແຕ່ຍັງບໍ່ສາມາດ ຈັດຕັ້ງປະຕິບັດບັນດານະໂຍບາຍເຫລົ່ານີ້ ຕາມຈຸດປະສົງ ແລະ ຕາມຫມາກຜົນທີ່ວາງໄວ້ໃນເອກະສານ ນະໂຍບາຍ. ເຊິ່ງຈຸດໃຈກາງຂອງບັນຫາແມ່ນ ການກະຈາຍອຳນາດໃນການຕັດສິນໃຈ ແລະ ຄວາມຮັບຜິດຊອບຕ່າງໆ ຈາກສູນກາງ ລົງສູ່ທ້ອງຖິ່ນ ແລະ ການຕອບສະໜອງຊັບພະຍາກອນທີ່ແທດເໝາະ ໃນການຈັດຕັ້ງປະຕິບັດນະໂຍບາຍ ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ.

ສິ່ງທ້າທາຍດ້ານໂຄງສ້າງອັນທີສອງທີ່ໄດ້ກຳນົດໄວ້ ແມ່ນການເຮັດໜ້າທີ່ຂອງຫຼາຍຂະແໜງການ ເພື່ອບັນລູເປົ້າໝາຍສະເພາະຂອງ SDGs. ພາຍໃຕ້ເປົ້າໝາຍ SDG2 ພຽງຢ່າງດຽວ ກໍ່ມີຄວາມຈຳເປັນທີ່ຈະຕ້ອງມີວິທີການໃໝ່ ແລະ ຊັດເຈນ ໃນການປະສານງານລະຫວ່າງຄູ່ຮ່ວມງານຕ່າງໆ ໃນຂະແໜງກະສິກຳ, ສາທາລະນະສຸກ (ລວມທັງສຸຂະພາບແມ່ ແລະ ເດັກ, ໂພຊະນາການ, ນ້ຳ, ສຸຂະອະນາໄມ), ການປົກປ້ອງສັງຄົມ, ການຄ້າ, ສິ່ງແວດລ້ອມ, ພະຍາກອນທຳມະຊາດ, ການຄົ້ນຄວ້າກະສິກຳ, ການປ່ຽນແປງດິນຟ້າອາກາດ ແລະ ຄວາມທົນທານຕໍ່ການປ່ຽນແປງຂອງ ດິນຟ້າອາກາດ, ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ, ການສົ່ງເສີມກະສິກຳ, ການເງິນ ຊົນນະບົດ, ການຄອບຄອງທີ່ດິນ ແລະ ການບໍລິຫານປົກຄອງ. ເຖິງແມ່ນວ່າກົນໄກການປະສານງານທີ່ມີຢູ່ເດີມແມ່ນເຂົ້າກັນກັບຈຸດປະສົງ ແລະ ປະຕິບັດໄດ້ດີພໍສົມຄວນ ໂດຍລວມກໍ່ຕາມ, ຄຳແນະນຳທີ່ມີປະສິດທິພາບ ແລະ ການປະສານງານຂອງບັນດາຍຸດທະສາດຂອງທົ່ວທຸກ ຂະແໜງການ ຍັງຄົງເປັນຄຳຖາມທີ່ຖືກຕັ້ງຂຶ້ນຢູ່.

ການທົບທວນດັ່ງກ່າວ ພິຈາລະນາເຖິງສະຖາບັນຫຼັກ ທີ່ຮັບຜິດຊອບໂດຍກົງ ສຳລັບຄວາມຄືບໜ້າຂອງເປົ້າໝາຍພັດທະນາແບບຍືນຍົງ SDG2 ໂດຍສະເພາະເປົ້າຫມາຍທີ່ 2. ອັນນີ້ ໄດ້ສະໜອງສະພາບລວມຂອງ ໂຄງສ້າງຂອງ ລັດຖະບານ, ນະໂຍບາຍ, ຍຸດທະສາດ, ແລະ ກົນໄກການປະສານງານ ແລະການມີສ່ວນຮ່ວມ ຂອງ ພາກເອກະຊົນ, ສະຖາບັນການສຶກສາ ແລະ ສະຖາບັນຄົ້ນຄວ້າ, ອົງການຈັດຕັ້ງທາງສັງຄົມ (CSOs) ແລະ ສື່ມວນຊົນ ແມ່ນໄດ້ເຂົ້າຮ່ວມນຳ. ມັນໄດ້ສັງລວມຂໍ້ມູນທີ່ມີຢູ່ກ່ຽວກັບງົບປະມານ ແລະ ກະແສທາງການເງິນ ສຳລັບວຽກງານຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ. ການວິເຄາະໄດ້ ຊີ້ໃຫ້ເຫັນ ມູນຄ່າໃຊ້ຈ່າຍເພື່ອບັນລຸ ການຈັດຕັ້ງປະຕິບັດເປົ້າໝາຍ ການພັດທະນາແບບຍືນຍົງ ເຊິ່ງເກີນກວ່າການນຳໃຊ້ງົບປະມານໃນການພັດທະນາທີ່ຖືກປະຕິບັດໃນປະຈຸບັນ ແລະ ເປັນແຜນທີ່ ທ້າທາຍ ລະອຽດໃນການຂື້ນງົບເພື່ອຈັດຕັ້ງວາລະຂອງການພັດທະນາ ພາຍຫລັງປີ 2015, ໂດຍນຳສະເໜີບົດບາດທີ່ຈະແຈ້ງ ແລະ ຊັດເຈນ ແລະ ຂໍ້ຜູກພັນທີ່ສາມາດເຊື່ອໝັ້ນໄດ້ສຳລັບຄູ່ຮ່ວມງານທຸກຝ່າຍ.

ໃນພາກສຸດທ້າຍຂອງບົດລາຍງານສະບັບນີ້ ຈະນຳສະເໜີຄຳແນະນຳດ້ານຍຸດທະສາດທີ່ຄົບຊຸດ ສຳລັບແຕ່ລະເປົ້າໝາຍຍ່ອຍຂອງ ***SDG2,*** ບວກກັບຄຳແນະນຳເພີ່ມເຕີມ ທີ່ກ່ຽວຂ້ອງກັບການປະສານງານ ແລະ ການບໍລິຫານ, ການແບ່ງຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນ, ອົງການຈັດຕັ້ງສາກົນ ແລະ ພາກສ່ວນເອກະຊົນ. ບົດລາຍງານສະບັບນີ້ ໄດ້ສັງລວມການຮັບຮູ້ ບົດບາດສະເພາະຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ລ່ວງຫນ້າ ຂອງ ວາລະການພັດທະນາ 2016 ອີງຕາມຄຳຄິດເຫັນແນະນຳຈາກຫລາຍໆພາກສ່ວນໃນໄລຍະການປຶກສາຫາລື ທີ່ເປັນຮັບທັງຮູບແບບໄລຍະສັ້ນ, ໄລຍະກາງ ແລະ ໄລຍະຍາວ, ພ້ອມທັງມີຄຳສະເໜີ ທີ່ເປັນບູລິມະສິດສູງສຸດລະອຽດທີ່ດ້ານລຸ່ມຕໍ່ໄປ:

***SDG 2.1:*** ສ້າງ, ສະໜັບສະໜູນ ແລະ ຂະຫຍາຍທາງເລືອກດ້ານເສດຖະກິດ ແລະ ການດຳລົງຊີວິດ ແລະ ປັບປຸງພື້ນຖານການປົກປ້ອງທາງສັງຄົມ ແລະ ເງື່ອນໄຂໃນການເຮັດວຽກພາຍໃນປະເທດ ເພື່ອຫຼຸດຜ່ອນການ ເຄືອນຍ້າຍແຮງງານອອກນອກປະເທດ, ຫຼຸດຜ່ອນການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດ, ສົ່ງເສີມ ແລະ ສ້າງໂອກາດໃນການຈ້າງງານນອກຂະແໜງກະສິກຳ ໃນເຂດຊົນນະບົດ, ແລະ ເພີ່ມການເຂົ້າເຖິງການສ້າງລາຍໄດ້ຢູ່ທ້ອງຖິ່ນຢ່າງເໝາະສົມ ແລະ ມີລາຍຮັບດີ, ລວມທັງການຈ້າງງານໃນຂະແໜງເອກະຊົນ ແລະ ແຜນງານຂອງລັດ.

***SDG 2.2:*** ໃນໄລຍະສັ້ນ, ການສະໜອງທຶນເຕັມສ່ວນ ແລະ ການຈັດຕັ້ງປະຕິບັດທຸກໆອົງປະກອບຂອງແຜນປະຕິບັດງານ ລະຫວ່າງຂະແໜງການຕ່າງໆ ປີ 2016-2020. ສະໜັບສະໜູນຄຸນນະພາບໃນການໃຫ້ບໍລິການສຸຂະພາບແກ່ຊຸມຊົນໃນເຂດຊົນນະບົດ ແລະ ກຸ່ມຊົນເຜົ່າທີ່ບໍ່ເວົ້າພາສາລາວ ໂດຍມີຈຸດປະສົງໃນການປັບປຸງການບໍລິການດ້ານໂພຊະນາການ ພາຍໃຕ້ລະບົບຮັກສາສຸຂະພາບ. ສະໜອງການຊ່ວຍເຫຼືອດ້ານວິຊາການໂດຍກົງ ແລະ ເສີມສ້າງຂີດຄວາມສາມາດຂອງຜູ້ໃຫ້ບໍລິການດ້ານສຸຂະພາບຂອງລັດ ໃນດ້ານໂພຊະນາການ, ໂດຍສະເພາະແມ່ນໃນລະດັບເມືອງ.

***SDG 2.3:*** ປັບປຸງການສະໜັບສະໜູນ ແລະ ເກື້ອກູນປັດໃຈການຜະລິດທີ່ຈຳເປັນສຳລັບຜູ້ຜະລິດສະບຽງອາຫານຂະໜາດນ້ອຍ, ຄອບຄົວຊາວໄຮ່ນາ ໄປຄຽງຄູ່ກັບຕ່ອງໂສ້ການຜະລິດ, ລວມທັງການຮັບປະກັນ ແລະ ຄວາມເທົ່າທຽມກັນໃນການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນ ທຳມະຊາດ. ການສະໜັບສະໜູນດັ່ງກ່າວ ຄວນຈະກວມເອົາທຸກຂົງເຂດທີ່ເປັນໄປໄດ້ ແລະ ທາງເລືອກຕ່າງໆ (ລວມທັງປັດໃຈດ້ານເຕັກນິກວິຊາການ, ການເຂົ້າເຖິງທີ່ດິນ, ການເຂົ້າເຖິງນ້ຳ, ສິ່ງ ອຳນວຍຄວາມສະດວກພາຍຫຼັງເກັບກ່ຽວ, ການຜະລິດ, ການປິ່ນປົວ ສັດຕະວະແພດ, ການນຳໃຊ້ຢາຂ້າແມງໄມ້ ແລະ ຢາຂ້າຫຍ້າ, ການເຂົ້າເຖິງການຂົນສົ່ງ, ຂໍ້ມູນດ້ານຕະຫຼາດ ແລະ ການເງິນ), ຮັບປະກັນວ່າ ສິ່ງເຫຼົ່ານີ້ເຊື່ອມໂຍງກັບໂພຊະນາການທີ່ສະດຸ້ງໄວຕໍ່ສະບຽງອາຫານ ທີ່ມີຄຸນນະພາບສູງພາຍໃນສະພາບເງື່ອນໄຂລະບົບ ກະສິກຳແບບນິເວດວິທະຍາທີ່ເໝາະສົມກັບທ້ອງຖິ່ນ; ອັນນີ້ ອາດຈະຍັງຮຽກຮ້ອງໃຫ້ມີການໝາຍເຂດ ແລະ ການກຳນົດດິນສຳລັບ ການຜະລິດ ກະສິກຳ ແລະ ເພື່ອຕອບສະ ໜອງການຮັບປະກັນທາງດ້ານສະບຽງອາຫານສະເພາະ.

***SDG 2.4:*** ຈັດສັນຊັບພະຍາກອນຢ່າງພຽງພໍ ເພື່ອສະໜັບສະໜູນການຜະລິດກະສິກຳແບບນິເວດວິທະຍາທີ່ ມາຈາກຜົນກະທົບຂອງການປ່ຽນແປງດິນຟ້າອາກາດທີ່ມີຕໍ່ກັບເນື້ອທີ່ດິນ, ຄຸນນະພາບຂອງດິນ, ການຄຸ້ມຄອງນ້ຳ ແລະປ່າໄມ້, ແລະຂໍ້ມູນຂ່າວສານທີ່ກ້າວໜ້າ ໂດຍຜ່ານລະບົບການ ແຈ້ງເຕືອນລ່ວງໜ້າ.

***SDG 2.5:*** ການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ຢ່າງເຂັ້ມງວດ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (2013) (ແລະ ສະບັບດັດແກ້) ຈະສືບຕໍ່ຖືກ ນຳໃຊ້ເພື່ອປົກປັກຮັກສາສະຖານທີ່ຊີວະນາໆພັນຕ່າງໆທີ່ມີຢູ່ເດີມ ແລະ ເຂດຊີວະນາໆພັນທີ່ເປັນບຸລຸມະສິດ ເພື່ອຊ່ວຍໃນການຄ່ອຍໆຖ່າຍໂອນພັນທຸກຳຂອງແນວພັນພືດ ແລະທະນາຄານແນວພັນຢູ່ສູນຄົ້ນຄວ້າກະສິກຳປ່າໄມ້ ເພື່ອຮັບປະກັນການຮັກສາຄວາມຫຼາກຫຼາຍ ແລະ ການວິໄຈຕ່າງໆໃນອະນາຄົດ.

ຄຳແນະນຳສຳລັບ 'ການປັບຕົວຂອງລະບົບໂດຍລວມມີລາຍລະອຽດດັ່ງຕໍ່ໄປນີ້:
ເພີ່ມທະວີການຈັດຕັ້ງປະຕິບັດຂັ້ນຕອນການແບ່ງຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງຂັ້ນທ້ອງຖິ່ນ ໃນຂັ້ນຕອນການພັດ

ທະນານະໂຍບາຍ: ລັດຖະບານ ແຫ່ງ ສປປ ລາວ ໄດ້ນຳໃຊ້ນະໂຍບາຍ ວຽກງານ ‘ສາມສ້າງ’ ເພື່ອເສີມສ້າງການແບ່ງຄວາມຮັບຜິດຊອບ ໃຫ້ເຂັ້ມແຂງ ແຕ່ວ່າຮຽກຮ້ອງໃຫ້ມີຊັບພະຍາກອນດ້ານວິຊາການທີ່ຈຳເປັນ ແລະ ຊັບພະຍາ ກອນ ການເງິນຢ່າງຮີບດ່ວນ.
ການປະສານງານຢູ່ຂັ້ນສູນກາງ: ເສີມສ້າງຄວາມເຂັ້ມແຂງຂອງບົດບາດຂອງຫ້ອງການກອງເລຂາຂອງຄະນະກຳມະການໂພຊະນາການແຫ່ງຊາດ (National Nutrition Committee) ເພື່ອປະສານການຈັດຕັ້ງປະຕິບັດ ແລະ ການຕິດຕາມ ຍຸດທະສາດ ໂພຊະນາການແຫ່ງຊາດ ຮອດປີ 2025 ແລະ ແຜນປະຕິບັດງານ 2016-2020, ແລະ ຍຸດທະສາດທີ່ກ່ຽວຂ້ອງອື່ນໆ, ມີການແຍກຄວາມແຕກຕ່າງຢ່າງຊັດເຈນໃນວຽກງານປະຕິບັດການຂອງ ສູນໂພຊະນາການ (Centre for Nutrition).

ການແບ່ງຄວາມຮັບຜິດຊອບໃຫ້ຂັ້ນທ້ອງຖິ່ນ: ໃຫ້ການສະໜັບສະໜູນດ້ານວິຊາການ ແລະ ສະໜັບສະໜູນດ້ານສະຖາບັນ ໃຫ້ແກ່ຄະນະກຳມະການໂພຊະນາການຂັ້ນແຂວງ (PNCs) ເພື່ອເອື້ອ ອຳນວຍ ການເຊື່ອມໂຍງລະຫວ່າງ ການວາງແຜນ ແລະ ການຕິດຕາມຢູ່ຂັ້ນສູນກາງ, ຂັ້ນແຂວງ ແລະ ຂັ້ນເມືອງ; ລວມທັງການຊ່ວຍເຫລືອສຳລັບການພັດທະນາເຄື່ອງມືຕ່າງໆ ເພື່ອອຳນວຍຄວາມສະດວກໃນການປະຕິບັດ ໜ້າທີ່ຂອງ ຄະນະ ກຳມະການໂພຊະນາການຂັ້ນແຂວງ ຢ່າງມີປະສິດທິຜົນ.

ອົງການຈັດຕັ້ງສາກົນ ແລະ ພາກເອກະຊົນ: ການຂະຫຍາຍການປຶກສາຫາລືກ່ຽວກັບບັນຫາທີ່ເກີດຂຶ້ນ ເຊັ່ນ: ຄວາມປອດໄພດ້ານສະບຽງອາຫານ (ໃນທຸກໆຂັ້ນຕອນ ຈາກການຜະລິດຈົນເປັນອາຫານ), ນ້ຳໜັກເກີນ, ແລະ ການເຊື່ອມ ໂຍງລະຫວ່າງການເຄື່ອນຍ້າຍຖິ່ນຖານ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS). ຂະຫຍາຍການຮ່ວມມື ກ່ຽວກັບບັນຫາເຫລົ່ານີ້ຕາມຄວາມຈຳເປັນ ບົນພື້ນຖານຄອບຄຸມແບບຮອບດ້ານ.

ການຮັບຮູ້ຄຸນຄ່າຂອງການບໍລິການລະບົບນິເວດວິທະຍາທີ່ບໍ່ພຽງພໍ: ມູນຄ່າທາງເສດຖະກິດ ແລະ ຂອງມີຄ່າຕ່າງ ທີ່ໄດ້ຈາກຊັບພະ-ຍາກອນ ທຳມະຊາດທີ່ມີຢູ່ (ເຊັ່ນ: ໃນສະພາບທີ່ປ່າໄມ້ເຮັດໜ້າທີ່ເປັນແຫຼ່ງເກັບກັກອາຍແກ๊ສເຮືອນແກ້ວ) ຕ້ອງໄດ້ກຳນົດປະລິມານ ແລະ ຄຸນນະພາບ ໃນທຸກໆການວາງແຜນຢ່າງເປັນທາງການໃນທົ່ວທຸກສະຖາບັນ ແລະ ລະດັບການປົກຄອງ.
ສຸດທ້າຍ, ໄດ້ເນັ້ນໜັກເຖິງ ບົດບາດສຳຄັນຂອງກະຊວງແຜນການ ແລະ ການລົງທຶນ, ແລະ ກະຊວງການເງິນ: ມອບໝາຍບົດບາດຮັບຜິດຊອບຢ່າງຊັດເຈນດ້ານຍຸດທະສາດ ໃຫ້ ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ມີພາລະບົດບາດຈະແຈ້ງ ແລະສ້າງຂີດຄວາມສາມາດ ໃນການວາງແຜນໃຫ້ເປັນຮູບປະທຳ, ງົບ ແລະການຈັດຕັ້ງປະຕິບັດງານໂດຍລວມ ໃນຂອບເຂດທີ່ກວ້າງຂວາງຂອງຄູ່ຮ່ວມງານທີ່ເຮັດວຽກ ໃນທຸກຂະແໜງການນີ້ໃນປະຈຸບັນ ເພື່ອຈັດ ຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ.



# ພາກສະເໜີ



## 1.1 ການລິເລີ່ມເປົ້າໝາຍການພັດທະນາ ແບບຍືນຍົງ ຢູ່ ສປປ ລາວ

ໃນປີ2012, ຈາກຜົນຮັບຂອງກອງປະຊຸມ Rio+20, ສືບຕໍ່ຜັນຂະຫຍາຍມາຈາກ ເປົ້າໝາຍສະຫັດສະວັດດ້ານການພັດທະນາ (MDGs), ບັນດາປະເທດສະມາຊິກຂອງ ສະຫະປະຊາຊາດ (UN) ເລີ່ມຂັ້ນຕອນການສ້າງເປົ້າໝາຍການພັດທະນາແບບຍືນຍົງ (SDGs), ເຊິ່ງຈະ ເປັນຂີດໝາຍສຳຄັນຂອງວາລະການພັດທະນາ ພາຍຫຼັງປີ 2015.

ພາຍຫຼັງການປຶກສາຫາລືທີ່ຍາວນານກວ່າສອງປີ ເຊິ່ງມີຜູ້ເຂົ້າຮ່ວມຈາກທັງພາກລັດ ແລະ ນອກຂະແໜງການຂອງລັດ, ໃນວັນທີ 25 ກັນຍາ 2015, ກອງປະຊຸມສະມັດຊາໃຫຍ່ຂອງສະຫະປະຊາຊາດສະໄໝສາມັນ ໄດ້ຮັບຮອງຢ່າງເປັນທາງການວາລະເພື່ອການພັດທະນາແບບຍືນຍົງ 2030 ທີ່ເປັນເປົ້າໝາຍຂອງສາກົນ, ເຊື່ອມສານ ແລະ ສາມາດປ່ຽນແປງໄດ້,ພ້ອມທັງເປົ້າໝາຍການພັດທະນາແບບຍືນຍົງ 17 ເປົ້າຫມາຍ ແລະ ເປົ້າໝາຍທີ່ກ່ຽວຂ້ອງອີກ 169 ຕົວຊີ້ວັດ.

ສຳລັບ ສປປ ລາວ, ເປົ້າໝາຍການພັດທະນາແບບຍືນຍົງປະກອບມີ18 ເປົ້າໝາຍ, ເຊິ່ງລວມມີເປົ້າໝາຍພິເສດໜຶ່ງເປົ້າໝາຍທີ່ແນໃສ່ສະເພາະເພື່ອຫຼຸດຜ່ອນຜົນກະທົບຈາກລະເບີດຕົກຄ້າງທີ່ຍັງບໍ່ທັນແຕກ (UXO). ແຕ່ບໍ່ມີເປົ້າໝາຍສະເພາະໃນ SDGs ທີ່ສຸມໃສ່ບັນຫາລະເບີດຝັງດິນທີ່ຍັງບໍ່ທັນແຕກ.

ອີງໃສ່ທັດສະນະສາກົນ, ຖ້າຫາກເຮັດຢ່າງຖືກຕ້ອງ, ວຽກງານກະສິກຳ, ປ່າໄມ້ ແລະ ການປະມົງ ສາມາດຊ່ວຍ ສະໜອງສະບຽງອາຫານທີ່ຖືກໂພຊະນາການ ສຳລັບທຸກໆຄົນ ແລະ ການສ້າງລາຍຮັບທີ່ເໝາະສົມ. ໃນປະຈຸບັນ, ດິນ, ນ້ຳຈືດ, ທະເລ, ປ່າໄມ້ ແລະ ຊີວະນາໆພັນ ຖືກເຊື່ອມໂຊມຢ່າງໄວວາ.ການປ່ຽນແປງດິນຟ້າອາກາດ ແມ່ນໄດ້ເພີ່ມຄວາມກົດດັນ ໃສ່ຊັບພະຍາກອນເຫຼົ່ານັ້ນຂື້ນຕື່ມ, ເພີ່ມຄວາມສ່ຽງທີ່ຕິດພັນກັບໄພທຳມະຊາດເຊັ່ນ: ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ. ແມ່ຍິງ ແລະ ຜູ້ຊາຍຢູ່ຊົນນະບົດຈຳນວນຫຼາຍ ແມ່ນບໍ່ສາມາດນຳໃຊ້ທີ່ດິນຂອງຕົນຕາມຈຸດປະສົງໄດ້ອີກຕໍ່ໄປ, ບີບບັງຄັບໃຫ້ເຂົາຕ້ອງເຄື່ອນຍ້າຍທີ່ຢູ່ອາໃສເຂົ້າໄປຕົວເມືອງເພື່ອຊອກຫາໂອກາດໃໝ່ໆ.

ມີຄວາມຈຳເປັນຕ້ອງມີການປ່ຽນແປງຢ່າງເລິກເຊິ່ງຂອງລະບົບສະບຽງອາຫານຂອງໂລກ ແລະ ການກະສິກຳ ເພື່ອຕອບສະໜອງລ້ຽງດູປະຊາກອນ ທີ່ຍັງອຶດຫິວ ຈຳນວນ 795 ລ້ານຄົນໃນປະຈຸບັນ ແລະ ອີກຈຳນວນ 2 ຕື້ຄົນ ທີ່ຄາດວ່າຈະເພີ່ມຂຶ້ນໃນປີ 2050.

ສະບຽງອາຫານ ແລະຂະແໜງກະສິກຳ ໄດ້ສະໜອງວິທີທາງອອກທີ່ສຳຄັນສອງວິທີ ສຳລັບການພັດທະນາ, ແລະ ເປັນສູນກາງສຳລັບຜູ້ອຶດຫິວ ແລະ ລຶບລ້າງຄວາມທຸກຍາກ.

ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ແມ່ນວິທີ, ຮູບແບບ ແລະ ເປົ້າໝາຍ ທີ່ຈະຄຽງຄູ່ກັນ ຕາມເສັ້ນທາງນີ້, ໂດຍຖືເອົາປະຊາຊົນເປັນໃຈກາງຂອງການພັດທະນາ (UN 2016). ທຸກໆ SDGs ຕ້ອງໄດ້ຖືກເບິ່ງວ່າ ເປັນຂອດທີ່ກ່ຽວຂ້ອງກັນຢ່າງໃກ້ຊິດຂອງທາງເລືອກຂອງການພັດທະນາທີ່ສາມາດວິເຄາະແຍກຕ່າງຫາກເພື່ອເຫດຜົນໃນການຈັດຕັ້ງປະຕິບັດແຕ່ວ່າຕ້ອງໄດ້ເບິ່ງເປັນຍຸດທະສາດແລະເຕັກນິກແລະປະກອບເຂົ້າກັນເປັນຮູບແບບການພັດທະນາທີ່ສົ່ງເສີມເຊິ່ງກັນແລະກັນ ແລະ ເປົ້າໝາຍທີ່ສອດຄ້ອງກັນ ມຸ່ງໄປສູ່ວິໄສທັດເພື່ອການພັດທະນາທີ່ຖືເອົາຄົນເປັນໃຈກາງ (UN 2016).

ສປປ ລາວ ໄດ້ໃຫ້ ຄຳໝັ້ນສັນຍາແຕ່ຕົ້ນໆ ແລະ ເຂັ້ມແຂງເພື່ອບັນລຸໃຫ້ໄດ້ທັງ 17 ເປົ້າໝາຍການພັດທະນາແບບຍືນຍົງ, ເມື່ອເບິ່ງເຖິງຄວາມພະຍາຍາມເຫຼົ່ານັ້ນທີ່ສອດຄ່ອງກັບກາກຳນົດເປົ້າໝາຍ ເພື່ອໃຫ້ປະເທດຄ່ອຍໆຫຼຸດພົ້ນອອກຈາກສະຖານະພາບການເປັນປະເທດດ້ອຍພັດທະນາ (LDC) ພາຍໃນປີ 2020. ໃນການຮັກສາໃຫ້ການປະຕິບັດຕົວຈິງ ໃຫ້ຢູ່ໃນລະດັບດຽວກັນກັບ ລະດັບໂລກ, ໃນທ້າຍປີ 2015 ສປປ ລາວ ໄດ້ເລີ່ມຂັ້ນຕອນການຫັນປ່ຽນ (‘localizing’) ວາລະ ເປົ້າຫມາຍການພັດທະນາແບບຍືນຍົງໃຫ້ເຂົ້າກັບສະພາບພາຍໃນ ເພື່ອໃຫ້ສາມາດປະຕິບັດໄດ້ຕາມສະພາບເງື່ອນໄຂຂອງປະເທດ.

ສ່ວນໜຶ່ງຂອງຂັ້ນຕອນດັ່ງກ່າວນີ້, ເອກະສານຄົ້ນຄວ້າເພື່ອເບິ່ງເຖິງການຫັນປ່ຽນຈາກ MDGs ແລະ SDGs ແມ່ນໄດ້ຮັບການສ້າງຂຶ້ນ (UN 2015c) ແລະ ຂັ້ນຕອນດັ່ງກ່າວ ຮັບຮອງເອົາ SDGsເຂົ້າໃນການວາງແຜນແຫ່ງຊາດ ແລະ ຂັ້ນຕອນການສ້າງຍຸດທະສາດ, ໂດຍສະເພາະແມ່ນ ແຜນພັດທະນາເສດຖະກິດ-ສັງຄົມ 5ປີ ຄັ້ງທີ VIII ໄດ້ຖືກລິເລີ່ມຂຶ້ນ. ຫຼັງຈາກນັ້ນ, ໃນໄລຍະໄຕມາດທີ 1 ແລະ ໄຕມາດທີ 2 ຂອງປີ 2016, ໄດ້ມີການປຶກສາຫາລື ຢ່າງກວ້າງຂວາງກ່ຽວກັບການພັດທະນາຂອງຕົວຊີ້ວັດໃນການຕິດຕາມ ແລະ ປະເມີນຜົນທີ່ໄດ້ສັງລວມໄວ້ສຳລັບເປົ້າໝາຍການພັດທະນາແບບຍືນຍົງ, ໂດຍມີການ ປຶກ ສາຫາລືເພີ່ມເຕີມຢ່າງຕໍ່ເນື່ອງຕະຫຼອດໄລຍະຂອງການທົບທວນຄັ້ງນີ້.

ລະບົບ ຂອງອົງການ ສະຫະປະຊາຊາດ ແມ່ນໄດ້ຖືກ ກຳນົດສະເພາະ ເພື່ອສະໜັບສະໜູນລັດຖະບານ ສປປ ລາວ ໃນຄວາມພະຍາຍາມພິເສດດັ່ງກ່າວ ທີ່ມີຄວາມຈຳເປັນເພື່ອສະໜັບສະໜູນວາລະ ຂອງການພັດທະນາ 2030. ໂດຍສະເພາະແລ້ວ ໃນເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ໄດ້ກາຍມາເປັນຫມາກຫົວໃຈຂອງຄວາມພະຍາຍາມຮ່ວມກັນທີ່ເນັ້ນຢ້ຳເຖິງຄຳຫມັ້ນສັນຍາຂອງລັດຖະບານ ສປປ ລາວ ໃນການແກ້ໄຂ ວຽກງານຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ດັ່ງທີ່ໄດ້ສະແດງໃຫ້ເຫັນໃນ ກອງປະຊຸມໂຕະມົນ 2015 (RTM) (ກະຊວງແຜນການ ແລະ ການລົງທຶນ 2015a).

ການຂະຫຍາຍຂອບເຂດທີ່ສຳຄັນ ຂອງ MDGs, ເປົ້າໝາຍການພັດທະນາແບບຍືນຍົງ ໄດ້ສ້າງຂຶ້ນບົນພື້ນຖານຄວາມທ້າທາຍໃນການລຶບລ້າງຄວາມອຶດຫິວໃຫ້ເປັນສູນ (Zero- Hunger Challenge), ແລະ ສຳລັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ນຳສະເໜີຫຼັກການທີ່ຄົບຊຸດ ເພື່ອແກ້ໄຂບັນຫາໃນຫຼາກຫຼາຍມິຕິ, ໂດຍມີເປົ້າໝາຍສະເພາະໃນການເຂົ້າເຖິງ, ການຂາດໂພຊະນາການ, ປະສິດທິພາບ ໃນການຜະລິດກະສິກຳ ແລະ ລະບົບສະບຽງອາຫານທີ່ທົນທານ (WFP 2015).

ໃນມຸມມອງຂອງເປົ້າໝາຍທີ່ທ້າທາຍຄວາມສາມາດຂອງ SDG2 ແລະ ໃນກອບເວລາ 15 ປີ (2015-2030), ການຫັນປ່ຽນຫຼັກການ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ເຂົ້າກັບສະພາບທ້ອງຖິ່ນ ຮຽກຮ້ອງໃຫ້ມີການຄົ້ນຄວ້າຢ່າງເລິກເຊິ່ງເພື່ອເບິ່ງວ່າ ສປປ ລາວ ມີອົງປະກອບ ດ້ານຍຸດທະສາດ (ສະຖາບັນ, ນະໂຍບາຍ ແລະ ການເງິນ) ພ້ອມແລ້ວບໍ່ ເພື່ອການປະຕິບັດງານຢ່າງມີຜົນສຳເລັດດີ.

ໃນທີ່ສຸດ, ການທົບທວນຍຸດທະສາດ ແມ່ນໄດ້ ຖືກເຜີຍແຜ່ຜົນຂອງການປະເມີນໂດຍກະຊວງແຜນການ ແລະ ການລົງທຶນ ແລະ ອົງການອາຫານໂລກ ເຊິ່ງວິທີການເພື່ອຕິດຕາມແລະກວດສອບເບິ່ງເງື່ອນໄຂຍຸດທະສາດເບື້ອງຕົ້ນ ເພື່ອໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ຢູ່ ສປປ ລາວ, ເພື່ອໃຫ້ຄຳແນະນຳໃນການຈັດຕັ້ງປະຕິບັດວາລະການພັດທະນາຊັບພະຍາກອນມະນຸດທີ່ທ້າທາຍໃນອະນາຄົດ ທີ່ໄດ້ປະຕິບັດມາແລ້ວ.

ເປົ້າໝາຍຍ່ອຍຂອງ 5 ເປົ້າໝາຍຫຼັກ ພາຍໃຕ້ SDG2 (ບວກກັບ 3 ເປົ້າໝາຍເພີ່ມເຕີມ, 2a-2c) ແມ່ນສິ່ງທີ່ທ້າທາຍ, ຊັບຊ້ອນ ແລະ ໃນບາງສະພາບການ ແມ່ນຕ້ອງໄດ້ມີຄວາມທະເຍີທະຍານເພີ່ມເຕີມເປັນພິເສດ. ໃນຂະນະທີ່ ສປປ ລາວ ໄດ້ຄ່ອຍໆມີຄວາມຄືບໜ້າທີ່ສຳຄັນ ໃນການພັດທະນານະໂຍບາຍທົ່ວໄປ ແລະ ສະໜອງການສະໜັບສະໜູນສະເພາະໃຫ້ແກ່ເປົ້າໝາຍການພັດທະນາແບບຍືນຍົງ ພາຍໃຕ້ຂອບເຂດທີ່ກວ້າງຂວາງຂອງຍຸດທະສາດແຫ່ງຊາດ ແລະ ຍຸດທະສາດຂະແໜງການ, ແຕ່ຍັງຄົງບໍ່ມີຄວາມແນ່ນອນທີ່ຂໍ້ຈຳກັດທາງດ້ານຂະແໜງການ, ດ້ານພື້ນທີ່ ຫຼື ການປັບປ່ຽນໄປຫາຫົວຂໍ້ພຽງອັນດຽວຂອງບັນດາຍຸດທະສາດເຫຼົ່ານີ້ ຈະສາມາດສ້າງຄວາມຫຼາກຫຼາຍທາງດ້ານເສດຖະກິດ-ສັງຄົມ ແລະ ລະບົບນິເວດ ແລະ ຜົນກະທົບທີ່ອາດຈຳເປັນຕ້ອງໄດ້ມີເພື່ອໃຫ້ສາມາດບັນລຸເປົ້າໝາຍ SDG2ໃຫ້ໄດ້ພາຍໃນປີ 2030.

ການບັນລຸເປົ້າໝາຍການພັດທະນາແບບຍືນຍົງ ຈະມີຄວາມຫຍຸ້ງຍາກທີ່ສຸດ ຖ້າຫາກຂັ້ນຕອນທີ່ພິເສດນີ້ ບໍ່ໄດ້ຖືກຈັດຕັ້ງປະຕິບັດໃນຄຳແນະນຳດ້ານຍຸດທະສາດຂອງຫຼັກການ ໂດຍລວມ; ການປັບປ່ຽນ ແລະ ແກ້ໄຂປັບປຸງນະໂຍບາຍທີ່ມີຢູ່ເດີມໃຫ້ສອດຄ້ອງກັນ, ການພັດທະນາສະຖາບັນ ແລະ ຂີດຄວາມສາມາດຂອງບຸກຄົນ, ການຈັດຕັ້ງປະຕິບັດດ້ານວິຊາການທີ່ມີຄຸນນະພາບສູງ, ແລະ ການເງິນທີ່ເຂັ້ມແຂງ (ລວມທັງການສະໜອງທຶນຢ່າງພຽງພໍ, ກົນໄກໃນການຈັດສັນທາງການເງິນທີ່ໄວ ແລະ ຕອບສະໜອງຕາມ ຄວາມຈຳເປັນ, ແລະ ເສີມສ້າງຄວາມຮັບຜິດຊອບໃຫ້ເຂັ້ມແຂງຍິ່ງຂຶ້ນ).

ໃນສະພາບການດັ່ງກ່າວນີ້ ການທົບທວນດ້ານຍຸດທະສາດຄັ້ງນີ້ ໄດ້ວິເຄາະຊ່ອງວ່າງຕ່າງໆຈາກມຸມມອງໃນໄລຍະຍາວ, ແລະ ໂດຍສະເພາະຊອກຄົ້ນການເຊື່ອມໂຍງເຊິ່ງກັນລະກັນລະຫວ່າງການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ (FNS), ໂດຍຄຳນຶງ ເຖິງມຸມມອງທີ່ສຳຄັນຂອງການປົກປ້ອງສັງຄົມ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ຄວາມທົນທານຕໍ່ສະພາບການປ່ຽນແປງ ຂອງດິນຟ້າອາກາດ, ສິ່ງທີ່ສຳຄັນທີ່ສຸດທີ່ເນັ້ນຢ້ຳເຖິງຫົວຂໍ້ການພັດທະນາເພື່ອໃຫ້ມີຄວາມຄືບໜ້າທີ່ສຳຄັນມຸ່ງສູ່ການບັນລຸເປົ້າໝາຍການພັດທະນາແບບຍືນຍົງເປົ້າໝາຍທີ2.

1.2 ການທົບທວນຍຸດທະສາດ ການວາງແຜນ ແລະ ວິທີການໃນໄລຍະຕົ້ນໆຂອງການວາງແຜນການທົບທວນຍຸດທະສາດ, ສອງຂໍ້ສັງເກດທີ່ສຳຄັນ ເຊິ່ງມີອິດທິພົນຕໍ່ຜົນຂອງການທົບທວນມີດັ່ງນີ້: ອັນທີໜຶ່ງ, ຍ້ອນລັກສະນະຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ທີ່ເປັນບັນຫາປົ່ນອ້ອມຂະແໜງການ, ແນວທາງດຳເນີນງານ ທີ່ຕັດຜ່ານຍຸດທະສາດການກຳນົດນະໂຍບາຍ (policy portfolios) (ລວມທັງກະສິກຳ, ການພັດທະນາຊົນນະບົດ, ສາທາລະນະສຸກ, ການປົກປ້ອງສັງຄົມ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການປ່ຽນແປງດິນຟ້າອາກາດ) ຈະແມ່ນມີຄວາມຈຳເປັນ, ຖ້າຫາກຂອບເຂດເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ຈະຕ້ອງໄດ້ຮັບການຄົ້ນຄວ້າຢ່າງເຕັມສ່ວນອັນນີ້ຈະເປັນປັດໃຈສຳຄັນໃນອົງປະກອບຂອງທີມງານ.

ອັນທີສອງ, ໃນປະຈຸບັນ ສ່ວນໃຫຍ່ຂັ້ນຕອນຍຸດທະສາດກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ ແມ່ນຕັ້ງຢູ່ໃຈກາງຂອງການປຶກສາຫາລືດ້ານນະໂຍບາຍຂັ້ນສູນກາງ ທີ່ນະຄອນຫຼວງວຽງຈັນ, ໂດຍມີການປະກອບສ່ວນທີ່ຂ້ອນຂ້າງຈຳກັດຈາກຜູ້ມີສ່ວນຮ່ວມຂັ້ນທ້ອງຖິ່ນ. ຂໍ້ສັງເກດດັ່ງກ່າວ ນີ້ ແມ່ນຂ້ອນຂ້າງແນ່ນອນໃນການພັດທະນາວິທີການ ເຊິ່ງຖືເອົາການປຶກສາຫາລືຢ່າງກວ້າງຂວາງເປັນຈຸດໃຈກາງໂດຍໄດ້ຈັດຂຶ້ນຢູ່ທຸກແຂວງໃນທົ່ວ ປະເທດ.

ຄວາມຫຼາກຫຼາຍຂອງສາຂາວິຊາ ຈະສົ່ງເສີມຄວາມຄິດທີ່ມາຈາກຫຼາຍຂະແໜງການພາຍໃນ ແລະ ລະຫວ່າງບັນດາຂະແໜງການຕ່າງໆເຊັ່ນ: ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS), ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການປົກປ້ອງສັງຄົມ ແລະ ການປັບຕົວ ແລະ ທົນທານຕໍ່ການປ່ຽນແປງດິນຟ້າອາກາດ.

ຈາກຕອນເລີ່ມຕົ້ນ, ທີມງານໄດ້ສ້າງຂຶ້ນ ເພື່ອລວມທັງຊ່ຽວຊານພາຍໃນ ແລະ ຕ່າງປະເທດ, ໂດຍມີຫົວໜ້າທີມຄົນລາວເປັນຜູ້ຮັບຜິດຊອບ ເພື່ອຮັບປະກັນວ່າ ຂັ້ນຕອນດັ່ງກ່າວ ມີຫລັກຖານແໜ້ນໜາມາຈາກສະພາບເງື່ອນໄຂຂອງປະເທດ.

ທີມງານແນໃສ່ການເບິ່ງບັນຫານອກເໜືອຈາກຂໍ້ມູນທີ່ມີຢູ່, ແລະ ໄດ້ເໜັ້ນໃສ່ການວິເຄາະ ໂດຍສະເໜີການ ການພົບພໍ້ຕົວຈິງ ແລະການແນະນຳທີ່ດີໃຫ້ແກ່ຂັ້ນທີ່ຕັດສິນນະໂຍບາຍຮັບຊາບ.

ການວິເຄາະນີ້ ແມ່ນໄດ້ມາຈາກການປຶກສາຫາລືຢ່າງກວ້າງຂວາງຢູ່ຂັ້ນແຂວງ ແລະ ການປຶກສາຫາລືລະຫວ່າງສອງຝ່າຍ, ໂດຍຜົນຮັບຂອງການທົບທວນ ສ່ອງແສງໃຫ້ເຫັນເຖິງຄວາມຮູ້ ແລະ ປະສົບການ ຕົວຈິງ ຂອງທ້ອງຖິ່ນ.

ບົດລາຍງານສະບັບນີ້ນຳສະເໜີການສັງລວມຜົນຮັບຂອງການທົບທວນ ທັງຈາກແຫຼ່ງຂໍ້ມູນປະຖົມພູມ ແລະ ແຫຼ່ງຂໍ້ມູນທຸຕິຍະພູມ, ສັງລວມການອອກແບບໂຄງສ້າງສະຖາບັນ ແລະ ຄຳແນະນຳດ້ານຍຸດທະສາດ, ໄດ້ນຳສະເໜີໃນຮູບແບບທີ່ສາມາດ ເຂົ້າເຖິງໄດ້ງ່າຍສຳລັບຜູ້ມີສ່ວນຮ່ວມພາຍໃນປະເທດແລະຜູ້ວາງນະໂຍບາຍ.

ການວາງແຜນທີ່ລະອຽດ ກ່ຽວກັບນະໂຍບາຍຂອງເປົ້າໝາຍ ການພັດທະນາແບບຍືນຍົງ ແມ່ນເກີນຈຸດສຸມດ້ານຍຸດທະສາດຂອງການທົບທວນຄັ້ງນີ້ ແຕ່ວ່າປະກອບດ້ວຍເຄື່ອງມືທີ່ເປັນປະໂຫຍດສຳລັບການພັດທະນາໂຄງສ້າງການຄຸ້ມຄອງໂດຍລວມ ສຳລັບທຸກເປົ້າໝາຍການພັດທະນາແບບຍືນຍົງ ຢູ່ ສປປ ລາວ.

ການທົບທວນເອກະສານທີ່ມີຢູ່ ຂອງພາກລັດ, ອົງການ ສະຫະປະຊາຊາດ, ສະຖາບັນການເງິນ (ສງ), ອົງການຈັດຕັ້ງບໍ່ສັງກັດລັດຖະບານ (NGOs) ແລະ ແຫຼ່ງວິຊາການ ແມ່ນໄດ້ ດຳເນີນມາຕັ້ງແຕ່ເດືອນ ກຸມພາ 2016 ເປັນຕົ້ນມາ.

ທີມງານສາມາດຊອກຫາເອກະສານສຳຄັນຢ່າງຫຼວງຫຼາຍກ່ຽວກັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການໂດຍສະເພາະໄດ້ເນັ້ນໜັກຄວາມເອົາໃຈໃສ່ພິເສດໃສ່ບົດລາຍງານຕ່າງໆເຊິ່ງໄດ້ສະໜອງການສັງລວມຂໍ້ມູນທີ່ມີຢູ່, ເຊັ່ນ: ບົດລາຍງານ MDG 2013 (ລັດຖະບານລາວ ແລະ UN 2013) ແລະ ການສຳຫຼວດຄວາມສ່ຽງ ແລະ ຄວາມບອບບາງທາງດ້ານການຄ້ຳປະກັນສະບຽງອາຫານ (Risk and Vulnerability Survey) (ກະຊວງການເງິນ ແລະ ອົງການ ອາຫານ ແລະ ການກະເສດ



FAO 2013), ລວມທັງເອກະ-ສານຕ່າງໆທີ່ໄດ້ຮັບການສ້າງຂຶ້ນທີ່ເປັນສ່ວນໜຶ່ງຂອງແຜນທີ່ ນຳທາງ ເພື່ອມຸ່ງສູ່ການລຶບລ້າງຄວາມອຶດຫິວໃຫ້ໝົດໄປ (Zero Hunger Challenge Roadmap) (NFSCDC 2015) ແລະ ຍຸດທະສາດດ້ານ ໂພຊະນາການແຫ່ງຊາດຮອດປີ 2025 ແລະ ແຜນດຳເນີນງານ 2016-2020 (ລັດຖະບານສປປລາວ 2015a). ອີງໃສ່ຄຳແນະນຳຕ່າງໆ ຈາກຜູ້ຕອບແບບສຳຫຼວດ, ຖານຂໍ້ມູນຂອງແຫຼ່ງຂໍ້ມູນ ແມ່ນໄດ້ສືບຕໍ່ສ້າງຂຶ້ນຕະຫຼອດໄລຍະການທົບທວນດັ່ງກ່າວນີ້, ແລະ ໄດ້ຮັບການປັບປຸງໂດຍອີງໃສ່ຂໍ້ມູນເພີ່ມເຕີມທີ່ຄູ່ຮ່ວມງານໄດ້ສະໜອງໃຫ້. ເອກະສານອ້າງອີງຄົບຖ້ວນຂອງວຽກງານຕ່າງໆທີ່ໄດ້ຮັບການທົບທວນ ຫຼື ປຶກສາແມ່ນໄດ້ລວມໄວ້ໃນພາກໜຶ່ງສະເພາະທີ່ມີຫົວຂໍ້ວ່າວຽກງານທີ່ໄດ້ປຶກສາຫາລື (Works Consulted).

1.2.1 ການປຶກສາຫາລືກັບບຸກຄົນທີ່ມີບົດບາດສຳຄັນທີມງານທົບທວນ ໄດ້ພົບປະກັບຜູ້ມີສ່ວນຮ່ວມຫຼັກຈຳນວນ 49 ທ່ານ ຈາກໜ່ວຍງານກ່ຽວຂ້ອງຂອງລັດ, ຕາງໜ້າຂອງສະຖາບັນການເງິນສາກົນ ແລະ ຜູ້ໃຫ້ທຶນ, ອົງການ ສະຫະປະຊາຊາດ ແລະ ອົງການຈັດຕັ້ງສັງຄົມ.

ນອກຈາກການຕິດຕໍ່ກັບຄູ່ຮ່ວມງານທີ່ໄດ້ມີການຈັດຕັ້ງເປັນຢ່າງ-ດີດ້ານວຽກງານຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການແລ້ວ, ທີມງານທົບທວນ ໄດ້ຖືໂອກາດຄົ້ນຫາມຸມມອງທີ່ກວ້າງຂວາງຕ່າງໆເພີ່ມເຕີມ, ຊອກຄົ້ນຮ່ວມກັບຄູ່ຮ່ວມງານຈາກສະພາແຫ່ງຊາດ, ອົງການຈັດຕັ້ງມະຫາຊົນ, ພາກ ເອກະຊົນທີ່ມີຄວາມສົນໃຈໃນວຽກງານ ສະບຽງ ອາຫານ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ, ລວມທັງອົງການຈັດຕັ້ງທີ່ບໍ່ສັງກັດລັດ, ສະຖາບັນການເງິນສາກົນ, ນັກຄົ້ນຄວ້າ ແລະ ອື່ນໆອີກ.

ການສົນທະນາສອງຝ່າຍໄດ້ຖືກຈັດຂຶ້ນ, ເພື່ອຊອກຫາທັດສະນະແນວຄິດຂອງຄູ່ຮ່ວມງານກ່ຽວກັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ສາຍພົວພັນທີ່ເປັນສາຍເຫດ-ຜົນກະທົບຂອງສະບຽງອາຫານ ແລະ ໂພຊະນາການທີ່ບໍ່ໝັ້ນຄົງ, ແລະ ການເຂົ້າຮ່ວມຂອງອົງການຈັດຕັ້ງ ຫຼື ສະຖາບັນ ແລະ ສິ່ງທ້າ-ທາຍຕ່າງໆ ໃນການແກ້ໄຂບັນຫາການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ຢູ່ ສປປ ລາວ.

ສຳລັບການປຶກສາຫາລືສອງຝ່າຍ,ລາຍການຄຳຖາມຊີ້ນຳທີ່ເປັນລັກສະນະເຄິ່ງກຳນົດ ແມ່ນໄດ້ຮັບການສ້າງຂຶ້ນ, ແລະ ບົດບັນທຶກຈາກກອງປະຊຸມເຫລົ່ານີ້ ໄດ້ຮັບການວິເຄາະໂດ ຍທີມງານທົບທວນ ເພື່ອກຳນົດແນວໂນ້ມ ແລະ ຈຸດຕ່າງໆທີ່ມີລັກສະນະຄ້າຍຄືກັນບໍ່ວ່າຈະເປັນດ້ານຄວາມສົນໃຈ ແລະ ຄວາມເປັນຫ່ວງ.

1.2.2 ການປຶກສາຫາລືຮ່ວມກັບບັນດາແຂວງຕ່າງໆໂດຍໄດ້ຮັບການສະໜັບສະໜູນ ແລະ ການຈັດຕັ້ງຜ່ານກະຊວງແຜນການ ແລະ ການລົງທຶນ, ກອງປະຊຸມປຶກສາຫາລືກັບພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ ໄດ້ຈັດຂຶ້ນຢູ່ 17 ແຂວງທົ່ວປະເທດ.
ກອງປະຊຸມໃຊ້ເວລາໜຶ່ງວັນ ໃນຫນຶ່ງແຂວງ ເຊິ່ງມີຜູ້ເຂົ້າຮ່ວມປະມານ 30-50 ທ່ານ (ເຊິ່ງລວມທັງໝົດມີຜູ້ເຂົ້າຮ່ວມຫຼາຍກວ່າ 500 ທ່ານ), ກອງປະຊຸມປຶກສາຫາລືເຫຼົ່ານີ້ ໄດ້ຊອກຮູ້ທັດສະນະມຸມມອງທີ່ກ່ຽວກັບການຄ້ຳ ປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ຢູ່ແຕ່ລະແຂວງ.
ການປຶກສາຫາລື ໄດ້ກຳນົດກອບກ່ຽວກັບການພັດທະນາເສດຖະກິດ ຢູ່ລະດັບແຂວງ ວ່າໄດ້ມີການພັດທະນາໄປໃນທິດທາງທີ່ຈະສະໜັບສະໜູນຈຸດປະສົງຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ຫຼືບໍ່. ຄຳເຫັນ, ທັດສະນະ, ມຸມມອງ ແລະ ຄຳສະເໜີແນະນຳຈາກພາກລັດ, ອົງການຈັດຕັ້ງທີ່ບໍ່ສັງກັດລັດ, ຜູ້ເຂົ້າຮ່ວມຈາກພາກເອກະຊົນແມ່ນໄດ້ຮັບການເກັບກຳໂດຍຜ່ານການ ປຶກສາຫາລືລະຫວ່າງສອງຝ່າຍ ແລະ ການປຶກສາຫາລືເປັນກຸ່ມ.

ໃນແຕ່ລະພາກຂອງການປຶກສາຫາລື, ຜູ້ເຂົ້າຮ່ວມໄດ້ຖືກແບ່ງອອກເປັນສີ່ກຸ່ມ. ແຕ່ລະກຸ່ມໄດ້ຖືກຂໍໃຫ້ເບິ່ງໜຶ່ງໃນບັນຫາຕໍ່ໄປນີ້: ວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ, ຄວາມສະເໝີ ພາບລະຫວ່າງຍິງ-ຊາຍ ແລະ ການພັດທະນາ, ການປົກປ້ອງສັງຄົມ, ແລະການປ່ຽນແປງສະພາບດິນຟ້າອາກາດ ແລະ ຄວາມທົນທານ ຕໍ່ການປ່ຽນແປງດັ່ງກ່າວ. ຜູ້ເຂົ້າຮ່ວມໄດ້ຖືກຂໍຮ້ອງໃຫ້ປຶກສາຫາລືກ່ຽວກັບບັນຫາຕ່າງໆທີ່ຕິດພັນກັບສະພາບການໃນ ປະຈຸບັນ, ສິ່ງທ້າທາຍ ຢູ່ຂັ້ນແຂວງ, ແລະ ສະເໜີວິທີການທີ່ຈະສາມາດບັນລຸເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ໄດ້ຄືແນວໃດ ໂດຍຕິດພັນກັບສະພາບ ເງື່ອນໄຂຂອງທ້ອງຖິ່ນ.

ການປຶກສາຫາລືໄດ້ຊີ້ໃຫ້ເຫັນເຖິງຄວາມບໍ່ງ່າຍດາຍທີ່ມີລະດັບສູງດ້ານທ່າອ່ຽງໃນການພັດທະນາຊົນນະບົດທົ່ວໄປ.
ໂດຍສະເພາະແລ້ວ ແມ່ນບັນຫາການຍາດແຍ່ງທີ່ດິນທີ່ເປັນບັນຫາຂ້ອນຂ້າງກວ້າງ, ທາງເລືອກທີ່ຈຳກັດສຳລັບການສ້າງລາຍໄດ້ ແລະ ການຈ້າງງານ, ການຍົກຍ້າຍຂອງແຮງງານ, ການຂັດແຍ່ງກັນໃນວຽກງານກະສິກຳ, ບັນຫາຫຍຸ້ງຍາກທາງສັງຄົມຢູ່ຂັ້ນບ້ານ, ແລະ ບັນຫາດ້ານສິ່ງແວດລ້ອມ ທີ່ເຊື່ອມໂຊມ ທີ່ຕິດພັນກັບການນຳໃຊ້ ແລະ ຂຸດຄົ້ນຊັບພະຍາກອນທຳມະຊາດແບບບໍ່ຍືນຍົງ ເຊິ່ງບັນຫາເຫຼົ່ານີ້ ຖືເປັນບັນຫາສຳຄັນທີ່ຈະຕ້ອງຖືກພິຈາລະນາແກ້ໄຂ. ຜົນກະທົບຕົວຈິງ ແລະ ຜົນກະທົບທີ່ອາດເກີດຂຶ້ນກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ ອາດຈະຖືກຍົກຂຶ້ນວ່າເປັນບັນຫາອັນໜຶ່ງ, ໂດຍສະເພາະແມ່ນການປະເຊີນກັບເຫດການທີ່ຮຸນແຮງ (ນ້ຳຖ້ວມ, ແຫ້ງແລ້ງ, ຄວາມຮ້ອນຮຸນແຮງ ແລະ ຄວາມໜາວໃນໄລຍະສັ້ນໆ, ການເຊາະເຈື່ອນ, ການສູນເສຍປ່າໄມ້ ແລະ ອື່ນໆ).

ຈຸດເດັ່ນຂອງວິທີການທີ່ກວມເອົາທຸກລະດັບຊ່ວຍໃຫ້ມີຄວາມເຂົ້າໃຈເລິກເຊິ່ງເຖິງຄວາມຈິງທີ່ກວ້າງຂວາງທາງດ້ານປະລິມານ ແລະ ຄຸນນະພາບ ແລະ ສົມມຸດຕິຖານກ່ຽວກັບຂັ້ນຕອນການພັດທະນາຊົນນະບົດຂອງສປປ ລາວ. ທັດສະນະ ແລະ ປະສົບການ ຂອງຜູ້ວາງນະໂຍບາຍ ແລະ ຍຸດທະສາດທີ່ປະຈຳຢູ່ຂັ້ນສູນກາງໄດ້ຖືກປະສົມປະສານເຂົ້າກັນກັບປະສົບການແລະນຳໃຊ້ຄວາມຮູ້ຂອງຜູ້ຮັບຜິດຊອບຂັ້ນແຂວງ, ຜູ້ບໍລິຫານ, ຜູ້ຈັດຕັ້ງປະຕິບັດ ແລະ ນັກວິຊາການຂັ້ນແຂວງ.



# ການວິເຄາະສະຖານະການ



## 2.1 ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ເນື້ອໃນການພັດທະນາຂອງສາກົນ

ດັ່ງທີ່ຮູ້ກັນຢ່າງເປັນທາງການ ໃນນາມ ວາລະການພັດທະນາແບບຍືນຍົງ 2030, ເປົ້າໝາຍການພັດທະນາແບບຍືນຍົງ (SDG) ນຳສະເໜີກອບວຽກໂດຍລວມ ຂອງສາກົນ ເພື່ອການພັດທະນາສຳລັບໃນອີກສິບຫ້າປີຂ້າງໜ້າ.
ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຊຸກຍູ້ວາລະການພັດທະນາ 'ດ້ວຍການສ້າງໂລກໃຫ້ຍືນຍົງເຊິ່ງຄວາມຍືນຍົງດ້ານສິ່ງແວດລ້ອມ, ການເຂົ້າຮ່ວມຂອງສັງຄົມ, ການພັດທະນາເສດຖະກິດ ແມ່ນມີຄຸນຄ່າເທົ່າທຽມກັນ' (UN SDGF 2016).

ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເນັ້ນໜັກໃສ່ ຄວາມເປັນເຈົ້າການຂອງປະເທດ, ຄວາມຫຼາກຫຼາຍມິຕິ, ມີຄວາມພະຍາຍາມຮ່ວມກັນຂອງ ຫຼາຍພາກສ່ວນທີ່ກ່ຽວຂ້ອງ, ແລະ ການປະສານຄວາມພະຍາຍາມ ຈາກອົງການຈັດຕັ້ງຂອງ ອົງການ ສະຫະ ປະຊາຊາດ UN.
ເປົ້າໝາຍການພັດທະນາແບບຍືນຍົງ (SDGs ສ້າງຂຶ້ນບົນພື້ນຖານປະສົບການ ແລະ ຜົນກະທົບຂອງເປົ້າໝາຍສະຫັດສະວັດດ້ານການພັດທະນາ, ແຕ່ວ່າຂ້ອນຂ້າງ ມີເປົ້າໝາຍສູງໃນຂອບເຂດທີ່ກຳນົດ, ປະກອບມີ 17 ຈຸດປະສົງ ແລະ 169 ເປົ້າໝາຍ.
ຈຸດປະສົງ ແລະ ເປົ້າໝາຍ ລວມທັງ ບໍ່ພຽງແຕ່ ຕົວຊີ້ວັດທາງຄຸນນະພາບເທົ່ານັ້ນ ທີ່ນຳພາ ແລະ ຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ພາຍໃນປະເທດຂອງຕົນ.
ນອກຈາກນັ້ນ, ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຍັງໄດ້ແຍກອອກຈາກເປົ້າໝາຍ MDGs ໃນຫຼາຍວິທີທີ່ ສຳຄັນດັ່ງນີ້:

- ການຫຼຸດຜ່ອນຄວາມບໍ່ເທົ່າທຽມກັນ ແມ່ນສິ່ງທີ່ສຳຄັນໃຫ້ແກ່ SDGs. ອັນນີ້ເນັ້ນໜັກໃສ່ຄວາມ ຈຳເປັນທີ່ຕ້ອງສຸມໃສ່ 'ເປັນ ສິ່ງທຳອິດຜູ້ທີ່ຍັງຖືກປະຖິ້ມຢູ່ທາງຫຼັງທີ່ຫ່າງໄກກວ່າໝູ່', ຮັບປະກັນວ່າບໍ່ມີໃຜຖືກຖິ້ມປະໄວ້ຂ້າງຫຼັງ, ຫຼຸດຜ່ອນຄວາມແຕກໂຕນ ກັນລະຫວ່າງຍິງ ແລະ ຊາຍ, ເດັກຍິງ ແລະ ເດັກຊາຍ, ເຂດຊົນນະບົດ ແລະ ຕົວເມືອງ, ແລະ ປະຊາຊົນທີ່ທຸກຍາກ ແລະ ຜູ້ທີ່ຮັ່ງມີ.
- ວາລະພັດທະນາ 2030 ແມ່ນໄດ້ຮັບການເຊື່ອມສານ, ເພິ່ງພາເຊິ່ງກັນແລະກັນ ແລະບໍ່ສາມາດແບ່ງແຍກອອກຈາກກັນໄດ້.
  ຄວາມຄືບໜ້າໃນເປົ້າໝາຍໜຶ່ງ ແມ່ນຈະເປັນໄປໄດ້ກໍ່ຕໍ່ເມື່ອໄດ້ຮັບໝາກຜົນທີ່ຕິດພັນກັບຄວາມຄືບໜ້າຂອງເປົ້າໝາຍອື່ນ, ແລະທ້າຍທີ່ສຸດຈະຮຽກຮ້ອງໃຫ້ມີຍຸດທະສາດຂອງທຸກຂະແໜງການ.

• ສາມມິຕິຂອງການພັດທະນາແບບຍືນຍົງ.

ບໍ່ວ່າເປົ້າໝາຍ MDGs ຈະເນັ້ນໜັກໃສ່ຕົວຊີ້ວັດທາງສັງຄົມຫຼືບໍ່ກໍ່ຕາມ, ເປົ້າໝາຍ SDGs ຮັບຮູ້ວ່າ ຄວາມຍືນຍົງ ຮຽກຮ້ອງໃຫ້ພິຈາລະນາເຖິງປັດໃຈທາງສັງຄົມ, ເສດຖະກິດ ແລະ ສິ່ງແວດລ້ອມ (WFP 2015).

ຖະແຫຼງການຂອງເປົ້າໝາຍໂດຍລວມ ສຳລັບ ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ແມ່ນໄດ້ຮັບການ



ນຳສະເໜີໄວ້ດັ່ງນີ້:ລຶບລ້າງຄວາມອຶດຫິວ,ບັນລຸການຄ້ຳປະກັນສະບຽງອາຫານ ແລະ ປັບປຸງດ້ານໂພຊະນາການ ແລະ ສົ່ງເສີມການກະສິກຳແບບຍືນຍົງ.

ເພື່ອໃຫ້ສອດຄ່ອງກັບລັກສະນະຂອງ ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ທີ່ເຊື່ອມໂຍງກັນ, ຄວາມຄືບໜ້າຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ແມ່ນເຊື່ອມໂຍງກັບເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 1 ລຶບລ້າງຄວາມທຸກຍາກ, ໂດຍມີອົງການ ອົງການອາຫານ ແລະ ການກະເສດ (FAO) ໃຫ້ ຄຳເຫັນວ່າ "ປະຈຸບັນມີການຜະລິດສະບຽງອາຫານຢ່າງຫຼວງຫຼາຍເກີນຄວາມຕ້ອງ ການທີ່ຈະລ້ຽງດູທຸກໆຄົນໃນໂລກນີ້ໄດ້, ແຕ່ວ່າເກືອບເຖິງ800ລ້ານຄົນຍັງປະເຊີນກັບຄວາມອຶດຫິວທີ່ຊ້ຳເຮື້ອ. ຍ້ອນວ່າຄວາມ ສາມາດໃນການຈັດຫາສະບຽງອາຫານສ່ວນໃຫຍ່ແມ່ນຕິດພັນກັບລາຍຮັບ, ການຮັບປະກັນການເຂົ້າເຖິງສະບຽງອາຫານ ກໍ່ຍັງເປັນໜຶ່ງໃນ ເສົາຄ້ຳຫຼັກຂອງການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ເປົ້າໝາຍລວມໃນການຕໍ່ສູ້ຕ້ານກັບຄວາມທຸກຍາກ". ທາງດ້ານຄູ່ຮ່ວມງານ, ໜ່ວຍງານຫຼັກຂອງການປ່ຽນແປງເພື່ອໃຫ້ເປົ້າໝາຍການພັດທະນາແບບຍືນຍົງ(SDG) ລວມເອົາແມ່ຍິງເຂດຊົນນະບົດ, ຜູ້ຜະລິດສະບຽງອາຫານ ຂະ ໜາດນ້ອຍ ແລະ ຄອບຄົວ ຊາວໄຮ່ຊາວນາ, ນັກລົງທຶນໃສ່ຖະໜົນຫົນທາງ, ຕະຫຼາດ ແລະ ໂຄງລ່າງພື້ນຖານ, ປະຊາກອນທີ່ດ້ອຍໂອກາດ ແລະ ຜູ້ກຳນົດນະໂຍບາຍ (ອົງການອາຫານ ແລະ ການກະເສດ 2016b).

ການບັນລຸ ເປົ້າໝາຍການພັດທະນາແບບຍືນຍົງເປົ້າໝາຍທີ 2 ຍັງຄົງເຊື່ອມໂຍງກັບເປົ້າໝາຍ ເປົ້າໝາຍທີ 3 (ສຸຂະພາບ) ເປົ້າໝາຍທີ 4 (ການສຶກສາ), ເປົ້າໝາຍທີ 5 (ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ສ້າງຄວາມຄວາມເຂັ້ມແຂງ), ເປົ້າໝາຍທີ 6 (ນ້ຳ), ເປົ້າໝາຍທີ 7 (ພະລັງງານທີ່ສະອາດ ແລະ ລາຄາບໍ່ແພງ), ເປົ້າໝາຍທີ 10 (ຄວາມບໍ່ສະເໝີພາບ), ເປົ້າໝາຍທີ 12 (ການອຸປະໂພກບໍລິໂພກ ແລະ ການຜະລິດທີ່ຍືນຍົງ) ເປົ້າໝາຍທີ 13 (ຕ້ານການປ່ຽນແປງ ຂອງດິນຟ້າອາກາດ), ເປົ້າໝາຍທີ 14 (ຊັບພະຍາກອນສັດນ້ຳ), ແລະ ເປົ້າໝາຍທີ 15 (ຊີວິດເທິງໜ້າດິນ). ບົດລາຍງານໂພຊະນາການສາກົນ (IFPRI 2016) ໄດ້ ກຳນົດ 56 ເປົ້າໝາຍທີ່ກວມເອົາ 12 ຂອງທັງໝົດ 17 ເປົ້າໝາຍການພັດທະນາແບບຍືນຍົງ ເຊິ່ງແມ່ນມີຄວາມກ່ຽວພັນຢ່າງສູງກັບໂພຊະນາການ.

ດ້ວຍຫຼາກຫຼາຍມຸມມອງດ້ານຄຸນນະພາບ ແລະ ປະລິມານ ຂອງທັງ 169 ເປົ້າໝາຍ ທີ່ລວມໄວ້ພາຍໃຕ້ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ດັ່ງກ່າວ, ເຫັນວ່າ ອັນນີ້ແມ່ນເກີນຂອບເຂດຂອງການທົບທວນຄັ້ງນີ້ທີ່ຈະສາມາດພິຈາລະນາໄດ້ຄົບຖ້ວນຂອງທຸກໆການເຊື່ອມໂຍງ ທີ່ອາດມີລະຫວ່າງເປົ້າໝາຍທີ 2 ແລະ ເປົ້າໝາຍອື່ນໆ ເຊັ່ນຕົວຢ່າງ: ເປົ້າໝາຍທີ 5 ກ່ຽວກັບຄວາມ ສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງ ລວມທັງເປົ້າໝາຍກ່ຽວກັບແຮງງານພາຍໃນ, ການແຕ່ງງານແຕ່ອາຍຸຍັງນ້ອຍ ແລະ ການຄອບ ຄອງທີ່ດິນ, ເຊິ່ງທັງ ໝົດແມ່ນກ່ຽວຂ້ອງກັບການບັນລຸເປົ້າໝາຍທີ 2. ມີຄວາມຄາດຫວັງວ່າຂັ້ນຕອນທີ່ມີ ຄວາມລະອຽດຄົບຖ້ວນ ທີ່ເບິ່ງເຖິງການເຊື່ອມໂຍງເຊິ່ງກັນແລະກັນ ຈະເປັນສ່ວນໜຶ່ງຂອງຂັ້ນຕອນທີ່ຫັນປ່ຽນເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ແທດເໝາະກັບສະພາບທ້ອງຖິ່ນ ທີ່ ກຳລັງຈະດຳເນີນໃນຕໍ່ໜ້າ.

ໃນການຮັບໃຊ້ເປົ້າໝາຍ SDG2, ຫ້າເປົ້າໝາຍຫຼັກ ແລະ ສາມເປົ້າໝາຍເພີ່ມເຕີມແມ່ນ:

2.1 ພາຍໃນປີ 2030, ລຶບລ້າງຄວາມອຶດຫິວ ແລະ ຮັບປະກັນໃຫ້ໝົດທຸກຄົນ ໂດຍສະເພາະຄົນທຸກຍາກ ແລະ ຜູ້ທີ່ມີຄວາມສ່ຽງ, ລວມທັງ ແອນ້ອຍ ສາມາດເຂົ້າ ເຖິງສະບຽງອາຫານທີ່ປອດໄພ, ມີໂພຊະນາການ ແລະ ພຽງພໍຕະຫລອດປີ.

2.2 ພາຍໃນປີ2030, ລຶບລ້າງການຂາດສານອາຫານທຸກຮູບແບບ, ລວມທັງບັນລຸໃຫ້ໄດ້ພາຍໃນປີ 2025 ຄາດໝາຍທີ່ສາກົນໄດ້ຮັບຮອງ ກ່ຽວກັບອັດຕາສ່ວນເດັກຕ່ຳກ່ວາ 5 ປີ ທີ່ ມີຄວາມສູງ ແລະ ນ້ຳໜັກບໍ່ໄດ້ມາດຖານ ແລະ ແກ້ໄຂຄວາມຕ້ອງການດ້ານໂພຊະນາການ ໃນກຸ່ມເດັກຍິງ, ຜູ້ຍິງຖືພາ ແລະ ແມ່ທີ່ຍັງໃຫ້ນົມລູກ ແລະ ຜູ້ສູງອາຍຸ.

2.3 ພາຍໃນປີ 2030, ເພີ່ມສະມັດຕະພາບການຜະລິດກະສິກຳ ແລະ ລາຍຮັບຂອງຜູ້ຜະລິດສະບຽງອາຫານຂະໜາດນ້ອຍໂດຍສະເພາະແມ່ຍິງ, ຄົນຊົນເຜົ່າ, ຄອບຄົວຊາວໄຮ່ນາ, ຄົນລ້ຽງສັດ ແລະ ຊາວປະມົງ ໃຫ້ໄດ້ ສອງເທົ່າ ໂດຍຜ່ານມີສິດສະເໝີພາບໃນການເຂົ້າເຖິງທີ່ດິນ, ຊັບພະຍາກອນ ແລະ ປັດໃຈການຜະລິດ, ຄວາມຮູ້, ການບໍລິການດ້ານການເງິນ, ຕະຫຼາດ ແລະ ກາລະໂອກາດສຳລັບ ການເພີ້ມມູນຄ່າຜະລິດຕະພັນ ແລະ ວຽກນອກກະແໜງການກະສິກຳ.

2.4 ພາຍໃນປີ 2030, ຮັບປະກັນໃຫ້ມີລະບົບການຜະລິດສະບຽງອາຫານແບບຍືນຍົງ ແລະ ດຳເນີນວິທີການເຮັດກະສິກຳແບບທົນທານ ທີ່ເພີ້ມສະມັດຕະພາບ ແລະ ການຜະລິດ, ເຊິ່ງຊ່ວຍຮັກສາລະບົບນິເວດ, ເພີ້ມຂີດຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງ ຂອງດິນຟ້າອາກາດ, ອາກາດທີ່ປັ່ນປ່ວນ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ໄພພິບັດອື່ນໆ, ກໍຄືປັບປຸງຄຸນນະພາບຂອງດິນເປັນກ້າວໆ.

2.5 ພາຍໃນປີ 2020, ຮັກສາຄວາມຫຼາກຫຼາຍດ້ານພັນທຸກຳຂອງແນວພັນພືດ, ເຄື່ອງປູກຂອງຝັງ ແລະ ສັດລ້ຽງ, ສົ່ງເສີມການປູກ

ແນວພັນພືດແລະ ສັດຈາກແຫຼ່ງທຳມະຊາດໂດຍຜ່ານການສ້າງທະນາຄານແນວພັນ ແລະ ພັນພືດທີ່ຫຼາກຫຼາຍ ແລະ ມີການຄຸ້ມຄອງເປັນຢ່າງດີ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ພ້ອມທັງສົ່ງເສີມການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳ ແລະ ເທົ່າທຽມກັນ ທີ່ໄດ້ຮັບຈາກການ ນຳໃຊ້ຊັບພະຍາກອນດ້ານພັນທຸກຳ ແລະ ພູມປັນຍາພື້ນເມືອງທີ່ກ່ຽວຂ້ອງ ທີ່ສາກົນໄດ້ຮັບຮອງເອົາ.

2.ກ. ເພີ່ມການລົງທຶນ ລວມທັງຜ່ານການເພີ່ມທະວີການຮ່ວມມືສາກົນ ໃນວຽກງານພັດທະນາພື້ນຖານໂຄງລ່າງໃນເຂດຊົນນະບົດ, ສູນຄົ້ນຄວ້າ ແລະ ການບໍລິການສົ່ງເສີມກະສິກຳ, ການພັດທະນາເຕັກໂນໂລຢີ ແລະ ທະນາຄານເກັບຮັກສາພັນທຸກຳພືດ ແລະ ສັດລ້ຽງ ເພື່ອເພີ່ມທະວີຂີດຄວາມສາມາດໃນການຜະລິດກະສິກຳຢູ່ປະເທດກຳລັງພັດທະນາ, ໂດຍສະເພາະປະເທດດ້ອຍພັດທະນາ.

2.ຂ. ແກ້ໄຂ ແລະ ປ້ອງກັນການກີດກັ້ນທາງການຄ້າ ແລະ ການບິດເບືອນໃນຕະຫຼາດກະສິກຳຂອງໂລກໂດຍຜ່ານການກຳຈັດທຸກຮູບແບບ ຂອງການເກື້ອກູນການ ສົ່ງອອກຜົນຜະລິດກະສິກຳ ແລະ ທຸກມາດຕະການກ່ຽວກັບການສົ່ງອອກທີ່ມີຜົນ ເທົ່າທຽມກັນ ໂດຍສອດຄ່ອງ ກັບພາລະບົດບາດຂອງຮອບການເຈລະຈາດ້ານການພັດທະນາຢູ່ໂດຮາ (Doha Development Round).

2.ຄ. ນຳໃຊ້ມາດຕະການຕ່າງໆ ເພື່ອຮັບປະກັນການເຮັດໜ້າທີ່ທີ່ເໝາະສົມ ຂອງຕະຫລາດສິນຄ້າສະບຽງອາຫານ ລວມທັງຕະຫຼາດສຳຮອງ ແລະ ອຳນວຍຄວາມສະດວກໃຫ້ແກ່ການເຂົ້າເຖິງຂໍ້ມູນການຕະຫຼາດຢ່າງທັນການ ລວມທັງຄັງສະບຽງອາຫານສຳຮອງ, ເພື່ອຊ່ວຍໃນການຈຳກັດບໍ່ໃຫ້ມີການເໜັງຕີງຂອງລາຄາສະບຽງອາຫານຫຼາຍເກີນໄປ. (UN SDGF 2016).

ໂດຍທົ່ວໄປແລ້ວ ແຜນພັດທະນເສດຖະກິດ-ສັງຄົມ 5ປີ ຄັ້ງທີ VIII ໄດ້ສະເໜີທາງເລືອກທີ່ຫຼາກຫຼາຍ ເພື່ອຮວບຮວມເອົາ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ແຜນພັດທະນາເສດຖະກິດ ສັງຄົມ ແຫ່ງຊາດ. ອີງໃສ່ບູລິມະສິດທີ່ໄດ້ກຳນົດໄວ້ໃນ ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ VIII, ແລະ ຄຳແນະນຳເພີ່ມເຕີມ ຈາກກະຊວງແຜນການ ແລະ ການລົງທຶນ, ການທົບທວນຍຸດທະສາດ ຂອງ ເປົ້າໝາຍທີ 2 (SDG2) ຢູ່ໃນສະພາບຂອງ ສປປ ລາວ ແມ່ນສຸມໃສ່ຫ້າເປົ້າໝາຍຫຼັກຂອງ ເປົ້າໝາຍທີ 2 (SDG2).

2.2 ຄວາມຄືບໜ້າຂອງ ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 ຢູ່ ສປປ ລາວ: ສະພາບການໃນປີ 2015 ເນື່ອງຈາກໃນອະນາຄົດຈະແມ່ນສຸມໃສ່ເປົ້າໝາຍການພັດທະນາແບບຍືຍົງ, ແນະນຳໃຫ້ເລີ່ມສັງລວມຄວາມຄືບໜ້າທີ່ ສປປ ລາວ ສາມາດປະຕິບັດໄດ້ໃນໄລຍະ 15 ປີ ຜ່ານມາ (2000-2015).

ພາກຖັດໄປພິຈາລະນາວ່າ ເປົ້າໝາຍການພັດທະນາແບບຍືນຍົງຈະສາມາດ ນຳໃຊ້ ແລະ ຖືກຕີຄວາມໝາຍແນວໃດໃນສະພາບການຢູ່ລາວ, ອີງໃສ່ຖານຂໍ້ມູນ 2015 ແລະ ການຄາດຄະເນແນວໂນ້ມຈົນເຖິງປີ 2030.

ໃນໄລຍະທີ່ການທົບທວນຄັ້ງນີ້ ກຳລັງດຳເນີນໄປ, ການທັບ ຈຸດປະສົງ ແລະ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ເຂົ້າກັນກັບສະພາບທ້ອງຖິ່ນ ແມ່ນກຳລັງດຳເນີນໄປຢ່າງຕໍ່ເນື່ອງ, ໂດຍມີຫ້ອງການ ຂອງ ອົງການ ສະຫະປະຊາຊາດ ປະຈຳ ສປປ-ລາວ ແລະ ກະຊວງແຜນການ ແລະ ການລົງທຶນຮ່ວມກັນເປັນເຈົ້າການ ນຳພາຂັ້ນຕອນດັ່ງກ່າວ ເຊິ່ງເປົ້າໝາຍ ແລະ ຕົວຊີ້ວັດດັ່ງກ່າວ ແມ່ນໄດ້ຮັບການເຊື່ອມສານເຂົ້າໃນແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ VIII, ແລະ ມຸ່ງສູ່ການຄ່ອຍໆ ຫຼຸດພົ້ນຈາກສະຖານະເປັນປະເທດດ້ອຍພັດທະນາ.
ປະຈຸບັນ, 79 ຕົວຊີ້ວັດ ແມ່ນມີຄວາມກົມກຽວກັນທັງຢູ່ໃນ ແຜນພັດທະນາ ເສດຖະກິດ ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ VIII ແລະ ເປົ້າໝາຍການພັດທະນາແບບຍືນຍົງ, ໂດຍມີ 24 ເປົ້າໝາຍແມ່ນແນະນຳໃຫ້ລວມເຂົ້າໃນແຜນພັດທະນາເສດຖະກິດ ສັງຄົມ ແຫ່ງຊາດ 5ປີ ຄັ້ງທີ VIII.

ການທັບປ່ຽນໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ ຍັງໄດ້ລວມເອົາການສັງລວມການທົບທວນຂອງ MDGs, ເນັ້ນໜັກຄວາມຄືບໜ້າທີ່ສາມາດປະຕິບັດໄດ້ຢ່າງດີ, ແລະ ບົດຮຽນທີ່ຖອດຖອນໄດ້ຈາກປະສົບການຜ່ານມາ (ລັດຖະບານ ສປປ ລາວ 2015b). ຈຸດສຳຄັນຢູ່ຂ້າງລຸ່ມນີ້ແມ່ນໄດ້ສັງລວມມາຈາກຂັ້ນຕອນການທົບທວນ ແລະ ເອກະສານເກັບກຳທີ່ກ່ຽວຂ້ອງ.

ການນຳພາດ້ານນະໂຍບາຍ: ລັດຖະບານ ແຫ່ງ ສປປລາວ ໄດ້ວາງບັນຫາການຄໍ້າປະກັນທາງ ດ້ານສະບຽງອາຫານ ແລະ ໂພຊະນາການ ເປັນປ້ອມດ່ານໜ້າຂອງການພັດທະນາວາລະສຳຄັນດ້ານນະໂຍບາຍ, ເຮັດໃຫ້ມັນກາຍເປັນກົນໄກ ຂອງ ກອງປະຊຸມ ໂຕະມົນ2015, ແລະ ໄດ້ກຳນົດວິທີການທົ່ວທຸກຂະແໜງການຂອງຍຸດທະສາດດ້ານໂພຊະນາການແຫ່ງຊາດ ແລະ ແຜນດຳເນີນງານ 2016-2020 ທີ່ເປັນຫຼັກການລວມເຂົ້າກັນ (convergence-approach) ເພື່ອຈະໄດ້ຜັນຂະຫຍາຍ ໄປນຳໃຊ້ ໃນຂະແໜງການອື່ນໆ (ກະຊວງແຜນການ ແລະ ການລົງທຶນ 2015a).

ຄວາມຮັບຮູ້ເຖິງບູລິມະສິດອັນນີ້ໄດ້ຖືກສ່ອງແສງໃຫ້ເຫັນໃນຂໍ້ຜູກພັນທີ່ຜູ້ໃຫ້ທຶນເປັນຜູ້ຊຸກຍູ້ພັກດັນເພື່ອສະໜອງທຶນຮອນໃໝ່ໃຫ້ແກ່ວຽກງານການຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ຈົນເຖິງປີ 2020 ແລະ ໃນຕໍ່ໜ້າ.
ຄະນະກຳມະການໂພຊະນາການແຫ່ງຊາດ, ພາຍໃຕ້ການນຳພາຂອງທ່ານຮອງນາຍົກ ລັດຖະມົນຕີ ໄດ້ເຮັດໜ້າທີ່ເປັນຄະນະປະສານງານໄດ້ຢ່າງພົ້ນເດັ່ນທີ່ເຂັ້ມແຂງ ແລະ ຕັ້ງໜ້າ.

ການເຕີບໂຕດ້ານເສດຖະກິດ ແລະການຫຼຸດຜ່ອນຄວາມທຸກຍາກ. ໃນໄລຍະທົດສະວັດທີ່ຜ່ານມາ, ສປປ ລາວ ໄດ້ມີການເກັບກຳບັນທຶກອັດຕາການເຕີບໂຕດ້ານລວມຍອດຜະລິດຕະພັນພາຍໃນ (GDP) ທີ່ຂະຫຍາຍໂຕຢ່າງສະໝໍ່າສະເໝີ ໃນອັດຕາ 7 ສ່ວນຮ້ອຍ ຫຼື ສູງກວ່າ.

ໃນປີ 2011, ປະເທດລາວ ໄດ້ຫຼຸດພົ້ນອອກຈາກ ‘ສະຖານະເປັນ

ປະເທດທີ່ມີລາຍຮັບຕ່ຳປານກາງ', ໂດຍມີ GNI ຕໍ່ຫົວຄົນ ໃນອັດຕາ 1,400 ໂດລາສະຫະລັດ ໃນປີ 2014 (ລັດຖະບານລາວ 2015b). ການເຕີບໂຕທາງດ້ານເສດຖະກິດນີ້ ແມ່ນສ່ວນໃຫຍ່ໄດ້ມາຈາກການພັດທະນາໂຄງລ່າງພື້ນຖານ, ອຸດສາ ຫະກຳຂຸດຄົ້ນ,ການນຳໃຊ້ຊັບພະຍາກອນທຳມະຊາດ ແລະການພັດທະນາເຂື່ອນໄຟຟ້ານ້ຳຕົກ.

ເປົ້າໝາຍ MDG1 ຫຼຸດຜ່ອນ ຄວາມທຸກຍາກ ລົງໃຫ້ໄດ້ເຄິ່ງໜຶ່ງ ແມ່ນສາມາດປະຕິບັດໄດ້ຕາມເປົ້າໝາຍ ສອງປີກ່ອນຄາດໝາຍ, ໂດຍໄດ້ຫຼຸດຜ່ອນຊ່ອງວ່າງ ຄວາມທຸກຍາກ ແລະ ຄວາມຮຸນແຮງ, ແລະ ການແຜ່ຫຼາຍ ໂດຍລວມ ແມ່ນຫຼຸດຜ່ອນລົງໄດ້ເຄິ່ງໜຶ່ງ, ເຖິງ 23 ສ່ວນຮ້ອຍ (ລັດຖະບານ ສປປ ລາວ 2015b).

ອັດຕາການເຕີບໂຕດ້ານເສດຖະກິດແມ່ນໄດ້ຖືກທັກລ້າງດ້ວຍການເພີ່ມຂຶ້ນຂອງຄວາມບໍ່ເທົ່າທຽມກັນ, ເນື່ອງຈາກວ່າ ມັນບໍ່ໄດ້ກ່ຽວພັນກັບການແບ່ງປັນຜົນປະໂຫຍດທີ່ເທົ່າທຽມກັນ.
ອົງການ ສະຫະປະຊາຊາດ ໄດ້ປະເມີນການສູນເສຍໂດຍລວມໃນການພັດທະນາມະນຸດຍ້ອນຜົນໄດ້ຮັບຂອງຄວາມບໍ່ເທົ່າທຽມກັນ ຢູ່ທີ່ 25.6 ສ່ວນຮ້ອຍ (UNDP 2015).

ຄວາມຍືນຍົງຂອງການເຕີບໂຕດ້ານເສດຖະກິດຕັ້ງຢູ່ບົນພື້ນຖານຂອງການຂຸດຄົ້ນຊັບພະຍາກອນທຳມະຊາດທີ່ມີຈຳກັດ ແມ່ນເປັນບັນຫາໃນໄລຍະກາງ ແລະ ໄລຍະຍາວ.
ວຽກງານຄ້ຳປະກັນສະບຽງອາຫານ:ໃນລະດັບປະເທດ, ສປປລາວ ສາມາດປະຕິບັດການກຸ້ມຕົນເອງທາງດ້ານສະບຽງອາຫານໄດ້ ໂດຍວັດແທກຈາກກິໂລກາລໍລີ່, ແລະ ສາມາດຜະລິດເຂົ້າກິນກຸ້ມຕົນເອງໄດ້ນັບແຕ່ປີ 2000.

ຜົນຜະລິດພາຍໃນຂອງພືດພັນທີ່ສຳຄັນ (ທັງພືດທີ່ເປັນອາຫານ ແລະ ພືດເພື່ອເປັນສິນຄ້າ) ໄດ້ເພີ່ມຂຶ້ນນັບແຕ່ປີ 1999 ( ກະຊວງກະສິກຳ-ປ່າໄມ້ ແລະ ສູນສະຖິຕິແຫ່ງຊາດ LSB 2012).
ການກະສິກຳ, ລວມທັງການຜະລິດເປັນສິນຄ້າເພື່ອສົ່ງອອກ ແລະ ການຜະລິດສະບຽງອາຫານ ສຳລັບບໍລິໂພກພາຍໃນ, ທັບຊ້ອນກັບການເພີ່ມຂຶ້ນ ຂອງ ລະດັບການເຄື່ອນຍ້າຍຖິ່ນຖານຂອງປະຊາກອນເຂດຊົນນະບົດ ແລະ ການຄ່ອຍໆເຊື່ອມໂຍງເຂົ້າໃນຕະຫຼາດໃນເຂດພາກພື້ນ, ໄດ້ເຮັດໃຫ້ສະພາບ ລວມຂອງການຄ້ຳປະກັນທາງດ້ານສະບຽງອາຫານ ຂອງ ສປປ ລາວ ມີຫຼາຍແງ່ມຸມ ແລະ ສັບຊ້ອນ.

ໂພຊະນາການ : ຄວາມຄືບໜ້າທີ່ ສຳຄັນໃນການຫຼຸດຜ່ອນການຂາດໂພຊະນາການ ແມ່ນສາມາດປະຕິບັດໄດ້ນັບແຕ່ຕົ້ນຊຸມປີ 1990. ເປົ້າ ໝາຍ MDG ໃນການຫຼຸດຜ່ອນຄວາມອຶດຫິວ ແລະ ຂາດໂພຊະນາການໃຫ້ໄດ້ເຄິ່ງໜຶ່ງ ແມ່ນໄດ້ຮັບຜົນສຳເລັດແລ້ວ. ການແຜ່ຫຼາຍຂອງການຂາດໂພຊະນາການແບບຊຳເຮື້ອ (ລວມທັງການເຕ້ຍ ແລະ ນ້ຳໜັກຕ່ຳກວ່າມາດຕະຖານ) ແມ່ນຢູ່ທີ່ 35.6 ສ່ວນຮ້ອຍ ແລະ 27 ສ່ວນຮ້ອຍ ຕາມລຳດັບ, ແລະ ຍັງຄົງເປັນບັນຫາທ້າທາຍທີ່ສຳຄັນສຳລັບຂະແໜງສາທາລະນະສຸກ, ໂດຍມີອັດຕາເດັກເສຍຊີວິດ 1 ຕໍ່ 3 ຂອງເດັກທີ່ອາຍຸຕ່ຳກວ່າຫ້າປີ ເຊິ່ງຕິດພັນກັບການຂາດໂພຊະນາການ (UNICEF 2016).

ອັດຕາຂອງໂລກເລືອດຈາງ ແລະ ນ້ຳໜັກໂຕຕ່ຳ ກວ່າມາດຕະຖານໃນເວລາເກີດ, ແລະ ອັດຕາການລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວ ແມ່ນຍັງຄົງຕ່ຳຢູ່ (SUN 2016).

ອັດຕາການ ຈ່ອຍຜອມ (ທີ່ສະແດງເຖິງການຂາດໂພຊະນາການຢ່າງຮຸນແຮງ) ລະຫວ່າງ 5 ແລະ 7 ສ່ວນຮ້ອຍ ຍັງຄົງບໍ່ມີການປ່ຽນແປງຕະຫຼອດໄລຍະໜຶ່ງທົດສະວັດຜ່ານມາ. ປັດໃຈບົ່ງຊີ້ເບື້ອງຕົ້ນຈາກການສຳຫຼວດໂພຊະນາການທີ່ດຳເນີນໃນປີ 2015 ໂດຍກະຊວງສາທາລະນະສຸກ ໃຫ້ຮູ້ວ່າ ການຫຼຸດຜ່ອນຢ່າງຫຼວງຫຼາຍຂອງອັດຕາການຂາດໂພຊະນາການແບບຊ້ຳເຮື້ອ ແມ່ນສາມາດບັນລຸໄດ້ນັບແຕ່ປີ 2011-2012 ໃນການສຳຫຼວດດັດສະນີໝາຍສັງຄົມລາວ (LSIS).

ສິ່ງແວດລ້ອມ: ຄວາມຄືບໜ້າກ່ຽວກັບຄວາມຍືນຍົງດ້ານສິ່ງແວດລ້ອມ ແມ່ນຖືກຈຳກັດ. ການປະຕິບັດປະຈຸບັນທີ່ມີລັກສະນະບໍ່ຍືນຍົງຕໍ່ກັບການນຳໃຊ້ຊັບພະຍາກອນທຳມະຊາດ ແລະ ການຂຸດຄົ້ນ ເພື່ອການຄ້າ ແບບບໍ່ຍືນຍົງ ໄດ້ເພີ່ມຄວາມກົດດັນໃຫ້ແກ່ສິ່ງແວດລ້ອມ.
ການ ເພີ່ມຂຶ້ນຂອງຄວາມຖີ່ ແລະ ຄວາມຮຸນແຮງຂອງສະພາບອາກາດໄດ້ຮັບການວັດແທກ ແລະ ສັງເກດການ, ແລະ ຍ້ອນມີການຫຼຸດລົງຂອງການປົກຫຸ້ມຂອງປ່າໄມ້ ແລະ ການເພີ່ມຂຶ້ນຂອງການປ່ອຍອາຍກາກໂບນິກ( $CO_2$).

ຕາມທັດສະນະສາກົນ, ສປປ ລາວ ໄດ້ມີຜົນສຳເລັດທີ່ດີ ຈຳນວນໜຶ່ງ ໃນດ້ານນະໂຍບາຍກ່ຽວກັບດິນຟ້າອາກາດເຊັ່ນ: ຍຸດທະສາດການປ່ຽນແປງຂອງດິນຟ້າອາກາດຂອງ ສປປ ລາວ (ລັດຖະບານ ສປປ ລາວ 2010), ແຕ່ວ່າຂາດກອບວຽກດ້ານສະຖາບັນເຕັມຮູບແບບ ເພື່ອຮັບປະກັນວ່າການຕ້ານທານຕໍ່ສະພາບການປ່ຽນແປງຂອງດິນ ຟ້າອາກາດ ໄດ້ຮັບການເຊື່ອມສານເຂົ້າໃນນະໂຍບາຍຕ່າງໆຂອງແຜນງານຂອງຂະແໜງການ, ຂະບວນການຕັດສິນໃຈ ແລະ ການສ້າງນະໂຍບາຍ.

ຄວາມບອບບາງ: ທັງສະພາບເຂດຊົນນະບົດ ແລະ ເຂດຕົວເມືອງ ຄວາມບອບບາງ ກ່ຽວຂ້ອງກັບລາຍຮັບ, ທີ່ຕັ້ງພູມສັນຖານ, ບັນທັດຖານທາງເພດ ແລະ ຄວາມເທົ່າທຽມ ກັນລະຫວ່າງຍິງ-ຊາຍ, ຊົນເຜົ່າ, ຄວາມພິການ, ຄວາມສ່ຽງຕໍ່ໄພພິບັດທາງທຳມະຊາດ, ແລະ ການເຂົ້າເຖິງຊັບພະຍາກອນທຳມະຊາດ.
ບັນທັດຖານທາງເພດ ທີ່ເປັນບັນຫາຄວາມສ່ຽງ ລວມທັງຄວາມແຕກຕ່າງກັນ ທາງດ້ານອຳນາດໃນການຕັດສິນໃຈ ພາຍໃນຄອບຄົວ.

ໃນກໍລະນີເຊັ່ນນີ້, ຄວາມອາວຸໂສໃນຄອບຄົວ ແລະ ເພດ ຖືເປັນສິ່ງສຳຄັນ ທີ່ສຸດ. ສະມາຊິກຄອບຄົວທີ່ເປັນເພດຊາຍທີ່ອາວຸໂສທີ່ສຸດ ຈະມີອຳນາດໃນການຕັດສິນໃຈສຸດທ້າຍ, ຕິດຕາມມາດ້ວຍສະມາຊິກ ເພດຊາຍຂອງຄອບຄົວທີ່ເປັນຜູ້ໃຫຍ່ ແລະ ແມ່ຍິງທີ່ອາວຸໂສ. ສ່ວນໃຫຍ່, ຜູ້ຊາຍ ແລະ ເດັກຊາຍ ແມ່ນໄດ້ຮັບບູລິມະສິດທີ່ຈະໄດ້ກິນ ອາຫານກ່ອນແມ່ຍິງ ແລະ ເດັກຍິງ.

ເຖິງແມ່ນວ່າ ສປປ ລາວ ໄດ້ມີຄວາມຄືບໜ້າຢ່າງເຫັນໄດ້ຊັດເຈນໃນການຫຼຸດຜ່ອນຄວາມບອບບາງທີ່ເປັນບັນຫາຄວາມສ່ຽງ

ໃນໄລຍະຫຼາຍທົດສະວັດຜ່ານມາ, ແລະສະພາບຄວາມສ່ຽງໂດຍລວມຂອງປະເທດແມ່ນບໍ່ຮຸນແຮງຫຼາຍປານໃດຖ້າທຽບກັບບັນດາປະເທດອາຊີຕາເວັນ ອອກສ່ຽງໃຕ້ທີ່ຕິດກັບທະເລ, ບັນດາແຂວງສ່ວນໃຫຍ່ແມ່ນມີຄວາມບອບບາງຕໍ່ກັບຄວາມເປັນອັນຕະລາຍຫຼາຍກວ່າໜຶ່ງຢ່າງ, ແລະ ສີ່ແຂວງ ແມ່ນມີຄວາມສ່ຽງຕໍ່ອັນຕະລາຍຫ້າຢ່າງຫຼືຫຼາຍກວ່າ (WFP 2013). ປະຊາກອນເຂດຊົນນະບົດຂອງ ສປປ ລາວ ແມ່ນມີຄວາມບອບບາງຕໍ່ກັບການປ່ຽນແປງຂອງສະພາບດິນຟ້າອາກາດ, ໂດຍ 77% ຂອງຄົວເຮືອນ ລວມທັງແມ່ຍິງ ແມ່ນກວມເອົາປະມານ 51% ຂອງກຳລັງແຮງງານທີ່ເຮັດວຽກຕິດພັນກັບກິດຈະກຳດ້ານກະສິກຳໃນບາງຮູບແບບ, ຂຶ້ນກັບສະພາບເງື່ອນໄຂຂອງດິນຟ້າອາກາດ, ຄວາມສ່ຽງຕໍ່ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມເປັນແຕ່ລະລະດູການ (ກະຊວງ ກະສິກຳ-ປ່າໄມ້ ແລະ ສູນສະຖິຕິແຫ່ງຊາດ LSB 2012).

ບົດບາດຍິງ-ຊາຍ: ອີງຕາມການທົບທວນ MDG ຂອງລັດຖະບານລາວ (2015b), ສປປ ລາວ ໄດ້ມີຄວາມຄືບໜ້າກ່ຽວກັບຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ, ໂດຍຄວາມສະເໝີພາບລະຫວ່າງຍິງ-ຊາຍແມ່ນສາມາດບັນລຸໄດ້ໃນທຸກໆລະດັບຂອງການສຶກສາ. ເຖິງຢ່າງໃດ ກໍ່ຕາມ, ລະດັບຄວາມເທົ່າທຽມກັນນີ້ບໍ່ໄດ້ສ່ອງແສງໃຫ້ເຫັນໃນສະຖານທີ່ເຮັດວຽກ,
ໂດຍມີແມ່ຍິງມີຈຳນວນ ສູງກວ່າຫຼາຍ ໃນຕະຫຼາດແຮງງານທີ່ໃຊ້ຄວາມຊຳນານຕ່ຳກ່ວາ, ເຊັ່ນ: 71.8 ສ່ວນຮ້ອຍຂອງກຳລັງແຮງງານ ໃນຂະແໜງບໍລິການ (ເຮືອນພັກ, ໂຮງແຮມ ແລະ ຮ້ານອາຫານ) ແລະ 63.6 ສ່ວນຮ້ອຍ ໃນຂະແໜງທຸລະກິດລາຍຍ່ອຍ ແລະ ການສ້ອມແປງ ແມ່ນປະກອບ ມີກຳລັງແຮງງານແມ່ຍິງ.

ການສຶກສາ ແລະ ອັດຕາການຈ້າງງານ ແມ່ນມີອິດທິພົນມາຈາກການແຕ່ງງານໄວ, ໂດຍມີແມ່ຍິງ 1 ໃນ 5 ຄົນ ທີ່ເກີດລູກແຕ່ອາຍຸ 18 ປີ (ລັດຖະບານ ສປປ ລາວ 2015b). ຄວາມເທົ່າທຽມກັນໃນຄົວເຮືອນເຂດຊົນນະບົດ ທີ່ປະກອບອາຊີບ ດ້ານກະສິກຳ ຍັງໄດ້ສະແດງໃຫ້ເຫັນຈາກຂໍ້ມູນສະຖິຕິສຳຫຼວດສຳມະໂນກະສິກຳ 2010/2011, ເຊິ່ງສະແດງໃຫ້ເຫັນວ່າ ເຖິງແມ່ນ 91ສ່ວນຮ້ອຍຂອງຄົວເຮືອນແມ່ນມີຜູ້ຊາຍເປັນຫົວໜ້າຄອບຄົວ, 64ສ່ວນຮ້ອຍ ໄດ້ລະບຸ ດ້ວຍຕົນເອງວ່າການຕັດສິນໃຈໃນຄົວເຮືອນແມ່ນການຕັດສິນໃຈຮ່ວມກັນ, ໂດຍແມ່ຍິງໄດ້ເຂົ້າຮ່ວມໃນການຕັດສິນໃຈທີ່ສຳຄັນ ແລະ ເລື່ອງ ເລັກນ້ອຍນຳເປັນປະຈຳທຸກມື້.

ການສຳຫຼວດດັ່ງກ່າວ ຍັງໄດ້ຊີ້ໃຫ້ເຫັນວ່າ ບໍ່ມີຄວາມແຕກຕ່າງກັນຫຼວງຫຼາຍໃນດ້ານຂະໜາດ ຂອງທີ່ດິນ ທີ່ນຳໃຊ້ໂດຍແມ່ຍິງ, ເຊິ່ງໄດ້ພົບວ່າ 0.07 ເຮັກຕ້າ ແມ່ນມີເນື້ອທີ່ຂະໜາດນ້ອຍກວ່າດິນຂອງຜູ້ຊາຍ ແລະ ບໍ່ມີຄວາມລຳອຽງດ້ານເພດ ໃນແຮງງານເຂດຊົນນະບົດ (ກະຊວງ ກະສິກຳ-ປ່າໄມ້ 2014).

2016 ໄດ້ມີການເປີດເຜີຍບົດລາຍງານແຫ່ງຊາດຄັ້ງທຳອິດທີ່ເຄີຍມີມາ ກ່ຽວກັບການໃຊ້ ຄວາມຮຸນແຮງຕໍ່ແມ່ຍິງ (UNFPA 2016). ຄວາມທຸກຍາກ, ຊົນເຜົ່າ, ພາສາ, ການສຶກສາ ແລະ ທີ່ຕັ້ງທາງພູມີສາດທີ່ຫ່າງໄກສອກຫຼີກ ໄດ້ຖືກກຳນົດມາແຕ່ໃດມາ ວ່າເປັນປັດໃຈສຳຄັນຕໍ່ຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ.

ບົດບາດດັ້ງເດີມ ແລະ ບັນທັດຖານການເຮັດວຽກ ສຳລັບແມ່ຍິງແລ້ວການສ້າງລາຍຮັບແມ່ນຖືກເບິ່ງວ່າເປັນຄວາມຮັບຜິດຊອບຂອງຜູ້ຊາຍ, ການຊອກແນວຢູ່ແນວກິນ ແລະ ກະກຽມສະບຽງອາຫານສຳລັບຄົວເຮືອນແມ່ນຄວາມຮັບຜິດຊອບຂອງແມ່ຍິງ.

ເມື່ອແມ່ຍິງເຂົ້າມາໃນຕະຫຼາດແຮງງານມີຈຳນວນຫຼາຍຂຶ້ນເລື້ອຍໆ, ບົດບາດເຫລົ່ານີ້ແມ່ນມີການເພີ່ມຂະຫຍາຍຂຶ້ນ, ໂດຍສະ ເພາະແມ່ນໃນເຂດຕົວເມືອງ ແລະ ເຂດຊານເມືອງ ເຊິ່ງພົບວ່າຈຳນວນແມ່ຍິງໃນກຳລັງແຮງງານມີຈຳນວນເພີ່ມຂຶ້ນ;
ເຖິງຢ່າງໃດກໍ່ຕາມ, ການລ້ຽງດູຄອບຄົວ ແມ່ນເຫັນວ່າເປັນຄວາມຮັບຜິດຊອບຂອງແມ່ຍິງ.

ໂດຍທົ່ວໄປແລ້ວ - ແລະ ອັນນີ້ ແມ່ນເຂົ້າກັບແນວໂນ້ມຂອງໂລກການບັນລຸເປົ້າໝາຍຄວາມ ສະເໝີພາບລະຫວ່າງ ຍິງ-ຊາຍແມ່ນໄດ້ຮັບການເນັ້ນໜັກຫຼາຍຂຶ້ນກ່ຽວກັບບັນຫາທີ່ອາດຈະສາມາດອະທິບາຍ ໄດ້ດີກວ່າໃນວຽກງານ“ແມ່ຍິງໃນການພັດທະນາ” ແທນທີ່ຈະແມ່ນການວິເຄາະລະອຽດເລິກເຊິ່ງຂອງຄວາມຊັບຊ້ອນຂອງສາຍສຳພັນລະຫວ່າງຍິງ-ຊາຍ, ໂດຍສະເພາະແມ່ນໃນສະພາບເສດຖະກິດ, ຄວາມຮັ່ງມີ ແລະ ອຳນາດ.

2.2.1 ລຶບລ້າງຄວາມອຶດຫິວ ແລະ ຮັບປະກັນການເຂົ້າເຖິງເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.1 ພາຍໃນປີ 2030, ລຶບລ້າງຄວາມອຶດຫິວ ແລະ ຮັບປະກັນໃຫ້ໝົດທຸກຄົນໂດຍສະເພາະຄົນທຸກຍາກ ແລະ ຜູ້ທີ່ມີຄວາມສ່ຽງ, ລວມທັງແອນ້ອຍ ສາມາດເຂົ້າ ເຖິງສະບຽງອາຫານທີ່ປອດໄພ, ມີໂພຊະນາການແລະ ພຽງພໍຕະຫລອດປີ.
ດ້ວຍຕົວຊີ້ວັດທີ່ສະເໜີສຳລັບເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.1 ລວມທັງການຂາດສານອາຫານ, ໜຶ່ງໃນຕົວ ຊີ້ວັດຂອງເກນດັດຊະນີຊັບສິນມະນຸດ ເພື່ອຫຼຸດພົ້ນຈາກສະຖານະປະເທດດ້ອຍພັດທະນາ, ການທີ່ຈະບັນລຸໄດ້ເປົ້າໝາຍນີ້ ແມ່ນຕ້ອງໄດ້ເຊື່ອມໂຍງຢ່າງສະໜິດແໜ້ນກັບເປົ້າໝາຍນະໂຍບາຍໄລຍະຍາວຂອງປະເທດ.

ການຄ້ຳປະກັນສະບຽງອາຫານ, ຢູ່ຂັ້ນຮາກຖານຂອງມັນມີຂໍ້ຈຳກັດ ແລະ ຄວາມບໍ່ສົມດູນໃນການເຂົ້າເຖິງເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ ຕໍ່ສະບຽງອາຫານ.

ອີງໃສ່ຂໍ້ມູນຈາກການຈ້າງງານ, ວິຖີຊີວິດ, ແລະ ຮູບແບບການບໍລິໂພກອາຫານ, ຄວາມຄາດຫວັງ ດ້ານລາຍຮັບໃນລະດັບຄົວເຮືອນແມ່ນສູງ ແລະ ເພີ່ມຂຶ້ນ. ແຮງງານທີ່ໄດ້ຮັບຄ່າຈ້າງ (ສ່ວນໃຫຍ່ແມ່ນໃນຂະແໜງກະສິກຳ ແລະ ການກໍ່ສ້າງ) ແມ່ນທັງມີຫຼາຍຂຶ້ນ ແລະ ໄດ້ຮັບຄ່າຈ້າງດີຂຶ້ນກວ່າຜ່ານມາ, ແຕ່ວ່າອັນນີ້ແມ່ນສອດຄ້ອງກັບຂໍ້ຈຳກັດທາງດ້ານການຜະລິດກະສິກຳ ເພື່ອຮັບໃຊ້ການບໍລິໂພກຂອງຄົວເຮືອນ, ໂດຍເນັ້ນຢ້ຳເຖິງຄວາມສຳຄັນຂອງຕະຫຼາດສະບຽງອາຫານທ້ອງຖິ່ນ ສຳລັບຄົວເຮືອນ ຊົນນະບົດ ທີ່ເຂົ້າຮ່ວມໃນວຽກງານທີ່ໄດ້ຮັບຄ່າຈ້າງແບບເຄິ່ງເວລາ ຫຼື ເຕັມ ເວລາ.

ການເພີ່ມຂຶ້ນຂອງລາຍຮັບຢູ່ເຂດຊົນນະບົດ ອາດຈະຍັງຕ້ອງໄດ້ຫັກລົບກັບການເພີ່ມຂຶ້ນຂອງອັດຕາເງິນເຟີ້, ແລະ ການເພີ່ມຂຶ້ນ

ຂອງລາຍຈ່າຍໃນຄົວເຮືອນ, ໂດຍດັດຊະນີລາຄາຜູ້ບໍລິໂພກແມ່ນເພີ່ມຂຶ້ນປະມານ 50 ສ່ວນຮ້ອຍລະຫວ່າງປີ 2006 ແລະ 2012 (WFP 2013).

ສຳລັບຄົວເຮືອນເຂດຊົນນະບົດ, ນອກເໜືອຈາກອັດຕາຄວາມໜາແໜ້ນຂອງປະຊາກອນທີ່ຕ່ຳໃນເຂດຊົນນະບົດແລ້ວ, ການເຂົ້າເຖິງທີ່ດິນປູກຝັງທີ່ອຸດົມສົມບູນ ແລະ ຊັບພະຍາກອນທຳມະຊາດ (ລວມທັງລະບົບນ້ຳ ແລະ ປ່າໄມ້) ແມ່ນເພີ່ມ ຄວາມຫຍຸ້ງຍາກຫຼາຍຂຶ້ນ.

ຄົວເຮືອນຕ່າງໆ ທີ່ບໍ່ສາມາດເຂົ້າເຖິງທີ່ດິນ ຫຼືມີຂໍ້ຈຳກັດໃນການເຂົ້າເຖິງທີ່ດິນ, ຫຼື ສາມາດເຂົ້າເຖິງພຽງແຕ່ທີ່ດິນ ທີ່ບໍ່ມີຄຸນນະພາບໃນການປູກຝັງ, ແມ່ນມີຄວາມສ່ຽງສູງຕໍ່ຄວາມບໍ່ຮັບປະກັນທາງດ້ານສະບຽງອາຫານ.

ສຳລັບການເຂົ້າເຖິງການບໍລິການທີ່ຕິດພັນກັບໂພຊະນາການ, ສິ່ງອຳນວຍຄວາມສະດວກຕ່າງໆທີ່ມີຢູ່ອາດບໍ່ໄດ້ໝາຍເຖິງການປັບປຸງການເຂົ້າເຖິງການບໍລິການສະເໝີໄປ, ໂດຍການນຳໃຊ້ສິ່ງອຳນວຍຄວາມສະດວກເຫຼົ່ານັ້ນຕົວຈິງແມ່ນໄດ້ຮັບອິດທິພົນມາຈາກບັນຫາທາງດ້ານ ພາສາ, ຄ່າໃຊ້ຈ່າຍໂດຍກົງ ແລະ ທາງອ້ອມທີ່ຕິດພັນກັບການບໍລິການດັ່ງກ່າວ, ແລະ ຄຸນນະພາບຂອງການບໍລິການທີ່ຕ່ຳ.

ການຕັດສິນໃຈໃນລະດັບຄົວເຮືອນກະທົບຕໍ່ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ທີ່ຕິດພັນກັບພື້ນຖານລາຍຮັບ ທີ່ມີຢູ່.

ຄວາມກົດດັນທີ່ເກີດກັບຄົວເຮືອນໃນການຊອກຫາລາຍໄດ້ໝາຍເຖິງວ່າຍຸດທະສາດໃນການດຳລົງຊີວິດ ທີ່ຈັດລຳດັບຄວາມສຳຄັນຂອງກິດຈະກຳ ທີ່ຈະສ້າງລາຍຮັບໄດ້ຫຼາຍທີ່ສຸດ, ເຖິງແມ່ນວ່າທາງເລືອກດັ່ງກ່າວອາດບັ່ນທອນການບໍລິໂພກສະບຽງອາຫານຂອງຄົວເຮືອນ.

ເຊັ່ນດຽວກັນ, ການເຄື່ອນຍ້າຍລະຫວ່າງຊົນນະບົດ-ຕົວເມືອງພາໃຫ້ ມີຄວາມສ່ຽງຕໍ່ ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ຂອງປະຊາກອນເຂດຕົວເມືອງ, ຊຶ່ງລວມມີລາຍຈ່າຍສຳລັບຊື້ອາຫານຂອງຄົວເຮືອນທີ່ສູງຂຶ້ນ, ຄຸນນະພາບຂອງອາຫານ ທີ່ຫຼຸດລົງ (ທາງດ້ານໂພຊະນາການທີ່ດີ ຄວາມປອດໄພຂອງອາຫານ), ແລະ ຄວາມສ່ຽງດ້ານ ສຸຂະພາບທີ່ກ່ຽວພັນກັບຮູບແບບການ ດຳເນີນຊີວິດໃນແບບຕົວເມືອງ ທີ່ທັນສະໄໝ.

ຄຳຄິດເຫັນຈາກການປຶກສາຫາລືຮ່ວມກັບແຂວງໄດ້ເນັ້ນໜັກໃສ່ຄວາມຮັບຮູ້ຫຼາຍຂຶ້ນຕໍ່ກັບຄວາມແຕກໂຕນກັນ ແລະ ຄວາມບໍ່ສະເໝີພາບລະຫວ່າງເຂດຊົນນະບົດ ແລະ ເຂດຕົວເມືອງ, ແນວໂນ້ມນີ້ໄດ້ຮັບການຢືນຢັນຈາກຂໍ້ມູນທຸຕິຍະພູມ (Warr et al 2015).

ການປຶກສາຫາລືຮ່ວມກັບແຂວງຍັງໄດ້ຊີ້ໃຫ້ເຫັນວ່າ ການນຳໃຊ້ຢາເສບຕິດ ແລະ ການຄ້າຢາເສບຕິດ ແມ່ນໄດ້ສ້າງບັນຫາໃຫ້ແກ່ສັງຄົມຢ່າງໜ້າເປັນຫ່ວງ, ໂດຍສະເພາະແມ່ນໃນກຸ່ມເຍົາວະຊົນ ແລະ ຊາວໜຸ່ມ.

ທຶນ ແລະ ຊັບສິນໃນເຂດຕົວເມືອງ ແມ່ນສູງກວ່າຊົນນະບົດ, ເຊິ່ງສະທ້ອນໃຫ້ເຫັນເຖິງການເຂົ້າເຖິງໂຄງລ່າງພື້ນຖານ ແລະ ການບໍລິການໄດ້ດີກວ່າໃນເຂດຕົວເມືອງ (WFP 2007).

ເຖິງແມ່ນວ່າການພັດທະນາເສດຖະກິດແມ່ນຜົນມາຈາກພັດທະນາໂຄງລ່າງພື້ນຖານຢ່າງໄວວາ, ມັນບໍ່ໄດ້ສອດຄ້ອງກັບການພັດທະນາ ສັງຄົມທີ່ສົມຄູ່ກັນ, ໂດຍສະເພາະໃນລະດັບຂອງຄົວເຮືອນຂະໜາດນ້ອຍ.

ການເຂົ້າເຖິງແຜນງານປົກປ້ອງທາງສັງຄົມ ແລະ ຕາຄ່າຍຄວາມປອດໄພທາງສັງຄົມແມ່ນຍັງຕ່ຳຫຼາຍ, ໂດຍສະເພາະແມ່ນ ຄົວເຮືອນຂະໜາດນ້ອຍ ທີ່ຢູ່ນອກລະບົບເສດຖະກິດຢ່າງເປັນທາງການ, ເດັກນ້ອຍ, ຄົນພິການ ແລະ ຜູ້ສູງອາຍຸ.

ການປຶກສາຫາລືຂັ້ນແຂວງໄດ້ສະແດງໃຫ້ເຫັນວ່າການເຄື່ອນຍ້າຍຂອງແຮງງານແມ່ນປັດໃຈທີ່ມີຄວາມສຳຄັນເພີ່ມຂຶ້ນ ເນື່ອງຈາກເປັນແຫຼ່ງ ລາຍຮັບ, ເມື່ອຜູ້ໃຫຍ່ຍົກຍ້າຍເຂົ້າໄປຕົວເມືອງ ຫຼື ປະເທດເພື່ອນບ້ານ ເພື່ອຊອກວຽກເຮັດງານທຳ, ປະຖິ້ມເດັກນ້ອຍ ແລະ ຜູ້ສູງອາຍຸໄວ້ ທາງເບື້ອງຫຼັງ.

ອັນນີ້ ເປັນສິ່ງກີດຂວາງຕໍ່ການລົງທຶນໃສ່ກະສິກຳໃນເຂດຊົນນະບົດ, ແລະ ກະທົບຕໍ່ໂອກາດຂອງແຮງງານ ສຳລັບປະຊາກອນເຂດຊົນນະບົດທີ່ເຮັດການກະສິກຳແບບທຸລະກິດ.

ມີການເຄື່ອນຍ້າຍເຂົ້າມາຂອງປະຊາກອນຈາກປະເທດເພື່ອນບ້ານ ເຂົ້າມາໃນປະເທດ ເພື່ອຍາດແຍ່ງວຽກເຮັດງານທຳກັບປະຊາຊົນລາວ, ໂດຍສະເພາະແມ່ນໃນຂະແໜງກະສິກຳ ແລະ ການກໍ່ສ້າງ.

ການໄຫຼວຽນຂອງການໂອນເງິນແມ່ນເກີດຂຶ້ນແບບກະຈັດ ກະຈາຍ ແລະ ບໍ່ສາມາດຄາດເດົາໄດ້, ແລະ ສ່ວນໃຫຍ່ແມ່ນບໍ່ເທົ່າກັນກັບລາຍຈ່າຍ ດ້ານສະບຽງອາຫານທີ່ເພີ່ມຂຶ້ນ.

ໃນລະດັບຄົວເຮືອນ, ຈຳນວນແມ່ຍິງທີ່ເພີ່ມຂຶ້ນ ທີ່ເຂົ້າໄປເປັນກຳລັງແຮງງານຢ່າງເປັນທາງການ, ຄາດຄະເນວ່າປະມານ 34 ສ່ວນຮ້ອຍ ໃນປີ 2012 (ລັດຖະບານ ສປປ ລາວ ແລະ ອົງການສະຫະປະຊາຊາດ 2013).

ເຖິງແມ່ນວ່າແມ່ຍິງຈະມີສິດມີສ່ວນຮ່ວມໃນກຳລັງແຮງງານ, ໃນພາກປະຕິບັດຕົວຈິງ ອັນນີ້ ໄດ້ສ້າງຊ່ອງວ່າງໃນລະດັບຄົວເຮືອນ, ເນື່ອງຈາກບົດບາດ ດັ້ງເດີມທີ່ສຳຄັນຂອງເຂົາເຈົ້າທີ່ເປັນຜູ້ເບິ່ງແຍງຄອບຄົວນັ້ນ ບໍ່ສາມາດປ່ຽນແທນໂດຍຜູ້ຊາຍ ຫຼື ສະມາຊິກໃນຄອບຄົວຄົນອື່ນໆ ໄດ້ຢ່າງສົມບູນ.

ຄອບຄົວສ່ວນໃຫຍ່, ໂດຍສະເພາະແມ່ນເຂດຕົວເມືອງ ແລະ ເຂດຊານເມືອງ, ກາຍມາເປັນການເອື່ອຍອີງໃສ່ອາຫານທີ່ມີ ລາຄາຖືກ, ບາງຄັ້ງມີຄຸນນະພາບຕ່ຳ, ອາຫານທີ່ປຸງແຕ່ງແລ້ວຈາກແຄມທາງ ຫຼື ຢູ່ຕະຫຼາດ.

ອັນນີ້ ໄດ້ມີຜົນກະທົບ ໂດຍສະເພາະແມ່ນຕໍ່ ກັບເດັກຍິງ ແລະ ເດັກຊາຍ ຜູ້ທີ່ບໍ່ໄດ້ຮັບສານອາຫານທີ່ຈຳເປັນ ເຊັ່ນ: ວິຕາມິນເອ ແລະ ທາດເຫຼັກ. ການປ່ຽນແປງດ້ານມິຕິ ຂອງຄອບຄົວດັ້ງເດີມ ແລະ ການເອື່ອຍອີງໃສ່ສະບຽງອາຫານຢູ່ນອກບ້ານ ເຮັດໃຫ້ເດັກມີຄວາມ ສ່ຽງຕໍ່ການໄດ້ຮັບອາຫານທີ່ບໍ່ຖືກ ສຸຂະອະນາໄມ ແລະ ມີສານເຄມີຫຼາຍເກີນໄປ.

ສຳລັບຄົວເຮືອນເຂດຊົນນະບົດ, ການເຂົ້າເຖິງສະບຽງອາຫານ ຕະຫຼອດ ປີ ຍັງຄົງເປັນບັນຫາທ້າທາຍ.
ເຖິງແມ່ນວ່າຈະເປັນເລື່ອງ ທີ່ ພົບເຫັນມາແຕ່ດັ້ງເດີມ, ມີການເພີ່ມຂຶ້ນຂອງຄົວເຮືອນເຂດຊົນນະບົດທີ່ບໍ່ມີດິນດອນຕອນຫຍ້າ.

ໃນປີ 2012 ການສຳຫຼວດສຳມະໂນກະສິກຳ (MAF ແລະ LSB 2012) ບັນທຶກການເພີ່ມຂຶ້ນສາມທົບຂອງຈຳນວນຄົວ ເຮືອນທີ່ບໍ່ມີດິນດອນຕ່ອນຫຍ້າ ໃນໄລຍະສາມທົດສະວັດ ຜ່ານມາ, ໂດຍມີຈຳນວນ ເຖິງ 49,000 ຄອບຄົວ,ທຽບເທົ່າກັບທົກສ່ວນຮ້ອຍຂອງປະຊາກອນເຂດຊົນນະບົດໂດຍລວມ.
ສຳລັບຄົວເຮືອນທີ່ເອື່ອຍອີງໃສ່ລະບົບກະສິກຳແບບອາໄສນ້ຳຝົນ, ການເຂົ້າເຖິງສະບຽງອາຫານຕະຫຼອດ ປີຍັງຄົງເປັນບັນຫາຍ້ອນການປ່ຽນແປງຂອງລະດູຝົນ, ອາກາດ, ພູມີອາກາດ, ທີ່ເປັນຜົນກະທົບຕໍ່ຄຸນນະພາບ ແລະ ປະລິມານຂອງສະບຽງອາຫານທ້ອງຖິ່ນ ແລະ ການສະໜອງສະບຽງອາຫານໃນຕະຫຼາດ.

ເຖິງແມ່ນວ່າຄົວເຮືອນເຊິ່ງສ່ວນໃຫຍ່ແມ່ນມີຄວາມຮັບປະກັນດ້ານສະບຽງອາຫານ ອາດປະເຊີນ ກັບບັນຫາການຂາດແຄນເຂົ້າກິນເປັນເວລາຫຼາຍເດືອນ, ໂດຍສະເພາະໃນໄລຍະທ້າຍລະດູມໍລະສຸມ. ຄົວເຮືອນທີ່ມີຄວາມສາມາດ ທົນທານ ໄດ້ສ່ວນໃຫຍ່ ແມ່ນມີຊັບສິນ ແລະ ສາມາດເຂົ້າເຖິງການເງິນທຶນ ແລະ ທີ່ດິນ, ທີ່ມີວິຖີຊີວິດທີ່ຫຼາກຫຼາຍໃນລະດັບສູງ ແລະ ບໍ່ໄດ້ ເອື່ອຍອີງໃສ່ການເຮັດກະສິກຳທີ່ຕ້ອງອາໄສນ້ຳຝົນຢ່າງດຽວ.

2.2.2 ລຶບລ້າງການຂາດສານອາຫານທຸກຮູບແບບ ເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.2 ພາຍໃນປີ 2030, ລຶບລ້າງການຂາດສານອາຫານທຸກຮູບແບບ, ລວມທັງບັນລຸໃຫ້ໄດ້ພາຍ ໃນປີ2025 ຄາດໝາຍ ທີ່ສາກົນໄດ້ຮັບຮອງ ກ່ຽວ ກັບອັດຕາສ່ວນເດັກຕ່ຳກວ່າ 5 ປີ ທີ່ ມີຄວາມສູງ ແລະ ນ້ຳໜັກ ບໍ່ໄດ້ມາດຕະຖານ ແລະ ແກ້ໄຂ ຄວາມ ຕ້ອງການດ້ານໂພຊະນາການໃນກຸ່ມເດັກຍິງ, ຜູ້ຍິງຖືພາ ແລະ ແມ່ທີ່ຍັງໃຫ້ນົມລູກ ແລະ ຜູ້ສູງອາຍຸ.

ໃນປີ 2015, ສປປ ລາວ ໄດ້ຖືກຈັດລຽງຢູ່ໃນລຳດັບ 76 ໃນທັງໝົດ 104 ປະເທດ ໃນດັດຊະນີຄວາມອຶດຫິວຂອງໂລກ 2015, ການຈັດລະດັບໂດຍລວມ ແມ່ນອີງໃສ່ການຂາດສານອາຫານ, ນ້ຳໜັກຕ່ຳ ແລະ ຂໍ້ມູນ ການເສຍຊີວິດຂອງເດັກ (IFPRI et al 2015).
ນອກເໜືອຈາກຜົນ ສຳເລັດຂອງເປົ້າໝາຍ MDG1 ໂດຍການຫຼຸດຜ່ອນຄວາມທຸກຍາກ ແລະ ການຂາດສານອາຫານລົງເຄິ່ງໜຶ່ງ, ເປົ້າໝາຍເພື່ອຫຼຸດຜ່ອນບັນຫາເດັກມີ ຄວາມສູງ ແລະ ນ້ຳໜັກ ບໍ່ໄດ້ມາດຕະຖານແມ່ນບໍ່ສາມາດ ບັນລຸເປົ້າໝາຍໄດ້.
ໃນໄລຍະທົດສະວັດທີ່ຜ່ານມາ, ເດັກມີຄວາມສູງໄດ້ຫຼຸດລົງໃນອັດຕາຕ່ຳກວ່າອັດຕາສະເລ່ຍ ຂອງການເຕີບໂຕ ຂອງປະຊາກອນ, ແລະ ຢູ່ທີ່ 35.6 ສ່ວນຮ້ອຍ.

ການແຜ່ຂະຫຍາຍຂອງຄວາມສູງບໍ່ໄດ້ມາດຕະຖານ ແມ່ນມີອັດຕາສູງກວ່າໃນເຂດ ຊົນນະບົດຫ່າງໄກສອກຫຼີກ, ເຂດທີ່ທຸກຍາກ ຂອງແຂວງພາກເໜືອ ແລະ ແຂວງພາກໃຕ້ຂອງປະເທດ, ແລະ ໃນບັນດາກຸ່ມຊົນເຜົ່າທີ່ບໍ່ແມ່ນຊົນເຜົ່າລາວ-ໄຕ (ກະຊວງສາທາລະນະສຸກ 2012).

ເຖິງແມ່ນວ່າປະຊາກອນໃນກຸ່ມທີ່ມີລາຍຮັບສູງສຸດ, ອັດຕາຂອງເດັກເຕັ້ຍແມ່ນຢູ່ທີ່ 20 ສ່ວນຮ້ອຍ, ເຊິ່ງຊີ້ໃຫ້ເຫັນວ່າ ການຂາດໂພຊະນາການແບບຊຳ້ເຮື້ອແມ່ນໄດ້ແຍກຕົວອອກຈາກ ລາຍຮັບ, ໂດຍຄົວເຮືອນທີ່ຮັ່ງມີກວ່າບໍລິໂພກອາຫານທີ່ມີສະຖານະພາ ສູງຂຶ້ນ ແທນທີ່ຈະເປັນອາຫານທີ່ມີຄຸນຄ່າທາງໂພຊະນາການສູງຂຶ້ນ.
ໃນທຸກກຸ່ມລາຍຮັບ, ເດັກທີ່ມີນ້ຳໜັກໂຕຕ່ຳແຕ່ເກີດ ແມ່ນຢູ່ໃນລະດັບ 15 ສ່ວນຮ້ອຍ. ອັດຕາສ່ວນເປັນໂລກເລືອດຈາງໃນແມ່ຍິງອາຍຸລະຫວ່າງ15-49 ແມ່ນຢູ່ທີ່ 31 ສ່ວນຮ້ອຍ ແລະ 53 ສ່ວນຮ້ອຍໃນເດັກອາຍຸຕ່ຳກວ່າ 2 ປີ, ໂດຍມີ ເດັກນ້ອຍ 14.8 ສ່ວນຮ້ອຍ ທີ່ເກີດມາມີນ້ຳໜັກໂຕຕ່ຳ (SUN 2016).

ການຂາດສານອາຫານທີ່ ຈຳເປັນປະກອບສ່ວນໃສ່ບັນຫາເດັກເຕັ້ຍ ແລະ ຈ່ອຍຜອມ, ແລະ ອາດນຳໄປສູ່ບັນຫາການ ພັດທະນາການ ຂອງກ້າມຊີ້ນ ແລະ ພັດທະນາການທາງດ້ານມັນສະໝອງ, ສາຍຕາ,ພູມຕ້ານທານ ແລະ ຄວາມສາມາດທາງດ້ານສະຕິປັນຍາ.

ອັດຕາການຈ່ອຍຜອມ, ເຊິ່ງຍັງຄົງຢູ່ລະຫວ່າງ 5 ເຖິງ 7 ສ່ວນຮ້ອຍຕະຫຼອດທົດສະວັດທີ່ຜ່ານມາ, ແມ່ນຮັບຮູ້ວ່າມີການເພີ່ມຂຶ້ນເປັນລະດູການ ຫຼື ເປັນຜົນມາຈາກສະພາວະຊ໋ອກ.
ການສູນເສຍດ້ານເສດຖະກິດທີ່ຕິດພັນກັບການຂາດໂພຊະນາການແມ່ນຄາດຄະເນວ່າຕົກ ປະມານ 197 ລ້ານ ໂດລາສະຫະລັດຕໍ່ປີ, ທຽບເທົ່າກັບ 2.4 ສ່ວນຮ້ອຍ ຂອງ ລວມຍອດຜະລິດຕະພັນພາຍໃນ (GDP) (ສຄສ ແລະ UNICEF 2013).

ສາຍເຫດພື້ນຖານ ແລະ ສາເຫດສຳຄັນຂອງການຂາດໂພຊະນາການ ລວມທັງ ຄວາມທຸກຍາກ, ລະດັບການສຶກສາຕ່ຳ, ຂາດການເຂົ້າເຖິງ ນ້ຳດື່ມທີ່ສະອາດ, ສະພາບເງື່ອນໄຂດ້ານສຸຂະອະນາໄມທີ່ບໍ່ໄດ້ມາດຕະຖານ, ທີ່ຕັ້ງພູມີສາດທີ່ທຸລະກັນດານ, ຂາດການເບິ່ງແຍງສຸຂະພາບ ຂັ້ນ ພື້ນຖານ, ການປິ່ນປົວ ແລະ ປ້ອງກັນພະຍາດ, (ລວມທັງການສ້າງພູມຕ້ານທານ), ຂໍ້ຫ້າມທາງຮີດຄອງປະເພນີ ແລະ ທຳນຽມປະຕິບັດ ກ່ຽວກັບການລ້ຽງເດັກດ້ວຍອາຫານອື່ນແທນນົມແມ່, ໂພຊະນາການຂອງແມ່ ແລະ ບັນທັດຖານຂອງວຽກງານ, ໂດຍມີອັດຕາການຂາດ ສານ ອາຫານສູງສຸດໃນບັນດາເມືອງທີ່ຕັ້ງຢູ່ເຂດທຸລະກັນດານທີ່ຢູ່ເໜືອສຸດ ແລະ ໃຕ້ສຸດຂອງປະເທດ.
ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ເດັກຍິງ ແລະ ເດັກຊາຍປະເຊີນກັບບັນຫາທ້າທາຍໃນການເຂົ້າເຖິງການສຶກສາ, ໂດຍສະ ເພາະແມ່ນຫຼັງລະດັບປະຖົມສຶກສາ.

ໂດຍອີງຕາມ ການສຳຫຼວດການຊົມໃຊ້ ແລະ ການໃຊ້ຈ່າຍຂອງຄົວເຮືອນ ຄັ້ງທີ 5 (LECS5), ມີພຽງ 9.3 ແລະ 3.8 ສ່ວນຮ້ອຍຂອງແມ່ຍິງໃນເຂດຊົນນະບົດ ໃນເຂດທີ່ມີ ແລະ ບໍ່ມີເສັ້ນທາງຕັດຜ່ານ ຕາມລຳດັບ, ທີ່ຮຽນຈົບຊັ້ນມັດທະຍົມຕອນຕົ້ນ, ທຽບກັບຜູ້ຊາຍທີ່ຢູ່ໃນລະດັບ 15.3 ແລະ 8.4 ສ່ວນຮ້ອຍ.
ອັນນີ້ແມ່ນພົບໄດ້ທົ່ວໄປໃນກຸ່ມ ເດັກຍິງຊົນເຜົ່າໃນເຂດຊົນນະບົດຫ່າງໄກສອກຫຼີກ ຜູ້ທີ່ບໍ່ໄດ້ຮັບການສະໜັບສະໜູນຈາກພໍ່ແມ່ ຫຼື ຊຸມຊົນ ໃຫ້ເຂົ້າໂຮງຮຽນ, ແລະ ຜູ້ທີ່ຖືກຄາດຫວັງທີ່ຈະໃຫ້ເຮັດວຽກຢູ່ເຮືອນ.

ການຖືພາໃນກຸ່ມໄວລຸ້ນ ແລະ ການແຕ່ງງານແຕ່ອາຍຸຍັງນ້ອຍ ແມ່ນເລື່ອງປົກກະຕິ, ໂດຍ ມີ 35 ສ່ວນຮ້ອຍຂອງແມ່ຍິງທີ່ແຕ່ງງານ ແລະ ແມ່ຍິງໜຶ່ງໃນຫ້າຄົນ ແມ່ນເກີດລູກຜູ້ທຳອິດກ່ອນທີ່ເຂົາ ເຈົ້າຈະຮອດອາຍຸ 18 ປີ (ລັດຖະບານ ສປປ ລາວ 2015b, UNICEF 2015).

ສາຍເຫດໂດຍກົງຂອງການຂາດໂພຊະນາການ ແມ່ນວິທີການລ້ຽງດູເດັກອ່ອນ ແລະ ເດັກນ້ອຍທີ່ບໍ່ຖືກຕ້ອງ, ໂດຍມີອັດຕາການລ້ຽງລູກດ້ວຍ ນົມແມ່ພຽງຢ່າງດຽວຂ້ອນຂ້າງຕ່ຳ ສຳລັບເດັກອ່ອນອາຍຸຕ່ຳກວ່າ 6 ເດືອນ; ແລະ ອາຫານທີ່ຂາດຄວາມຫຼາກຫຼາຍ, ພາໃຫ້ເກືອບ 50 ສ່ວນຮ້ອຍຂອງເດັກນ້ອຍ ແມ່ນປະສົບບັນຫາການຂາດສານອາຫານທີ່ຈຳເປັນ. ເຖິງແມ່ນວ່າຈະມີຄວາມຄືບໜ້າດ້ານເກືອທີ່ມີທາດໄອໂອດີນ, ໂລກເລືອດຈາງ ແລະ ຂາດວິຕາມິນເອ, ອັດຕາຍັງຄົງຢູ່ໃນລະດັບທີ່ໜ້າເປັນຫ່ວງ, ທີ່ມີອັດຕາສູງກວ່າ35ສ່ວນຮ້ອຍທີ່ໄດ້ຮັບການເກັບກຳສຳລັບທັງສອງໂຕຊີ້ວັດໃນກຸ່ມແມ່ຍິງ ແລະ ເດັກນ້ອຍ (DoS ແລະ UNICEF 2008).

ສຳລັບປະຊາກອນຈຳນວນຫຼວງຫຼາຍຢູ່ ສປປ ລາວ, ຄວາມເຊື່ອມາແຕ່ດັ້ງເດີມມີອິດທິພົນຕໍ່ຮູບແບບການບໍລິໂພກໃນໄລຍະຖືພາ ແລະ ພາຍຫຼັງເກີດລູກ.
ຂໍ້ຈຳກັດຕ່າງໆໃນການບໍລິໂພກບາງປະເພດອາຫານໃນໄລຍະຖືພາ ແລະ ໃນໄລຍະທີ່ໃຫ້ນົມລູກອາດຈະມີຜົນກະທົບຕໍ່ສຸຂະພາບ ແລະ ໂພຊະນາການຂອງແມ່ ແລະ ເດັກ, ໂດຍສະເພາະແມ່ນຍ້ອນວ່າທັງສອງຢ່າງແມ່ນມີຄວາມສ່ຽງຕໍ່ໂພຊະນາການ.
ໂດຍ ອີງໃສ່ ການສຳຫຼວດທີ່ມີຫຼາຍກຸ່ມເປັນຕົວຊີ້ວັດ (MICS-NNS 2006), 81 ສ່ວນຮ້ອຍ ຂອງແມ່ຍິງ ຖືກ ຈຳກັດການກິນອາຫານພາຍຫຼັງເກີດລູກ, ເມື່ອຂໍ້ຈຳກັດການກິນອາ ຫານທີ່ເປັນແຫຼ່ງໂປຼຕີນທີ່ອຸດົມ ດ້ວຍທາດເຫຼັກ ເຊັ່ນ: ຊີ້ນ, ໄຂ່ ແລະ ປາ ເຮັດໃຫ້ລະດັບ ໂລກເລືອດຈາງທີ່ຢູ່ໃນລະດັບສູງຢູ່ແລ້ວມີຄວາມຮຸນແຮງຍິ່ງຂຶ້ນ.

ອັດຕາການ ລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວແມ່ນຍັງຕ່ຳ, ຕ່ຳກວ່າເປົ້າໝາຍແຫ່ງຊາດ ແລະ ສາກົນ (DoS ແລະ UNICEF 2008). ດັ່ງທີ່ໄດ້ກ່າວ ມາແລ້ວໃນສະພາບການຂອງເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.1, ທາງດ້ານການເຂົ້າເຖິງການບໍລິການດ້ານໂພຊະນາການ, ສິ່ງອຳນວຍຄວາມສະດວກທີ່ມີຢູ່ບໍ່ໄດ້ໝາຍຄວາມວ່າ ຈະແມ່ນການບໍລິການທີ່ໄດ້ມາດຕະຖານ, ໂດຍມີອັດຕາການນຳໃຊ້ສະຖານທີ່ອຳນວຍຄວາມສະດວກເຫຼົ່ານັ້ນມີການຫຼຸດລົງ ເນື່ອງຈາກບັນຫາທາງດ້ານພາສາ ແລະ ຄຸນນະພາບການບໍລິການ. ອັດຕາການນຳໃຊ້ການບໍລິການໂດຍແມ່ນໃນກຸ່ມແມ່ຍິງຊົນເຜົ່າທີ່ບໍ່ເວົ້າພາສາລາວ ແມ່ນຍັງຕ່ຳ.

ໃນໄລຍະການປຶກສາຫາລື, ການຂາດໂພຊະນາການແມ່ນເຊື່ອມໂຍງກັບບັນຫາທີ່ກ່ຽວກັບຄຸນນະພາບ ແລະ ສະຖຽນລະພາບຂອງການ ສະໜອງນ້ຳ, ໃນດ້ານການສະໜອງນ້ຳໃຫ້ແກ່ການປູກຝັງ, ການບໍລິໂພກ, ແລະ ສຸຂະອະນາໄມ.
ດ້ວຍຄົວເຮືອນຢູ່ເຂດຊົນນະບົດ ຫຼາຍຄົວເຮືອນ ແມ່ນເອື່ອຍອີງໃສ່ແມ່ນ້ຳລຳເຊແລະແຫຼ່ງນ້ຳທຳມະຊາດ ເພື່ອຮັບໃຊ້ໃນການດຳລົງຊີວິດປະຈຳວັນ , ນ້ຳທີ່ມີ ແລະ ຄຸນນະພາບ ແມ່ນຜູກຕິດກັບການຍາດແຍ່ງຄວາມຮຽກຮ້ອງຕ້ອງການນ້ຳ, ການປ່ຽນແປງຮູບແບບຂອງຝົນ, ການປ່ຽນແປງຂອງອາກາດ ແລະ ຄວາມຢ້ານຕໍ່ກັບການປົນເປື້ອນຂອງນ້ຳໃຕ້ດິນ.
ເຖິງແມ່ນວ່າມີການເພີ່ມຄວາມເອົາໃຈໃສ່ໃສ່ດ້ານໂພຊະນາການຂອງແມ່, ດ້ວຍຂໍ້ຈຳກັດທາງວັດທະນະທຳ, ຄວາມຄາດຫວັງຂອງສັງຄົມ ແລະ ຄວາມຮູ້ດ້ານໂພຊະນາການທີ່ຕ່ຳ ໄດ້ສ້າງອຸປະສັກກີດຂວາງສຳລັບການປະຕິບັດດ້ານໂພຊະນາການ ໃນໄລຍະຖືພາ ແລະ ໃນໄລຍະການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ (IYCF), ຫຼັກການຂອງວົງຈອນຊີວິດຕໍ່ກັບໂພຊະນາການເຊິ່ງໄດ້ຫຼຸດຜ່ອນການ ເສຍຊີວິດຂອງຜູ້ໃຫຍ່ທີ່ສາມາດປ້ອງກັນໄດ້ (ລວມທັງຜູ້ສູງອາຍຸ) ແມ່ນບໍ່ໄດ້ລວມເຂົ້າໃນຍຸດທະສາດດ້ານໂພຊະນາການ, ຈຳກັດໂອກາດທີ່ ຈະທັບມ້າງວົງຈອນລະຫວ່າງໄວທີ່ພົວພັນກັນຂອງການຂາດໂພຊະນາການ.
ການຄ້ຳປະກັນສະບຽງອາຫານ ແລະ ການຂາດໂພຊະນາການເຫັນວ່າ ສືບຕໍ່ເປັນບັນຫາສຳຄັນສຳລັບເຂດຊົນນະບົດ, ໂດຍມີຂໍ້ມູນ ຈຳກັດຫຼາຍ ກ່ຽວກັບເຂດຕົວເມືອງ ແລະ ເຂດຊານເມືອງ.

ຄວາມຕຸ້ຍເກີນໄປ ແລະ ນ້ຳໜັກເກີນ ແມ່ນຖືກຮັບຮູ້ວ່າເປັນບັນຫາສຳຄັນເພີ່ມຂຶ້ນໃນດ້ານໂພຊະນາການ, ແຕ່ວ່າບໍ່ໄດ້ຮັບຄວາມເອົາໃຈໃສ່ປານໃດໃນການສ້າງແຜນງານ ໃຫ້ວຽກ ງານນີ້, ແລະ ບໍ່ທັນໄດ້ຖືກເຊື່ອມສານເຂົ້າໃນຍຸດທະສາດແຫ່ງຊາດໄດ້ດີເທົ່າທີ່ຄວນ ກ່ຽວກັບການຄວບຄຸມ ແລະ ຫຼຸດຜ່ອນ NCD.
ນອກເໜືອຈາກຫຼັກການ ທີ່ຊັດເຈນເຖິງການເຊື່ອມໂຍງລະຫວ່າງສຸຂະອະນາໄມຊຸມຊົນ (ໂດຍສະເພາະແມ່ນການຖ່າຍຊະຊາຍ) ແລະ ການແຜ່ຫຼາຍຂອງການເຕັ້ຍກວ່າມາດຕະຖານ (ທະນາຄານໂລກ 2014a) ສຸຂະອະນາໄມ ບໍ່ແມ່ນນະໂຍບາຍທີ່ເປັນບູລິມະສິດສູງສຸດໃນແຜນປະຕິບັດງານຂອງ ທົ່ວທຸກຂະ ແໜງການ.

ຍົກເວັ້ນແຕ່ເກືອທີ່ມີທາດໄອໂອດີນ,ການເຕີມສານອາຫານບໍ່ແມ່ນການປະຕິບັດ ທີ່ເປັນມາດ ຕະຖານ, ແລະ ການປົກຄຸມການແຈກຢາຍຂອງອາຫານເສີມທີ່ເປັນສານອາຫານທີ່ຈຳເປັນ ບໍ່ແມ່ນສິ່ງທີ່ພົບທົ່ວໄປ ຫຼື ບໍ່ຕໍ່ເນື່ອງ.
ປະຈຸບັນເຫັນວ່າໄດ້ມີການປ່ຽນແປງໃນທາງທີ່ດີກຳລັງເກີດຂຶ້ນ.
ການສຳຫຼວດການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ປີ 2015 ທີ່ຈັດຕັ້ງປະຕິບັດໂດຍລັດຖະບານ ສປປ ລາວ ໄດ້ສະແດງໃຫ້ເຫັນວ່າ ມີການຫຼຸດລົງຂອງເດັກທີ່ເຕັ້ຍກວ່າເກນມາດ ຕະຖານປະມານ 7-13 ສ່ວນຮ້ອຍ ຂອງຫ້າແຂວງທີ່ຖືກ ສຳຫຼວດ.
ການສຳຫຼວດດຽວກັນນັ້ນ ຍັງສະແດງໃຫ້ເຫັນວ່າມີການຫຼຸດລົງຂອງເດັກ ທີ່ເປັນໂລກເລືອດຈາງ 4.4 ສ່ວນຮ້ອຍ (UN 2016).

2.2.3 ການເພີ່ມສະມັດຕະພາບການຜະລິດກະສິກຳຂອງຜູ້ຜະລິດສະບຽງອາຫານຂະໜາດນ້ອຍເປົ້າໝາຍການພັດທະນາ ແບບຍືນຍົງ ຂໍ້ 2.3 ພາຍໃນປີ 2030, ເພີ່ມສະມັດຕະພາບການຜະລິດກະສິກຳ ແລະ ລາຍຮັບຂອງຜູ້ຜະລິດສະບຽງອາຫານຂະໜາດນ້ອຍ ໂດຍສະເພາະແມ່ຍິງ, ຊົນເຜົ່າ, ຄອບຄົວຊາວໄຮ່ນາ, ຜູ້ລ້ຽງສັດ ແລະ ຊາວປະມົງ ໃຫ້ໄດ້ສອງເທົ່າ ໂດຍການ ມີສິດສະເໝີພາບໃນການເຂົ້າເຖິງທີ່ດິນ, ຊັບພະຍາກອນ ແລະ ປັດໃຈການ ການຜະລິດ, ຄວາມຮູ້, ການບໍລິການ ດ້ານການເງິນ, ຕະຫຼາດ ແລະ ກາລະໂອກາດສຳລັບການ ເພີ່ມມູນຄ່າຜະລິດຕະພັນ ແລະ

ວຽກນອກຂະແໜງການກະສິກຳ ໂດຍຖືເອົາຕາມເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.3 ດັ່ງທີ່ກຳນົດໄວ້, ການເພີ່ມຜະລິດຕະຜົນເປັນສອງເທົ່າ ດ້ວຍການວັດແທກບໍລິມາດທັງໝົດ ແມ່ນຈະ ມີຄວາມຫຍຸ້ງຍາກທີ່ຈະບັນລຸຜົນສຳເລັດ, ແຕ່ວ່າສິ່ງທີ່ສຳຄັນກວ່ານັ້ນ, ການເພີ່ມສະມັດຕະພາບການ ຜະລິດກະສິກຳເປັນສອງເທົ່າ ແລະ ໃນທຸກຂົງເຂດຂອງປະຊາກອນທີ່ກ່າວມາຢ່າງທົ່ວເຖິງ ຍິ່ງມີຄວາມທ້າທາຍຫຼາຍຂຶ້ນກວ່າເກົ່າ.
ເຖິງແມ່ນວ່າຈະເປັນເຊັ່ນນັ້ນກໍ່ຕາມ, ເປົ້າໝາຍດັ່ງກ່າວແມ່ນມີຄຸນຄ່າທີ່ສຸດ: ສະໜັບສະໜູນ ແລະ ເສີມສ້າງຜູ້ຜະລິດສະບຽງອາຫານຂະໜາດນ້ອຍ ທີ່ຢູ່ເຂດຊົນນະບົດ ແມ່ນມີຜົນກະທົບສຸດທິ ດ້ານບວກຕໍ່ເສດຖະກິດ ແລະ ສັງຄົມ, ແລະ ຍັງເປັນການຮັກສາຄວາມອຸດົມສົມບູນທາງດ້ານສັງຄົມ ແລະ ມໍລະດົກທາງວັດທະນະທຳຂອງປະເທດ.

ການເພີ່ມສະມັດຕະພາບການຜະລິດກະສິກຳ ແມ່ນຂຶ້ນກັບຄວາມກົດດັນທາງດ້ານປະຊາກອນທີ່ອາໃສຢູ່ດິນທີ່ມີຢູ່. ຈາກປີ 1999 ເຖິງ 2011, ຈຳນວນຂອງຄົວເຮືອນທີ່ປະກອບອາຊີບປູກຝັງໄດ້ເພີ່ມຈາກ 668,000 ມາເປັນ 783,000 (+17 ສ່ວນຮ້ອຍ), ຈຳນວນການຈັບຈອງ ທີ່ດິນເພີ່ມຂຶ້ນຈາກ 647,000 ມາເປັນ 777,000 (+20 ສ່ວນຮ້ອຍ) ແລະ ມີຜູ້ຈັບຈອງທີ່ດິນ 51,000 ຄົນ ທີ່ແມ່ນແມ່ຍິງ ເປັນຜູ້ທຳການຜະລິດທັງໝົດ ໃນຂະນະທີ່ສອງສ່ວນສາມຂອງການຈັບຈອງທີ່ດິນ ແມ່ນພາຍໃຕ້ການຄຸ້ມຄອງຮ່ວມກັນລະຫວ່າງຜົວ ແລະ ເມຍ, ແລະ ຈຳນວນຄົວເຮືອນທີ່ບໍ່ໄດ້ເຮັດອາຊີບປູກຝັງ ເພີ່ມຂຶ້ນຈາກ 130,000 ມາເປັນ 239,000 (+83 ສ່ວນຮ້ອຍ). ຂະໜາດ ຄົວເຮືອນໂດຍສະເລ່ຍຂອງປະຊາກອນທີ່ປະກອບອາຊີບປູກຝັງ ຍັງຄົງບໍ່ປ່ຽນແປງ ປະມານ 6 ຄົນຕໍ່ຄົວເຮືອນ (ກຊກປ ແລະ LSB 2012). ອັນນີ້ ຊີ້ໃຫ້ເຫັນວ່າເຖິງແມ່ນປະຊາກອນຈະຍົກຍ້າຍເຂົ້າໄປເຂດຕົວເມືອງ, ຈຳນວນລວມຂອງຄົວເຮືອນ (ທັງທີ່ປະກອບອາຊີບປູກຝັງ ແລະ ບໍ່ແມ່ນການປູກຝັງ) ໃນເຂດຊົນນະບົດ ຍັງຄົງມີການເພີ່ມຂຶ້ນ.

ໃນທົ່ວຂະແໜງກະສິກຳ, ຜົນຜະລິດໂດຍລວມ (ນ້ຳໜັກລວມຂອງຜົນຜະລິດ) ແມ່ນເພີ່ມຂຶ້ນ, ແຕ່ວ່າປະເພດຂອງພືດທີ່ປູກແມ່ນໜ້ອຍລົງ, ແລະ ໄດ້ມີຄຳອະທິບາຍວ່າ ແມ່ນຍ້ອນການປ່ຽນແປງຈາກການປູກພືດເປັນອາຫານ ຫັນໄປສູ່ການຜະລິດ ກະສິກຳ ເປັນສິນຄ້າ, ໂດຍມີການຂະຫຍາຍການປູກພືດຊະນິດດຽວເພື່ອຂາຍເປັນສິນຄ້າສົ່ງອອກຕະຫຼາດພາຍນອກ. ອັນນີ້ໄດ້ລວມທັງການຂະຫຍາຍການປູກພືດເປັນສິນຄ້າເຊັ່ນ: ມັນຕົ້ນ, ກາເຟ, ຊາ, ສາລີ, ຢາງພາລາ ແລະ ອ້ອຍ. ໂດຍອີງຕາມການສຳຫຼວດກະສິກຳປີ 2010/2011, ເນື້ອທີ່ ປູກສາລີ ແມ່ນໄດ້ມີການເພີ່ມຂຶ້ນຫ້າເທົ່າ. ໃນປີ 2010/11, ຈຳນວນ 49,000 ຄົວເຮືອນໄດ້ປູກຢາງພາລາໃສ່ເນື້ອທີ່ປະມານ 66,500 ເຮັກຕ້າ (ກຊກປ ແລະ LSB 2012).

ເມື່ອຕະຫຼາດກະສິກຳມີການເຊື່ອມໂຍງກັບພາກພື້ນຫຼາຍຂຶ້ນ, ໂອກາດໃນການສ້າງລາຍຮັບເພີ່ມຂຶ້ນ ແມ່ນຖືກຫັກລົບກັບການບໍ່ເທົ່າທຽມ ກັນຢ່າງຫຼວງຫຼາຍຂອງຕະຫຼາດ. ຜູ້ຜະລິດຢູ່ ສປປ ລາວ ແມ່ນບໍ່ມີອຳນາດໃນການຄວບຄຸມລາຄາການຊື້ສຳລັບຜະລິດຕະພັນຂອງຕົນ ແລະ ເຮັດໃຫ້ເຂົາເຈົ້າ ແມ່ນຂຶ້ນກັບການຜັນຜວນຂອງລາຄາໃນຕະຫຼາດເຂດພາກພື້ນ ຫຼື ຕະຫຼາດໂລກ. ມັນມີຄວາມສຳຄັນທີ່ຈະສັງເກດວ່າໂຄງສ້າງຕົວຈິງຂອງຕະຫຼາດສຳລັບການສົ່ງອອກ ທີ່ຫັນປ່ຽນໄປສຳລັບການຜະລິດເປັນສິນຄ້າຢູ່ ສປປ ລາວ ໃນຫຼາຍໆກໍລະນີ ແມ່ນໝາຍ ເຖິງການເຊື່ອມໂຍງໂດຍກົງລະຫວ່າງຜູ້ຜະລິດສະບຽງອາຫານຂະໜາດນ້ອຍຫຼືຜູ້ຜະລິດກະສິກຳແບບສັນຍາ ຜູກພັນສອງສົ້ນ ກັບໂຮງງານອຸດສາຫະກຳພຽງແຫ່ງດຽວ ຫຼືກຸ່ມຜູ້ຜະລິດຂະໜາດນ້ອຍເທົ່ານັ້ນ.
ອັນນີ້ ເຮັດໃຫ້ສະພາບເງື່ອນໄຂການຜັນຜວນຂອງຕະຫຼາດມີລະດັບຄວາມບໍ່ແນ່ນອນສູງສຳລັບຜູ້ຜະລິດ. ດ້ວຍຂໍ້ຈຳກັດທາງດ້ານພາລາທິການ ແລະ ເຫດຜົນອື່ນໆ ໂດຍປົກກະຕິຊາວກະສິກອນແມ່ນບໍ່ມີຄວາມສາມາດຊອກຫາຕະຫຼາດແຫ່ງອື່ນໄດ້.

ການເພີ່ມຜົນຜະລິດດ້ານສະບຽງອາຫານບໍ່ໄດ້ຮັບປະກັນດ້ານສະບຽງອາຫານ. ລະບົບ, ຂັ້ນຕອນ ແລະ ກົນໄກ ເພື່ອແກ້ໄຂບັນຫາການ ຄ້ຳປະກັນທາງດ້ານສະບຽງອາຫານ ແລະ ຄວາມປອດໄພຕໍ່ສຸະພາບໃນທຸກໆຂັ້ນຕອນຂອງການຜະລິດ ເພື່ອການບໍລິໂພກແມ່ນຍັງຂາດ ແຄນຢູ່.
ມາດຕະຖານການຮັບປະກັນດ້ານສະບຽງອາຫານຢູ່ຕະຫຼາດທ້ອງຖິ່ນ, ທັງສິນຄ້າພາຍໃນ ແລະ ສະບຽງອາຫານທີ່ນຳເຂົ້າ, ແມ່ນຍັງຕ່ຳຫຼາຍ. ການນຳໃຊ້ຢາຂ້າແມງໄມ້ ແລະ ປຸຍ ແມ່ນຍັງພົບເຫັນຢ່າງແຜ່ຫຼາຍ. ການປະຢັດຍ້ອນຂະໜາດຂອງທຸລະກິດ ສຳລັບການຜະລິດເປັນສິນຄ້າ ສ່ວນ ຫຼາຍຮຽກຮ້ອງໃຫ້ມີການນຳໃຊ້ສານເຄມີທີ່ບໍ່ແມ່ນຝຸ່ນອິນຊີ, ແຕ່ວ່າມີລະບຽບການຄຸ້ມຄອງພຽງເລັກນ້ອຍ ຫຼື ຂາດລະບົບການບັງຄັບໃຊ້ເພື່ອຮັບປະກັນຄວາມປອດໄພໃນການນຳໃຊ້ສານເຄມີເຂົ້າໃນການປູກຝັງ.

ໃນວ່າງມໍ່ໆມານີ້, ການນຳໃຊ້ຢາຂ້າຫຍ້າ, ຢາຂ້າແມງໄມ້, ປຸຍ ແລະ ສານຕ່າງໆ ທີ່ບໍ່ໄດ້ຮັບການກວດກາ ແລະ ການນຳໃຊ້ຢ່າງຜິດກົດໝາຍ ທັງຜູ້ຜະລິດລາຍໃຫຍ່ ແລະ ຜູ້ຜະລິດລາຍນ້ອຍ ພາໃຫ້ມີຜົນກະທົບດ້ານລົບຕໍ່ສຸຂະພາບຂອງຄົນ, ດິນ ແລະ ຄຸນນະພາບຂອງນ້ຳ, ຊີວະນາໆພັນ ແລະ ຄຸນນະພາບຂອງອາຫານ. ການປຶກສາຫາລືຂັ້ນແຂວງ ໄດ້ສະເໜີວ່າ ການເພີ່ມການນຳໃຊ້ສານເຄມີເຂົ້າໃນການຜະລິດກະສິກຳ ເກີດຂຶ້ນຍ້ອນຄົວເຮືອນຕ້ອງການ ຈະໃຫ້ ໄດ້ຜົນຜະລິດຫຼາຍທີ່ສຸດ ໃຫ້ໄວທີ່ສຸດ ແລະ ຖືກທີ່ສຸດເທົ່າທີ່ຈະເປັນໄປໄດ້. ມັນຍັງໄດ້ໃຫ້ຮູ້ວ່າ ອັນນີ້ເປັນສາຍເຫດຂອງການ ນຳໃຊ້ຢາຂ້າຫຍ້າ ແລະ ຢາຂ້າແມງໄມ້ຫຼາຍຂຶ້ນ ດັ່ງທີ່ໄດ້ໃຫ້ຂໍ້ສັງເກດໃນເອກະສານທາງການເພື່ອປຶກສາຫາລື LURAS (2016).

ລະບົບການປູກຝັງແບບປະສົມປະສານຂອງຜູ້ຜະລິດຂະໜາດນ້ອຍ ແລະ ການຈ້າງງານນອກຂະແໜງກະສິກຳ ແມ່ນສິ່ງສຳຄັນ ແລະ ມາດຕະການຊີ້ວັດໃນການສ້າງຄວາມທົນທານຕໍ່ຄວາມສ່ຽງຂອງການປ່ຽນແປງດ້ານດິນຟ້າອາກາດ. ໃນປະຈຸບັນ, ການກະສິກຳເພື່ອການຄ້າສຳລັບສົ່ງອອກ ຢູ່ຮ່ວມກັນກັບຫຼາຍລະດັບຂອງການປູກຝັງເພື່ອກຸ້ມຕົນເອງ, ລະບົບການປູກຝັງແບບຄອບຄົວ ແລະ ການຜະລິດເພື່ອ ດຳລົງຊີວິດ.
ການສຳປະທານ, ການປູກຕົ້ນໄມ້ ແລະ ກະສິກຳແບບສັນຍາຜູກພັນສອງສົ້ນ ໄດ້ເພີ່ມຄວາມກົດດັນໃສ່ດິນໃນເຂດຊົນນະບົດ ແລະ ຊັບພະຍາກອນນ້ຳ, ແລະ ການຄຸ້ມຄອງທີ່ດິນທີ່ມີການທັບຊ້ອນກັນ ແລະ ຂັ້ນຕອນການຄອບຄອງທີ່ດິນທີ່ໄດ້ກາຍມາເປັນສິ່ງທ້າທາຍອັນໃຫຍ່ຫຼວງສຳລັບລັດຖະບານທ້ອງຖິ່ນ ແລະ ຊຸມ

ຊົນ (LIWG 2012).
ອສບລ ທີ່ເຮັດວຽກຢູ່ເຂດເນີນສູງ ຢູ່ຊົນນະບົດ ໄດ້ໃຫ້ຂໍ້ສັງເກດວ່າແມ່ຍິງຊົນເຜົ່າເຂດຊົນນະບົດ ແມ່ນກຸ່ມທີ່ມີຄວາມ ສ່ຽງທີ່ສຸດໃນການທີ່ຈະຖືກປະຖິ້ມ, ເພາະບົດບາດ ແລະ ອຳນາດຂອງແມ່ຍິງ ແມ່ນກຳລັງຖືກເສື່ອມຖອຍຍ້ອນການປ່ຽນແປງ ທາງດ້ານເສດຖະກິດ-ສັງຄົມຢ່າງໄວວາ.

ການທົບທານຕໍ່ການຜະລິດກະສິກຳ ແລະ ຊັບພະຍາກອນທຳມະຊາດສຳລັບລາຍຮັບ ແລະ ໂພຊະນາການ ຍັງເຮັດໃຫ້ແມ່ຍິງຊົນເຜົ່າເຂດຊົນນະບົດມີຄວາມບອບບາງສູງຕໍ່ກັບການປ່ຽນແປງຂອງດິນຟ້າອາກາດ, ລວມທັງຜົນສະທ້ອນດ້ານລົບ ທີ່ເກີດຂຶ້ນຈາກການປ່ຽນແປງຂອງຕະຫຼາດສາກົນ ແລະ ການລົງທຶນໂດຍກົງຂອງຕ່າງປະເທດ (CARE 2015).
ຂຶ້ນກັບລະດູການ, ມີການຜະລິດສະບຽງອາຫານໃນປະລິມານທີ່ຫຼາຍ, ແຕ່ວ່າມັນມີພຽງທາງເລືອກບໍ່ເທົ່າໃດທາງສຳລັບການຜະລິດ ປຸງແຕ່ງ ສະບຽງອາຫານ, ໂດຍທີ່ຜົນຜະລິດສ່ວນໃຫຍ່ແມ່ນຖືກຂາຍ ຫຼື ສົ່ງອອກໃນຮູບແບບວັດຖຸດິບ. ໃນປະຈຸບັນແມ່ນຍ້ອນຂ້າງຍາກ ທີ່ຈະມີ ປັດໃຈຮອງຮັບໃນການປຸງແຕ່ງຜະລິດຕະພັນ ແລະ ການເພີ່ມມູນຄ່າ ໄປພ້ອມໆກັບຕ່ອງໂສ້ມູນຄ່າ.
ແມ່ຍິງໃນເຂດຊົນນະບົດ, ໂດຍການຊ່ວຍເຫຼືອຈາກຊາວໜຸ່ມທັງຍິງແລະຊາຍ, ແມ່ນເປັນຜູ້ຮັບຜິດຊອບຫຼັກໃນການເກັບຜະລິດຕະພັນເຄື່ອງປ່າຂອງດົງ ແລະ ຍັງຄົງເປັນແຫຼ່ງອາຫານ ເພື່ອບໍລິໂພກທີ່ສຳຄັນ ສຳລັບຄອບຄົວ.
ການເຂົ້າເຖິງ ຜະລິດຕະພັນເຄື່ອງປ່າຂອງດົງ ແລະ ການຫາປາ ຖືເປັນສິ່ງສຳຄັນຕໍ່ລະບົບອາຫານພື້ນເມືອງ, ແຕ່ວ່າມີປະລິມານທີ່ໜ້ອຍລົງ ຍ້ອນການຍາດແຍ່ງ ທີ່ດິນ, ນ້ຳ ແລະ ລະບົບນິເວດວິທະຍາ. ອີງຕາມ ກະຊວງກະສິກຳ ແລະ ປ່າໄມ້ ແລະ LSB (2012), ມີຫຼາຍກວ່າ 80 ຄົວເຮືອນ ໄດ້ຮັບການລາຍງານວ່າມີການຫຼຸດຜ່ອນ ການເຂົ້າເຖິງແຫຼ່ງຊັບພະຍາກອນທຳມະຊາດໃນໄລຍະຫ້າປີຜ່ານມາ.

ດ້ວຍຄວາມສຳຄັນຂອງ ຜະລິດຕະພັນເຄື່ອງປ່າຂອງດົງ ຕໍ່ການສະໜອງສະບຽງອາຫານ ແລະ ຄວາມຫຼາກຫຼາຍທາງດ້ານອາຫານ, ການຫຼຸດລົງຂອງ ຜະລິດຕະພັນເຄື່ອງປ່າຂອງດົງ ມີຜົນສະທ້ອນດ້ານລົບຢ່າງຮ້າຍແຮງຕໍ່ບັນດາບ້ານໃນເຂດຊົນນະບົດ.
ຄົວເຮືອນທີ່ຜະລິດໜ້ອຍເພື່ອນຳໃຊ້ເອງ, ແມ່ນຊອກຫາເຄື່ອງປ່າຂອງດົງໜ້ອຍກວ່າ, ແລະມີການເອື່ອຍອີງໃສ່ກຳລັງຊື້ຂອງຕະຫຼາດ ຫຼາຍກວ່າສຳລັບຄວາມຕ້ອງການຂັ້ນພື້ນຖານຂອງເຂົາເຈົ້າ,



ຄວາມຈຳເປັນກ່ຽວກັບຄວາມປອດໄພເພື່ອການບໍລິໂພກແມ່ນເພີ່ມຂຶ້ນ. ຈຸດນີ້ ແມ່ນໄດ້ຖືກຢ້ຳຄືນໃນໄລຍະການປຶກສາຫາລືກັບແຂວງໃນທຸກໆພາກ. ສະບຽງອາຫານທີ່ນຳເຂົ້າຈາກຕ່າງປະ ເທດມີການໃສ່ສະຫຼາກເປັນພາສາອື່ນທີ່ຜູ້ບໍລິໂພກຄົນລາວອາດຈະບໍ່ສາມາດເຂົ້າໃຈໄດ້. ສະບຽງອາຫານທີ່ນຳເຂົ້າ ຍັງມີແນວໂນ້ມ ທີ່ຈະມີຄຸນນະພາບຕ່ຳ, ມີປະລິມານນ້ຳຕານສູງ, ມີເກືອ ແລະນ້ຳ ມັນ.

ມີບາງຊຸບເປີ້ມາເກັດ ແລະຮ້ານຄ້ານ້ອຍຍັງຄົງຂາຍອາຫານດອງ, ໃສ່ຖົງໄວ້ກ່ອນ ແລະ ເຄື່ອງດື່ມທີ່ມີສານກັນບູດສູງ, 'ອາຫານບໍ່ມີປະໂຫຍດ 'ເຊິ່ງມີເປົ້າໝາຍແນ ໃສ່ເດັກນ້ອຍ. ຮູບແບບ ການບໍລິໂພກ ທີ່ບໍ່ຖືກສຸຂະລັກສະນະໃນເຂດຕົວເມືອງສອດຄ້ອງກັບການຕຸ້ຍເກີນໄປ ແລະ ນ້ຳໜັກເກີນມາດຕະຖານ.
ເທັກໂນໂລຊີທີ່ເໝາະສົມ ທີ່ແທດເໝາະກັບການນຳມາປັບໃຊ້, ການຜະລິດກະສິກຳທີ່ຍືນຍົງ ແລະ ການຜະລິດອາຫານແມ່ນບໍ່ໄດ້ຮັບການ ສົ່ງເສີມຢ່າງພຽງພໍ, ແລະ ຂີດຄວາມສາມາດຂອງທ້ອງຖິ່ນໃນການພັດທະນາເທັກໂນໂລຊີດັ່ງກ່າວດ້ວຍຕົນ ເອງ ແມ່ນຍັງຕ່ຳຫຼາຍ (ເຊັ່ນ: ເທັກ ໂນລະຊີທີ່ຕິດພັນກັບການຜະລິດແກ່ນພັນ, ການຮັກສາພືດຜົນຫຼັງເກັບກ່ຽວ, ຂັ້ນຕອນການຜະລິດ, ການເກັບມ້ຽນ ແລະ ການນຳໃຊ້ພະລັງງານຄືນ). ສຳລັບການ ຖ່າຍໂອນເທັກໂນໂລຊີໃຫ້ແກ່ຊາວນາຢູ່ລາວ, ໂດຍສະເພາະແມ່ນແມ່ຍິງ, ແລະ ການເຂົ້າໃຈເຖິງເທັກໂນໂລຊີທີ່ກ່ຽວ ຂ້ອງສຳ ລັບ 'ການພັດທະນາ ເສດຖະກິດສີຂຽວ' ແມ່ນຍັງຢູ່ໃນຂັ້ນຕອນເລີ່ມຕົ້ນ.

ການສົ່ງເສີມກະສິກຳແມ່ນໜຶ່ງໃນຈຸດເລີ່ມຕົ້ນເພື່ອໂນ້ມນ້າວ ແລະ ປ່ຽນຮູບແບບການຜະລິດຢູ່ສວນ, ເງື່ອນໄຂ ແລະ ພາກປະຕິບັດ, ແລະ ມີບາງຊຸດສົ່ງເສີມກະສິກຳທີ່ດີບາງຈຳນວນທີ່ມີຢູ່ໃນກົມສົ່ງເສີມກະສິກຳ ແລະ ສະຫະ ກອນ (ກສກສ) ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (ສຄກປ) ແຕ່ວ່າບໍ່ສາມາດ ເຜີຍຂະຫຍາຍໄດ້ທົ່ວທຸກເມືອງ ແລະ ກຸ່ມບ້ານ ແລະ ບ້ານ ຍ້ອນຂາດແຄນທຶນຮອນ ແລະ ພະນັກງານທີ່ມີຈຳກັດ.

2.2.4 ຮັບປະກັນໃຫ້ມີລະບົບການຜະລິດສະບຽງອາຫານແບບຍືນຍົງ ແລະ ດຳເນີນການເຮັດກະສິກຳແບບມີຄວາມທົນທານ, ເຊິ່ງຊ່ວຍຮັກສາລະບົບນິເວດເພື່ອປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດເປົ້າໝາຍການພັດທະນາແບບຍືນຍົງຂໍ້ 2.4 ພາຍໃນປີ 2030, ຮັບປະກັນໃຫ້ມີລະບົບການຜະລິດສະບຽງອາຫານແບບຍືນຍົງ ແລະດຳເນີນວິທີການເຮັດກະສິກຳແບບມີຄວາມທົນທານ ທີ່ເພີ່ມສະມັດຕະພາບ ແລະ ການຜະລິດ, ເຊິ່ງຊ່ວຍຮັກສາລະບົບນິເວດ, ເພີ່ມຂີດຄວາມສາມາດໃນການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ, ອາກາດທີ່ປັ່ນປ່ວນ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ໄພພິບັດ ອື່ນໆ, ກໍຄືປັບປຸງຄຸນນະພາບຂອງດິນເປັນກ້າວໆ.

ໄລຍະຂອງເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.4 ແມ່ນຂ້ອນຂ້າງຊັບຊ້ອນ ແລະນຳສະເໜີເປົ້າໝາຍທີ່ຫຼາກຫຼາຍທີ່ຈະຕ້ອງໄດ້ເຮັດໄປພ້ອມໆກັນ. ອັນນີ້ມັນ ໝາຍເຖິງຄວາມກົມກຽວກັນຂອງລະບົບການຜະລິດສະບຽງອາຫານທີ່ມີຢູ່ເດີມ ພາຍໃຕ້ຄວາມສົມດູນຂອງຜູ້ອາໄສ ກັບລະ ບົບນິເວດ ໃນຂະນະດຽວກັນ

ກໍ່ສົ່ງເສີມ ຄວາມທົນທານ ແລະ ການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດໄປພ້ອມໆກັນສິ່ງທີ່ສຳຄັນທີ່ສຸດ,ມັນຕັ້ງຢູ່ບົນສົມມຸດຕິຖານທີ່ວ່າມີຄວາມເຂົ້າໃຈຈະແຈ້ງກ່ຽວກັບ'ຄວາມຍືນຍົງ' ແລະ 'ຄວາມທົນທານ', ເຊິ່ງຈະເປັນຫົວຂໍ້ຂອງການຖົກຖຽງກັນຕໍ່ໄປ ແລະ ຢ່າງຕໍ່ເນື່ອງ.

ການປຶກສາຫາລືເພີ່ມເຕີມຈະ ຮຽກຮ້ອງໃຫ້ມີການພິຈາລະນາວ່າເປົ້າໝາຍເຫຼົ່ານີ້ ຈະສາມາດປັບໃຫ້ສອດຄ້ອງກັນກັບການເພີ່ມສະມັດຕະພາບໃນການຜະລິດ ໃຫ້ໄດ້ສອງ ເທົ່າໄດ້ແນວໃດ ຕາມທີ່ໄດ້ກຳນົດໄວ້ໃນ SDG 2.3.
ໃນລະດັບນະໂຍບາຍ, ຮູບແບບຂອງການເຕີບໂຕດ້ານເສດຖະກິດ ເຊິ່ງເນັ້ນໜັກໃສ່ ການເຕີບໂຕດ້ານ ລວມຍອດຜະລິດຕະພັນແຫ່ງຊາດ(GNP) ຫຼື ລວມຍອດຜະລິດຕະພັນພາຍໃນ (GDP) ບໍ່ໄດ້ສະໜອງພື້ນຖານທີ່ພຽງພໍສຳລັບການປະເມີນຜົນທີ່ຊັບຊ້ອນທີ່ໄດ້ກຳນົດການປະເມີນຄຸນຄ່າຂອງຊັບພະຍາກອນທຳມະຊາດ, ໂດຍສະເພາະແມ່ນ ຄຸນຄ່າທາງອ້ອມ ແລະ ຄຸນຄ່າທີ່ບໍ່ໄດ້ໃຊ້ງານ (ເຊັ່ນ: ການໝູນວຽນຂອງທາດອາຫານ, ຊີວະນາໆພັນ, ການຄວບຄຸມນ້ຳຖ້ວມ, ການປ້ອງ ກັນພະຍຸ, ວັດທະນະທຳແລະມໍລະດົກ) (Barbier 2003).
ຈາກຕົວຢ່າງທີ່ເຫັນ, ອ່າງລຸ່ມແມ່ນ້ຳຂອງ ແມ່ນມີຄຸນຄ່າຢ່າງຫຼວງຫຼາຍນອກເໜືອຈາກເປັນແຫຼ່ງສ້າງລາຍຮັບຈາກເຂື່ອນໄຟຟ້ານ້ຳຕົກພຽງຢ່າງດຽວ.
ການຫັນປ່ຽນການນຳໃຊ້ທີ່ດິນ, ການເຂົ້າເຖິງທີ່ດິນ ແລະ ຮູບແບບຂອງການຜະລິດກະສິກຳ ໄດ້ມີຜົນກະທົບໂດຍລວມໃສ່ການຍົກເລີກ ການເຊື່ອມໂຍງຂອງການເພິ່ງພາອາໃສເຊິ່ງກັນແລະກັນທີ່ມີມາແຕ່ດົນນານ ລະຫວ່າງການປູກຝັງ ແລະ ລະບົບນິເວດ, ຫຼຸດຜ່ອນຄວາມ ຫຼາກຫຼາຍໃນພືດພັນ ແລະ ເຕັກນິກການຜະລິດ, ປະກອບສ່ວນເຂົ້າໃນຄວາມບອບບາງຕໍ່ຄວາມສ່ຽງຂອງການປ່ຽນແປງດິນຟ້າອາກາດ ແລະ ຫຼຸດຜ່ອນຂີດຄວາມສາມາດຂອງຄົວເຮືອນທີ່ເປັນຜູ້ຜະລິດສະບຽງອາຫານລາຍນ້ອຍ.

ໃນການປັບໂຕກັບ ການປ່ຽນແປງດິນຟ້າອາກາດ ຕາມ ລະດູການ ແລະ ການຜັນຜວນຂອງອາກາດທີ່ເກີດຂຶ້ນພຽງຄັ້ງດຽວ ຫຼື ຊ້ຳແລ້ວຊ້ຳອີກ. ສະພາບອາດກາດທີ່ຮ້າຍແຮງ, ການປ່ຽນແປງຕາມ ລະດູການ, ການປ່ຽນແປງໄລຍະຍາວ, ແລະ ສະພາບເງື່ອນໄຂຂອງດິນຟ້າອາກາດໃນອະນາຄົດທັງໝົດແມ່ນສ້າງໃຫ້ເກີດຄວາມສ່ຽງ, ເນັ້ນ ໜັກໃສ່ການປ່ຽນແປງທາງດ້ານດິນຟ້າອາກາດທີ່ເປັນບັນຫາທີ່ໜ້າເປັນຫ່ວງໃນສະພາບປະຈຸບັນ ແລະ ໃນອະນາຄົດ.

ຄວາມສ່ຽງຂອງ ການປ່ຽນແປງດິນຟ້າອາກາດ ອາດຈະກະທົບຕໍ່ແມ່ຍິງ ແລະ ຜູ້ຊາຍໃນຮູບແບບແຕກຕ່າງກັນ, ເຊັ່ນຕົວຢ່າງ:
ສະພາບອາກາດໜາວຮຸນແຮງ ທີ່ລາວໄດ້ປະເຊີນໃນໄລຍະລະດູໜາວປີ 2016 ສ້າງຜົນເສຍຫາຍຮຸນແຮງແກ່ຊາວກະສິກອນທີ່ປູກຝັງລ້ຽງສັດຢູ່ບັນດາ ແຂວງພາກ ເໜືອ.
ໃນຂະນະທີ່ໄພພິບັດທາງທຳມະຊາດ ສ້າງຜົນສະທ້ອນເພີ່ມເຕີມໃຫ້ແກ່ຊາວກະສິກອນທັງຍິງ ແລະ ຊາຍ, ແມ່ຍິງ ແລະ ເດັກຍິງ ແມ່ນປະເຊີນກັບສິ່ງທ້າທາຍທາງຮ່າງກາຍຫຼາຍກວ່າ ເພາະພວກເຂົາເຈົ້າແມ່ນຮັບຜິດຊອບໃນການເກັບຟືນ, ແຕ່ງກິນ ແລະ ການໃຫ້ຄວາມ ອົບອຸ່ນ. ໃນອີກດ້ານໜຶ່ງ, ເດັກຊາຍ ແລະ ຜູ້ຊາຍ ສ່ວນໃຫຍ່ແມ່ນຮັບຜິດຊອບໃນການນຳເອົາສັດລ້ຽງຈາກປ່າມາບ່ອນທີ່ມີຄວາມອົບອຸ່ນກວ່າ ຄືໃກ້ກັບເຕົາໄຟ.
ເຖິງຢ່າງໃດກໍ່ຕາມ ຜົນກະທົບຂອງການປ່ຽນແປງຂອງດິນຟ້າອາກາດ ແລະ ໄພພິບັດທາງທຳມະຊາດ, ຄ່າໃຊ້ຈ່າຍພາຍນອກ ແລະ ການ ເຊື່ອມໂຊມຂອງລະບົບນິເວດ ໃນຂະແໜງກະສິກຳ ພາໃຫ້ມີການຜະລິດກະສິກຳທີ່ບໍ່ຍືນຍົງ (ລວມທັງການເຊື່ອມໂຊມຂອງຄຸນນະພາບນ້ຳ/ດິນ ແລະ ການປົນເປື້ອນ, ຜົນຜະລິດຕໍ່າກວ່າ, ຄຸນນະພາບຂອງອາຫານ ແລະ ຄຸນຄ່າໂພຊະນາການຕໍ່າລົງ) ແມ່ນບໍ່ໄດ້ຖືກ ລວມເຂົ້າໃນແຜນຍຸດທະສາດ ຫຼື ງົບປະມານ.

ຍ້ອນຄວາມຕ້ອງການທີ່ຫຼາກຫຼາຍ ແລະ ມີການປ່ຽນແປງ ກ່ຽວກັບຊັບພະຍາກອນທຳມະ ຊາດ ທີ່ມີຢູ່ພາຍໃນປະເທດ, ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ມີການຮັບຮູ້ຫຼາຍຂຶ້ນວ່າຊັບພະຍາກອນດັ່ງກ່າວແມ່ນມີຈຳກັດ ແລະ ຖ້າຫາກ ບໍ່ຮັກສາໄວ້ຢ່າງເປັນລະບົບ ຫຼື ສ້າງຄືນໃໝ່, ມັນກໍ່ຈະສູນເສຍໄປ.
ຄວາມສ່ຽງດ້ານການປ່ຽນແປງຂອງດິນຟ້າອາກາດ (ໄລຍະສັ້ນ ແລະ ໄລຍະຍາວ) ແມ່ນເປັນພຽງສ່ວນໜຶ່ງຂອງການເຊື່ອມສານເຂົ້າໃນການຈັດຕັ້ງປະຕິບັດນະໂຍບາຍການພັດທະນາຊົນນະບົດ ແລະ ກະສິກຳ. ການສົ່ງເສີມກະສິກຳ ບໍ່ໄດ້ຮັບການປະກອບຄວາມພ້ອມເປັນຢ່າງດີໃນການໃຫ້ຄຳແນະນຳໃຫ້ແກ່ຊາວກະສິກອນ ກ່ຽວກັບວ່າ ຈະປັບປຸງການຜະລິດກະສິກຳທີ່ທົນທານຕໍ່ສະພາບການປ່ຽນແປງ ຂອງດິນຟ້າ ອາກາດ ແລະ ປະຢັດຄ່າໃຊ້ຈ່າຍດ້ວຍວິທີໃດ.

ຂໍ້ມູນກ່ຽວກັບຄວາມສ່ຽງຂອງການປ່ຽນແປງສະພາບດິນຟ້າອາກາດ ບໍ່ສາມາດຊອກຫາໄດ້ຢູ່ ຂັ້ນແຂວງ. ຍິ່ງໄປກວ່ານັ້ນ, ມັນມີຄວາມເຂົ້າໃຈທີ່ບໍ່ພຽງພໍຕໍ່ກັບກົນໄກເດີມທີ່ມີຢູ່ ທີ່ເຊິ່ງຄອບຄົວທີ່ທຸກຍາກ ສາມາດຮັບມືກັບຄວາມສ່ຽງ ຂອງການປ່ຽນແປງດິນຟ້າອາກາດໄດ້, ແລະ ລັກສະນະຂອງການສະໜັບສະໜູນທີ່ຈຳເປັນເພື່ອບັງຄັບໃຊ້ກົນໄກເຫຼົ່ານີ້. ທັງໝົດນີ້ ສົ່ງຜົນໃຫ້ເກີດມີຄວາມຕ້ອງການເພີ່ມຂຶ້ນ ຕໍ່ກັບລະບົບເຕືອນໄພລ່ວງໜ້າຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ຕິດພັນກັບການພະຍາກອນ ອາກາດທີ່ໜ້າເຊື່ອຖືໄດ້, ໄພນ້ຳຖ້ວມ, ແຫ້ງແລ້ງ, ການປັບຕົວ ຂອງການກະສິກຳ, ການເຂົ້າຮ່ວມຂອງຊຸມຊົນ ໃນການກະກຽມຄວາມພ້ອມ ແລະ ຕອບໂຕ້ກັບໄພພິບັດ.

ອີງຕາມອົງການ UNICEF (2015) ອັດຕາການເຕີບໂຕຂອງປະຊາກອນຕໍ່ປີ ຈາກປີ 2012 ເຖິງ 2030 ແມ່ນ 1.6 ສ່ວນຮ້ອຍ. ອີງໃສ່ປະຊາກອນປະມານ 6.7 ລ້ານຄົນໃນປີ 2012, ຈຳນວນປະຊາກອນທັງໝົດທີ່ຄາດຄະເນໃນລະຫວ່າງປີ 2040-2050 ຈະແມ່ນ 9 ເຖິງ 10 ລ້ານຄົນ ເຊິ່ງປະກົດວ່າມີຄວາມເປັນໄປໄດ້ (ການທົບທວນປະຊາກອນໂລກ 2016). ຕົວຢ່າງດັ່ງກ່າວແມ່ນໄດ້ແປມາເປັນ ການເພີ່ມຂຶ້ນຂອງຄວາມໜາແໜ້ນ ຂອງປະຊາກອນຈາກ 18 ຄົນຕໍ່ຕະລາງກິໂລແມັດໃນປີ 1990 ມາເປັນ 42 ຄົນຕໍ່ຕາລາງກິໂລ ແມັດໃນປີ 2045.

ໂດຍບໍ່ມີການປ່ຽນແປງໃນລະບົບເສດຖະກິດທີ່ເປັນຢູ່ອັນນີ້ຈະພາໃຫ້ມີຜົນສະທ້ອນເພີ່ມເຕີມກ່ຽວກັບສິ່ງແວດລ້ອມ, ຊັບພະຍາກອນມະນຸດ, ລະບົບການຜະລິດສະບຽງອາຫານ ແລະ ໃນສະພາບການຂອງການທົບທວນຄັ້ງນີ້ ການປ່ຽນແປງທີ່ສຳຄັນຂອງດິນຟ້າ

ອາກາດເພີ່ມເຕີມ ຈະກະທົບຕໍ່ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ.
ໂດຍທົ່ວໄປແລ້ວ, ລະບົບການຜະລິດສະບຽງອາຫານທ້ອງຖິ່ນ ແມ່ນມີຈຸດດີຫຼາຍຢ່າງກວ່າທຽບໃສ່ວິທີການທີ່ມີລັກສະນະໂລກາພິວັດ. ລະບົບທ້ອງຖິ່ນ ແມ່ນໄດ້ສ້າງຂຶ້ນໂດຍກົງ ເພື່ອຮັບຮູ້ ແລະ ມີປະສົບການຂອງທັງຍິງ ແລະ ຊາຍ, ແລະ ມີຄວາມກ່ຽວຂ້ອງໂດຍກົງກັບຄວາມຈຳເປັນໃນການດຳລົງຊີວິດຂອງຄອບຄົວ, ເຊິ່ງໂດຍທົ່ວໄປຍັງພາໃຫ້ມີຄວາມຫຼາກຫຼາຍຂອງການຜະລິດ ສະບຽງອາຫານອີກດ້ວຍ (ເຖິງແມ່ນວ່າຈະໃນປະລິມານທີ່ໜ້ອຍກໍ່ຕາມ) ປະກອບມີໝາກເຜັດ, ຂີງ, ຖົ່ວດິນ, ງາ, ຖົ່ວ, ໝາກນໍ້າ, ໝາກອຶ, ໝາກແຕງ, ມັນດ້າງ.
ແມ່ຍິງ ແລະ ເດັກຍິງ ແມ່ນຮັບຜິດຊອບໃນການຫຼົກຫຍ້າ ແລະ ເກັບກ່ຽວຜະລິດຕະພັນນີ້ ໃນຂະນະທີ່ຜູ້ຊາຍ ແລະ ເດັກຊາຍ ແມ່ນຮັບຜິດຊອບໃນການສ້າງຮົ້ວອ້ອມ ແລະ ບົວລະບັດຮັກສາຮົ້ວບໍ່ໃຫ້ເປ່ເພ.

ການຜະລິດສະບຽງອາຫານທ້ອງຖິ່ນບໍ່ຮຽກຮ້ອງໃຫ້ມີການຂົນສົ່ງທີ່ຫຼວງຫຼາຍ ແລະ ສ່ວນຫຼາຍແມ່ນແມ່ຍິງ ແລະ ເດັກຍິງ ທີ່ຖືກັບບ້ານເພື່ອບໍລິໂພກໃນຄົວເຮືອນ, ຫຼື ເພື່ອໄປຕະຫຼາດເພື່ອສ້າງລາຍຮັບເພີ່ມເພື່ອຊື້ເກືອ ແລະ ອາຫານອື່ນໆທີ່ຈຳເປັນ.
ໂດຍທົ່ວໄປ, ຖ້າຫາກປະເຊີນກັບພາວະສຸກເສີນ, ຊາວກະສິກອນສາມາດປັບໂຕຕໍ່ກັບຜົນກະທົບທີ່ເກີດຂຶ້ນໄດ້ຢ່າງງ່າຍດາຍຂຶ້ນ, ທຽບກັບລະ ບົບທີ່ໂດຍພື້ນຖານແລ້ວຈະຮັກສາແຕ່ວິທີການຫຼັກຂອງວົງຈອນການຜະລິດ (ປັດໃຈການຜະລິດ, ການບຳລຸງຮັກສາ, ເທັກໂນໂລຊີ, ການຄ້າ, ການຂາຍ, ອື່ນໆ) ນອກເໜືອຈາກທີ່ເຂົາເຈົ້າສາມາດເຂົ້າເຖິງ ແລະ ຄວບຄຸມໂດຍກົງ.

## 2.2.5 ຮັກສາຄວາມຫຼາກຫຼາຍດ້ານພັນທຸກຳຂອງແນວພັນພືດ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳ

ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.5 ພາຍໃນປີ 2020, ຮັກສາຄວາມຫຼາກຫຼາຍດ້ານພັນທຸກຳຂອງ ແນວພັນພືດ, ເຄື່ອງປູກຂອງຝັງ ແລະ ສັດລ້ຽງ, ສົ່ງເສີມການປູກແນວພັນພືດ ແລະ ສັດທີ່ມາຈາກແຫຼ່ງທຳມະຊາດໂດຍຜ່ານການສ້າງທະນາຄານແນວພັນ ແລະ ພັນພືດທີ່ຫຼາກຫຼາຍ ແລະ ມີການຄຸ້ມຄອງເປັນຢ່າງດີໃນລະດັບຊາດ, ພາກພື້ນ ແລະ ສາກົນ ພ້ອມທັງສົ່ງເສີມການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳ ແລະ ເທົ່າທຽມກັນທີ່ໄດ້ຮັບຈາກການ ນຳໃຊ້ຊັບພະຍາກອນດ້ານພັນທຸກຳແລະ ພູມປັນຍາ ພື້ນເມືອງທີ່ກ່ຽວຂ້ອງ ທີ່ສາກົນໄດ້ຮັບຮອງເອົາ.

ຄວາມສາມາດບົ່ມຊ້ອນໃນການປັບຕົວດ້ານການຄ້າຂອງພັນທຸກຳຂອງແນວພັນພືດຂອງ ສປປ ລາວ ບໍ່ໄດ້ຮັບການສຶກສາຄົ້ນຄວ້າຢ່າງລະອຽດ, ທັງບັນຫາຊັບສິນທາງປັນຍາກໍ່ບໍ່ໄດ້ຮັບການພິຈາລະນາຢ່າງເຕັມສ່ວນ. ເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.5 ຊ່ວຍຜັກດັນການປົກປ້ອງເພີ່ມເຕີມ ແລະ ຈັດລະບົບຄວາມຫຼາກຫຼາຍທາງຊີວະນາໆພັນຂອງປະເທດໃຫ້ ເປັນລະບົບຢ່າງເປັນທາງການ, ສົ່ງເສີມຄວາມທົນທານຕໍ່ການປ່ຽນແປງ ຂອງດິນຟ້າອາກາດໂດຍຜ່ານການຄຸ້ມຄອງແນວພັນພືດທີ່ມີເອກະລັກສະເພາະ ເຊັ່ນ ມີຄວາມທົນທານຕໍ່ຄວາມແຫ້ງແລ້ງ ແລະ ທົນ ທານຕໍ່ສັດຕູພືດ, ມີໄລຍະການເຕີບໃຫຍ່ທີ່ສັ້ນ, ມີ ຄວາມຕ້ອງ ການນໍ້າທີ່ແຕກຕ່າງກັນໄປ ແລະ ມີຄວາມທົນທານຕໍ່ສະພາບອາກາດຮ້ອນ. ເຖິງຢ່າງໃດກໍ່ຕາມ, ໄດ້ມີການສະໜັບສະໜູນພຽງເລັກນ້ອຍຕໍ່ກັບພັນທຸກຳພັນພືດຂອງລາວ, ອັນນີ້ ນຳສະເໜີເຖິງ ສັກກະຍະພາບທີ່ມີພະລັງແຕ່ວ່າຂາດທຶນສະໜັບສະໜູນຢ່າງພຽງພໍ.
ທີ່ຕັ້ງພູມິສາດຂອງ ສປປ ລາວ, ໂດຍສະເພາະແມ່ນສາຍພູຫຼວງ (Annamite mountain range) ແລະ ເຂດລຸ່ມອ່າງແມ່ນໍ້າຂອງ, ແມ່ນເຂດທີ່ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ ແລະ ຄວາມຫຼາກຫຼາຍທາງຊີວະກະສິກຳ.
ມັນມີພັນພືດຢ່າງຫຼວງຫຼາຍ ແຕ່ວ່າບໍ່ໄດ້ຮັບການກຳນົດປະລິມານທີ່ເປັນໄປໄດ້ ເພື່ອກຳນົດ ແລະ ຂະຫຍາຍພັນທີ່ເໝາະສົມກັບສະພາບ ເງື່ອນໄຂການປ່ຽນແປງ ດ້ານດິນຟ້າອາກາດ, ແລະ/ຫຼືມີຄຸນຄ່າທາງໂພຊະນາການສູງ, ໃຫ້ຊາວກະສິກອນຂະໜາດນ້ອຍທີ່ມີໂອກາດໄດ້ພິສູດໃນທ້ອງຖິ່ນຕົນເອງກ່ຽວກັບການປັບຕົວເຂົ້າກັນກັບການປ່ຽນແປງດິນຟ້າອາກາດ.

ແນວ ພັນໄມ້ພື້ນເມືອງ ມີໂອກາດທີ່ຈະເປັນພື້ນຖານໃຫ້ແກ່ແຜນງານປູກປ່າຄືນໃນທົ່ວປະເທດ, ການສ້າງປະເທດຄືນໃໝ່ຈາກສະຖານະໃນເມື່ອກ່ອນທີ່ເປັນອ່າງເກັບກັກແກ໊ສເຮືອນແກ້ວຂອງໂລກ.
ມີພັນທຸກຳພືດພຽງເລັກນ້ອຍ ທີ່ໄດ້ຮັບການຮັກສາໄວ້ໃນທະນາຄານແນວພັນ. ສູນຄົ້ນຄວ້າ ຕັ້ງຢູ່ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (ສຄກປ) ໄດ້ຮັກສາແນວພັນພືດບາງຈຳນວນເທົ່ານັ້ນ, ຕົວຢ່າງ ແລະ ຂໍ້ມູນກ່ຽວກັບພັນທຸກຳພືດ ແມ່ນກວມເອົາຊະນິດພືດທີ່ເປັນອາຫານຫຼັກ (ເຂົ້າ, ສາລີ), ສັດລ້ຽງນ້ອຍ (ໝູ, ໄກ່), ຜັກ ແລະ ໝາກໄມ້, ຜະລິດຕະພັນເຄື່ອງປ່າຂອງດົງ (NTFPs), ປະຊາກອນປາ ແລະ ຊັບພະຍາກອນສັດນໍ້າ, ແລະ ພືດພັນເພື່ອການຄ້າ ແລະ ຕົ້ນໄມ້ຫາຍາກ.

ໄດ້ມີການເກັບຮັກສາແນວພັນເລັກນ້ອຍ ສຳລັບສາລີ, ມັນຕົ້ນ, ຖົ່ວ, ອ້ອຍ ແລະ ເຂົ້າຟ່າງ.
ການປະຕິບັດການກ່ຽວກັບເປົ້າໝາຍການພັດທະນາແບບຍືນຍົງ (SDG) ຢ່າງມີປະສິດທິຜົນ ນຳສະເໜີຂົງເຂດຍຸດທະສາດໃໝ່ທີ່ເປັນທີ່ສົນໃຈ ສຳລັບປະເທດ. ໃນຂະນະທີ່ ສປປ ລາວ ໄດ້ມີຄວາມຂະຫຍັນ ໝັ່ນພຽນໃນການລາຍງານຂອງຕົນຕໍ່ກັບອະນຸສັນຍາວ່າດ້ວຍ ຄວາມຫຼາກຫຼາຍ ທາງຊີວະນາໆພັນ (Convention on Biological Diversity) (ຍື່ນບົດລາຍງານຄັ້ງທີຫ້າ ໃນປີ 2016), ມີຫຼາຍຈຸດປະສົງ ທີ່ໄດ້ຖືກປະໄວ້ ໂດຍບໍ່ສຳເລັດ.

ຈຸດປະສົງ 5, ໄດ້ລະບຸວ່າ ‘ຮັບປະກັນວ່າຜົນປະໂຫຍດດ້ານເສດຖະກິດ ແລະ ສັງຄົມ ຈາກການນຳໃຊ້ ພັນທຸກຳ ແລະ ຜົນຜະລິດທີ່ເກີດຈາກ ສປປ ລາວໄດ້ເພີ່ມພູນຜົນປະໂຫຍດໃຫ້ແກ່ປະເທດ’



ແມ່ນໄດ້ຖືກ ກຳນົດໃນບັນຊີລາຍການ ທີ່ບໍ່ສາມາດບັນລຸ (ກຊສ 2016).

ສືບຕໍ່ສ້າງຈາກແຜນງານທີ່ໄດ້ນຳສະເໜີ ຂອງວຽກງານ ທີ່ໄດ້ກຳນົດໄວ້ໃນບົດລາຍງານຄັ້ງທີ 5 ກ່ຽວກັບ ອະນຸສັນຍາວ່າ ດ້ວຍຄວາມຫຼາກຫຼາຍ ທາງຊີວະນາໆພັນ (CDB), ງານສຶກສາຄົ້ນຄວ້າທາງວິທະຍາສາດ ໂດຍອີງໃສ່ບົດຮຽນທີ່ດີຂອງສາກົນ ສຳລັບການສ້າງທະນາຄານແນວພັນ ແລະ ແຫຼ່ງກຳເນີດການ ຄຸ້ມຄອງຄວາມຫຼາກຫຼາຍຂອງຊີວະນາໆພັນແມ່ນມີຄວາມຈຳເປັນ.

ຍັງມີຄວາມຈຳເປັນ ທີ່ຕ້ອງພະຍາຍາມເພີ່ມເຕີມ ໃນການເຊື່ອມໂຍງການປົກປ້ອງຊີວະນາໆພັນໃນດ້ານມຸມມອງຂອງຄວາມຫຼາກຫຼາຍ ທາງ ພັນທຸກຳ ກັບຜົນປະໂຫຍດທາງການຄ້າ. ອີງໃສ່ປະສົບການຂອງພາກພື້ນ(ໂດຍສະເພາະ ແມ່ນປະເທດໄທ), ນີ້ເປັນໂອກາດ ສຳລັບການຮ່ວມມື ລະຫວ່າງສະຖາບັນຄົ້ນຄວ້າແຫ່ງຊາດ, ສະຖາບັນຄົ້ນຄວ້າກະສິກຳສາກົນ ຈາກກຸ່ມ CG ແລະ ບ່ອນອື່ນໆ, ສະຖາບັນການສຶກສາແຫ່ງຊາດ ແລະ ເຂດພາກພື້ນ, ແລະ ຂະແໜງການເອກະຊົນ. ໃນໄລຍະກາງ, ການເຊື່ອມໂຍງທີ່ສຳຄັນ ຕໍ່ລະບອບການຄ້າສາກົນ ທາງດ້ານການຄ້າທີ່ຕິດພັນກັບສິດທິທາງປັນຍາ ອາດຈະພົ້ນເດັ່ນຂຶ້ນ, ເນື່ອງຈາກຄວາມສາມາດບົ່ມຊ້ອນຂອງ ພັນທຸກຳສະເພາະແມ່ນໄດ້ຮັບການສຶກສາ ແລະ ເຂົ້າໃຈເປັນຢ່າງດີແລ້ວ.

ສຸດທ້າຍ, ຜົນກະທົບຂອງການເຂົ້າເຖິງ 'ທີ່ຍຸດຕິທຳ ແລະ ຄວາມເປັນທຳ' ທັງ ສຳລັບພັນທຸກຳ ແລະ ຜົນປະໂຫຍດ ທີ່ກ່ຽວຂ້ອງ, ໂດຍສະເພາະແມ່ນໃນລະດັບຊຸມຊົນ ແລະ ຄົວເຮືອນພ້ອມທັງສະມາຊິກທັງຍິງ ແລະຊາຍ ຂອງຄອບຄົວທີ່ເຂົ້າຮ່ວມໃນຮູບແບບດັ້ງເດີມ ທີ່ແຕກຕ່າງກັນກ່ຽວກັບການຄຸ້ມຄອງຄວາມຫຼາກຫຼາຍທາງຊີວະນາໆພັນ, ລວມທັງການປົກປັກຮັກສາແນວພັນພືດ, ການໂຄສະນາເຜີຍແຜ່ ແລະ ໃນການເກັບມ້ຽນໃນແຫຼ່ງກຳເນີດ, ບໍ່ໄດ້ຮັບການພິຈາລະນາ ແລະ ສຶກສາຕື່ມກຳເນີດເພີ່ມເຕີມ, ຂຶ້ນກັບແບບຟອມຂອງຜົນປະໂຫຍດທີ່ ມັນອາດຈະສ້າງຂຶ້ນ.

## 2.3 ການປ່ຽນແປງທາງດ້ານໂຄງສ້າງ ສຳລັບການບໍລິການຄຸ້ມຄອງການຄ້ຳປະກັນສະບຽງອາຫານ

ມັນມີແຮງຜັກດັນທີ່ຊັດ
ເຈນ ແລະ ຂໍ້ຜູກພັນຂອງລັດຖະບານ ເພື່ອແກ້ໄຂບັນຫາການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ຢູ່ ສປປ ລາວ, ເຊິ່ງສະເໜີໃຫ້ມີການສ້າງອົງກອນປະສານງານໃໝ່ ຄື:
ການຮວມເອົາການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ເຂົ້າໃນກຸ່ມເດີມ (portfolios) ທີ່ມີແລ້ວຢ່າງເປັນທາງການ, ແລະ ການປະກາດແຈ້ງການກ່ຽວກັບຮູບແບບການສະໜອງທຶນໃໝ່ ເພື່ອຈັດຕັ້ງປະຕິບັດຄວາມພະຍາຍາມໃນການແກ້ໄຂບັນຫາດັ່ງກ່າວ. ລາຍລະອຽດສະເພາະຂອງກອບນະໂຍບາຍທີ່ກ່ຽວຂ້ອງຕ່າງໆ ຈະໄດ້ຮັບການອະທິບາຍລະອຽດເພີ່ມເຕີມໃນພາກທີສາມຖັດໄປນີ້.

ຄວາມສຳຄັນຂອງໂຄງສ້າງຂອງກະຊວງທີ່ຮັບຜິດຊອບໃນເຂດລຸ່ມແມ່ນ້ຳຂອງ ຂອງຂົງເຂດອາຊີຕາເວັນອອກສ່ຽງໃຕ້ ແມ່ນໄດ້ຮັບການ ສ້າງຂຶ້ນ ບົນໂຄງສ້າງການບໍລິຫານທີ່ຕັ້ງໝັ້ນ. ໂຄງສ້າງເຫຼົ່ານີ້ ແມ່ນອີງໃສ່ຄວາມຈຳເປັນໃນການສ້າງຂຶ້ນໂດຍຜ່ານຂັ້ນຕອນການຫັນເປັນ ອຸດສາຫະກຳທີ່ໄດ້ຂະຫຍາຍອອກໃນໄລຍະທີ່ເປັນຫົວເມືອງຂຶ້ນ, ແລະ ອາດຈະບໍ່ພຽງພໍທີ່ຈະຕອບສະໜອງຕາມຄວາມຕ້ອງການ ຕາມສະ ພາບການປະຈຸບັນ.
ບັນຫານີ້ ແມ່ນສິ່ງທ້າທາຍຂອງສາກົນ ແລະ ບໍ່ແມ່ນສະເພາະຢູ່ລາວເທົ່ານັ້ນ:ການສ້າງລະບົບການປົກຄອງແມ່ນປະເຊີນກັບບັນຫາຄວາມຫຍຸ້ງຍາກເພື່ອຄຸ້ມຄອງແກ້ໄຂຄວາມຊັບຊ້ອນຢ່າງມີປະສິດທິຜົນ, ການວິເຄາະບັນຫາທີ່ຫຼາກຫຼາຍຂ້າມຂະແໜງການ ແລະ ພາກສ່ວນ
ພາຍໃຕ້ໂຄງສ້າງທີ່ມີຢູ່. ຄຳຖາມກ່ຽວກັບວ່າ ສິ່ງທ້າທາຍເກີດຂຶ້ນຈາກການຈັດຕັ້ງປະຕິບັດຂອງ ເປົ້າໝາຍການພັດທະນາແບບຍືນຍົງ ຈະສາມາດ ຮອງຮັບໄດ້ຢ່າງພຽງພໍ ພາຍໃນໂຄງ
ສ້າງຂອງລັດທີ່ມີຢູ່ເດີມ ຫຼື ໂຄງສ້າງທີ່ໄດ້ຮັບການດັດແກ້ນັ້ນໄດ້ຄືແນວໃດ ເຊິ່ງຍັງຖືວ່າເປັນຄຳຖາມ ທີ່ກ່ຽວຂ້ອງສູງສຸດກັບດ້ານຍຸດທະສາດ. ສປປ ລາວ ມີຍຸດທະສາດທີ່ກວ້າງຂວາງ, ແຜນປະຕິບັດງານ, ນະໂຍບາຍຂອງຂະແໜງການ ແລະ ທີ່ເຊິ່ງມີຂອບເຂດທີ່ກວ້າງຂວາງ ຮອບດ້ານ. ເຖິງຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ແຜນເຫຼົ່ານີ້ແມ່ນລ່າຊ້າກວ່າຜົນຮັບ ແລະ ເປົ້າໝາຍ ທີ່ກຳນົດໃນເອກະສານນະໂຍບາຍດັ່ງກ່າວ. ຈຸດໃຈກາງ ແມ່ນບັນຫາການເກືອກູນ, ແລະ ວິທີທີ່ບັນດານະໂຍບາຍ ແລະ ແຜນຕ່າງໆເຫຼົ່ານັ້ນ ໄດ້ຮັບການເຜີຍແຜ່ໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ (ໝາຍເຖິງຂັ້ນແຂວງ ແລະ ຂັ້ນເມືອງ, ແຕ່ວ່າ ຍັງມີກຸ່ມບ້ານ ແລະ ອົງການຈັດຕັ້ງຂອງບ້ານ), ແລະ ຊັບພະຍາກອນທີ່ສະໜອງໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ ໃນການ ຈັດຕັ້ງປະຕິບັດບັນດານະໂຍບາຍເຫຼົ່ານີ້.

ສຳລັບການຄຸ້ມຄອງທີ່ຫຼາກຫຼາຍ, ການເງິນ, ແລະ ເຫດຜົນທີ່ຕິດພັນກັບຂີດຄວາມສາມາດຂອງມະນຸດ, ຂໍ້ຜູກພັນດ້ານນະໂຍບາຍ ແລະ ຍຸດທະສາດ ໄດ້ຮັບການພັດທະນາຂຶ້ນໃນລະດັບສູນກາງ ແລະ ບໍ່ໄດ້ຮັບການນຳໄປນຳໃຊ້ຢູ່ຂັ້ນທ້ອງຖິ່ນໄດ້ດີເທົ່າທີ່ຄວນ. ການກະຈາຍ ອຳນາດຈາກຂັ້ນສູນກາງ ສູ່ຂັ້ນທ້ອງຖິ່ນ ແມ່ນບໍ່ຈະແຈ້ງສະເໝີໄປ, ປ່ອຍໃຫ້ຄູ່ຮ່ວມງານຂັ້ນແຂວງ ບໍ່ມີຄວາມໝັ້ນໃຈວ່າ ອຳນາດທີ່ໄດ້ຮັບມອບໝາຍໃຫ້ປະຕິບັດ ຫຼື ຕັດສິນໃຈໄດ້ໃນລະດັບໃດ. ຂໍ້ຜູກພັນດ້ານນະໂຍບາຍຢູ່ຂັ້ນສູນກາງແມ່ນບໍ່ສົມຄູ່ກັນກັບການ ຈັດສັນງົບປະມານຂອງລັດໃຫ້ແກ່ແຂວງ ຫຼື ເມືອງ. ຄ້າຍຄືກັນນີ້, ຄູ່ຮ່ວມງານຂັ້ນແຂວງ ແລະ ຂັ້ນເມືອງ ບໍ່ຮູ້ວ່າຈະເຂົ້າເຖິງແຫຼ່ງທຶນທີ່ມີຢູ່ ຂັ້ນສູນກາງໄດ້ແນວໃດ.

ດ້ວຍເຫດນີ້ ຈິ່ງເປັນຊ່ອງວ່າງສຳຄັນອັນໜຶ່ງໃນການພິຈາລະນາການບໍລິຫານປົກຄອງດັ່ງເປັນບັນຫາຍຸດທະສາດ, ບັນຫາອັນໜຶ່ງທີ່ຢູ່ ເໜືອນະໂຍບາຍຂອງຂະແໜງການສະເພາະ ແລະ ແຜນປະຕິບັດງານ. ຄວາມພະຍາຍາມຫຼວງຫຼາຍ ແມ່ນກຳລັງໄດ້ດຳເນີນການເພື່ອແກ້ໄຂບັນຫານີ້, ລວມທັງນະໂຍບາຍສາມສ້າງ ທີ່ແບ່ງຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນ, ເຊິ່ງໄດ້ກຳນົດຂັ້ນຕອນ ດ້ານນະໂຍບາຍ ໄວ້ສາມລະດັບ, ກຳນົດໃຫ້ແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍວາງແຜນ ແລະ ບ້ານເປັນຫົວໜ່ວຍ ຈັດຕັ້ງປະຕິບັດ (LADLF 2015).

ການບໍ່ເຊື່ອມໂຍງລະຫວ່າງການວາງແຜນ ແລະ ການຈັດຕັ້ງປະຕິບັດ ແມ່ນເປັນບັນຫາປົກກະຕິຂອງຫຼາຍໆນະໂຍບາຍກ່ຽວກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ສ້າງເປັນສິ່ງທ້າທາຍທີ່ຫຍຸ້ງຍາກທີ່ສຸດ ໃນການບັນລຸເປົ້າໝາຍການພັດທະນາແບບຍືນຍົງ: ຈະຈັດຕັ້ງປະຕິບັດນະໂຍບາຍທີ່ມີຢູ່ໃນລະດັບທ້ອງຖິ່ນຄືແນວໃດ.

ສິ່ງທ້າທາຍດ້ານໂຄງສ້າງອັນທີສອງທີ່ໄດ້ກຳນົດ ແມ່ນການເຮັດໜ້າທີ່ຂອງຫຼາກຫຼາຍຂະແໜງການທີ່ເຮັດວຽກສະເພາະໃນວຽກງານ ເປົ້າໝາຍການພັດທະນາແບບຍືນຍົງ.
ພາຍໃຕ້ ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີພຽງຢ່າງດຽວ, ມັນມີຄວາມ ຈຳເປັນສຳລັບວິທີການໃໝ່ ແລະ ຊັດເຈນຂອງການປະສານງານລະຫວ່າງຄູ່ຮ່ວມງານຕ່າງໆໃນຂະແໜງກະສິກຳ, ສາທາລະນະສຸກ (ລວມທັງສຸຂະພາບແມ່ ແລະ ເດັກ, ໂພຊະນາການ, ແລະ ນ້ຳ, ສຸຂະອະນາໄມ ແລະ ຄວາມສະອາດ, ການປົກປ້ອງສັງຄົມ, ການຄ້າ, ສິ່ງແວດລ້ອມ, ຊັບພະຍາກອນທຳມະຊາດ, ການຄົ້ນຄວ້າກະສິ ກຳ, ການປ່ຽນແປງຂອງດິນຟ້າອາກາດ ແລະ ຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ, ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ, ການສົ່ງເສີມ ກະສິກຳ, ການເງິນຊົນນະບົດ, ການຄອບຄອງທີ່ດິນ ແລະ ການບໍລິຫານປົກຄອງ.
ເມື່ອພິຈາລະນາເຖິງວາລະ ເປົ້າໝາຍການພັດທະນາແບບຍືນຍົງທັງໝົດໂດຍລວມ ແລະ ລາຍຊື່ຂອງຜູ້ມີສ່ວນຮ່ວມເຫັນວ່າຍາວຂຶ້ນກວ່າເກົ່າ.

ນອກເໜືອຈາກການປະຄອງໂຕຂອງຄະນະກຳມະການໂພຊະນາການແຫ່ງຊາດ ໃນນາມເປັນອົງກອນປະສານງານທີ່ດີເດັ່ນສຳລັບຄູ່ຮ່ວມງານ ທັງໝົດໃນດ້ານໂພຊະນາການ, ຂອບເຂດ ຂອງບັນຫາແມ່ນຈະຕ້ອງໄດ້ພິຈາລະນາໃນສະພາບເງື່ອນໄຂຂອງເປົ້າໝາຍການພັດທະນາແບບຍືນຍົງ ທີ່ຕິດພັນກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ຄວາມອຶດຫິວ (ລວມທັງແຕ່ບໍ່ຈຳກັດພຽງແຕ່ເປົ້າໝາຍ SDG2) ທີ່ໄດ້ດີກວ່າບົດບາດອຳນາດ ແລະຄວາມຊຳນານຂອງຄະນະກຳມາທິການໂພຊະນາການແຫ່ງຊາດ, ເຊິ່ງມີ, ໃນນາມຈຸດສຸມທາງລະບຽບການ, ປະສານງານ ແຜນງານດ້ານໂພຊະນາການ.

ອັນນີ້ບໍ່ໄດ້ມີ ເຈດຕະນາຈະວິພາກວິຈານຄະນະກຳມາທິການໂພຊະນາການແຫ່ງຊາດ, ແຕ່ວ່າມັນສະແດງໃຫ້ເຫັນເຖິງສິ່ງທ້າທາຍອັນໃໝ່ທີ່ຊັບຊ້ອນ ທີ່ເກີດມາຈາກການເຊື່ອມໂຍງເຊິ່ງກັນ ແລະ ກັນຂອງ ເປົ້າໝາຍການພັດທະນາແບບຍືນຍົງ.

ເຖິງແມ່ນວ່າກົນໄກການປະສານງານ (ລວມທັງຄູ່ຮ່ວມງານດ້ານການພັດທະນາທີ່ບໍ່ເປັນທາງການກ່ຽວ ກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະ ນາການ ແລະ ຄະນະປະຕິບັດງານຍ່ອຍ ກ່ຽວກັບກະສິກຳ ແລະ ການພັດທະນາຊົນນະບົດ, ແລະ ຄະນະປະຕິບັດງານໃນຂະແໜງອື່ນໆ) ແມ່ນເຂົ້າກັນກັບຈຸດປະສົງແລະ ການເຮັດວຽກເປັນຢ່າງດີ, ຄຳຖາມຍັງຄົງຖືກຕັ້ງຂຶ້ນກ່ຽວກັບວ່າຈະປະສານບັນດານະໂຍບາຍຂອງຫຼາຍຂະແໜງການໂດຍບໍ່ໄດ້ສ້າງອົງກອນປະສານງານອັນໃໝ່.
ການທົບທວນຄັ້ງນີ້ ຈະກັບມາເບິ່ງຄຳຖາມຂໍ້ນີ້ໃນພາກ 5.4.

ການປຶກສາຫາລືຂັ້ນແຂວງ ແລະ ສອງຝ່າຍ ທີ່ໄດ້ດຳເນີນໃນໄລຍະການທົບທວນຍຸດທະສາດຄັ້ງນີ້ ຢືນຢັນວ່າການຄ້ຳ ປະກັນທາງດ້ານ ສະບຽງ ອາຫານ ແລະ ໂພຊະນາການ ແມ່ນບັນຫາທີ່ເຊື່ອມຕໍ່, ແນວທາງທີ່ສຳຄັນທີ່ຈະຕ້ອງພິຈາລະນາການພັດທະນາຊົນນະບົດໃນຂອບເຂດທີ່ ກວ້າງຂວາງ.



# ການວິເຄາະກ່ຽວກັບການຕອບໂຕ້



ພາກນີ້ ໄດ້ກຳນົດສະຖາປັດທະຍາກຳຂອງສະຖາບັນທີ່ມີຢູ່ກ່ຽວກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ລວມທັງ ບັນດາສະຖາບັນທີ່ຮັບຜິດຊອບໂດຍກົງ ຫຼື ທາງອ້ອມ ທີ່ຮັບຜິດຊອບ ຄວາມຄືບໜ້າຂອງບາງເປົ້າໝາຍ SDG2 ຫຼື ທັງໝົດ. ມັນໄດ້ສະໜອງມຸມມອງໂດຍລວມຂອງບັນດາກະຊວງຫຼັກ ແລະ ສະຖາບັນ, ນະໂຍບາຍ ແລະ ຍຸດທະສາດ, ແລະ ກົນໄກການປະສານ.

ສ່ວນສຳຄັນຂອງບົດບາດຂອງຂະແໜງເອກະຊົນ,ອົງການຈັດຕັ້ງສັງຄົມ (CSOs) ແລະ ສື່ມວນຊົນ ແມ່ນໄດ້ຮັບການລວມເຂົ້ານຳເຊັ່ນກັນ. ມັນໄດ້ສັງລວມຂໍ້ມູນທີ່ມີຢູ່ ກ່ຽວກັບງົບປະມານ ແລະ ກະແສໝູນວຽນທາງການເງິນ ສຳລັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ.
ໂດຍຄຳນຶງເຖິງຂໍ້ມູນທີ່ມີຢູ່ໃນການວິເຄາະສະຖານນະການ (ພາກທີ2),ອັນນີ້ສະໜອງພື້ນຖານສຳລັບການວິເຄາະຊ່ອງວ່າງ, ໂອກາດ ແລະ ຄຳແນະນຳຕ່າງໆທີ່ມີຢູ່ໃນພາກທີ 4.

## 3.1 ກອບຫນ້າວຽກຂອງສະຖາບັນ

ກະຊວງກະສິກຳ ແລະປ່າໄມ້(ກຊກປ) ແມ່ນກະຊວງຢູ່ຂັ້ນສູນກາງທີ່ຮັບຜິດຊອບ ທຸກໆ ວຽກງານການຜະລິດສະບຽງອາຫານ.

ນັບແຕ່ປີ 1975, ບົດບາດອຳນາດ ແລະ ໂຄງສ້າງຂອງກະຊວງດັ່ງກ່າວນີ້ ແມ່ນໄດ້ຮັບການທົບທວນຫຼາຍຄັ້ງ ແລະ ໄດ້ມີການດັດແກ້. ຢູ່ຂັ້ນທ້ອງຖິ່ນ ມີ ພະແນກກະສິກຳ ແລະ ປ່າໄມ້ (ພກປສ) ຊຶ່ງມີຢູ່ທຸກໆແຂວງ ແລະ ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ຫກປມ). ໃນຂັ້ນສູນກາງ, ມັນລວມເອົາ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (ສຄກປ) ແລະ ວິທະຍາໄລກະສິກຳ ແລະ ປ່າໄມ້.
ໃນຂັ້ນທ້ອງຖິ່ນ, ມີຫຼາຍໆສູນຄົ້ນຄວ້າ ທີ່ກຳລັງເຮັດວຽກດ້ານການປະຕິບັດງານ ແລະ ຂີດຄວາມສາມາດໃນການເຮັດໜ້າທີ່ໆແຕກຕ່າງກັນ.

ພື້ນຖານດ້ານນິຕິກຳສຳລັບການປະຕິບັດງານຂອງກະຊວງກະສິກຳ ແລະ ປ່າໄມ້ ລວມທັງກົດໝາຍວ່າດ້ວຍກະສິກຳ, ກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າດ້ວຍການປະມົງ ແລະ ສັດນ້ຳ ແລະ ສັດປ່າ, ແລະ ກົດໝາຍວ່າດ້ວຍສັດລ້ຽງ ແລະ ການບໍລິການສັດຕະວະແພດ, ກົດລະບຽບໃນການປົກປ້ອງປ່າໄມ້, ການປະມົງ ແລະ ກົດໝາຍວ່າດ້ວຍຊົນລະປະທານ.
ເອກະສານສຳຄັນໃນການວາງແຜນຍຸດທະສາດຂອງກະຊວງກະສິກຳ ແລະ ປ່າໄມ້, ຍຸດທະສາດການພັດທະນາກະສິກຳ 2016-2020 ແລະ ວິໄສທັດຮອດປີ 2030 (ຍຸດທະສາດການພັດທະນາກະສິກຳ) (ກຊກປ2015a) ແມ່ນໄດ້ຮັບການສົນທະນາເພີ່ມເຕີມ

ຢູ່ຂ້າງລຸ່ມນີ້.
ໃນການສະໜັບສະໜູນ ຍຸດທະສາດການພັດທະນາກະສິກຳ (ADS), ສຄກປ ໄດ້ມີຍຸດທະສາດໃນການຄົ້ນຄວ້າສະເພາະທີ່ຈັດເປັນກຸ່ມປະມານຫົກຂົງເຂດຍຸດທະສາດ ແລະ ຫົວຂໍ້ໃນການສຶກສາຄົ້ນຄວ້າ, ໂດຍມີຈຸດປະສົງວ່າການສຶກສາຄົ້ນຄວ້າຈະສະໜັບສະໜູນ ແລະ ໃຫ້ຄຳແນະນຳການນຳໃຊ້ແຜນງານດັ່ງກ່າວຢູ່ພາກສະ ໜາມໃນອະນາຄົດ. ຫົວຂໍ້ເຫຼົ່ານີ້ ລວມທັງ: ຄວາມຫຼາກຫຼາຍຂອງ ຊີວະນາໆພັນກະສິກຳແບບຍືນຍົງ, ການປັບປຸງ ປະສິດທິພາບຂອງການຜະລິດກະສິກຳ, ການປັບໂຕຂອງການກະສິກຳເຂົ້າກັບສະພາບການປ່ຽນແປງທາງດ້ານດິນຟ້າອາກາດ, ນະໂຍບາຍ ຄົ້ນຄວ້າກະສິກຳ ແລະ ປ່າໄມ້, ການສ້າງຂີດຄວາມສາມາດ, ແລະ ຂໍ້ມູນ ແລະ ແຜນງານການສື່ສານ.

ການບໍລິການສົ່ງເສີມກະສິກຳ ທີ່ ໃນເມື່ອກ່ອນແມ່ນ ຂຶ້ນກັບກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ (ກສກປ) ແລະ ປະຈຸບັນແມ່ນ ກົມສົ່ງເສີມກະສິກຳແລະສະຫະກອນ (ກສກສ) ທີ່ໄດ້ພັດທະນາໂດຍນຳໃຊ້ປະສົບການທີ່ເປັນປະໂຫຍດ ແຕ່ບໍ່ໄດ້ ມີຄວາມສາມາດໃນການ ປະຕິບັດວຽກງານສົ່ງເສີມແບບ 'ການບຸກທະລຸ' ແລະ ຜັນຂະຫຍາຍແຜນງານດັ່ງກ່າວຢ່າງ ເຕັມສ່ວນ ຍ້ອນທຶນຮອນທີ່ຈຳກັດ, ໃນຂະນະທີ່, ມີຄວາມຮຽກຮ້ອງໃຫ້ມີການບໍລິການແກ່ຜູ້ຜະລິດສະບຽງອາຫານຂະໜາດນ້ອຍໃນຂອບເຂດທົ່ວປະເທດ.

ກະຊວງສຶກສາທິການ ແລະ ກິລາ (ສສກ) ມີບົດບາດເປັນໃຈກາງຂອງການພັດທະນາຊັບພະຍາກອນມະນຸດ, ເພື່ອໃຫ້ປະຊາຊົນລາວ ໄດ້ມີຄວາມຮູ້ ແລະ ທັກສະຕ່າງໆ, ແລະ ສົ່ງເສີມສຸຂະພາບທີ່ດີ. ໃນປີ 2014 ກະຊວງສຶກສາທິການ ແລະ ກິລາໄດ້ອອກຄຳສັ່ງສະບັບເລກທີ 1679/ສສກກ່ຽວກັບການນະໂຍບາຍອາຫານກາງວັນ, ການສົ່ງເສີມການບໍລິໂພກອາຫານທີ່ມີໂພຊະນາການ, ເພີ່ມການລົງທະບຽນເຂົ້າຮຽນ ແລະ ອັດຕາການເສັງຂຶ້ນຫ້ອງ, ແລະ ຫຼຸດຜ່ອນອັດຕາການອອກໂຮງຮຽນ ແລະ ຄ້າງຫ້ອງຂອງນັກຮຽນຈາກຊັ້ນກຽມປະຖົມຈົນເຖິງລະດັບມັດທະຍົມຕອນຕົ້ນ.

ມັນໄດ້ແນໃສ່ປະຊາຊົນທີ່ທຸກຍາກ, ເຂດຊົນນະບົດຫ່າງໄກສອກຫຼີກ, ເຂດທີ່ມີ ຊົນເຜົ່າອາໃສຢູ່ໜາແໜ້ນ, ເຂດທີ່ມີຄວາມເທົ່າທຽມກັນລະຫວ່າງ ຍິງ-ຊາຍ ຕ່ຳ, ເຂດທີ່ມີເດັກທີ່ມີຄວາມຕ້ອງການພິເສດ ແລະມີຄວາມສ່ຽງໃນການການຂາດໂພຊະນາການ, ມີອັດຕາການເຂົ້າຮຽນຕ່ຳ ແລະ ອັດຕາການອອກໂຮງຮຽນ ຄ້າງຫ້ອງໃນລະດັບສູງ, ແລະ ເຂດທີ່ມີມາດຕະຖານດ້ານເສດຖະກິດ-ສັງຄົມທີ່ຕ່ຳກວ່າ.

ກົມອະນຸບານ ແລະ ປະຖົມ ແມ່ນຮັບຜິດຊອບສຳລັບການຈັດຕັ້ງປະຕິບັດໂຄງການອາຫານໂຮງຮຽນ ແນໃສ່ການສະໜອງອາຫານທີ່ມີໂພ ຊະນາການ, ສົ່ງເສີມການພັດທະນາດ້ານສະຕິປັນຍາ ແລະ ຮ່າງກາຍ ແລະ ປັບປຸງສຸຂະພາບ ໂດຍລວມຂອງເດັກນັກຮຽນ. ພາຍໃຕ້ແຜນງານນີ້, ເດັກຈະໄດ້ຮັບການແນະນຳໃຫ້ລ້າງມືຢ່າງຖືກຕ້ອງກ່ອນ ແລະ ຫຼັງໃຊ້ຫ້ອງນ້ຳ.

ຜູ້ບໍລິຫານໂຮງຮຽນ ແມ່ນໄດ້ຮັບການສົ່ງເສີມໃຫ້ ສະໜອງນ້ຳທີ່ປອດໄພ ແລະ ຫ້ອງນ້ຳທີ່ສະອາດ, ແມ່ຄົວອາສາສະໝັກຈາກສະຫະພັນແມ່ຍິງ (LWU) ແມ່ນສອນກ່ຽວກັບຄຸນຄ່າທາງໂພຊະນາການຂອງອາຫານແຕ່ລະປະເພດແຕກຕ່າງກັນ ແລະ ຈະກະກຽມອາຫານທີ່ມີໂພຊະນາການ, ສະອາດ ແລະຫຼາກຫຼາຍຊະນິດແນວໃດ. ມີການປູກ ຜັກ ແລະ ໝາກໄມ້ ແລະສັດລ້ຽງຢູ່ບໍລິເວນໂຮງຮຽນ ແລະ ຊຸມຊົນ. ແມ່ຄົວຈະເຮັດວຽກເປັນອາສາສະໝັກບົນພື້ນຖານຂອງການຜັດປ່ຽນໝູນວຽນກັນ ແລະ ສ່ວນໃຫຍ່ແມ່ນແມ່ຍິງ ທີ່ມີອັດຕາສ່ວນແມ່ຄົວ 1 ຄົນ ຕໍ່ນັກຮຽນ 50 ຄົນ. ຜູ້ຊາຍຈະຊ່ວຍເຮັດສວນຄົວໂຮງຮຽນ.

ໂຄງການອາຫານໂຮງຮຽນ ໃນປະມານ 1,500 ໂຮງຮຽນທົ່ວປະເທດໄດ້ມີການສະໜອງອາຫານສົດຢ່າງສະໝ່ຳສະເໝີ. ກອບວຽກດ້ານການພັດທະນາຂະແໜງການຂອງກະຊວງສຶກສາທິການ ແລະ ກິລາ ໃນປະຈຸບັນ ລວມມີເປົ້າໝາຍຂອງການຂະຫຍາຍການເຂົ້າເຖິງການສຶກສາຢ່າງເທົ່າທຽມກັນ ເຊິ່ງໄດ້ມີການເນັ້ນໜັກການຂະຫຍາຍການສຶກສາສຳລັບ ເດັກກ່ອນໄວຮຽນ, ລວມທັງແຜນງານດ້ານໂພຊະນາການທີ່ອີງໃສ່ຊຸມຊົນເປັນຫຼັກສຳລັບເດັກນ້ອຍທີ່ມີອາຍຸຕ່ຳກວ່າຫ້າປີ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ແມ່ນໄດ້ຮັບການສ້າງຕັ້ງຂຶ້ນໃນປີ 2011 ໂດຍການໂຮມເອົາ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ (ອຊສ) ເຂົ້າກັບອົງການ ຄຸ້ມຄອງທີ່ດິນແຫ່ງຊາດ ແລະ ວຽກງານອື່ນໆຂອງກະຊວງກ່ຽວຂ້ອງ ລວມທັງ ກົມທໍລະນີສາດ ແລະ ແຮ່ທາດ, ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ແລະ ບາງພະແນກການ ພາຍໃນກະຊວງກະສິກຳ ແລະ ປ່າໄມ້ (ກຊກປ), ແລະ ຄະນະກຳມະການແມ່ນ້ຳຂອງແຫ່ງຊາດ.

ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ (ອຊສ) ໃນຮູບແບບເບື້ອງຕົ້ນ ປະກອບມີກົມຄຸ້ມຄອງຊັບພະຍາກອນນ້ຳ, ກົມສິ່ງແວດລ້ອມ, ກົມອຸຕຸນິຍົມ ແລະ ອຸທົກກະສາດ, ສະຖາບັນຄົ້ນຄວ້າຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ, ກອງເລຂາຂອງຄະນະກຳມະການພາກພື້ນລຸ່ມແມ່ນ້ຳຂອງ ແລະ ກອງ ປະເມີນຜົນກະທົບສິ່ງແວດລ້ອມ ແລະ ສັງຄົມ.

ອົງການຄຸ້ມຄອງທີ່ດິນແຫ່ງຊາດ ໃນຮູບແບບເບື້ອງຕົ້ນ ແມ່ນປະກອບມີຫ້ອງການ, ກົມທີ່ດິນ, ກົມນະໂຍບາຍທີ່ດິນ ແລະ ກວດກາການນຳໃຊ້ທີ່ດິນ, ສູນຄົ້ນຄວ້າຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ແລະ ກົມວາງແຜນນຳໃຊ້ ແລະ ພັດທະນາທີ່ດິນ.

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະກອບມີກົມສິ່ງແວດລ້ອມ, ເຊິ່ງເປັນທີ່ຕັ້ງຂອງ ຫ້ອງການປ່ຽນແປງດິນ ຟ້າອາກາດ ທີ່ເຮັດໜ້າທີ່ເປັນ ອົງການແຫ່ງຊາດທີ່ໄດ້ຮັບມອບໝາຍ ຫຼື ເປັນສູນກາງ ແຫ່ງຊາດສຳລັບ ອະນຸສັນຍາສະຫະປະຊາຊາດວ່າ
ດ້ວຍການປ່ຽນແປງສະພາບດິນຟ້າອາກາດ (UNFCCC).

ກົມຄຸ້ມຄອງຊັບພະຍາກອນປ່າໄມ້ ໄດ້ຮັບການສ້າງຕັ້ງຂຶ້ນພາຍໃຕ້ກະຊວງ ຊັບພະຍາກອນ ທຳມະຊາດ ແລະ ສິ່ງແວດລ້ອມ ໃນປີ 2012. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ມີຄວາມຮັບຜິດຊອບໂດຍລວມເພື່ອການພັດທະ

ນາ ແລະ ຈັດຕັ້ງປະຕິບັດ ບັນດານະໂຍບາຍຕ່າງໆ, ແຜນ ແລະ ຄຳແນະນຳທີ່ຕິດພັນກັບ ເປົ້າໝາຍການພັດທະນາແບບຍືນຍົງ; ທາງດ້ານເນື້ອໃນຂອງ ເປົ້າໝາຍການພັດທະນາແບບຍືນຍົງທີ 2: ທີ່ດິນ, ນ້ຳ, ປ່າໄມ້, ສິ່ງແວດລ້ອມ, ລະບົບນິເວດ, ການປ່ຽນແປງດິນຟ້າອາກາດ, ການຮັບປະກັນຄຸນນະພາບ, ແລະ ອື່ນໆ.

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຍັງເຮັດໜ້າທີ່ເປັນສູນກາງຂອງວຽກງານ ກອງທຶນສິ່ງແວດລ້ອມສາກົນ (GEF) ແລະ ກອງທຶນສູ້ໂລກຮ້ອນ (GCF), ແລະ ໄດ້ສ້າງບົດ ລາຍງານແຫ່ງຊາດ ແລະ ການສື່ສານຕ່າງໆ ເພື່ອລາຍງານຄວາມຄືບໜ້າຕໍ່ການປະຕິບັດພັນທະຕໍ່ສົນທິສັນຍາສະຫະປະຊາຊາດວ່າດ້ວຍການປ່ຽນແປງດິນຟ້າອາກາດ, ລວມທັງ ບົດລາຍງານ ການກຳນົດເປົ້າໝາຍສະໜັບສະໜູນໃນລະດັບປະເທດຢ່າງມຸ່ງໝັ້ນ (INDC) ທີ່ຫາກໍ່ສຳເລັດ ແລະ ໄດ້ຍື່ນໃນເດືອນພະຈິກ 2015.

ກະຊວງສາທາລະນະສຸກ (MoH) ໄດ້ມີປະຫວັດຄວາມເປັນມາທີ່ຍາວນານ ດ້ານຄວາມຮັບຜິດຊອບ ສຳລັບວຽກງານສຸຂະພາບ; ໂດຍສະເພາະແມ່ນກົມສົ່ງເສີມອະນາໄມ (ລວມທັງ ສູນໂພຊະນາການທີ່ຫາກໍ່ສ້າງຕັ້ງຂຶ້ນໃໝ່) ແລະ ສະຖາບັນແຫ່ງຊາດ ດ້ານສາທາລະນະສຸກ ທີ່ມີຄວາມຮັບຜິດຊອບດ້ານນະໂຍບາຍໂພຊະນາການແຫ່ງຊາດ, ລວມທັງການຈັດຕັ້ງປະຕິບັດໂພຊະ ນາການທີ່ຕິດພັນກັບ ແຜນງານ ແລະ ການເຝົ້າລະວັງດ້ານໂພຊະນາການ, ທີ່ສະໜອງຂໍ້ມູນທີ່ສຳຄັນທັງໝົດ.

ກະຊວງສາທາລະນະສຸກ ແມ່ນເຂົ້າຮ່ວມໃນແຜນງານ ສະເພາະຂອງຂະແໜງການ ທີ່ຕິດພັນກັບວຽກງານໂພຊະນາການລວມທັງການຂ້າແມ່ທ້ອງ, ການເສີມສານອາຫານ, ການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ (IYCF), ສຸຂະພາບແມ່ ແລະ ເດັກ.

ກະຊວງສາທາລະນະສຸກ ເປັນປະທານຂອງ ຄະນະປະຕິບັດງານຂະແໜງການ (sector working group) ກ່ຽວກັບສຸຂະພາບ, ໂດຍການເປັນປະທານຮ່ວມລະຫວ່າງ ສະຖານທູດຍີ່ປຸ່ນ ແລະ ອົງການອະນາໄມໂລກ. ກະຊວງສາທາລະນະສຸກ ເປັນທີ່ຕັ້ງຂອງກອງເລຂາຂອງຄະນະກຳມະການໂພຊະນາການແຫ່ງຊາດ, ແລະ ໃນສະພາບເງື່ອນໄຂນີ້ ໄດ້ມີບົດ ບາດສຳຄັນໃນການຈັດຕັ້ງກອງປະຊຸມໂພຊະນາການປະຈຳປີ, ເຊິ່ງກອງປະຊຸມຄັ້ງທຳອິດໄດ້ຈັດຂຶ້ນໃນປີ 2015.

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ (ກຮສສ) ແມ່ນສະຖາບັນຂອງລັດທີ່ສະໜອງການປົກປ້ອງທາງດ້ານສະຫວັດດີການສັງຄົມ, ຜົນປະໂຫຍດໃນການຈ້າງງານ ແລະ ການຕອບໂຕ້ກັບໄພພິບັດ. ກະຊວງແຮງງານ ແລະ ສະຫວັດດີການສັງຄົມມີຈຳນວນພະນັກງານ ຂ້ອນຂ້າງໜ້ອຍ ແລະ ມີການຊ່ວຍ ເຫຼືອດ້ານການເງິນ ຈາກລັດຖະບານ ແລະ ຄູ່ຮ່ວມງານທີ່ຈຳກັດ (ILO 2015).

ປະຈຸບັນ ການຂະຫຍາຍກິດຈະ ກຳ ແລະ ການປົກປ້ອງສັງຄົມແມ່ນມີຂໍ້ຈຳກັດ. ແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ 8 ແນໃສ່ເສີມສ້າງ ການປະຕິບັດໜ້າທີ່ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ຍົກລະດັບລະບຽບນິຕິກຳໃນການປົກປ້ອງທາງສັງຄົມ, ລວມທັງການປັບປຸງ ແລະ ຈັດຕັ້ງ ປະຕິບັດກົດໝາຍແຮງງານ, ກົດໝາຍປະກັນສັງຄົມ, ແລະ ດຳລັດກ່ຽວກັບຄ່າແຮງຂັ້ນຕ່ຳ. ພາຍໃນປີ 2020, ໄດ້ມີການສະເໜີໃຫ້ມີດຳລັດວ່າດ້ວຍສະຫວັດດີການສັງຄົມ, ດຳລັດວ່າດ້ວຍຄວາມພິການ ແລະ ດັດແກ້ດຳລັດ 343/ນຍ ແລະ ຮວມເຂົ້າກັນກັບດຳລັດ 272.

ສຳລັບຂະແໜງການຈ້າງງານທາງການ, ພາຍໃນປີ 2020 ວິໄສທັດຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມແມ່ນເພື່ອປັບປຸງຄຸນນະພາບ ແລະ ປະລິມານຂອງກຳລັງແຮງງານພາຍໃນປະເທດ, ເພື່ອໃຫ້ສາມາດຕອບສະໜອງ ໄດ້ຕາມຄວາມຕ້ອງການຂອງຕະຫຼາດ ແຮງງານໃນປະຈຸບັນ ແລະ ເພື່ອ ໃຫ້ສາມາດແຂ່ງຂັນໄດ້ກັບແຮງງານໃນເຂດພາກພື້ນ, ໂດຍສະເພາະແມ່ນບັນດາກຸ່ມປະເທດອາຊຽນ.

ກະຊວງມີຈຸດປະສົງແນໃສ່ການພັດທະນາຄຸນນະພາບຂອງການຈ້າງງານພາຍໃນ ຂະແໜງກະສິກຳ, ອຸດສາຫະກຳ ແລະ ການບໍລິການ ແລະ ລະບົບການສຶກສາວິຊາຊີບ ທີ່ມີຫຼາກຫຼາຍສາຂາ ແລະ ຊ່ຽວຊານສະເພາະດ້ານ.
ອີງໃສ່ຂໍ້ຈຳກັດ ຂອງຊັບພະຍາກອນມະນຸດ ແລະ ຊັບພະຍາກອນການເງິນໃນປະຈຸບັນ ແລະ ຕາມຄວາມຈິງທີ່ວ່າ 2020 ແມ່ນຍັງອີກ 4 ປີເທົ່ານັ້ນ, ມັນເປັນສິ່ງທີ່ທ້າທາຍ ໃຫຍ່ຫຼວງທີ່ຈະບັນລຸວິໄສທັດທີ່ສູງດັ່ງກ່າວນີ້ໄດ້.

ກະຊວງແຜນການ ແລະ ການລົງທຶນ (ຜທ) ຮັບຜິດຊອບການຄຸ້ມຄອງການລົງທຶນ ແລະ ການວາງແຜນຍຸດທະສາດ ໃນລະດັບມະຫາພາກ, ລວມທັງການກະກຽມແຜນຍຸດທະສາດດ້ານເສດຖະກິດ-ສັງຄົມ, ກົນໄກ ແລະ ນະໂຍບາຍຕ່າງໆ ທີ່ກ່ຽວຂ້ອງກັບການຄຸ້ມຄອງເສດຖະກິດ, ສະຖິຕິ, ການຮ່ວມມືດ້ານເສດຖະກິດກັບສາກົນ ແລະ ການຕັດສິນໃຈກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ.

ນອກເໜືອຈາກບົດບາດໃນການປະສານງານລະຫວ່າງຂະແໜງການ ແລະ ທ້ອງຖິ່ນ ແລະ ສູນກາງໃນການວາງແຜນ, ກະຊວງແຜນການ ແລະ ການລົງທຶນ ຍັງຮັບຜິດຊອບການລົງທຶນພາຍໃນ ແລະ ຕ່າງປະເທດ, ການຊ່ວຍເຫຼືອດ້ານການພັດທະນາ ຢ່າງເປັນທາງການ, ສະຖິຕິ, ການຕິດຕາມ/ກວດກາ ແຜນງານການລົງທຶນ ແລະ ໂຄງການລົງທຶນຕ່າງໆ.

ໜ້າທີ່ຫຼັກຂອງກະຊວງແຜນການ ແລະ ການລົງທຶນ ແມ່ນຮັບຜິດຊອບການສ້າງ ແຜນພັດທະນາເສດຖະກິດ-ສັງຄົມ ຫ້າປີ (ຜພສຄ). ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແມ່ນແຜນທີ່ສຳຄັນທີ່ສຸດສຳລັບການພັດທະນານະໂຍບາຍແຫ່ງຊາດ, ການຜັນຂະຫຍາຍມະຕິກອງປະຊຸມ ໃຫຍ່ຂອງ ພັກປະຊາຊົນປະຕິວັດລາວ. ແຜນ ຜພສຄ ຄັ້ງທີ 8 (2016-2020) ໄດ້ວາງຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງ ຊາດ, ແນໃສ່ ໃຫ້ປະເທດຄ່ອຍໆຫຼຸດພົ້ນອອກຈາກສະຖານະຂອງການເປັນປະເທດດ້ອຍພັດທະນາ ໃຫ້ໄດ້ພາຍໃນປີ 2020.
ເປົ້າໝາຍ ແລະ ຈຸດສຸມຂອງແຜນ ຜພສຄ ປະກອບມີການສ້າງແຜນພັດທະນາຂອງຂະແໜງການແລະ ອຳນາດການປົກຄອງ

ທ້ອງຖິ່ນ ເພື່ອຮັບປະກັນ ຄວາມເທົ່າທຽມກັນໃນການຈັດຕັ້ງປະຕິບັດໂດຍອີງໃສ່ທຶນຈາກທຸກແຫຼ່ງ, ລວມທັງທຶນຊ່ວຍເຫຼືອເພື່ອການພັດທະນາ, ທຶນກູ້ຢືມ, ການລົງທຶນພາຍໃນ ແລະ ເອກະຊົນຕ່າງປະເທດ.

ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ປະກອບມີ 7 ຍຸດທະສາດ ເຊິ່ງປະສານເຂົ້າກັນ ແລະ ສອດຄ່ອງກັບ ເປົ້າໝາຍ SDG2:

1. ການພັດທະນາຄຸນນະພາບ, ດຸນດ່ຽງ, ຕໍ່ເນື່ອງ, ແບບຍືນຍົງ ແລະ ເສດຖະກິດສີຂຽວ
2. ຄ່ອຍໆຫຼຸດພົ້ນອອກຈາກສະຖານະການເປັນປະເທດດ້ອຍພັດທະນາ (LDCs) ໃຫ້ໄດ້ພາຍໃນປີ 2020 ແລະ ດຳເນີນຕາມ ເປົ້າໝາຍການພັດທະນາແບບຍືນຍົງ (SDGs)
3. ການພັດທະນາຊັບພະຍາກອນມະນຸດ
4. ການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ, ຮັບປະກັນ, ປະສິດທິພາບ ແລະ ການປົກປ້ອງການພັດທະ ນາສີຂຽວ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດ
5. ເພີ່ມປະສິດທິຜົນຂອງລັດໃນການຄຸ້ມຄອງສັງຄົມດ້ວຍກົດໝາຍ

6. ການເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ ແລະ ການເຊື່ອມຕໍ່
7. ການຫັນເປັນອຸດສາຫະກຳ ແລະ ຄວາມທັນສະໄໝ ພາຍ ໃນແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII (2016-2020), ການຄ້ຳປະກັນທາງ

ດ້ານສະບຽງອາຫານ ແລະ ໂພຊະນາການແມ່ນໄດ້ຮັບການກຳນົດຢູ່ພາຍໃຕ້ເປົ້າໝາຍທີສອງທີ່ຈະຕ້ອງໄດ້ບັນລຸໃຫ້ໄດ້ພາຍໃນປີ 2020.

ມັນແນໃສ່ການສະໜອງສະບຽງອາຫານຢ່າງພຽງພໍໂດຍມີໂພຊະນາການຄົບຖ້ວນ, ເພີ່ມສະມັດຕະພາບໃນການຜະລິດກະສິກຳ, ແລະ ການຟື້ນຟູປ່າໄມ້ (ໂດຍມີເປົ້າໝາຍແນໃສ່ການມີພື້ນທີ່ປ່າໄມ້ປົກຄຸມໃຫ້ໄດ້ 70 %), ແລະ ການສະໜັບສະໜູນກະສິກຳໂດຍອີງໃສ່ຄວາມແທດເໝາະໃນການນຳໃຊ້ທີ່ດິນ ແລະ ສະພາບພູມີອາກາດ (ລະບົບນິເວດ-ກະສິກຳ / agro-ecology), ແລະ ສົ່ງເສີມບົດຮຽນດ້ານກະສິ ກຳທີ່ດີ.

ອີງຕາມຄຳແນະນຳຂອງກະຊວງແຜນການ ແລະ ການລົງທຶນກ່ຽວກັບ ການວາງແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ຂອງເມືອງ (ຜທ 2013), ຂັ້ນຕອນການພັດທະນາແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ປະກອບມີສອງ ຫຼັກການ ຄື: ລຸ່ມ-ເທິງ ແລະ ເທິງ-ລຸ່ມ.

ຫຼັກການແຕ່ ເທິງ-ລຸ່ມ ແມ່ນນຳໃຊ້ເພື່ອກຳນົດທິດທາງ ແລະ ຍຸດທະສາດ ໃນການພັດທະນາ, ຈຸດປະສົງ ແລະ ເປົ້າໝາຍສຳລັບແຜນປະຈຳປີ ແລະ ແຜນ5ປີ.

ທິດທາງແມ່ນລັດຖະບານເປັນຜູ້ກຳນົດ ຕາມທິດທາງນະໂຍບາຍ ແລະ ການຊີ້ນຳ/ສະໜັບສະໜູນດ້ານວິຊາການ.
ທິດທາງນະໂຍບາຍ ແມ່ນໄດ້ສົ່ງເຖິງຂັ້ນແຂວງ, ນະຄອນຫຼວງ ແລະ ເທດສະບານ, ຂະແໜງການຊີ້ນຳ ແລະ ບ້ານ, ແຕ່ຍັງສົ່ງ ເຖິງບັນດາກະຊວງ, ອຳນາດ ການປົກຄອງຕ່າງໆ, ພະແນກການຂັ້ນແຂວງ ແລະ ຫ້ອງການຂັ້ນເມືອງ.

ເມືອງ, ແຂວງ ແລະ ກະຊວງຕ່າງໆ ມີແຜນປະຈຳປີຂອງຕົນ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ໄລຍະ ຫ້າປີ. ບ້ານແມ່ນຕ້ອງ ໄດ້ເຂົ້າຮ່ວມໃນການວາງແຜນນຳໃຊ້ທີ່ດິນ ແລະ ແຜນພັດທະນາບ້ານ ໃນຂົງເຂດທີ່ມີໂຄງການສະໜັບສະໜູນ. ເຂດພາກພື້ນສະເພາະ ຫຼື ເຂດເສດຖະກິດພິເສດມີແຜນພັດທະນາຕ່າງຫາກ.

ຂັ້ນຕອນວາງແຜນແຕ່ລຸ່ມ-ເທິງ ໃນການສ້າງແຜນ ຜພສຄ ປະກອບດ້ວຍການຍື່ນແຜນພັດທະນາຂອງບ້ານຜ່ານກຸ່ມບ້ານ, ເມືອງ, ແຂວງ, ແລະ ໂຄງສ້າງຂອງກະຊວງທີ່ກ່ຽວຂ້ອງ, ແລະ ຈາກນັ້ນກໍ່ສົ່ງເຖິງສະພາແຫ່ງຊາດເພື່ອຮັບຮອງ.
ແຜນພັດທະນາເສດຖະກິດ-ສັງຄົມຂອງການບໍລິຫານຂັ້ນລຸ່ມແມ່ນສັງລວມເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (NSEDP).

ພາຍໃຕ້ຂັ້ນຕອນການວາງແຜນ ທີ່ໄດ້ກຳນົດໄວ້ຂ້າງເທິງນັ້ນ, ແຫຼ່ງທຶນສຳລັບຂະແໜງການ ແລະ ແຜນການທ້ອງຖິ່ນ ແມ່ນບໍ່ຈຳເປັນຕ້ອງ ເຊື່ອມໂຍງກັນ,ໜຶ່ງໃນເຫດຜົນຂອງແຜນຂະແໜງ ການ ແລະ ແຜນທ້ອງຖິ່ນ ແມ່ນຕ້ອງໄດ້ຮັບການອະນຸມັດກ່ອນ ທີ່ຈະຖືກລວມ ເຂົ້າໃນ ແຜນ ຜພສຄ. ການລວມແຜນດັ່ງກ່າວ ເຂົ້າໃນແຜນ ຜພສຄ ບໍ່ຈຳເປັນຕ້ອງໝາຍເຖິງວ່າມີທຶນຮອນສະໜອງໃຫ້ສະເໝີໄປ.

ກົນໄກຂອງລັດໃນການສະໜັບສະໜູນ ຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ປະກອບມີ ສາມສະ ຖາບັນດັ່ງນີ້:
ຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (ຄກມຊ) ໄດ້ຮັບການສ້າງຂຶ້ນໃນປີ 2003 ເພື່ອຊ່ວຍ ແລະ ສະໜັບ ສະໜູນພາກລັດ ໃນການຄົ້ນຄວ້ານະໂຍບາຍ ແລະ ຍຸດທະສາດຕ່າງໆ ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ເພື່ອເປັນ ຈຸດໃຈກາງໃນການປະສານງານກັບພາກສ່ວນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ໃນການຈັດຕັ້ງປະຕິບັດນະໂຍບາຍກ່ຽວກັບຄວາມ ສະເໝີພາບລະຫວ່າງຍິງ-ຊາຍ ແລະ ການກຳຈັດ ການເລືອກປະຕິບັດຕໍ່ແມ່ຍິງທຸກໆຮູບແບບ.

ກອງເລຂາຂອງ ຄກມຊ ມີສິດ ອຳນາດໃນການຊ່ວຍ ຄກມຊ ໃນການຄົ້ນຄວ້າຍຸດທະສາດ, ແຜນປະຕິບັດການ, ກົດໝາຍ ແລະ ໂຄງການຕ່າງໆ ກ່ຽວກັບຄວາມສະເໝີພາບລະຫວ່າງຍິງ-ຊາຍ, ເພື່ອຈັດຕັ້ງປະຕິບັດ ອະນຸສັນຍາ ວ່າດ້ວຍການກຳຈັດການເລືອກປະຕິບັດ ຕໍ່ແມ່ຍິງໃນທຸກຮູບແບບ (CEDAW), ເພື່ອສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ ແລະ ສ້າງຄວາມເຂັ້ມແຂງໃຫ້ແມ່ຍິງ ແລະ ດຳເນີນການຝຶກ ອົບຮົມໃຫ້ແກ່ໜ່ວຍງານຍ່ອຍຂອງກອງເລຂາ (Sub-CAWS).

ຄາມຊ ຍັງເນັ້ນໜັກໃສ່ການປັບປຸງການປະສານງານກັບອົງການ ຈັດຕັ້ງພາຍໃນ ແລະ ສາກົນ ລວມທັງການຕິດຕາມກວດກາ ແລະ ການລາຍງານ. ກອງເລຂາ ແມ່ນໄດ້ປະກອບສ່ວນຢ່າງຕັ້ງໜ້າໃນການສື່ສານກ່ຽວກັບຄວາມຄືບໜ້າທີ່ປະຕິບັດໄດ້ຕໍ່ກັບສິດທິທີ່ເທົ່າທຽມກັນລະຫວ່າງ ຍິງ-ຊາຍ ແລະ ໃນການປ້ອງກັນການໃຊ້ຄວາມ ຮຸນແຮງ ຕໍ່ແມ່ຍິງ ແລະ ເດັກນ້ອຍ.
ໃນກາງປີ 2016 ຄາມຊ ໄດ້ມີການຫັນປ່ຽນໂດຍການຮ່ວມມືກັບສະຫະພັນແມ່ຍິງລາວ.
ສະຫະພັນແມ່ຍິງລາວ ແມ່ນອົງການຈັດຕັ້ງ ມະຫາຊົນ ຂອງພັກທີ່ມີຫ້ອງການຕາງໜ້າເຄື່ອນໄຫວຢູ່ທຸກຂັ້ນ: ສູນກາງ, ກະຊວງ/ອົງການຈັດຕັ້ງ/ແຂວງ, ເມືອງ ແລະ ບ້ານ. ສະຫະ ພັນແມ່ຍິງໄດ້ຮັບການສະໜັບສະໜູນດ້ານວິຊາການ ແລະ ການເງິນ ເພື່ອຫັນເອົານະໂຍບາຍຕ່າງໆ ແລະ ປະຕິບັດຕາມຄໍາແນະນໍາຂອງພັກ, ລວມທັງການຈັດຕັ້ງປະຕິບັດບັນດານະໂຍບາຍຂອງລັດຖະບານ ແນໃສ່ຮັບປະກັນຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ ແລະ ປົກປ້ອງສິດ ຂອງແມ່ຍິງ ແລະ ເດັກນ້ອຍ.

ທັງ ສະຫະພັນແມ່ຍິງລາວ ແລະ ຄາມຊສົ່ງເສີມວຽກງານເຊິ່ງກັນແລະກັນ, ເຮັດໃຫ້ວຽກງານກ່ຽວກັບບົດບາດຍິງ-ຊາຍມີຄວາມຄືບຖ້ອນຂຶ້ນກວ່າເກົ່າ.

ຄະນະສະມາຊິກສະພາແຫ່ງຊາດເພດຍິງ (Women Caucus) ແມ່ນອົງການຈັດຕັ້ງຂອງລັດຖະສະພາແມ່ຍິງ ພາຍໃຕ້ການຊີ້ ນໍາໂດຍກົງຂອງຄະນະປະຈໍາສະພາແຫ່ງຊາດ.
ອົງການຈັດຕັ້ງນີ້ ຊ່ວຍສະພາແຫ່ງຊາດ ແລະ ຄະນະປະຈໍາ ໃນການເຊື່ອມສານບົດບາດຍິງ-ຊາຍ ເຂົ້າໃນການສ້າງກົດໝາຍ ແລະ ການດັດແກ້ກົດໝາຍ, ໃນການຊີ້ນໍາການຈັດຕັ້ງປະຕິບັດລັດຖະທໍາມະນູນ, ກົດໝາຍ ແລະນະໂຍບາຍ ຕ່າງໆທີ່ຕິດພັນກັບຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ, ຄວາມກ້າວໜ້າຂອງແມ່ຍິງ ແລະ ສຸຂະພາບຂອງແມ່ແລະເດັກ ເພື່ອສົ່ງເສີມການພັດທະນາ ແລະ ປົກປ້ອງຜົນປະໂຫຍດຂອງແມ່ຍິງ ແລະ ເດັກນ້ອຍ.

ຄະນະສະມາຊິກສະພາແຫ່ງຊາດເພດຍິງ ປະກອບມີສະມາຊິກສະພາທີ່ເປັນແມ່ຍິງທຸກທ່ານ ແລະ ມີກອງເລຂາເພື່ອຊ່ວຍໃນການ ດໍາເນີນງານ. ຄະນະສະມາຊິກສະພາແຫ່ງຊາດເພດຍິງ ມີຄະນະກໍາມະການ 4 ໃນ 6 ທ່ານ (ຄະນະກໍາມະການ 2 ທ່ານ ແມ່ນ ພັກການ ເມືອງ ທີ່ບໍ່ໄດ້ເປັນສະມາຊິກຂອງຄະນະກໍາມະການປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບແຫ່ງຊາດ ແລະ ຄະນະກໍາມະການຊົນເຜົ່າ).

ຄະນະສະມາຊິກສະພາແຫ່ງຊາດເພດຍິງ ໄດ້ສ້າງຕົວຢ່າງທີ່ດີໃນການເຜີຍແຜ່, ລະດົມ ແລະ ທົບທວນລະບຽບ ການຕ່າງໆໃນຂະແໜງການທີ່ຕິດພັນກັບແມ່ຍິງ ແລະ ເດັກນ້ອຍ.

ຂີດຄວາມສາມາດດ້ານສະຖາບັນຂອງກອງເລຂາຂອງ ຄາມຊ, ສະຫະພັນແມ່ຍິງ ແລະ ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຍັງຄົງ ຈໍາເປັນຕ້ອງໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ ແລະ ຕ້ອງໄດ້ປະກອບຊັບພະຍາກອນທີ່ຈໍາເປັນໃຫ້ພຽງພໍ.

3.1.1 ຍຸດທະສາດດ້ານໂພຊະນາການແຫ່ງຊາດ ແລະ ແຜນດໍາເນີນງານ 2016-2020 ພາຍຫຼັງທີ່ແຜນຍຸດທະສາດ ແລະ ແຜນປະຕິບັດການ ດ້ານໂພຊະນາການແຫ່ງຊາດ 2010-2015 ສະບັບທໍາອິດ ໄດ້ຖືກຮ່າງຂຶ້ນໃນປີ 2008, ຍຸດທະສາດດ້ານໂພຊະນາການແຫ່ງຊາດ ແລະ ແຜນປະຕິບັດການ 2016-2020 ແມ່ນເອກະສານນະໂຍບາຍດ້ານຍຸດທະສາດ ສໍາລັບຄວາມພະຍາຍາມຂອງທົ່ວທຸກຂະແໜງການໃນການປັບປຸງໂພຊະນາການຢູ່ ສປປ ລາວ.
ຄະນະກໍາມະການດ້ານໂພຊະນາການແຫ່ງຊາດ ເປັນຜູ້ຊີ້ນໍາທຸກດ້ານຂອງແຜນດັ່ງກ່າວເຊິ່ງຈະໄດ້ ອະທິບາຍ ໃນພາກຍ່ອຍກ່ຽວກັບກົນໄກການປະສານງານ. ແຜນດັ່ງກ່າວແມ່ນຖືກຮ່າງຂຶ້ນເພື່ອດໍາເນີນການພາຍໃຕ້ ແຜນ ຜພສຄ, ແລະ ໂດຍ ຄໍານຶງເຖິງຜົນສໍາເລັດໃນການບັນລຸເປົ້າໝາຍ ການພັດທະນາແບບຍືນຍົງທີ2.

ບົດນໍາຂອງເອກະສານສະບັບນີ້ ລະບຸເຖິງ ຍຸດທະສາດດ້ານໂພຊະນາການແຫ່ງຊາດ ແລະ ແຜນປະຕິບັດງານອັນທໍາອິດ ແລະ ສໍາຄັນທີ່ສຸດແມ່ນເພື່ອຊອກຫາວິທີການບັນລຸເປົ້າໝາຍ SDG 2 “ລົບລ້າງຄວາມອຶດຫິວ, ບັນລຸການຄໍ້າປະກັນສະບຽງອາຫານ ແລະ ປັບປຸງດ້ານໂພຊະນາການ ແລະ ສົ່ງເສີມການ ກະສິກໍາແບບຍືນຍົງ,” ແລະ ປະກອບສ່ວນໂດຍກົງໃສ່ເປົ້າໝາຍອື່ນໆຂອງ ເປົ້າໝາຍການພັດທະນາແບບຍືນຍົງ.
ເຫັນໄດ້ຊັດເຈນຍິ່ງຂຶ້ນວ່າ ເປົ້າໝາຍການພັດທະນາແບບຍືນຍົງ 2 - ລວມທັງເປົ້າໝາຍການພັດທະນາແບບຍືນຍົງອື່ນໆ - ຈະບໍ່ສາມາດບັນລຸໄດ້ ຖ້າຫາກບໍ່ມີການຕັດສິນໃຈແນ່ວແນ່ ແລະ ການປະຕິບັດການແບບ ເຊື່ອມສານ ລະຫວ່າງຄູ່ຮ່ວມງານ ທຸກພາກສ່ວນໃນ ສປປ ລາວ (ລັດຖະບານ ສປປ ລາວ 2015a).

ເປົ້າໝາຍຍຸດທະສາດແຫ່ງຊາດດ້ານໂພຊະນາການ ມີດັ່ງນີ້:

- ແກ້ໄຂສາຍເຫດເບື້ອງຕົ້ນໃນ ລະດັບບຸກຄົນ ແລະ ສຸມໃສ່ ບັນລຸການບໍລິໂພກສະບຽງອາ ຫານຢ່າງພຽງພໍ ແລະ ປອດໄພ, ເນັ້ນໜັກໃສ່ 1,000 ມື້ທໍາອິດຂອງຊີວິດ ແລະ ຫຼຸດຜ່ອນການແຜ່ຂະຫຍາຍຂອງພະຍາດ ທີ່ເປັນສາເຫດມາຈາກອາຫານທີ່ປົນເປື້ອນ ແລະ ການຕິດເຊື້ອພະຍາດໂດຍທາງອ້ອມເຊິ່ງເຮັດໃຫ້ຂີດຄວາມສາມາດ ຂອງຮ່າງກາຍ ຖືກບັ່ນທອນ ໃນການທີ່ຈະດູດຊຶມອາຫານທີ່ບໍລິໂພກ; ແລະ

- ແກ້ໄຂສາຍເຫດສໍາຄັນ (ສ່ວນໃຫຍ່ແມ່ນໃນລະດັບຄົວເຮືອນ ແລະ ຊຸມຊົນ), ເຊິ່ງຮຽກ ຮ້ອງໃຫ້ມີການປັບປຸງຄວາມປອດໄພ ແລະ ຄວາມຫຼາກຫຼາຍຂອງອາຫານທີ່ບໍລິໂພກເພື່ອໃຫ້ປະຊາ ຊົນສາມາດເຂົ້າເຖິງສະບຽງອາຫານໄດ້ຕະຫຼອດເວລາ ແລະ ທຸກໆບ່ອນ, ແລະ ຍິ່ງໄປກວ່ານັ້ນ ແມ່ນເນັ້ນໜັກໃສ່ການປັບປຸງສຸຂະພາບແມ່ ແລະ ເດັກ , ລະບົບນໍ້າທີ່ສະອາດ ແລະ/ຫຼື ການປະຕິບັດ ທີ່ຖືກສຸຂະລັກສະນະ, ແລະ ສຸຂະອະນາໄມ ແລະ ອະນາໄມສິ່ງແວດລ້ອມ ແລະ ການເຂົ້າເຖິງການບໍລິການດ້ານສຸຂະພາບ.

ຍຸດທະສາດແຫ່ງຊາດດ້ານໂພຊະນາການ ແມ່ນເນັ້ນໜັກໃສ່ຄວາມພະຍາຍາມຂອງຫຼາຍຂະແໜງການ ປົ່ນອ້ອມ 22 ບູລິມະສິດຂອງແຜນງານທົ່ວທັງຂະແໜງສາທາ, ກະສິກໍາ ແລະ ການສຶກສາ ທີ່ຈະໄດ້ຮັບການຈັດຕັ້ງປະຕິບັດໃນຂົງເຂດທີ່ມີ

ອັດຕາການຂາດໂພຊະນາການສູງ ແລະ ໃນເຂດທີ່ມີບັນຫາບໍ່ຮັບປະກັນທາງດ້ານສະບຽງອາຫານ.
ແຜນງານທັງ 22 ບູລິມະສິດນີ້ (ແລະ ແຜນງານບູ ລິມະສິດ ເພີ່ມເຕີມອີກ 7 ບູລິມະສິດທີ່ນອນຢູ່ ໃນແຜນງານບູລິມະສິດສຳຮອງ) ປະກອບເປັນພື້ນຖານຂອງແຜນປະຕິບັດການທົ່ວທຸກຂະແໜງການ, ປະຈຸບັນແມ່ນກຳລັງຈັດຕັ້ງປະຕິບັດຢູ່ຫຼວງນ້ຳທາ, ອຸດົມໄຊ, ສາລະວັນ ພ້ອມທັງມີແຜນ ທີ່ຈະຂະຫຍາຍໄປທົ່ວປະເທດ ໃນໄລ ຍະອີກຫ້າປີຕໍ່ໜ້າ.

ກຸ່ມປະຊາກອນທີ່ເນັ້ນຫນັກໃສ່ຢູ່ໃນແຜນຍຸດທະສາດແຫ່ງຊາດດ້ານໂພຊະນາການ ລວມມີ ເດັກນ້ອຍທີ່ມີອາຍຸຕ່ຳກວ່າສອງປີ, ເດັກທີ່ມີອາຍຸ ຕ່ຳກວ່າຫ້າປີ, ແມ່ຍິງຖືພາ, ແມ່ຍິງຫຼັງເກີດລູກ ແລະ ແມ່ຍິງທີ່ໃຫ້ນົມລູກ.
ອັນນີ້ກວມເອົາທັງ 1,000 ມື້ທຳອິດຂອງຊີວິດ, ແລະ ໄລຍະທີ່ສຳຄັນສຳລັບ ສຸຂະພາບທີ່ແຂງແຮງ ແລະ ການພັດທະນາທາງດ້ານມັນສະໝອງ. ຈຸດສຸມບູລິມະສິດ ແມ່ນແນໃສ່ທີ່ຕັ້ງພູມິສາດທີ່ຢູ່ເຂດເນີນສູງຫ່າງໄກສອກຫຼີກ ທີ່ມີອັດຕາການຂາດໂພຊະນາການສູງສຸດ, ປະຊາກອນເຂດຕົວ ເມືອງທີ່ມີລະດັບການສຶກສາຕ່ຳ, ບ້ານທີ່ຫາກໍ່ຍົກຍ້າຍ, ແລະປະຊາກອນທີ່ຖືກຜົນກະທົບຈາກໄພທຳມະຊາດ (ລັດຖະບານສປປ ລາວ 2015a).

ອີງຕາມແຜນປະຕິບັດງານ 2016-2020, ຄ່າໃຊ້ຈ່າຍຂອງຍຸດທະສາດໂພຊະນາການແຫ່ງຊາດ ແມ່ນ 411 ລ້ານໂດລາສະຫະລັດ ຕະຫຼອດໄລຍະເວລາ 4 ປີ.

ໃນປີ 2015 ທີ່ກອງປະຊຸມດ້ານໂພຊະນາການແຫ່ງຊາດ, ຊ່ອງວ່າງດ້ານທຶນຮອນແຕ່ນີ້ຮອດປີ 2020ໄດ້ຮັບການປະເມີນໂດຍຄາດຄະ ເນວ່າ ປະມານ 200 ລ້ານໂດລາສະຫະລັດ, ໂດຍ 90% ຂອງທຶນແມ່ນຈະມາຈາກການສະໜັບສະໜູນຂອງຄູ່ຮ່ວມພັດທະນາ. ຍຸດທະສາດໂພຊະນາການແຫ່ງຊາດ ແມ່ນໄດ້ ຮັບການສຶກສາຄົ້ນຄວ້າ ແລະ ປະເມີນຢ່າງລະອຽດ, ໂດຍສະເພາະແມ່ນການ ເກັບຂໍ້ມູນຜູ້ມີສ່ວນຮ່ວມໃນວຽກງານດ້ານໂພຊະນາການ (ກຊສທ2016) ແລະ ການສຶກສາຂອງ ກຊສທ/ຜທ ກ່ຽວກັບອຸປະສັກດ້ານສະຖາບັນ ຕໍ່ກັບການຄຸ້ມຄອງໂພຊະນາການ (Wilkinson ແລະ Chanlivong 2015).

3.1.2 ຍຸດທະສາດການພັດທະນາກະສິກຳ 2025 ແລະ ວິໄສທັດ 2030 ຍຸດທະສາດການພັດທະນາກະສິກຳ ຈົນຮອດ 2025 ແລະ ວິໄສທັດຈົນເຖິງປີ 2030 (ຍຸດທະສາດການພັດທະນາ ກະສິກຳ 2025) ແມ່ນຍຸດທະສາດສຳຄັນ ສຳລັບກະຊວງກະສິກຳ ແລະ ປ່າໄມ້.
ຍຸດທະສາດດັ່ງກ່າວໄດ້ຖືກຮັບຮອງ ແລະ ແຈ້ງການໃນ ດຳລັດເລກທີ #53/ລັດຖະບານລາວ ໃນ ວັນທີ 20 ກຸມພາ 2015.
ຍຸດທະສາດ ດັ່ງກ່າວແນໃສ່ 'ການຄ້ຳປະກັນ ສະບຽງອາຫານ, ການຜະລິດສິນຄ້າກະສິກຳ ທີ່ມີທ່າແຮງໄດ້ປຽບ ແລະ ມີຄວາມສາມາດໃນການແຂ່ງຂັນໄດ້, ການພັດທະນາກະສິກຳທີ່ສະອາດ, ປອດໄພ ແລະ ຍືນຍົງ ແລະ ການຄ່ອຍໆຫັນປ່ຽນໄປສູ່ຄວາມທັນສະໄໝ ຂອງການຜະລິດກະສິກຳແບບທົນທານ ແລະ ສະມັດຕະພາບທາງດ້ານເສດຖະກິດກະສິກຳ, ເຊື່ອມໂຍງ ກັບການພັດທະນາຊົນນະບົດປະກອບສ່ວນໃສ່ພື້ນຖານ
ເສດຖະກິດແຫ່ງຊາດ' (ກຊກປ 2015a).
ເຖິງແມ່ນວ່າເອກະສານດັ່ງກ່າວ ມີຈຸດສຸມທີ່ເຂັ້ມແຂງໃສ່ການຂະຫຍາຍລະບົບການກະສິກຳ ເພື່ອການຜະລິດເປັນສິນຄ້າ ແລະ ປັບປຸງ ການເຊື່ອມໂຍງກັບຕະຫຼາດສາກົນ ແລະ ພາກພື້ນ, ການຄ້ຳປະກັນທາງດ້ານສະບຽງອາຫານ ແລະໂພຊະນາການຍັງເປັນບັນຫາຫຼັກ ທີ່ໜ້າເປັນຫ່ວງ ໃນການຫັນປ່ຽນຍຸດທະສາດໂດຍລວມ. ຍຸດທະສາດດັ່ງກ່າວ ແມ່ນມີຄວາມຍືດຍຸ່ນ ແລະ ຕອບສະໜອງຕາມຫຼັກການ ພັດທະນາໃນຕໍ່ໜ້າ ແລະ ເທັກໂນໂລຊີຕ່າງໆ ທີ່ອາດຈະເປັນປະໂຫຍດເພື່ອບັນລຸເປົ້າໝາຍ SDG2.

ຍຸດທະສາດດັ່ງກ່າວ ຊ່ວຍໃຫ້ຊ່ອງທາງ ໃນການເຊື່ອມສານທີ່ດີຂຶ້ນ ກ່ຽວກັບຄຸນນະພາບຂອງອາຫານທີ່ຜະລິດ ພາຍໃຕ້ພື້ນທີ່ນິເວດກະສິກຳ (agro-ecological zones), ມາດຕະການປົກປ້ອງທາງສັງຄົມ ສຳລັບຜູ້ຜະລິດສະບຽງອາຫານທີ່ມີຄວາມສ່ຽງ (ລວມທັງການຫຼຸດຜ່ອນຄວາມສ່ຽງຈາກ ໄພພິບັດ), ຄວາມຄືບໜ້າ ຕໍ່ກັບການເສີມສ້າງຄວາມເຂັ້ມແຂງ ແລະ ເທົ່າທຽມກັນ ລະຫວ່າງຍິງ-ຊາຍ (ການກຳນົດເປົ້າໝາຍທີ່ສົມດູນ ລະຫວ່າງຍິງ-ຊາຍ ສຳລັບການເຂົ້າຮ່ວມຂອງແມ່ຍິງທີ່ເປັນຜູ້ຜະລິດກະສິກຳໃຫ້ໄດ້ 45 ສ່ວນຮ້ອຍໃນທຸກໆກິດຈະກຳ, ການຝຶກອົບຮົມວິຊາການ ແລະ ການນຳໃຊ້ເທັກໂນໂລຊີ, 50 ສ່ວນຮ້ອຍຕ້ອງສາມາດເຂົ້າເຖິງດິນກະສິກຳ ແລະ ສິນເຊື່ອຈາກ ກອງທຶນຫຼຸດຜ່ອນຄວາມ ທຸກຍາກ, ຫຼື ກອງທຶນພັດທະນາບ້ານ), ແລະ
ເພີ່ມຄວາມທົນທານຂອງກະສິກຳຕໍ່ກັບການປ່ຽນແປງດິນຟ້າອາກາດ ໃຫ້ແກ່ຜູ້ຜະລິດສະບຽງ ອາຫານຂະໜາດນ້ອຍ.

ຍຸດທະສາດດັ່ງກ່າວ ນຳສະເໜີໂອກາດເພື່ອການປ່ຽນແປງ ແລະ ດັດແກ້ ແລະ 'ຈະຕ້ອງໄດ້ຮັບການທົບທວນ, ນຳໃຊ້ ແລະ ດັດແກ້ເປັນປະຈຳ ເພື່ອໃຫ້ຂໍ້ມູນຖືກກັບສະພາບປະຈຸບັນ ແລະ ໃຫ້ສອດຄ່ອງ ກັບນະໂຍບາຍຂອງພັກ ແລະ ຄວາມຈຳເປັນໃນການພັດທະນາ ປະເທດຊາດ' (ກຊກປ 2015a).

ພາຍໃຕ້ ຍຸດທະສາດການພັດທະນາກະສິກຳ ຮອດປີ 2025, ມີຍຸດທະສາດທີ່ສົ່ງເສີມຂະແໜງການຍ່ອຍສະເພາະ, ຄຳແນະນຳ, ການສຶກສາ ແລະ ແຜນທີ່ໄດ້ຮັບການສ້າງຂຶ້ນ ໂດຍອົງການຈັດຕັ້ງສາກົນ, ລະບົບ ສ ປ ຊ, ສະຖາບັນການເງິນສາກົນ ແລະ ຜູ້ໃຫ້ທຶນ, ສະຖາບັນຄົ້ນຄວ້າສາກົນ ແລະ ທ້ອງຖິ່ນ, ອສບລ (NGOs) ສາກົນ, ສະມາຄົມບໍ່ຫວັງຜົນກຳໄລຢູ່ທ້ອງຖິ່ນ (NPAs), ແລະ ໂດຍກະຊວງກະສິກຳ ແລະ ປ່າໄມ້ເອງ ໂດຍຜ່ານໂຄງການທີ່ຖືກຄັດເລືອກ, ກົມກອງສະເພາະ ແລະ ສຄກປ.

3.1.3 ຖະແຫຼງການສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ ກ່ຽວກັບການປົກປ້ອງສັງຄົມ 2013 ເຖິງແມ່ນການປົກປ້ອງສັງຄົມ ຍັງຂາດກະຊວງໃດໜຶ່ງສະເພາະທີ່ຈະຖືກມອບໝາຍໃຫ້ຊີ້ນຳລວມ, ແລະ ໃນປະຈຸບັນ ບໍ່ມີຍຸດທະສາດລະດັບຂະແໜງການໃດເລີຍ ທີ່ໄດ້ຮັບການພັດທະນາຂຶ້ນຢ່າງຄົບຖ້ວນ, ຄວາມພະຍາຍາມໃນການຂະຫຍາຍມຸມມອງຂອງນະໂຍບາຍດ້ານນີ້ ແມ່ນ ພວມກຳລັງດຳເນີນຢູ່.

ລັດຖະບານ ສປປ ລາວ ກຳລັງພັດທະນາກອບນະໂຍບາຍທີ່ຕິດພັນກັບການປົກປ້ອງສັງຄົມ, ໂດຍສອດຄ່ອງ ກັບເປົ້າໝາຍລຶບລ້າງຄວາມທຸກຍາກແຫ່ງຊາດ ແລະ ຂໍ້ຜູກພັນສາກົນຕ່າງໆຂອງປະເທດ. ສປປ ລາວ ໄດ້ໃຫ້ສັດຕະຍາບັນ ແລະ ເປັນສ່ວນໜຶ່ງຂອງ ສົນທິສັນຍາສິດທິມະນຸດສາກົນ ແລະ ພັນທະສັນຍາຕ່າງໆ ທີ່ສ່ອງແສງເຖິງຂໍ້ຜູກພັນຂອງລັດຖະບານ ໃນການ ນັບຖືມາດຕະຖານດ້ານສັກສີ ແລະ ຄວາມເທົ່າທຽມກັນ ໃນການຈ້າງງານ ແລະ ການປົກປ້ອງສະຖານທີ່ເຮັດວຽກ, ລາຍຮັບ, ການບໍລິໂພກ ແລະ ການບໍລິການຂອງລັດຂັ້ນພື້ນຖານທີ່ສະໜອງໃຫ້ແກ່ປະຊາຊົນທຸກຄົນ.

ໃນເດືອນທັນວາ 2013, ໂດຍຮ່ວມກັນກັບບັນດາປະເທດສະມາຊິກອາຊຽນ (ASEAN), ລັດຖະບານ ສປປ ລາວ ໄດ້ເຊັນຖະແຫຼງການ ອາຊຽນ ວ່າດ້ວຍການເສີມສ້າງການປົກປ້ອງ ສັງຄົມໃຫ້ເຂັ້ມແຂງ. ຖະແຫຼງການດັ່ງກ່າວ ໄດ້ເນັ້ນໜັກໃສ່ຄວາມສະເໝີພາບໃນການເຂົ້າເຖິງການ ບໍລິການທີ່ຈຳເປັນ ແລະ ການຂະຫຍາຍການບໍລິການໃຫ້ປົກຄຸມ, ການມີການບໍລິການ, ຄຸນນະພາບ, ຄວາມເທົ່າທຽມກັນ ແລະ ຄວາມຍືນຍົງຂອງການປົກປ້ອງສັງຄົມ ໃຫ້ແກ່ປະຊາກອນທຸກຄົນຂອງບັນດາປະເທດສາມາຊິກອາຊຽນ.

ການຈັດຕັ້ງປະຕິບັດ ການປົກ ປ້ອງສັງຄົມ ຄວນອີງໃສ່ການນັບຖືພື້ນຖານສຳຄັນດ້ານອິດສະຫຼະພາບ, ການສົ່ງເສີມ ແລະ ປົກປ້ອງສິດທິມະນຸດ, ຄວາມຍຸດຕິທຳໃນສັງຄົມ, ຄວາມສາມັກຄີໃນສັງຄົມ, ການບໍ່ເລືອກປະຕິບັດ, ການເຂົ້າເຖິງ, ທີ່ພັກພາອາໄສທີ່ແທດເໝາະ, ຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ,ການມີສ່ວນຮ່ວມຂອງສັງຄົມ, ຄວາມເປັນອັນໜຶ່ງອັນດຽວກັນ ແລະ ຄວາມຮັບຜິດຊອບ ໂດຍສອດຄ່ອງກັບລະບຽບການຂອງຊາດ.

ຖະແຫຼງການດັ່ງກ່າວ ຮັບຮູ້ເຖິງຄວາມສຳຄັນຂອງ ຄຳແນະນຳຂອງອົງການ ແຮງງານສາກົນ ກ່ຽວກັບ 'ຖານຄຸ້ມຄອງທາງສັງຄົມ, ເຊິ່ງແມ່ນເນື້ອໃນພື້ນຖານຂອງການຮັບປະກັນທາງສັງຄົມແຫ່ງຊາດເພື່ອປົກປ້ອງປະຊາຊົນລວມທັງການ ຫຼຸດຜ່ອນຄວາມທຸກຍາກ, ຄວາມອ່ອນແອ ແລະ ການຖືກກີດກັນໃນສັງຄົມ. ຖານຄຸ້ມຄອງທາງສັງຄົມ ປະກອບມີເນື້ອໃນພື້ນຖານຂອງການຮັບປະກັນທາງສັງຄົມ, ຮັບປະກັນການເຂົ້າເຖິງການຮັກສາສຸຂະພາບທີ່ຈຳເປັນ ແລະ ການຮັບປະກັນທາງດ້ານລາຍຮັບສຳລັບເດັກ, ຄົນສູງອາຍຸ, ຄົນພິການ ແລະ ປະຊາກອນທີ່ບໍ່ມີວຽກເຮັດງານທຳ.



ໃນເດືອນກຸມພາ 2016 ກະຊວງແຮງງານ ແລະ ສະຫວັດດີການສັງຄົມໄດ້ຍື່ນຮ່າງນະໂຍບາຍ ການປົກປ້ອງສັງຄົມ, ໂດຍການຊ່ວຍເຫຼືອຂອງ ອົງການແຮງງານສາກົນເພື່ອການປັບປຸງໃຫ້ແທດເໝາະເພີ່ມເຕີມ.

3.1.4 ຍຸດທະສາດແຫ່ງຊາດ ເພື່ອຄວາມສະເໝີພາບ ຕໍ່ກັບບົດບາດ ຍິງ-ຊາຍ

ຍຸດທະສາດແຫ່ງຊາດ ເພື່ອຄວາມສະເໝີພາບລະຫວ່າງຍິງຊາຍ 2016-2025 ແມ່ນສ້າງມາຈາກແຜນຍຸດທະສາດ ແຫ່ງຊາດຄັ້ງທີສອງ ສຳລັບ ຄວາມຄືບໜ້າຂອງແມ່ຍິງ ແລະ ໄດ້ຮັບການຮັບຮອງ ຈາກນາຍົກລັດຖະມົນຕີ ໃນເດືອນມີນາ 2016.

ເຊິ່ງນຳສະເໜີຜົນງານ ແລະ ຂໍ້ບົກພ່ອງໃນການຈັດຕັ້ງປະຕິບັດຍຸດທະສາດແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ ສະບັບທີສອງ, ວິໄສທັດຮອດປີ 2030, ແຜນຍຸດທະສາດ ແຫ່ງຊາດເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ 2016-2025 ແລະ ແຜນປະຕິບັດງານຫ້າປີ ດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ.

ວິໄສທັດດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ ແຕ່ນີ້ຮອດປີ 2030 ແມ່ນເພື່ອ 'ຮັບປະກັນວ່າສິດ ແລະ ຄວາມເທົ່າທຽມກັນລະຫວ່າງຍິງຊາຍ ລວມທັງການກຳຈັດທຸກຮູບແບບຂອງການເລືອກປະຕິບັດຕໍ່ແມ່ຍິງ ໃນທຸກໆຂະແໜງການ, ຮັບປະກັນການເຂົ້າຮ່ວມຢ່າງເຕັມສ່ວນຂອງແມ່ຍິງ ເຂົ້າໃນວຽກງານການເມືອງ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ທັງດ້ານຄອບຄົວ' (NSGE 2016-2025). ອັນນີ້ ຍັງລວມເອົາການກຳຈັດການເລືອກປະຕິບັດທຸກໆຮູບແບບ ຕໍ່ກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ທີ່ຕ້ານກັບແມ່ຍິງ ແລະ ເດັກນ້ອຍ ໂດຍສະເພາະແມ່ນໃນໄລຍະຖືພາ ແລະ ຫຼັງເກີດລູກ ລວມທັງການສະໜອງ ໂອກາດໃຫ້ແກ່ແມ່ຍິງ ແລະ ເດັກຍິງ ເພື່ອໃຫ້ສາມາດເຂົ້າເຖິງສະບຽງອາຫານທີ່ມີຄຸນນະພາບຄືກັນກັບເພດຊາຍ ແລະ ເດັກຊາຍ.

ຍຸດທະສາດແຫ່ຊາດ ດ້ານຄວາມສະເໝີພາບລະຫວ່າງຍິງຊາຍ 2016-2025 ແນໃສ່ຮັບປະກັນວ່າ ທຸກໆຂະແໜງການໃນສັງຄົມສົ່ງເສີມຄວາມກ້າວໜ້າຂອງແມ່ຍິງ, ຄວາມເທົ່າທຽມກັນລະ ຫວ່າງຍິງ-ຊາຍ ແລະ ຕ້ານຄວາມຮຸນແຮງຕໍ່ແມ່ຍິງ.

ຍຸດທະສາດດັ່ງກ່າວ ລວມທັງເປົ້າໝາຍສະເພາະດ້ານບົດບາດຍິງ-ຊາຍ ສຳລັບຫຼາຍຂະແໜງການ ແລະ ໄດ້ກຳນົດວ່າ ຈະທັນເອົາຂໍ້ຜູກພັນທາງ ການເມືອງຈົນເຖິງສົນທິສັນຍາວ່າດ້ວຍການກຳຈັດ ການເລືອກປະຕິບັດຕໍ່ແມ່ຍິງທຸກຮູບແບບມາສູ່ການປະຕິບັດຕົວຈິງໄດ້ແນວໃດ, ລວມທັງການເຊື່ອມສານຫຼັກການຄວາມສະເໝີພາບລະຫວ່າງຍິງ-ຊາຍເຂົ້າໃນກົດໝາຍ ແລະນະໂຍບາຍແຫ່ງຊາດ.

ແຜນຍຸດທະສາດແຫ່ງຊາດເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ ປະກອບມີສີ່ຂົງເຂດຍຸດທະສາດ, ໃນນັ້ນ 2 ຂົງເຂດຍຸດທະສາດ ແມ່ນຕິດພັນກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ: (i) ຮັບປະກັນຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ

ເພື່ອໃຫ້ສາມາດເຂົ້າຮ່ວມ ໃນທຸກຂະແໜງການ, ແລະ (ii) ຮັບປະກັນການຈັດຕັ້ງປະຕິບັດພັນທະຕ່າງໆ ພາຍໃຕ້ ອະນຸສັນຍາ ວ່າດ້ວຍການກຳຈັດການເລືອກປະຕິບັດຕໍ່ແມ່ຍິງໃນທຸກຮູບແບບ, ຖະແຫຼງການປັກກິ່ງ ແລະ ແຜນປະ ຕິບັດງານ ແລະ ເປົ້າໝາຍການພັດທະນາແບບຍືນຍົງ.

ຍຸດທະສາດດັ່ງກ່າວໄດ້ວາງເປົ້າໝາຍຮອດປີ2025ເພື່ອຫຼຸດຜ່ອນອັດຕາເດັກເຕ້ຍ ແລະ ນ້ຳໜັກຕ່ຳກວ່າມາດຕະຖານ ຂອງເດັກຍິງ ທີ່ອາຍຸຕ່ຳກວ່າ 5 ປີ ໃຫ້ໄດ້ 13% ແລະ 25% ຕາມລຳດັບ.
ໂດຍຄຳນຶງເຖິງອັດຕາ ເດັກມີນ້ຳໜັກຕ່ຳກວ່າເກນມາດຕະຖານ ໃນປະຈຸບັນ (27%) ແລະ ເດັກຈ່ອຍຜອມ (35.6%) ສຳລັບເດັກອາຍຸຕ່ຳກວ່າ5ປີລັດຖະບານ ຈຳເປັນຕ້ອງໄດ້ຈັດສັນຊັບພະຍາກອນຫຼວງຫຼາຍ ແລະ ການປະສານງານທີ່ມີປະສິດທິຜົນຍິ່ງຂຶ້ນ ລະຫວ່າງພາກສ່ວນກ່ຽວຂ້ອງຕ່າງໆ ເພື່ອໃຫ້ ສາມາດບັນລຸໄດ້ຕາມເປົ້າໝາຍທີ່ວາງໄວ້.

3.1.5 ຍຸດທະສາດດ້ານການປ່ຽນແປງສະພາບດິນຟ້າອາກາດຢູ່ ສປປ ລາວ 2010 ແລະ ແຜນດຳເນີນງານແຫ່ງຊາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ 2009 ຍຸດທະສາດດ້ານການປ່ຽນແປງສະພາບດິນຟ້າອາກາດ ຢູ່ ສປປ ລາວ ໄດ້ເລີ່ມໃນປີ 2010 ໂດຍ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ໃນເມື່ອກ່ອນ. ຍຸດທະສາດດັ່ງກ່າວ ໄດ້ຮັບການ ສ້າງຂຶ້ນດັ່ງເປັນສ່ວນໜຶ່ງຂອງຄວາມພະຍາຍາມຂອງລັດ ທີ່ຈະເຂົ້າຮ່ວມ ກັບປະຊາຄົມໂລກ ໃນການຕ້ານການປ່ຽນແປງຂອງດິນຟ້າອາກາດທີ່ເປັນບັນຫາລວມ.

ໃນເວລາປະກາດນຳໃຊ້ເອກະສານສະບັບ ດັ່ງກ່າວ ຫົວໜ້າ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ໄດ້ຊີ້ໃຫ້ເຫັນວ່າ (ໜັງສືພິມ ວຽງຈັນທາມ 2010) ຍຸດທະສາດດັ່ງກ່າວແມ່ນມີຄວາມຈຳເປັນ, ດ້ວຍຂອບ ເຂດຂອງສິ່ງທ້າທາຍດ້ານສິ່ງແວດລ້ອມ - ສັງຄົມ ທີ່ປະເທດ ກຳລັງປະເຊີນຢູ່.
ຍຸດທະສາດແຫ່ງຊາດສະບັບດັ່ງກ່າວແມ່ນອີງໃສ່ຫຼັກການໂດຍລວມຂອງຄວາມຮັບຜິດຊອບຮ່ວມກັນ ແລະ ຂໍ້ຜູກພັນທີ່ແຍກຕ່າງຫາກ ທີ່ໄດ້ຮັບການເນັ້ນຢ້ຳໂດຍ ກອບອະນຸສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງສະພາບພູມີອາກາດ (UNFCCC), ແລະ ຄຳນຶງເຖິງ ຄວາມຮີບດ່ວນຂອງສະຖານະການ.

ສ່ວນໜຶ່ງຂອງວຽກງານນີ້, ລັດຖະບານໄດ້ຕົກລົງເຫັນດີທີ່ຈະປະຕິບັດຕາມ ແລະ ເຂົ້າຮ່ວມໃນ ການປະຊຸມລັດພາຄີ ອະນຸສັນຍາສະຫະປະຊາຊາດ ຢ່າງຕັ້ງໜ້າ.
ຍຸດທະສາດກ່ຽວກັບການປ່ຽນແປງສະພາບດິນຟ້າອາກາດຢູ່ ສປປ ລາວ ໄດ້ກຳນົດການປັບໂຕ ແລະ ທາງເລືອກໃນການຫຼຸດຜ່ອນຄວາມສ່ຽງ ໃນ 7 ຂົງເຂດບູລິມະສິດ: ກະສິກຳ ແລະ ການຄ້ຳປະກັນທາງດ້ານສະບຽງອາຫານ, ປ່າໄມ້ ແລະ ການປ່ຽນແປງຮູບແບບການນຳ ໃຊ້ທີ່ດິນ, ຊັບພະຍາກອນນ້ຳ, ພະລັງງານ ແລະ ການຄົມມະນາຄົມ, ອຸດສາຫະກຳ, ການພັດທະນາຕົວເມືອງ, ແລະ ສາທາລະນະສຸກ. ຍຸດທະສາດດັ່ງກ່າວ ອີງໃສ່ຂັ້ນຕອນການສື່ສານແຫ່ງຊາດ ເພື່ອພົວພັນກັບ UNFCCC (INC ແລະ FNC), ການພົວພັນກັບ ແຜນດຳເນີນງານແຫ່ງຊາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ແລະ ຄວາມຈຳເປັນອັນຮີບດ່ວນ ສຳລັບລະບົບແຈ້ງເຕືອນລ່ວງໜ້າທີ່ສາມາດເຊື່ອຖືໄດ້.
ຄະນະກຳມະການຊີ້ນຳຂັ້ນສູງແຫ່ງຊາດ ກ່ຽວກັບການປ່ຽນແປງທາງດ້ານດິນຟ້າອາກາດ (NSCCC) ທີ່ເປັນໜ່ວຍງານຮ່ວມຫຼາຍຂະແໜງ ການ ໂດຍການເປັນປະທານຂອງ ຮອງນາຍົກລັດຖະມົນຕີ ໄດ້ໃຫ້ຂໍ້ມູນເຊີງເລິກ ແລະ ຄຳແນະນຳສຳລັບນະໂຍບາຍການ ປ່ຽນແປງດິນຟ້າອາກາດ ແລະ ແຜນງານຕ່າງໆ, ແລະ ຄະນະວິຊາການ 8 ຄະນະ ໄດ້ຮັບການສ້າງຂຶ້ນໃນປີ 2008 ເພື່ອປະເມີນຜົນກະທົບ ແລະ ກຳນົດ ບູລິມະສິດໃນການຈັດຕັ້ງປະຕິບັດ ເພື່ອການປັບໂຕ ແລະ ມາດຕະການຫຼຸດຜ່ອນຄວາມສ່ຽງ.

ແຜນດຳເນີນງານແຫ່ງຊາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ແມ່ນໄດ້ຮັບການປະກາດໃຫ້ໃນເດືອນພຶດສະພາ 2009, ປະກອບມີ 45 ບູລິມະສິດຂອງໂຄງການທີ່ມີມູນຄ່າ 85 ລ້ານໂດລາສະຫະລັດ ພາຍໃຕ້ສີ່ຂະແໜງການ ບູລິມະສິດ: ກະສິກຳ, ປ່າໄມ້, ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ສາທາລະນະສຸກ.
ການປະເມີນຂີດຄວາມສາມາດດ້ວຍຕົນເອງລະດັບປະເທດໄດ້ກຳນົດຄວາມຕ້ອງການ ແລະ ປະເມີນຂີດຄວາມສາມາດຂອງປະເທດ ໃນການຈັດຕັ້ງປະຕິບັດສົນທິສັນຍາ Rio, ເຊິ່ງລັດຖະບານໄດ້ໃຫ້ສັດຕະຍາບັນ (ເຊັ່ນ: ອະນຸສັນຍາສະຫະປະຊາຊາດ ວ່າດ້ວຍຄວາມຫຼາກຫຼາຍທາງຊີວະນາໆພັນ, ກອບອະນຸສັນຍາຂອງສະຫະປະຊາຊາດວ່າດ້ວຍການປ່ຽນແປງຂອງດິນຟ້າອາກາດ, ອະນຸສັນຍາສະຫະປະຊາຊາດ ວ່າດ້ວຍການຕ້ານການກາຍເປັນທະເລຊາຍ).

ຄ້າຍຄືກັນກັບ ຍຸດທະສາດການພັດທະນາກະສິກຳ (ADS) ຈົນຮອດ 2025 (ເບິ່ງພາກ 3.1.2) SSC ຂອງ ສປປ ລາວ ແມ່ນມີຈຸດທີ່ຈະເຂົ້າຮ່ວມຢູ່ຫຼາຍຈຸດ ເຊິ່ງອາດ ຈະເປັນພື້ນຖານທີ່ຍືດຍຸ່ນ ແລະ ເຂັ້ມແຂງ ສຳລັບການປະຕິບັດງານເພື່ອຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ ເຂົ້າ ໃນສະພາບຂອງວິໄສທັດໃໝ່ຫຼືວິໄສທັດທີ່ມີຊີວິດຊີວາສຳລັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ.
ລັດຖະບານໄດ້ຖະແຫຼງເຖິງຄວາມຄາດຫວັງໃນການເອກະພາບຕັ້ງແຕ່ເລີ່ມຕົ້ນສຳລັບຂໍ້ຜູກພັນດ້ານການເງິນທີ່ສຳຄັນເຊິ່ງໄດ້ໃຫ້ຄຳໝັ້ນສັນຍາໃນໄລຍະການຈັດຕັ້ງປະຕິບັດ ການປະຊຸມລັດພາຄີອະນຸສັນຍາສະຫະປະຊາຊາດ (ເຊັ່ນ: ໂດຍຜ່ານກອງທຶນສູ້ໂລກຮ້ອນ ທີ່ ກຳລັງຈະປະຕິບັດ, ໂດຍສະເພາະການສະໜັບສະໜູນຄວາມຈຳເປັນອັນຮີບດ່ວນໃນການພັດທະນາຂີດຄວາມສາມາດ ເຊັ່ນ:
ການໂອນຖ່າຍເທັກໂນໂລຊີທີ່ແທດເໝາະ, ການຄ້ຳປະກັນທາງດ້ານ ສະບຽງອາຫານ, ປ່າໄມ້, ພະລັງງານທີ່ພຽງພໍ, ແລະ ການຄຸ້ມຄອງຄວາມສ່ຽງຈາກໄພພິບັດ.

3.1.6 ຍຸດທະສາດອື່ນໆທີ່ກ່ຽວຂ້ອງຂອງລັດຖະບານແຜຍຸດທະສາດອາຊຽນ ເພື່ອການປະຕິບັດງານ ສຳລັບ ວຽກງານຄ້ຳປະກັນສະບຽງອາຫານ:
ເນື່ອງຈາກເປັນປະເທດທີ່ບໍ່ມີທາງອອກສູ່ທະເລ ອ້ອມຮອບດ້ວຍປະເທດເພື່ອນບ້ານທີ່ມີປະຊາກອນໜາແໜ້ນກວ່າ, ສປປ ລາວ ໄດ້ມີການເຂົ້າຮ່ວມໃນຄວາມພະຍາຍາມເພື່ອເຊື່ອມໂຍງເຂົ້າກັບເຂດພາກພື້ນຢ່າງຕັ້ງໜ້າ. ນັບແຕ່ເຂົ້າຮ່ວມເປັນສະມາຊິກຂອງ

ອາຊຽນໃນປີ 1997, ສປປ ລາວ ໄດ້ໃຫ້ ຄຳໝັ້ນສັນຍາວ່າຈະສະໜັບສະໜູນຫຼັກການຂອງພາກພື້ນ ຕໍ່ກັບຄວາມເປັນຫ່ວງທີ່ເປັນບັນຫາລວມ.
ໃນປີ 2009, ໃນກອງປະຊຸມສຸດຍອດອາຊຽນຢູ່ຊຽງໃໝ່, ປະເທດໄທ, ຜູ້ ນຳຂອງບັນດາປະເທດອາຊຽນໄດ້ກຳນົດບັນຫາການຄ້ຳປະກັນ ທາງດ້ານສະບຽງອາຫານ ເປັນບູລິມະສິດຍຸດທະສາດ.
ອັນນີ້ໄດ້ຕິດຕາມດ້ວຍແຜນປະຕິບັດງານຍຸດທະສາດອາຊຽນສຳລັບການ ຄ້ຳປະກັນທາງດ້ານສະບຽງອາຫານ ເຊິ່ງໄດ້ມີເປົ້າໝາຍດັ່ງນີ້: ເພື່ອເພີ່ມສະມັດຕະພາບໃນການຜະລິດສະບຽງອາຫານ, ການຫຼຸດຜ່ອນການ ສູນເສຍພາຍຫຼັງເກັບກ່ຽວ, ການສົ່ງເສີມໂຄງຮ່າງຂອງການຕະຫຼາດ ແລະ ການຄ້າສຳລັບສິນຄ້າກະສິກຳ ແລະ ປັດໃຈ ການຜະ ລິດ, ຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ສົ່ງເສີມການມີ ແລະ ການເຂົ້າເຖິງປັດໃຈການຜະລິດ, ແລະການດຳເນີນງານ ໃນເຂດພາກພື້ນດ້ານການບັນເທົາພາວະສຸກເສີນດ້ານສະບຽງອາຫານ.

ເພື່ອໃຫ້ການສະໜັບສະໜູນຕໍ່ວຽກງານດັ່ງກ່າວ,ລະບົບຂໍ້ມູນການຄ້ຳປະກັນສະບຽງອາຫານຂອງອາຊຽນ ໄດ້ຮັບການແນະ ນຳໃນປີ 2009, ຕິດຕາມດ້ວຍ ອົງການ ເຂົ້າສຳຮອງສຸກເສີນ ຂອງອາຊຽນ ບວກສາມ (APTERR), ໃນປີ 2010. ອາຊຽນ ໄດ້ຮັບການສະໜັບສະໜູນກ່ຽວກັບວຽກງານນີ້ຈາກ ສະຫະພັນເອີລົບ, ອົງການອາຫານ ແລະ ກະສິກຳ ແຫ່ງສະຫະປະຊາຊາດ (FAO) ແລະ ກະຊວງກະສິກຳ ແລະ ປ່າໄມ້ ແລະ ປະມົງຂອງຍີ່ປຸ່ນ. ໃນປີ 2015, ເມື່ອປະຊາຄົມເສດຖະກິດອາຊຽນ (AEC) ໄດ້ກາຍມາເປັນຈິງ, ການຄ້ຳປະກັນທາງດ້ານສະບຽງອາຫານຍັງສືບຕໍ່ເປັນວາລະສຳຄັນຂອງອາຊຽນ,ຊຶ່ງເປັນຜົນຮັບທີ່ສຳຄັນທາງດ້ານອາຫານ, ຂະແໜງກະສິກຳ ແລະ ປ່າໄມ້ ແມ່ນລວມໃນເອກະສານ ວິໄສທັດ ອາຊຽນ 2025.

ຢູ່ໃນສະພາບຂອງ ສປປ ລາວ, ການເຂົ້າຮ່ວມກັບ ອາຊຽນ ກ່ຽວກັບບັນຫາການຄ້ຳປະກັນທາງດ້ານສະບຽງອາຫານແມ່ນເປັນເກາະ ປ້ອງກັນຂອງກະຊວງກະສິກຳ ແລະ ປ່າໄມ້.

ການຮ່ວມມືກັບອາຊຽນ ໃນບັນຫາຕ່າງໆຢ່າງກວ້າງຂວາງແມ່ນໄດ້ຮັບການລະບຸໄວ້ໃນແຜນຍຸດທະສາດການພັດທະນາກະສິກຳ 2025 ແລະ ວິໄສທັດ 2030.
ແຜນງານ ແຫ່ງຊາດ ວ່າດ້ວຍຊີວະນາໆພັນກະສິກຳ (NABP): ໃນເດືອນທັນວາ 2004, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ຮັບຮອງ ແຜນງານ ແຫ່ງຊາດ ວ່າດ້ວຍຊີວະນາໆພັນກະສິກຳ (NABP). ແຜນດັ່ງກ່າວ ໄດ້ຮັບການສ້າງຂຶ້ນເພື່ອ ເປັນກອບວຽກ ແລະ ຍຸດທະສາດໄລຍະຍາວສຳລັບການຈັດຕັ້ງປະຕິບັດຫຼັກການປະສານງານໃນການນຳໃຊ້, ການພັດທະນາ ແລະ ການປົກປັກ ຮັກສາຊີວະນາໆພັນ ກະສິກຳ.

ມັນໄດ້ຖືກກະກຽມໂດຍການສະໜັບສະໜູນ ຂອງບູລິມະສິດ ໃນການພັດທະນາ ສອງບູລິມະສິດ: ປັບປຸງການຄ້ຳປະກັນທາງດ້ານສະບຽງອາຫານຢູ່ເຂດຊົນນະບົດ ແລະ ການດຳລົງຊີວິດ;
ແລະ ເສີມສ້າງຂີດຄວາມສາມາດ ຂອງລັດຖະບານ ໃຫ້ເຂັ້ມແຂງໃນການຄຸ້ມຄອງການນຳໃຊ້ຊັບພະຍາກອນທຳມະຊາດຢ່າງຍືນຍົງ.

ແຜນ NABP ແມ່ນສອດຄ່ອງກັບ, ແລະ ໄດ້ຖືກອອກແບບເພື່ອເຊື່ອມສານເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດຊີວະນາໆພັນແຫ່ງຊາດ (ຮອດປີ 2020) ແລະ ແຜນປະ ຕິບັດງານ (ຮອດປີ 2010), ວິໄສທັດດ້ານຍຸດທະສາດຂອງລັດຖະບານສຳລັບຂະແໜງກະສິກຳ ແລະ ຍຸດທະສາດແຫ່ງຊາດ ດ້ານການເຕີບໂຕ ແລະ ລຶບລ້າງຄວາມທຸກຍາກ (ອົງການສາກົນ ເພື່ອການອະນຸລັກທຳມະຊາດ ແລະ ຊັບພະຍາກອນທຳມະຊາດ (IUCN) 2011).
ການທົບທວນ ແລະ ປັບປຸງ ແຜນ ແຫ່ງຊາດວ່າດ້ວຍຊີວະນາໆພັນກາກະສິກຳ(NABP) ແມ່ນກຳລັງສືບຕໍ່ດຳເນີນການຢູ່ໃນປະຈຸບັນ.
ແຜນ NABP ກວມເອົາ ເຈັດອົງປະກອບຊຶ່ງໄດ້ລວມເອົາແຜນວຽກສຳລັບແຕ່ລະອົງປະກອບເຂົ້ານຳ ເຊັ່ນ: ພືດ ແລະ ຊີວະນາໆພັນທີ່ກ່ຽວຂ້ອງກັບພືດ, ການພັດທະນາ ແລະ ຄຸ້ມຄອງສັດລ້ຽງ, ຜະລິດຕະພັນເຄື່ອງປ່າຂອງດົງ ແລະ ຊີວະ ນາໆພັນເທິງໜ້າດິນ, ການນຳໃຊ້ ຢ່າງຍືນຍົງ ແລະ ການປົກປ້ອງຊີວະນາໆພັນສັດນ້ຳ, ລະບົບການກະສິກຳຄອບຄົວ ແບບປະສົມປະສານ,ການກະກຽມວຽກງານຄຸ້ມຄອງ, ຫຼັກການວາງແຜນແບບປະສົມປະສານຢ່າງມີສ່ວນຮ່ວມ.

ນະໂຍບາຍສາມສ້າງ: ມະຕິຂອງກອງປະຊຸມໃຫຍ່ ສະບັບເລກທີ 03/CPP/2012 ແນໃສ່ເລັ່ງການພັດທະນາເສດຖະກິດທ້ອງຖິ່ນໂດຍຜ່ານການເຜີຍແຜ່ມະຕິຂອງພັກ ແລະ ນະໂຍບາຍຂອງລັດ; ການແບ່ງຄວາມຮັບຜິດຊອບໃນການບໍລິຫານ; ແລະ ການພັດທະນາບ້ານເປົ້າໝາຍ.
ນະໂຍບາຍ 'ສາມສ້າງ' ກຳນົດໃຫ້ແຂວງເປັນຫົວໜ່ວຍຍຸດທະສາດ, ເມືອງເປັນຫົວໜ່ວຍເຊື່ອມສານ, ແລະ ບ້ານເປັນຫົວໜ່ວຍພັດນະນາ.

ການປະຕິບັດຕາມຄຳແນະນຳຈາກສະພາແຫ່ງຊາດ, ນາຍົກ-ລັດຖະມົນຕີ ແລະ ຄະນະຊີ້ນຳໂຄງການທົດລອງສາມສ້າງ, ນະໂຍບາຍສາມສ້າງໄດ້ມີສາມມຸມມອງດັ່ງນີ້:
ວິໄສທັດດ້ານການເມືອງ, ຫຼັກການເພື່ອແບ່ງຄວາມຮັບຜິດຊອບດ້ານການບໍລິຫານ, ແລະ ແຜນງານພັດທະນາແຫ່ງຊາດຢ່າງມີເປົ້າໝາຍ. ສາມສ້າງ ໄດ້ຮັບການອອກແບບເພື່ອເປັນການທົດລອງ, ແລະ ຂະຫຍາຍ, ຜັນຂະຫຍາຍ ອີງໃສ່ບົດຮຽນທີ່ຖອດຖອນໄດ້. ການທົດລອງໄດ້ຖືກດຳເນີນໃນເດືອນຕຸລາ 2012 ແລະ ສຳເລັດໃນຕົ້ນປີ 2015.

ຄວາມຮັບຜິດຊອບ, ໜ້າທີ່ ແລະ ຊັບພະຍາກອນຢ່າງຫຼວງຫຼາຍໄດ້ຮັບການມອບໝາຍໃຫ້ແກ່ອຳນາດການປົກຄອງທ້ອງຖິ່ນ, ໂດຍສະເພາະແມ່ນຂັ້ນເມືອງ. ໂຄງການທົດລອງ ໄດ້ຮັບການຈັດຕັ້ງປະຕິບັດຢູ່ທົ່ວປະເທດ ໃນ 109 ບ້ານເປົ້າໝາຍ, ພາຍໃຕ້ອຳນາດການປົກຄອງທ້ອງຖິ່ນຂອງ 51 ເມືອງ (LADLF 2015).

ນະໂຍບາຍການປົກປ້ອງສັງຄົມ: ສຳລັບການປົກປ້ອງສັງຄົມ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ວາງເປົ້າໝາຍເພື່ອປັບ ປຸງການເຂົ້າເຖິງຜົນປະໂຫຍດທາງສັງຄົມດ້ວຍການຂະຫຍາຍການປົກຄຸມການຮັບປະກັນສັງຄົມໃຫ້ກວ້າງອອກ, ລວມທັງການປະກັນ ສຸຂະພາບ, ບຳນານ, ຜົນປະໂຫຍດ ຈາກ

ຄວາມເສຍອົງຄະ ແລະ ກິດຈະກຳທີ່ຕອບໂຕ້ກັບໄພພິບັດ.
ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ 5 ປີ ຄັ້ງທີ VIII ລວມເອົາ ຖະແຫຼງການກ່ຽວກັບຄວາມຈຳເປັນທີ່ຕ້ອງໄດ້ມີການເພີ່ມຂຶ້ນດ້ານການປົກປ້ອງສັງຄົມ ເພື່ອຊ່ວຍໃຫ້ແກ່ທຸກຄົນໄດ້ຮັບ ຜົນປະໂຫຍດ ແລະ ທຸກຄົນສາມາດເຂົ້າເຖິງໄດ້.
ມີຂໍ້ສັງເກດວ່າ ລະບົບປະກັນສັງຄົມ ໄດ້ຮັບການສ້າງຂຶ້ນ, ແຕ່ວ່າ ຈຳເປັນ ຕ້ອງເສີມສ້າງໃຫ້ເຂັ້ມແຂງ ແລະ ເພື່ອຂະຫຍາຍພື້ນທີ່ປົກຄຸມ ເພື່ອປົກປ້ອງຄົນທຸກຍາກ, ປະຊາຊົນ ທີ່ຢູ່ໃນສະພາບ ເປາະບາງ ແລະ ຜູ້ທີ່ເປັນເຫຍື່ອຂອງໄພພິບັດ, ລວມທັງ ການປົກປ້ອງ ສິດທິ ແລະ ຜົນປະໂຫຍດຂອງເດັກ ແລະ ຜູ້ສູງອາຍຸ.

ໃນກອງປະຊຸມແຫ່ງຊາດ ວ່າງມໍ່ໆມານີ້ ໄດ້ໃຫ້ຮູ້ວ່າ ແມ່ຍິງທີ່ເສຍອົງຄະ ແລະ ເດັກ ແມ່ນຜູ້ທີ່ເປາະບາງກວ່າ ໝູ່ໃນທັງໝົດ ທຸກກຸ່ມຂອງສັງຄົມລາວ. ພາຍໃນປີ 2020, ເປົ້າໝາຍການປົກປ້ອງສັງຄົມທີ່ສຳຄັນ  ລວມທັງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VIII ມີຄື:

- ຂະຫຍາຍການປະກັນສັງຄົມ ແລະ ການຮັກສາສຸຂະພາບໃຫ້ກວມເຖິງ 80% ຂອງປະຊາກອນທັງໝົດ ໃຫ້ໄດ້ພາຍໃນປີ 2020.
- ສະໜອງຜົນປະໂຫຍດໃຫ້ແກ່ຜູ້ທີ່ຮັບໃຊ້ການທະຫານໃນໄລຍະສົງຄາມປົດປ່ອຍປະເທດ.
- ສ້າງກອງທຶນປະກັນສັງຄົມໃນທົ່ວ 18 ແຂວງເພື່ອປັບປຸງຄຸນນະພາບຂອງຊີວິດຂອງປະຊາຊົນທີ່ດ້ອຍໂອກາດ, ເຫຍື່ອຈາກໄພພິບັດ ແລະ ເຫຍື່ອຂອງການຄ້າມະນຸດ.
- ສະໜອງເຄືອຂ່າຍການປົກປ້ອງທາງສັງຄົມ ເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ປ້ອງກັນ ແລະ ຕ້ານການຄ້າມະນຸດ ໃນ 800 ບ້ານ.

ຍຸດທະສາດການພັດທະນາການສຶກສາ:  ກະຊວງສຶກສາທິການ ແລະ ກິລາ ໄດ້ພັດທະນາແຜນພັດທະນາຫ້າປີ 2016-2020, ຍຸດທະສາດ ການພັດທະນາ ການສຶກສາ 10 ປີ 2016-2025 ພ້ອມທັງວິໄສທັດຮອດປີ 2030, ໂດຍ ກຳນົດວ່າ ປະຊາຊົນລາວທຸກຄົນ ຕ້ອງມີສິດ ໃນການເຂົ້າເຖິງ ການສຶກສາທີ່ມີຄຸນນະພາບຢ່າງເທົ່າທຽມກັນ.

ໜຶ່ງໃນຍຸດທະສາດຫ້າປີ  ຂອງແຜນການພັດທະນາການສຶກສາ 2016-2020 ແມ່ນເພື່ອສົ່ງເສີມສຸຂະພາບ, ອະນາໄມ ແລະ ໂພຊະນາການ ຂອງໂຮງຮຽນກຽມປະຖົມ ແລະ ໂຮງຮຽນປະຖົມ ໂດຍມີເປົ້າໝາຍເພື່ອປັບປຸງສະພາບທາງດ້ານໂພຊະນາການຂອງເດັກ, ເພື່ອຮັບປະກັນ ການພັດທະນາທີ່ດີທາງດ້ານຮ່າງກາຍ ແລະ ມັນສະໝອງຂອງເດັກ, ໂດຍເນັ້ນໜັກສະເພາະໃສ່ເດັກນ້ອຍທີ່ມາຈາກຄອບຄົວທຸກຍາກ ແລະ ເດັກທີ່ຢູ່ເຂດຊົນນະບົດຫ່າງໄກສອກຫຼີກ.

ກິດຈະກຳຫຼັກໃນແຜນການຫ້າປີ ໃນການພັດທະນາການສຶກສາ, ທີ່ຕິດພັນກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ລວມທັງການສະໜອງອາຫານເສີມ, ການສົ່ງເສີມໃຫ້ມີອາຫານ ແລະ ໂພຊະ ນາການທີ່ດີໃນໂຮງຮຽນ ແລະ ການປູກຜັກສວນຄົວໃນໂຮງຮຽນ ແລະ ການລ້ຽງສັດ, ການລະດົມການປະກອບສ່ວນຈາກຊຸມຊົນ ເພື່ອສົ່ງ ເສີມອະນາໄມ, ສຸຂະພາບຈະເລີນພັນ ແລະ ສຸຂະສຶກສາໃນໂຮງຮຽນ, ແລະ ການສ້າງຂີດຄວາມສາມາດຂອງຜູ້ບໍລິຫານ ແລະ ຄູ ໃນການສົ່ງເສີມອະນາໄມ, ສຸຂະພາບຈະເລີນພັນ ແລະ ການສຶກສາດ້ານໂພຊະນາການ. ຄວາມພະຍາຍາມອັນໃໝ່ໃນການພັດທະນາຫຼັກສູດພາໃຫ້ມີ ການລວມເອົາຄວາມທົນທານຕໍ່ການປ່ຽນແປງຂອງດິນຟ້າອາກາດ ເຂົ້າໃນວິຊາ ໂລກອ້ອມໂຕ ຢູ່ໂຮງຮຽນ.

ຍຸດທະສາດເພື່ອຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍໃນຂະແໜງກະສິກຳ ແລະ ປ່າໄມ້: ຍຸດທະສາດຂອງກະຊວງກະສິກຳ ແລະ ປ່າໄມ້ ສຳລັບຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍໃນຂະແໜງກະສິກຳ ແລະ ປ່າໄມ້ 2016-2025 ແລະ ວິໄສທັດຮອດປີ 2030 ແນໃສ່ການ ເຂົ້າເຖິງຊັບພະຍາກອນທຳມະຊາດ, ດິນກະສິກຳ, ທີ່ພັກອາໄສ, ທຶນພັດທະນາ ແລະ ການສະໜັບສະໜູນດ້ານວິຊາການຢ່າງສະເໝີພາບ ກັນລະຫວ່າງຍິງ-ຊາຍໃນທົ່ວທຸກກຸ່ມຊົນເຜົ່າ (ກຊກປ 2015b).
ມັນໄດ້ວາງເປົ້າໝາຍໄວ້ທີ່ 45 ສ່ວນຮ້ອຍຂອງອັດຕາຜູ້ເຂົ້າຮ່ວມຕ້ອງແມ່ນຊາວກະສິກອນທີ່ເປັນເພດຍິງຈາກຄົວເຮືອນທີ່ທຸກຍາກໃນທຸກໆກິດຈະກຳ,  ລວມທັງການເຂົ້າຮ່ວມໃນການຝຶກອົບຮົມດ້ານວິ ຊາການ, ການເຂົ້າເຖິງເທັກໂນໂລຊີໃໝ່ໆ, ທີ່ພັກອາໄສ ແລະ ການຈ້າງງານທີ່ມີຄວາມໝັ້ນຄົງ.

3.2 ຄູ່ຮ່ວມພັດທະນາ ພາຍໃນລະບົບ UN, ການສະໜັບສະໜູນດ້ານວິຊາການ, ການເງິນ, ແລະ ການຈັດຕັ້ງປະຕິບັດ ສຳລັບການຄ້ຳປະກັນທາງ ດ້ານສະບຽງອາຫານ ແລະ ໂພຊະນາການ ແມ່ນໄດ້ຮັບປະກັນຜ່ານສາມອົງການຈັດຕັ້ງທີ່ຕັ້ງຢູ່ກຸງໂຣມ, ອົງການອຸຍນິເຊັບ (UNICEF) ແລະ ອົງການອື່ນໆ, ໂດຍມີການ ປະສານງານໂດຍລວມດ້ານວາລະເປົ້າໝາຍການພັດທະນາແບບຍືນຍົງ(SDGs) ພາຍໃຕ້ຫ້ອງການປະສານງານຂອງ ສປຊ ປະຈຳ ສປປ ລາວ.

ອົງການອາຫານໂລກ (WFP) ມີຫ້າອົງປະກອບໃນການ ດຳເນີນງານຢູ່ ສປປ ລາວ, ພາຍໃຕ້ຫຼັກການລວມທີ່ສຸມໃສ່ໂພຊະນາ ການ: ການ ກຽມຄວາມພ້ອມ ແລະ ຕອບໂຕ້ເຫດພາວະສຸກເສີນ, ສຸຂະພາບແມ່ ແລະ ເດັກ ແລະ ໂພຊະນາການ, ໂຄງການອາຫານໂຮງຮຽນ, ຄວາມຄິດ ລິເລີ່ມໃນການດຳລົງຊີວິດດ້ານໂພຊະນາການ, ແລະ ການເຕີມສານອາຫານ ແລະ ການຕະຫຼາດ, ໂດຍໃຫ້ການສະໜັບສະໜູນແກ່ປະຊາຊົນຫຼາຍກວ່າ 1,030,000 ຄົນ.

ຍຸດທະສາດຂອງແຜນງານໃນປະເທດໃນປະຈຸບັນແມ່ນມີຈຸດສຸມໃສ່: i) ປ້ອງກັນ ແລະ ຫຼຸດຜ່ອນການຈ່ອຍຜອມ, ii) ຫຼຸດຜ່ອນການເຕັ້ຍ, ແລະ iii) ແກ້ໄຂການຂາດຈຸນລະສານອາຫານ.
ອົງການອາຫານໂລກ ຍັງໄດ້ສະໜັບສະໜູນ ການສ້າງຂີດຄວາມສາມາດສຳລັບການຕອບໂຕ້ກັບເຫດການສຸກເສີນຜ່ານຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ (NDMO), ແຜນງານສຸຂະພາບແມ່ ແລະ ເດັກ, ສະໜອງອາຫານໃນໂຮງຮຽນໃຫ້ນັກຮຽນຢູ່ 1,500 ໂຮງຮຽນ, ແຜນງານອາຫານເພື່ອຊັບສິນ, ແລະ ໜ່ວຍງານວິເຄາະຄວາມສ່ຽງ ເປັນຫນ່ວຍງານທີ່
ສຳຄັນໃນການເຊື່ອມໂຍງຂໍ້ມູນກ່ຽວກັບ ຄວາມໝັ້ນຄົງທາງດ້ານ

ສະບຽງອາຫານ ແລະ ໂພຊະນາການ ເຊັ່ນ: ບົດລາຍງານ ຄວາມທົນທານຂອງປະຊາຊົນຕໍ່ການປ່ຽນແປງດິນຟ້າອາກາດ (CLEAR) ໃນປີ 2016 (ກຊສ ແລະ WFP 2016).

ອົງການອາຫານ ແລະ ການກະເສດ (FAO) ແມ່ນມີບົດບາດໃນລະດັບສາກົນເພື່ອສົ່ງເສີມການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ແລະ ໄດ້ເຄື່ອນໄຫວຢູ່ ສປປ ລາວ ນັບແຕ່ປີ 1975.

ດ້ວຍການເຮັດວຽກຢ່າງໃກ້ຊິດ ກັບກະຊວງກະສິກຳ ແລະ ປ່າໄມ້, ອົງການອາຫານ ແລະ ການກະເສດ(FAO) ໄດ້ສະໜອງການສະໜັບສະໜູນດ້ານນະໂຍບາຍ, ເຕັກນິກວິຊາການ ແລະ ການເງິນ ໃຫ້ແກ່ຂະແໜງການຍ່ອຍຫຼາກຫຼາຍໜ່ວຍງານພາຍໃນຂະແໜງກະສິກຳ, ແລະ ເປັນຄູ່ຮ່ວມງານຫຼັກຂອງລັດຖະບານສຳລັບການສ້າງ ແຜນທີ່ນຳທາງເພື່ອລຶບລ້າງຄວາມອຶດຫິວໃຫ້ເປັນສູນ ໃນປີ 2015 (Zero Hunger Challenge Roadmap (NFSCDC 2015)).

ກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD) ແມ່ນອົງການສະໜອງທຶນຮອນ ເຊິ່ງໄດ້ໃຫ້ການຊ່ວຍເຫຼືອດ້ານວິຊາການສະເພາະດ້ານ ແລະ ການເງິນ ສຳລັບວຽກງານກະສິກຳ. ອົງການສະຫະປະຊາຊາດ ດ້ານການພັດທະນາ (UNDP) ມີໂຄງການທີ່ປັບໃຫ້ເຂົ້າກັບຫຼາກຫຼາຍຂະແໜງການ ທີ່ເຮັດວຽກຢ່າງຕັ້ງໜ້າໃນການ ປັບໂຕເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ (ໂດຍການຮ່ວມມືກັບກະຊວງຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ), ການຮັບປະກັນທາງດ້ານສະບຽງອາຫານ ໃຫ້ແກ່ລະດັບສູນກາງ ແລະ ລະດັບທ້ອງຖິ່ນ, ແລະ ຍັງໄດ້ເຂົ້າຮ່ວມໃນຂະບວນການ ເລັ່ງລັດໃຫ້ສາມາດບັນລຸເປົ້າໝາຍMDGs/ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຢູ່ ສປປ ລາວ.

ທາງດ້ານໂພຊະນາການ, ອົງການ ສປຊ ສຳລັບເດັກ (UNICEF) ໄດ້ເປັນຜູ້ສະໜັບສະໜູນທີ່ ສຳຄັນ ມາເປັນ ເວລາດົນນານ ແລະ ໄດ້ເຜີຍແຜ່ນະໂຍບາຍດ້ານໂພຊະນາການ ແລະ ການຈັດຕັ້ງປະຕິບັດແຜນງານ. ນອກຈາກນັ້ນ ຍັງໄດ້ສະໜອງ ການສະ ໜັບສະໜູນໃຫ້ແກ່ການບໍລິການໂພຊະນາການ ແລະ ຂໍ້ມູນຕ່າງໆຜ່ານຂະແໜງສາທາລະນະສຸກ, ອົງການ UNICEF ໄດ້ເປັນຄູ່ຮ່ວມງານກັບກະຊວງສາທາລະນະສຸກ
ສຳລັບການສຳຫຼວດດັດສະນີໝາຍ ສັງຄົມລາວ (LSIS) ແລະ



ການສຳຫຼວດດ້ານໂພຊະນາການ, ເຊິ່ງໄດ້ຮັບຊຸດຂໍ້ມູນທີ່ຊັດເຈນດ້ານໂຕຊີ້ວັດໂພຊະນາການ ຢູ່ ສປປ ລາວ (ກະຊວງສາທາລະນະສຸກ 2012). ໃນປີ 2016, ອົງການ UNICEF ໄດ້ຮັບ ເອົາບົດບາດເປັນເຈົ້າການໃນຂະບວນການລະດົມຂົນຂວາຍລະດັບຊາດ ເພື່ອປ່ຽນແປງພຶດຕິກຳທີ່ກຳລັງຈະຈັດຂຶ້ນ, ໂດຍແນໃສ່ສົ່ງເສີມ ໃຫ້ສັງຄົມສາມາດເຂົ້າເຖິງຂໍ້ມູນດ້ານໂພຊະນາການທີ່ຖືກຕ້ອງຊັດເຈນ.

ໃນບັນດາປະຊາຄົມຜູ້ໃຫ້ທຶນ, ສະຫະພັນເອີລົບ ໄດ້ມີຄວາມສົນໃຈເປັນພິເສດໃສ່ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາ ການ ຢູ່ ສປປ ລາວ, ໂດຍກຳນົດໃຫ້ໂພຊະນາການເປັນອົງປະກອບໃຈກາງຂອງຮອບວຽນຂອງແຜນງານຂອງອົງການ ຈາກປີ 2016-2020, ທີ່ເປັນສ່ວນໜຶ່ງຂອງການລົງທຶນທີ່ຫຼາຍກວ່າ 500 ລ້ານຢູໂຣ ໃນການຊ່ວຍເຫຼືອດ້ານການພັດທະນາຕະຫຼອດຫ້າປີທີ່ໄດ້ໃຫ້ ຄຳໝັ້ນສັນຍາ ໃນປີ 2015.

ອົງການຮ່ວມມືເພື່ອການພັດທະນາຂອງປະເທດສະວິສ (SDC) ໄດ້ສະໜອງທຶນຮອນໃຫ້ແກ່ແຜນງານ, ໂຄງການ ແລະ ການສຶກສາຄົ້ນຄວ້າດ້ານບັນຫາການພັດທະນາຊົນນະບົດໃນຂອບເຂດກວ້າງຂວາງ, ລວມທັງການລິເລີ່ມຕ່າງໆດ້ານຄວາມຫຼາກຫຼາຍຂອງຊີວິນາໆພັນກະສິກຳ (TABI), ການເຊື່ອມໂຍງລະຫວ່າງກະສິກຳ, ໂພຊະນາການ ແລະ ຊັບພະຍາກອນ ທຳມະຊາດ (LANN), ແລະ ໂຄງການສົ່ງເສີມກະສິກຳ (LEAP), ແລະ ໂຄງການສົ່ງເສີມການໃຫ້ບໍລິການ ຄຳປຶກສາດ້ານກະສິກຳ ໃນຊົນນະບົດເຂດ ເນີນສູງ ຂອງ ສປປ ລາວ (LURAS).

ທຶນຊ່ວຍເຫຼືອຈາກປະເທດອົດສະຕາລີ (ເມື່ອກ່ ອນເອີ້ນວ່າ AusAID)
ໄດ້ເຮັດບົດບາດໃນການອຳນວຍຄວາມສະດວກໃນວຽກງານການສຶກສາ, ການສະໜອງການເຊື່ອມໂຍງທີ່ສຳຄັນລະຫວ່າງໂພຊະນາການທີ່ດີ ແລະ ຜົນງານທາງວິຊາການ, ແລະໄດ້ສະໜອງທຶນຮອນ ໃນໄລຍະຜ່ານມາ ໃຫ້ແກ່ຫຼາຍກິດຈະກຳທີ່ເຊື່ອມສານຂອງອົງການ ອສບລ ກ່ຽວກັບການຮັບປະກັນທາງດ້ານສະບຽງອາຫານ, ການເກັບກູ້ລະເບີດທີ່ບໍ່ທັນແຕກ (UXO), ແລະ ການປັບປຸງຊີວິດການເປັນຢູ່.

ຄູ່ຮ່ວມງານ NGOs ກ່ຽວກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ໃນລະດັບໂຄງການ ລວມທັງ ອົງການ CARE, Health Poverty Action, Helvetas, Oxfam, SNV, German Agro Action (Welthungerhilfe), World Vision ແລະ WWF. ອີງຕາມເຄືອຂ່າຍ ອສບລ ສາກົນ, ມີປະມານ 24 ອສບລ ສາກົນ ທີ່ຈັດຕັ້ງປະຕິບັດໂຄງການຮັບປະກັນທາງດ້ານສະບຽງອາຫານຈຳນວນ 45 ໂຄງການ ໂດຍມີອົງການ ອສບລ ສາກົນ ຈຳນວນເພີ່ມເຕີມອີກ 19 ແຫ່ງ ທີ່ຈັດຕັ້ງປະຕິບັດໂຄງການໂພຊະນາການ.

ສປປ ລາວ ໄດ້ເຂົ້າຮ່ວມການຜັນຂະຫຍາຍໂພຊະນາການ (SUN) ໃນນາມທີ່ເປັນ'ຜູ້ມາກ່ອນ' ໃນປີ 2011, ໜຶ່ງໃນຫ້າປະເທດທຳອິດໃນໂລກທີ່ເຮັດເຊັ່ນນີ້.

ກ່ອນທີ່ຈະເຮັດເຊັ່ນນັ້ນ, ນັບແຕ່ປີ 2008-2010, ສປປ ລາວ

ແມ່ນໜຶ່ງ ຂອງສອງ ປະເທດທົດລອງ ສຳລັບແຜນງານລິເລີ່ມ REACH, ຄວາມພະຍາຍາມຂອງສາກົນເພື່ອຕໍ່ສູ້ກັບບັນຫາເດັດຂາດໂພຊະນາການ.
ການລິເລີ່ມວຽກງານສາກົນດັ່ງກ່າວແມ່ນມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນ ໂດຍການຮວບຮວມກັນພາຍໃຕ້ການສະໜັບສະໜູນຂອງ UN, ແຜນງານການຜັນຂະຫຍາຍໂພຊະນາການ (SUN) ແນໃສ່ສ້າງເຄືອຂ່າຍຂອງຫຼາຍຜູ້ມີສ່ວນຮ່ວມ ແລະ ລະຫວ່າງຜູ້ມີສ່ວນຮ່ວມຈາກສັງຄົມ, ລັດຖະບານ ແລະ ຂະແໜງ ເອກະຊົນ ເພື່ອສ້າງຄວາມເປັນອັນໜຶ່ງອັນດຽວກັນ ໃນຂະບວນການໂພຊະນາການທີ່ໝັ້ນຄົງ.

ແຜນງານການຜັນຂະຫຍາຍໂພຊະນາການ (SUN) ບໍ່ໄດ້ຈັດຕັ້ງປະຕິບັດ ແຜນງານໂດຍກົງ ແຕ່ວ່າເຮັດໜ້າທີ່ເປັນການກະຕຸກຊຸກຍູ້ແນໃສ່ສ້າງແຮງຜັກດັນໃນແກ່ວຽກງານໂພຊະນາການໂດຍລວມ. ໝົນສຳເລັດສຳຄັນໃນປີ2015ລວມທັງການສ້າງຕັ້ງກອບວຽກໝົນຮັບທົ່ວໄປ (Common Results Framework) ສະໜັບສະໜູນໃຫ້ແກ່ແຜນປະຕິບັດງານ, logical framework matrix ແລະ ແຜນການຕິດຕາມ ແລະ ປະເມີນໝົນ.

ທາງດ້ານ ໜ້າທີ່ປະສານງານ, ເຄືອຂ່າຍ ແຜນງານການຜັນຂະຫຍາຍໂພຊະນາການ (SUN) ໄດ້ສ້າງຕັ້ງ ພັນທະມິດປະຊາສັງຄົມ (Civil Society Alliance), ປະກອບດ້ວຍ56 ອົງການ ອສບລ ທ້ອງຖິ່ນ ແລະ ສາກົນ ແລະ ອົງການຈັດຕັ້ງພັດທະນາຊຸມຊົນ, ທີ່ອົງການ PLAN International ເປັນເຈົ້າພາບ.

ສຳລັບປີ 2016, ໜຶ່ງໃນຂີດໝາຍສຳຄັນ ແມ່ນການຂະຫຍາຍເຄືອຂ່າຍທຸລະກິດຂອງ ແຜນງານການຜັນຂະຫຍາຍໂພຊະນາການ (SUN), ເຊິ່ງຈະສະໜອງຮູບການກະຕຸ້ນຄວາມສົນໃຈທາງທຸລະ ກິດໃຫ້ແກ່ ແຜນຍຸດທະສາດ ແລະ ແຜນປະຕິບັດການດ້ານໂພຊະນາການແຫ່ງຊາດ ແລະ ຈະຊອກຄົ້ນວິທີການທົ່ວໄປໃນການແກ້ໄຂບັນຫາໂພຊະນາການ ທີ່ມີຢູ່ປະຈຸບັນໃຫ້ແກ່ການພັດທະນາ ປະເທດ.

3.2.1 ກົນໄກການປະສານງານ: ຄະນະກຳມະການໂພຊະນາການແຫ່ງຊາດດ້ານໂພຊະນາການ ແລະ ໜ່ວຍງານຂະແໜງການ ຂອງກະສິກຳ ແລະພັດທະນາຊົນນະບົດຄະນະກຳມະການໂພຊະນາການແຫ່ງຊາດ:
ກົນໄກການປະສານງານທີ່ສຳຄັນທີ່ສຸດ ກ່ຽວກັບບັນຫາດ້ານໂພຊະນາການ ແມ່ນ ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ທີ່ສ້າງຂຶ້ນໃນເດືອນກໍລະກົດ ປີ 2013 ຕາມຂໍ້ຕົກລົງຂອງນາຍົກ ລັດຖະມົນຕີ ເລກທີ 73/ນຍ. ພາຍໃຕ້ການເປັນປະທານຂອງທ່ານຮອງນາຍົກ, ສະໜັບສະໜູນໂດຍພະນັກງານອາວຸໂສຈາກກະຊວງສາທາລະນະສຸກ, ກະຊວງແຜນ ການ ແລະ ການລົງທຶນ ແລະ ກະຊວງກະສິກຳ ແລະ ປ່າໄມ້, ແລະ ຕາງໜ້າຈາກສະຖາບັນຕ່າງໆທີ່ຫຼຸບເທົ່າ, ບູລິມະສິດທີ່ນຳໃຊ້ ເພື່ອແກ້ໄຂບັນຫາຂາດໂພຊະນາການ ແມ່ນສະທ້ອນໃຫ້ເຫັນໃນການຈັດຕັ້ງການປະສານງານ. ເພື່ອສະໜັບສະໜູນວຽກງານ ຂອງຄະນະກຳມະການໂພຊະນາການແຫ່ງຊາດ (NNC), ກອງເລຂາໂດຍການນຳພາຂອງທ່ານຮອງລັດຖະມົນຕີກະຊວງສາທາລນະສຸກ ກໍ່ໄດ້ຮັບການສ້າງຕັ້ງຂຶ້ນ, ໂດຍຮັບຜິດຊອບໃນການ ຮັກສາລະດັບການຜັກດັນຂອງ ຄະນະກຳມະການໂພຊະນາການແຫ່ງຊາດ (NNC), ສ້າງເອກະສານວິຊາການ ສຳລັບສະມາຊິກກຳມະການຕາມຄວາມຈຳເປັນ, ແລະ ປະສານງານ ໃນແຕ່ ລະມື້ກັບຄູ່ຮ່ວມພັດທະນາ ແລະ ຄູ່ຮ່ວມງານຕ່າງໆ.
ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ແມ່ນຮັບຜິດຊອບກອງປະຊຸມໂພຊະນາການແຫ່ງຊາດ ເຊິ່ງກອງປະຊຸມຄັ້ງທຳອິດ ໄດ້ຈັດຂຶ້ນໃນເດືອນພະຈິກ 2015.

ຈາກບົດບັນທຶກຂອງກອງປະຊຸມດັ່ງກ່າວ ເຫັນວ່າມີຄວາມຊັດເຈນທີ່ກອງປະຊຸມແມ່ນແນໃສ່ການສະໜອງພື້ນທີ່ການເມືອງສະເພາະ ເພື່ອ ລະດົມຂະແໜງການທີ່ກ່ຽວຂ້ອງ ໃນພາກລັດ, ການນຳຂັ້ນແຂວງ ແລະ ຄູ່ຮ່ວມພັດທະນາສາກົນ, ລວມທັງອົງການ ຈັດຕັ້ງສາກົນ, ສະຖາບັນ ແລະ ທຸລະກິດຕ່າງໆ ໃນການສະໜັບສະໜູນວາລະດ້ານໂພຊະນາການ ແລະ ສິ່ງຜົນຕໍ່ການປ່ຽນແປງ ດ້ານສຸຂະພາບແມ່ ແລະ ເດັກ ທີ່ມີພາວະບົກພ່ອງດ້ານໂພຊະນາການໃນທົ່ວປະເທດ.

ກອງປະຊຸມດັ່ງກ່າວ ແມ່ນແນໃສ່ການເຮັດໃຫ້ ໂພຊະນາການເປັນບູລິມະສິດ ແຫ່ງຊາດໃນໄລຍະຍາວເພື່ອສະທ້ອນໃຫ້ເຫັນໃນນະໂຍບາຍຂອງລັດ ແລະ ງົບປະມານ, ການສະໜັບ ສະໜູນຈາກຜູ້ໃຫ້ທຶນ, ການລົງທຶນໃສ່ທຸລະກິດ, ການຄົ້ນຄວ້າດ້ານວິທະຍາສາດ ແລະ ການປະຕິບັດງານຂອງປະຊາສັງຄົມ (NNC 2015).

ການສະໜັບສະໜູນທີ່ສຳຄັນໃຫ້ແກ່ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ແມ່ນມາຈາກກຸ່ມຄູ່ຮ່ວມພັດທະນາທີ່ບໍ່ເປັນທາງການ ໂດຍການເປັນປະທານຮ່ວມຂອງ ສະຫະພັນເອີລົບ ແລະ UNICEF, ເຊິ່ງປະຊຸມຮ່ວມກັນເປັນປະ ຈຳທຸກໄຕມາດ, ແລະ ໄດ້ຮັບການຍອມຮັບວ່າເປັນເວທີທີ່ແຂງຂັນໃນການແລກປ່ຽນຂໍ້ມູນ ແລະ ການປະສານສົມທົບກັນຢ່າງແຂງຂັນຂອງຄູ່ຮ່ວມພັດທະນາຕ່າງໆ.
ສ່ວນໜຶ່ງຂອງກົນໄກການປະສານງານໂດຍລວມ ແມ່ນຄະນະວິຊາການຂອງຂະແໜງການ ອາຫານ ໂຮງຮຽນ, ທີ່ເຮັດວຽກໃນສຳລັບ ໂຄງການ ອາຫານ ໂຮງຮຽນແຫ່ງຊາດ.

ຄະນະປະຕິບັດງານ ດ້ານກະສິກຳ ແລະພັດທະນາຊົນນະບົດ (SWG-ARD): ສ່ວນໜຶ່ງຂອງ ກອງປະຊຸມໂຕະມົນ (RTM) ທີ່ເປັນຂັ້ນຕອນປະສານງານການຊ່ວຍເຫຼືອຂອງສາກົນ, ຄະນະປະຕິບັດງານຂອງຂະແໜງການ ແມ່ນໄດ້ຮັບການສ້າງຂຶ້ນ ແລະ ສືບຕໍ່ເຮັດໜ້າທີ່ເພື່ອຮັບປະກັນຄວາມຄືບໜ້າ ໃນການປະຕິບັດເປົ້າໝາຍທີ່ກຳນົດໄວ້ໃນ ແຜນ ຜພສຊ ໃຫ້ບັນລຸຜົນ, ແລະ ຜູ້ມີສ່ວນຮ່ວມທຸກຄົນແມ່ນຮັບຮູ້ເຖິງການພັດທະນາໃນຂະແໜງການດັ່ງກ່າວ.

ໜຶ່ງໃນຄະນະທີ່ເຮັດວຽກຢ່າງຕັ້ງໜ້າ ແມ່ນຄະນະປະຕິບັດງານຍ່ອຍ ກ່ຽວກັບກະສິກຳ ແລະ ການພັດທະນາຊົນນະບົດ (SWG-ARD).
ຄະນະປະຕິບັດງານຍ່ອຍ ກ່ຽວກັບກະສິກຳ ແລະ ການພັດທະນາຊົນນະບົດ(SWG-ARD) ແມ່ນການເປັນປະທານຂອງທ່ານຮອງລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ແລະ ໂດຍການ ເປັນ

ປະທານຮ່ວມຂອງ ເອກະອັກຄະລັດຊະທູດຝຣັ່ງ ແລະ ຫົວໜ້າອົງການ ກອງທຶນສາກົນເພື່ອການພັດທະນາກະສິກຳ (IFAD).

ຄະນະດັ່ງກ່າວ ປະຊຸມຮ່ວມກັນສາມຄັ້ງຕໍ່ປີ, ໂດຍຄະນະ SWG-ARD ຈະໃຫ້ມີການປຶກສາຫາລືກັນ ແລະ ປະສານ ສົມທົບລະຫວ່າງພາກສ່ວນລັດຖະບານ, ຄູ່ຮ່ວມພັດທະນາ ແລະ ຜູ້ມີສ່ວນຮ່ວມຕ່າງໆ ໃນຂະແໜງກະສິກຳ ແລະ ການພັດທະນາຊົນນະບົດ, ສົ່ງເສີມການພັດທະນາຂະແໜງການລວມທັງການປຶກສາຫາລືດ້ານນະໂຍບາຍ ແລະ ການວາງບູລິມະສິດຮ່ວມກັນ, ການລະດົມ ຊັບພະຍາກອນ, ການຈັດການທີ່ມຸ້ງເນັ້ນຜົນຮັບ ແລະ ການຕິດຕາມຄວາມຄືບໜ້າ ແລະ ຜົນສຳເລັດຕ່າງໆ, ແລະ ອຳນວຍຄວາມ ສະດວກໃນການຈັດຕັ້ງປະຕິບັດແຜນການທີ່ກ່ຽວຂ້ອງກັບຂະແໜງການ ແລະ ເປົ້າໝາຍແຜນປະຕິບັດງານຂອງ ປະເທດພາຍໃຕ້ກອບຖະແຫຼງການວຽງຈັນ.

ນອກເໜືອຈາກທີ່ກ່າວມາຂ້າງເທິງນັ້ນ, ຄະນະປະຕິບັດງານຍ່ອຍກ່ຽວກັບກະສິກຳ ແລະ ການພັດທະນາຊົນນະບົດ (SWG-ARD) ຍັງຊີ້ນຳຄະນະປະຕິບັດງານຍ່ອຍ ກ່ຽວກັບທຸລະກິດກະສິກຳ, ຊີວະນາໆພັນກະສິກຳ ແລະ ກະສິກຳເຂດເນີນສູງ.

ຄະນະປະຕິບັດງານຍ່ອຍ ກ່ຽວກັບທຸລະກິດກະສິກຳ ແມ່ນໄດ້ດຳເນີນງານມາຫຼາຍກວ່າສິບປີ, ແລະ ໄດ້ສ້າງ ໜ່ວຍງານຄົ້ນຄວ້າປະສົບການຂອງຜູ້ຜະລິດຂະໜາດນ້ອຍ ໃນດ້ານທຸລະກິດກະສິກຳ. ຄະນະຄົ້ນຄວ້າດ້ານນະໂຍບາຍ ຢູ່ ສຄກປ ໄດ້ສະໜອງການວິເຄາະນະໂຍບາຍ ແລະ ຫຼັກຖານ ປັບປຸງໃຫ້ແກ່ ຄະນະປະຕິບັດງານຍ່ອຍກ່ຽວກັບ ກະສິກຳ ແລະ ການພັດທະນາຊົນນະບົດ (SWG-ARD) ເພື່ອສະໜັບສະໜູນ ການສ້າງນະໂຍບາຍໃຫ້ມີຜົນດີກວ່າເກົ່າ. ແລະ ໃນວ່າງມໍ່ໆມານີ້ ນະໂຍ ບາຍໂດຍຫຍໍ້ພາຍໃຕ້ຫົວຂໍ້ 'ສະພາບໂພຊະນາການຂອງເດັກ, ຄວາມຫຼາກຫຼາຍໃນການບໍລິໂພກອາຫານ ແລະ ຊົນເຜົ່າຢູ່ ສປປ ລາວ ທີ່ໄດ້ຮັບການຕີພິມໃນເດືອນມີນາ 2014.

3.2.2 ອົງການຈັດຕັ້ງທາງສັງຄົມປະຈຸບັນມີອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ 75 ອົງການ, ສະມາຄົມບໍ່ຫວັງຜົນກຳໄລ (NPAs) 140 ອົງການ ແລະ 9 ມູນລະນິທິທີ່ໄດ້ຈົດທະບຽນຢ່າງເປັນທາງການຢູ່ ສປປລາວ (Directory of International Non-Governmental Organizations 2014, ກະຊວງພາຍໃນ 2013).

ໃນທັງໝົດ 140 ສະມາຄົມ, ມີ 43 ສະມາຄົມ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນງານໃນປະເທດ. ອົງການຈັດຕັ້ງທາງສັງຄົມເຫຼົ່ານີ້ ແມ່ນມີບົດບາດສຳຄັນ ໃນການເຂົ້າຮ່ວມການປະຕິບັດວຽກງານການຄ້ຳປະກັນທາງດ້ານສະບຽງອາຫານ ແລະໂພຊະນາການ ໃນທຸກລະດັບ ແລະ ໃນການເຮັດວຽກຮ່ວມກັນກັບບັນດາຜູ້ມີສ່ວນ ຮ່ວມຫຼັກທັງໝົດ. ການປຸກລະດົມປູກຈິດສຳນຶກ ແລະ ການປຸກລະດົມໂດຍ ອົງການຈັດຕັ້ງສັງຄົມແມ່ນອົງປະກອບຫຼັກ ສຳລັບການປ່ຽນແປງ ແລະ ການສົ່ງເສີມໃຫ້ສັງຄົມມີສ່ວນຮ່ວມໃນບັນຫາສຳຄັນຕ່າງໆເພື່ອບັນລຸເປົ້າໝາຍການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ.
ອົງການຈັດຕັ້ງສັງຄົມຢູ່ທ້ອງຖິ່ນ ສ່ວນໃຫຍ່ແມ່ນເຮັດວຽກຢູ່ຂັ້ນພື້ນຖານ ແລະ ມີຄວາມຮູ້ກ່ຽວກັບທ້ອງຖິ່ນດີເພື່ອສະໜອງການບໍລິການຢ່າງ ມີປະສິດທິພາບ ແລະ ປະສິດທິຜົນ.
ອົງການຈັດຕັ້ງສັງຄົມ ຍັງປະກອບສ່ວນ ສຳຄັນຕໍ່ການພັດທະນາທີ່ສະເໝີພາບ ແລະ ຍືນຍົງ. ພວກເຂົາ ເຈົ້າປະກອບສ່ວນໃສ່ການສ້າງຄວາມຫຼາກຫຼາຍ ແລະ ຄຸນນະ ພາບຂອງການປຶກສາຫາລືດ້ານການພັດທະນາ, ບາງຄັ້ງສາມາດຄາດເດົາ ການພັດທະນາທີ່ສຳຄັນໃນຕໍ່ໜ້າໄດ້ແຕ່ເລີ່ມຕົ້ນ.

ນອກເໜືອຈາກມີຜູ້ເຂົ້າຮ່ວມທີ່ຂ້ອນຂ້າງກວ້າງຂວາງທີ່ສະໜັບສະໜູນ ແລະ ການມີອົງການຈັດຕັ້ງສັງຄົມ ແມ່ນມີຄວາມສຳຄັນເປັນພິເສດ ສຳລັບການພັດທະນາວິຊີດການເປັນຢູ່ເຂດຊົນນະບົດ- ເພາະວ່າ ອົງການຈັດຕັ້ງສັງຄົມສາມາດໃຫ້ການບໍລິການໃນເຂດຊົນນະບົດໄດ້ເຊິ່ງການ ບໍລິການຂອງລັດ ແມ່ນຍາກທີ່ຈະເຂົ້າເຖິງໄດ້ - ລະດັບການຮ່ວມມືຢ່າງຕັ້ງໜ້າ ແລະ ການປະສານສົມທົບກັບລັດຖະບານ ແມ່ນຍັງບໍ່ທັນໄດ້ ເຮັດຕາມໂອກາດ ແລະ ຄວາມເປັນໄປໄດ້ ເທົ່າທີ່ຄວນ.

3.2.3 ການເລັ່ງລັດ ພາຍໃຕ້ລະບົບ ຂອງອົງການ ສະຫະປະຊາຊາດ ແລະ ທະນະຄານໂລກ ການສະໜັບສະໜູນໃຫ້ແກ່ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການເປັນການນຳສະເໜີບົດບາດສຳຄັນຂອງອົງການສະຫະປະຊາຊາດ ແລະ ມັນໄດ້ຖືກເຊື່ອມສານເຂົ້າໃນກອບຄວາມຊ່ວຍເຫລືອເພື່ອການພັດທະນາ ແຫ່ງສະຫະປະຊາຊາດ ສຳລັບ ສປປລາວ,
ແຜນງານ ຂອງອົງການ ສະຫະປະຊາຊາດ ແລະ ແຜນປະຕິບັດການ.

ທະນາຄານໂລກ ແມ່ນມີກິດຈະ ກຳທີ່ກວ້າງຂວາງ, ປະກອບສ່ວນໃສ່ການສ້າງລາຍໄດ້ ແລະ ການຜະລິດສະບຽງອາຫານ, ດັ່ງນັ້ນຈິ່ງສະໜັບສະໜູນການຮັບປະກັນທາງດ້ານສະບຽງອາຫານໂດຍກົງ ແລະ/ຫຼື ທາງອ້ອມ ໃນພາກ ພື້ນແມ່ນ້ຳຂອງ.

ກອບວຽກການເລັ່ງລັດເປົ້າໝາຍ ແຫ່ງສະຫະສະວັດ ວິທີທາງທີ່ເປັນລະບົບ ສຳລັບ ສປປ ລາວ (ແລະ ປະເທດອື່ນໆ) ເພື່ອຊ່ວຍໃນການສ້າງແຜນປະຕິບັດການຂອງຕົນເອງ ແລະ ຂັ້ນຕອນຕ່າງໆ ເພື່ອປະຕິບັດບູລິມະສິດ ຂອງ ເປົ້າໝາຍແຫ່ງສະຫະສະຫັວດໃຫ້ສຳເລັດ.
ເປົ້າໝາຍແຫ່ງສະຫະສະຫັວດ ແມ່ນສ້າງຂຶ້ນບົນຄວາມຮູ້ ແລະ ປະສົບການທີ່ມີຢູ່ແລ້ວຂອງປະເທດ, ລວມທັງນະໂຍບາຍ ແລະ ຂັ້ນຕອນການວາງແຜນ, ແລະຊ່ວຍໃນການພັດທະນາການຮ່ວມມືໃນລະດັບປະເທດ, ພ້ອມດ້ວຍຄວາມຮັບຜິດຊອບຮ່ວມກັນຂອງຄູ່ຮ່ວມງານທຸກພາກສ່ວນ, ມຸ່ງສູ່ຄວາມພະຍາຍາມ ໃນການບັນລຸເປົ້າໝາຍ ແເຫ່ງສະຫະສະຫັວດ , ແລະ ເລັ່ງກະຕຸ້ນການປະຕິບັດເປົ້າໝາຍແເຫ່ງສະຫະສະຫັວດ ທີ່ມີຄວາມລ່າຊ້າ.

ອີງຕາມຄວາມຕ້ອງການຂອງບັນດາປະເທດຕ່າງໆ, UNDP, ໂດຍການປະສານງານກັບອົງການຈັດຕັ້ງໃນລະບົບຂອງສະຫະປະຊາຊາດ, ແມ່ນໄດ້ສະໜັບສະໜູນ ການພັດທະນາແຜນປະຕິບັດງານເລັ່ງກະຕຸ້ນ ເປົ້າໝາຍແຫ່ງສະຫະສະຫັວດ ຢູ່ ສປປ ລາວ.

3.2.4 ການມີສ່ວນຮ່ວມຂອງພາກເອກະຊົນໃນຄວາມໝັ້ນຄົງ

ທາງດ້ານສະບຽງອາຫານ ແລະ ໂພຊະນາການ ໃນໄລຍະນຶ່ງທົດສະວັດທີ່ຜ່ານມາ, ສປປ ລາວ ໄດ້ດຳເນີນບາດກ້າວຕ່າງໆ ເພື່ອມຸ່ງສູ່ການຮອງຮັບດ້ານສິ່ງແວດລ້ອມເພື່ອການຄ້າ, FDI ແລະ ການສະໜັບ ສະໜູນການໄຫຼວຽນຂອງສິນຄ້າແລະ ການບໍລິການຢ່າງອິດສະຫຼະ ພາຍໃນເຂດພາກພື້ນ.

ປະເທດລາວ ໄດ້ເຂົ້າເປັນ ສະມາຊິກຂອງອົງການ WTO ໃນປີ 2013, ແລະ ໄດ້ຊຸກຍູ້ໃຫ້ປະເທດກາຍມາເປັນປະເທດທີ່ເຊື່ອມຕໍ່ເຂດພາກພື້ນ ແທນທີ່ຈະເປັນປະເທດທີ່ບໍ່ມີ ທາງອອກສູ່ທະເລ, ແລະ ຈະສ້າງໃຫ້ກາຍເປັນ ‘ໝໍ້ໄຟຂອງອາຊີ, ສົ່ງເສີມການລົງທຶນໃນປະເທດ ໃສ່ໂຄງລ່າງພື້ນຖານ ແລະ ຂະແໜງພະລັງງານ.
ໂດຍການເປັນເຈົ້າການຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ, ລັດຖະບານໄດ້ມີ ຄວາມພະຍາຍາມຢ່າງຫຼວງຫຼາຍ ເພື່ອປັບປຸງການລົງທຶນໃສ່ ການປ່ຽນແປງ ຂອງ ດິນຟ້າອາກາດ, ໂດຍຜ່ານທາງນິຕິກຳ, ລະບຽບການ ແລະ ກອບວຽກດ້ານອາກອນ ທີ່ເປັນຜົນປະໂຫຍດຕໍ່ນັກລົງທຶນ (ລັດຖະບານ ສປປ ລາວ ແລະ UN 2013).

ເນື່ອງຈາກທີ່ຕັ້ງທີ່ຢູ່ໃຈກາງຂອງທະວີບອາຊີຕາເວັນອອກສ່ຽງໃຕ້ ແລະ ຍ້ອນຖານ ຊັບພະຍາກອນ, ສປປ ລາວຍັງຄົງເປັນຈຸດໝາຍການລົງທຶນທີ່ດຶງດູດສຳລັບການລົງທຶນຕ່າງປະເທດໃນຂະແໜງກະສິກຳ ແລະ ຂະແໜງຊັບພະຍາກອນທຳມະຊາດ, ແລະ ລັດຖະບານໄດ້ສົ່ງເສີມການເປີດກວ້າງຂະແໜງການເຫຼົ່ານີ້ໃຫ້ແກ່ການລົງທຶນຕ່າງປະເທດ ເປັນ ເວລາຫຼາຍກວ່າໜຶ່ງທົດສະວັດແລ້ວ.

ໃນໄລຍະກາງ, ມີຄວາມເປັນໄປໄດ້ທີ່ແນວໂນ້ມໃນໄລຍະນີ້ ຈະສືບຕໍ່ດຳເນີນການ ມຸ່ງສູ່ການຫັນເປັນ ການຄ້າ ແລະ ການຮ່ວມເຂົ້າກັນໃຫ້ຫຼາຍຂຶ້ນ,ໂດຍມີການຜັກດັນຈາກການລົງທຶນໂດຍກົງຂອງຕ່າງປະເທດ (FDI).

ພາຍໃຕ້ລະບົບທີ່ກ່ຽວຂ້ອງກັບອາຫານ, ຂະແໜງການເອກະຊົນເປັນຜູ້ມີບົດບາດ ທີ່ໄດ້ເຂົ້າຮ່ວມໃນຫຼາຍບາດກ້າວຂອງການຜະລິດ ສະບຽງອາຫານ, ຂັ້ນຕອນ, ການສະໜອງ ແລະ ການບໍລິໂພກ ຢູ່ ສປປ ລາວ. ໃນລະດັບຜູ້ບໍລິໂພກ, ຮ້ານຄ້າໃຫ່ຍ ແມ່ນພົບສ່ວນຫຼາຍຢູ່ເຂດຕົວເມືອງໃນຂອບເຂດທົ່ວປະເທດ, ທີ່ແຂ່ງຂັນກັບລະບົບຕະຫຼາດທ້ອງຖິ່ນແບບດັ້ງເດີມ.

ການເຊື່ອມໂຍງ ຕ່ອງໂສ້ການການຜະລິດ ກັບພາກພື້ນແມ່ນເປັນການເສີມຂະຫຍາຍຂະໜາດຂອງການຜະລິດເພື່ອຄຸ້ມກັບການລົງທຶນພ້ອມດຽວກັນນັ້ນຍັງເປັນການຫຼຸດຜ່ອນລາຄາຂອງຜົນຜະລິດ. ນອກເໜືອຈາກເຂດຕົວເມືອງໃຫຍ່ແລ້ວ, ອາຫານທີ່ນຳເຂົ້າສ່ວນໃຫຍ່ ແມ່ນມີແນວໂນ້ມ ທີ່ຈະມີລາຄາຕ່ຳ ແລະ ຄຸນນະພາບຕ່ຳ. ການເພີ່ມ ການເຂົ້າເຖິງອາຫານນຳເຂົ້າ ແມ່ນບໍ່ສອດຄ້ອງກັບຜົນຮັບຂອງໂພຊະນາການ ທີ່ໄດ້ຮັບການປັບປຸງ.
ຄຸນຄ່າຂອງຕະຫຼາດຂາຍຍ່ອຍ ແລະ ການຂາຍຍົກຢ່າງເປັນທາງການ ແມ່ນຖືກແຊງໜ້າໂດຍເຄືອຂ່າຍການຄ້ານອກລະບົບທີ່ກວ້າງຂວາງ ເຊິ່ງອາຫານແມ່ນນຳເຂົ້າມາໃນປະເທດຈາກປະເທດເພື່ອນບ້ານ,ໂດຍສະເພາະແມ່ນປະເທດໄທຕາມຊາຍແດນແມ່ນ້ຳຂອງ, ສສ ຫວຽດນາມ ຕາມເຂດຊາຍແດນທາງຕາເວັນອອກ, ແລະ ສປ ຈີນ ຈາກເຂດພູສູງທາງພາກເໜືອ.

ໂດຍທົ່ວໄປແລ້ວ, ການສະໜອງອາຫານແບບນີ້ ແມ່ນເປັນລັກສະນະການຄ້າຂ້າມຊາຍແດນ ໃນລະດັບຜູ້ຄ້າຂາຍບຸກຄົນ, ລວມທັງຊາວຄ້າຂາຍຫຼາຍຄົນທີ່ເປັນແມ່ຍິງເຊິ່ງເປັນຜູ້ນຳເຂົ້າຜະລິດຕະພັນຂ້າມຊາຍແດນເພື່ອຂາຍໃນຕະຫຼາດພາຍໃນ, ຢູ່ຕາມຮ້ານຄ້ານ້ອຍ ແລະ ຮ້ານຄ້າຂາຍຍ່ອຍຂອງບຸກຄົນທີ່ຢູ່ນອກເຂດໂຮງຮຽນ, ໂຮງໝໍ ແລະ ສະຖານີລົດໂດຍສານ. ຕະຫຼາດພາຍໃນມີການຂາຍສັດທີ່ມີໂປຼຕີນ ທີ່ສາມາດຊື້ຫາໄດ້ທົ່ວໄປ, ໝາກໄມ້ ແລະ ຜັກ ແມ່ນຂຶ້ນກັບລະດູການ, ການນຳເຂົ້າຂະໜາດໃຫຍ່, ການນຳເຂົ້າເລັກນ້ອຍ ເພື່ອຮັກສາ ແລະ ປັບປຸງການສະໜອງສະບຽງອາຫານຕະຫຼອດປີ ແລະ ມັນມີຄວາມສຳຄັນ, ປົກກະຕິ ແລະ ເປັນອົງປະກອບທີ່ແຜ່ຂະຫຍາຍໃນລະບົບຕະຫຼາດຢູ່ລາວໂດຍທົ່ວໄປ.

ຄຸນຄ່າລວມ ແລະ ປະລິມານຂອງການຄ້າຂາຍອາຫານຂ້າມປະເທດນອກລະບົບ ແມ່ນບໍ່ສາມາດຮູ້ໄດ້, ແຕ່ທີ່ແນ່ນອນແລ້ວແມ່ນ ມັນ ເປັນແຫຼ່ງ ສະໜອງອາຫານ ທີ່ສຳຄັນ ຂອງປະເທດພ້ອມທັງເປັນ ອົງປະກອບທີ່ສຳຄັນໃຫ້ແກ່ການດຳລົງຊີວິດ.

ໃນໄລຍະການທົບທວນຄັ້ງນີ້, ການສ້າງຕັ້ງ ຕາໜ່າງທຸລະກິດຜັນຂະຫຍາຍ ໂພຊະນາການ (SUN Business Network) ທີ່ກຳລັງດຳເນີນການແມ່ນມີຄວາມຄາດຫວັງໃນລະດັບພໍສົມຄວນ.

ຄວາມເປັນໄປໄດ້ໃນການຮ່ວມມື ແມ່ນມີຢູ່ເດີມ ແລ້ວ, ລວມທັງການສື່ສານເພື່ອການປ່ຽນທາງດ້ານພຶດຕິກຳ, ການເລືອກເຕີມສານອາຫານ, ແລະ ຍຸດທະສາດການຕະຫຼາດທີ່ຮອງຮັບກຸ່ມຄົນທຸກຍາກ.

ໂດຍສະເພາະແມ່ນຕິດພັນກັບການພັດທະນາທຸລະກິດກະສິກຳ, ຄະນະປະຕິບັດງານຍ່ອຍ ກ່ຽວກັບການປູກຝັງ ແລະ ທຸລະກິດກະສິກຳ (SSWG-FAB) ໄດ້ຮັບການຮັບຮອງໃນປີ 2006 ແລະ ນັບແຕ່ນັ້ນເປັນຕົ້ນມາ ໄດ້ສະແດງໃຫ້ເຫັນເຖິງການ ເຄື່ອນໄຫວຢ່າງຕັ້ງໜ້າກ່ຽວກັບບັນຫາການພັດທະນາຊາວກະສິກອນທີ່ເປັນຜູ້ຜະລິດສະບຽງອາຫານຂະໜາດນ້ອຍ.
ຄະນະ SSWG-FAB ແນໃສ່ ກຳນົດທາງເລືອກຕ່າງໆ ແລະ ໂອກາດໃນການສົ່ງເສີມການພັດທະນາທຸລະກິດກະສິກຳ ໃນຮູບແບບທີ່ເສີມສ້າງຄວາມເຂັ້ມແຂງ ໃຫ້ແກ່ຜູ້ຜະລິດສະບຽງອາຫານຂະໜາດນ້ອຍ, ລວມທັງທາງເລືອກດ້ານນະໂຍບາຍ ແລະ ບູລິມະສິດໃນການ ສ້າງຂີດ ຄວາມສາມາດ.

3.2.5 ສະຖາບັນການສຶກສາ ແລະສະຖາບັນຄົ້ນຄວ້າຈາກມູມມອງຂອງລັດຖະບານ ແລະ ສະຖາບັນການສຶກສາ ແລະ ສະຖາ ບັນຄົ້ນຄວ້າທີ່ສຳຄັນທີ່ສຸດ ແມ່ນມະຫາວິທະຍາໄລ ແຫ່ງ ຊາດ (ມຊ), ສະຖາບັນຄົ້ນຄວ້າເສດຖະກິດ (ສຄສ), ແລະ ສະຖາ ບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ (ສຄກປ), ແລະ ສະຖາບັນຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຂອງກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ‘ກອງປະຊຸມ ຄົ້ນຄວ້າເພື່ອການພັດທະນາແຫ່ງຊາດ/
National Research for Development Forum’

ໄດ້ຈັດຂຶ້ນໂດຍ ມຊ, ສະຖາບັນຄົ້ນຄວ້າກະສິກຳ ແລະປ່າໄມ້ແຫ່ງຊາດ, ແລະ ສຄສ ໃນປີ 2014 ແລະ 2015.
ກອງປະຊຸມເຂດພາກພື້ນກ່ຽວກັບຄວາມທົນທານຕໍ່ການປ່ຽນແປງສະພາບດິນຟ້າອາກາດ, ລະບົບການປູກຝັງຂອງຊາວກະສິກອນຂະໜາດນ້ອຍ ແລະ ການຮັບປະກັນທາງດ້ານສະບຽງອາຫານແມ່ນໄດ້ຮັບການຈັດຂຶ້ນສອງຄັ້ງຕໍ່ປີໂດຍ ສກກປ, ໃນປີ 2013 ແລະ 2015.

ດັ່ງທີ່ໄດ້ກ່າວມາໃນພາກ 3.2.1, ກຊກປ ໂດຍການສະໜັບສະໜູນຈາກຄູ່ຮ່ວມພັດທະນາ ທີ່ໄດ້ສ້າງຄະນະຄົ້ນຄວ້ານະໂຍບາຍ (policy think tank) ໃນປີ 2013. ວຽກງານຂອງ policy think tank ແມ່ນສຸມໃສ່ຄວາມປອດໄພດ້ານສະບຽງອາຫານ ແລະ ໂພຊະນາການ, ກະສິກຳການຄ້າ, ການເຂົ້າເຖິງຕະຫຼາດ, ການພັດທະນາແບບຍືນຍົງເຂດເນີນສູງຢູ່ພາກເໜືອ.
ໃນລະດັບທ້ອງຖິ່ນ, ການເປັນຕົວແທນຂອງ ກົມກອງທີ່ກ່ຽວຂ້ອງ, ສະຖາບັນຄົ້ນຄວ້າ ແລະ ຫ້ອງການອື່ນໆ ແມ່ນກວມເອົາຢູ່ທົ່ວປະເທດ.

ອົງການຈັດຕັ້ງສາກົນ ແລະ ພາກພື້ນ ພາຍໃຕ້ ສະພາທີ່ປຶກສາດ້ານການວິໄຈກະສິກຳນາໆຊາດ (CGIAR), ລວມທັງສະຖາບັນຄຸ້ມຄອງນ້ຳສາກົນ (IWMI), ສະຖາບັນວິໄຈເຂົ້ານາໆຊາດ (IRRI), ການລິເລີ່ມວຽກງານຄົ້ນຄວ້າເຂດພາກພື້ນ ເຊັ່ນ: ສະຖາບັນແມ່ນ້ຳຂອງ ແລະ ຄະນະກຳມະການແມ່ນ້ຳຂອງ, ແລະ ອົງການຄົ້ນຄວ້າສອງຝ່າຍອື່ນໆທີ່ຫຼາກຫຼາຍທີ່ດຳເນີນງານຢ່າງຕັ້ງໜ້າຢູ່ລາວ, ທັງວຽກງານຄົ້ນຄວ້າ ແລະ ໂຄງການພັດທະນາຂະໜາດນ້ອຍຂອງຕົນເອງ.

ໄດ້ມີຄວາມພະຍາຍາມທີ່ຈະນຳເອົາວິທະຍາສາດແລະຂັ້ນຕອນດ້ານນະໂຍບາຍຮ່ວມເຂົ້າກັນ. ສິ່ງສຳຄັນທີ່ສຸດຂອງວຽກງານເຫຼົ່ານັ້ນປະຈຸບັນແມ່ນ ສະພາທີ່ປຶກສາດ້ານການວິໄຈກະສິກຳນາໆຊາດ (CGIAR), ການລິເລີ່ມຄົ້ນຄວ້າເລື່ອງ ນ້ຳ, ດິນ ແລະ ລະບົບນິເວດ (WLE) ແນໃສ່ປັບປຸງການບໍລິຫານ ແລະ ການຄຸ້ມຄອງຊັບພະຍາກອນນ້ຳ ແລະ ທີ່ດິນ ແລະ ລະບົບນິເວດໃນເຂດພາກພື້ນແມ່ນ້ຳຂອງໂດຍການສ້າງ ແລະ ແລກປ່ຽນ ຄວາມຮູ້ ແລະ ການປະຕິບັດທີ່ເປັນບົດຮຽນທີ່ດີ. ນ້ຳ, ດິນ ແລະ ລະບົບນິເວດ (WLE) ໄດ້ຈັດຕັ້ງການປະຊຸມປຶກສາຫາລືດ້ານວິທະຍາສາດ-ນະໂຍບາຍຫຼາຍຄັ້ງ, ໂດຍເຊື້ອເຊີນ ເອົານັກຄົ້ນຄວ້າ ແລະ ຜູ້ວາງນະໂຍບາຍ ລະດັບອາວຸໂສ ເຊັ່ນ: ທ່ານລັດຖະມົນຕີ/ຮອງລັດຖະມົນຕີ ແລະ ປະທານ/ຮອງປະທານຂອງຄະນະກຳມະການພາຍໃຕ້ສະພາແຫ່ງຊາດ.

ກອງປະຊຸມ ແລະ ສຳມະນາຕ່າງໆກ່ຽວກັບຫຼາຍຫົວຂໍ້ທີ່ກ່ຽວຂ້ອງກັບສະບຽງອາຫານ ແລະ ໂພຊະນາການເກີດຂຶ້ນຕະຫຼອດທັງປີ, ທັງລະດັບສາກົນ, ພາກພື້ນ ແລະ ລະດັບປະເທດ (ສ່ວນໃຫຍ່ແມ່ນຢູ່ວຽງຈັນ).
ມີບົດພິມ, ບົດສະເໜີ, ບົດບັນທຶກກອງປະຊຸມ ແລະ ບົດຄັດຫຍໍ້, ເອກະສານແນວຄວາມຄິດ ທີ່ມີຂໍ້ມູນເລິກເຊິ່ງທີ່ໜ້າສົນໃຈຈາກການປຶກສາຫາລືເຫຼົ່ານີ້. ແຕ່ບໍ່ທັນມີ ຮູບແບບ ທີ່ຈະຮວບຮວມເອົາບັນດາຂໍ້ມູນເຫຼົ່ານັ້ນຢ່າງເປັນລະບົບ, ແຕ່ມີຂໍ້ຍົກເວັ້ນ ສຳລັບຄວາມພະຍາຍາມທີ່ເປັນລັກສະນະສະໝັກໃຈ ຂອງຜູ້ຮັບຜິດ ຊອບປ້ອນຂໍ້ມູນຂອງເວັບໄຊ LaoFab (www.laofab.org).

ການຄົ້ນຄວ້າສະເພາະ ໂດຍຊ່ຽວຊານທີ່ປຶກສາເອກະຊົນ ແມ່ນໄດ້ຮັບການສະໜອງທຶນຮອນໂດຍຜູ້ໃຫ້ທຶນຫຼັກ, ທະນາຄານເພື່ອການພັດທະນາ, ແລະ ບັນດາອົງການສະຫະປະຊາຊາດ.
ການຄົ້ນຄວ້າທີ່ກ່ຽວກັບໂຄງການ ສ່ວນຫຼາຍແມ່ນ ດຳເນີນໂດຍ ອສບລ ສາກົນ/ອສບລ (Care, ອົງການສາກົນເພື່ອການອະນຸລັກທຳມະຊາດ ແລະ ຊັບພະຍາກອນທຳມະຊາດ (IUCN), Oxfam, Save the Children, WCS, PLAN, ແລະອື່ນໆ) ແລະ ໂຄງການຂະໜາດໃຫຍ່. ກິດຈະກຳ ແລະ ການສຶກສາຄົ້ນຄວ້າສ່ວນໃຫຍ່ແມ່ນຂັບເຄື່ອນດ້ວຍຈຸດປະສົງອັນດຽວເພື່ອການນຳໃຊ້ຂອງຄູ່ຮ່ວມງານທີ່ເປັນຜູ້ດຳເນີນການຄົ້ນຄວ້າ, ຫຼືການສະໜັບສະໜູນໂດຍກົງໃຫ້ແກ່ການປະຕິບັດງານຂອງໂຄງການ.
ການສຶກສາທີ່ພົວພັນກັບຫຼາຍຂະແໜງການ ແລະ ຫຼາກຫຼາຍສາຂາທີ່ມີການເຊື່ອມ ສານກັນ ໃນລະດັບຈຸລະພາກ, ລະດັບກາງ ແລະ ລະດັບມະຫາພາກ ແມ່ນຫາຍາກ.

ປະສົບການສະແດງໃຫ້ເຫັນວ່າ ມີຫຼາຍໆເຫດການ ແລະການສຶກສາແມ່ນມີຄວາມສຳຄັນສຳລັບການສ້າງຂີດຄວາມສາມາດຂອງບຸກຄົນ ແລະ ຖ້າຫາກໄດ້ຮັບການວາງແຜນ ແລະ ປະສານງານທີ່ດີ, ມັນສາມາດສ້າງຜົນຮັບທີ່ດີໃຫ້ແກ່ການພັດທະນານະໂຍບາຍທີ່ອີງໃສ່ ຫຼັກຖານເປັນຫຼັກ ແລະ ການຕັດສິນໃຈ.
ການປະເມີນຜົນທີ່ເປັນລະບົບໂດຍລວມ ຍັງມີຈຳກັດ , ລວມທັງຄວາມເຂົ້າໃຈວ່າກິດຈະກຳການຄົ້ນຄວ້າ ຈະສາມາດເຊື່ອມສານເຂົ້າໃນຂັ້ນຕອນການສ້າງນະໂຍບາຍໄດ້ດີຂຶ້ນຄືແນວໃດ.

ສິ່ງສຳຄັນທີ່ສຸດ, ການເກັບກຳຂໍ້ມູນສະຖິຕິ ແມ່ນບໍ່ພຽງພໍ ທີ່ເຊື່ອມໂຍງກັບການຄົ້ນຄວ້າວິທະຍາສາດແບບຮ່ວມສະໄໝ.
ດ້ວຍເຫດນັ້ນການເຂົ້າຮ່ວມຢ່າງເຕັມສ່ວນກັບຊຸມຊົນພາຍໃນແລະພາກພື້ນໃນການສຶກສາຄົ້ນຄວ້າກ່ຽວກັບບັນຫາທີ່ຕິດພັນກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການແມ່ນຖືກປະເມີນຄ່າຕ່ຳໄປ, ແລະ ອາດຈະພິຈາລະນາເຫັນວ່າມີຄວາມກ່ຽວຂ້ອງ ທີ່ຈະຊ່ວຍໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDGs).

ໃນວ່າງມໍ່ໆມານີ້, ການຈັດວາງໂຄງສ້າງດ້ານສະຖາບັນ ແມ່ນແນໃສ່ການເສີມສ້າງຄວາມເຂັ້ມແຂງໃຫ້ແກ່ການໄຫຼວຽນຂອງຂໍ້ມູນແລະຜົນໄດ້ຮັບຈາກການຄົ້ນຄວ້າເຂົ້າໃນຂັ້ນຕອນການວາງແຜນແລະ ການຕັດສິນໃຈຂອງພັກ ແລະ ລັດ.

3.2.6 ສື່ມວນຊົນ, ການສື່ສານ ແລະ ຂໍ້ມູນສາທາລະນະໃນຊຸມປີຜ່ານມາບໍ່ດົນນີ້ ໄດ້ມີການປ່ຽນແປງທີ່ສຳຄັນຕໍ່ຂະແໜງການສື່ມວນຊົນ. ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ໄດ້ອອກທະບຽນອະນຸຍາດໃຫ້ແກ່ອົງການຈັດຕັ້ງພາກເອກະຊົນໃນການຈັດຕັ້ງສະຖານີໂທລະພາບ ແລະ ວິທະຍຸ ແລະ ສື່ສິ່ງພິມ ແລະ ໄດ້ຊື້ເວລາ ອອກອາກາດຈາກສະຖານີ ຂອງລັດ ແລະ ຊ່ອງວິທະຍຸ.
ສະຖານີວິທະຍຸກະຈາຍສຽງແຫ່ງຊາດ ແລະ ໂທລະພາບແຫ່ງຊາດ, ທັງຢູ່ສູນກາງ ແລະ ຂັ້ນແຂວງໄດ້ມີພາສາທ້ອງຖິ່ນອອກອາກາດພ້ອມ ເຊິ່ງໄດ້ຮັບການນິຍົມຊົມຊອບຂ້ອນຂ້າງສູງ.
ການນຳໃຊ້ອິນເຕີເນັດ ແມ່ນມີການເພີ່ມຂຶ້ນໃນຕົວເມືອງ ແລະ

ເຫດສະບານຂອງແຂວງຫຼວງພະບາງ, ສະຫວັນນະເຂດ, ຈຳປາສັກ ແລະ ແຂວງວຽງຈັນ. ເຄືອຂ່າຍທາງສັງຄົມ ເຊັ່ນ: Facebook ແລະ Twitter ແມ່ນທາງເລືອກທີ່ໄດ້ຮັບຄວາມນິຍົມ, ໂດຍສະເພາະ ແມ່ນ ກຸ່ມຊາວໜຸ່ມໃນຕົວເມືອງໃຫຍ່. Blogs ແລະ YouTube ແມ່ນເປັນທາງເລືອກໜຶ່ງ ( ສຳລັບຊາວໜຸ່ມ) ຢູ່ ສປປ ລາວເພື່ອຄົ້ນຄວ້າຊອກຫາຂໍ້ມູນ ແລະ ສະແດງຄຳຄິດເຫັນ.

ໂຄງການຂອງລັດຖະບານ (ໂດຍການສະໜັບສະໜູນຂອງຜູ້ໃຫ້ທຶນແລະ ອສບລ ສາກົນ) ສ່ວນໃຫຍ່ແມ່ນກະຊວງການສື່ສານ ແລະ ອຸປະກອນ ຮັບໃຊ້ການໂຄສະນາເຜີຍແຜ່ລວມທັງແຜ່ນພັບ, ວາລະສານ, ເວັບໄຊສຳລັບຜູ້ທີ່ເຂົ້າເບິ່ງຂໍ້ມູນຜ່ານທາງອິນເຕີເນັດ. ເຫດການທັງພາຍໃນ ແລະ ສາກົນ ແລະ ການສະເຫຼີມ ສະຫຼອງຕ່າງໆກໍ່ເປັນທາງເລືອກໜຶ່ງທີ່ສະໜອງໂອກາດໃນການເຜີຍແຜ່ ແລະ ແລກປ່ຽນຂໍ້ມູນ.

ປະຊາກອນລາວສ່ວນໃຫຍ່ ແມ່ນ ອາໄສຢູ່ເຂດຊົນນະບົດ ແລະ ສປປ ລາວ ເປັນ ປະເທດທີ່ມີລັກ ສະນະຮັ່ງ ມີທາງວັດທະນະທຳ ແລະ ຄວາມຫຼາກຫຼາຍດ້ານຊົນເຜົ່າ ໂດຍມີຊົນເຜົ່າທີ່ຖືກຮັບຮູ້ທາງການເຖິງ 49 ຊົນເຜົ່າ ທີ່ມີພາສາປາກເວົ້າແຕກຕ່າງ ຈາກພາສາລາວ ທີ່ເປັນພາສາທາງການ.
ການນຳໃຊ້ຊ່ອງທາງການສື່ສານທີ່ມີປະສິດທິຜົນ ແລະ ເຕັກນິກຕ່າງໆແມ່ນຈຳເປັນສຳລັບການໃຫ້ ຄວາມຮູ້ດ້ານ ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ.
ຮູບແບບການສື່ສານທີ່ແຕກຕ່າງກັນ ແມ່ນຈຳເປັນຕ້ອງໄດ້ຮັບການສ້າງຂຶ້ນ ແລະ ທົດລອງ ເພື່ອໃຫ້ເຂົ້າກັບສະພາບທີ່ແຕກຕ່າງກັນຢູ່ຕົວເມືອງ, ຊົນນະບົດ, ກຸ່ມຊົນເຜົ່າ, ແລະ ຜູ້ຊົມຜູ້ຟັງທີ່ເປັນເປົ້າໝາຍສະເພາະ (ເຊັ່ນ: ເດັກນ້ອຍ, ຊາວໜຸ່ມ ແລະ ຜູ້ສູງອາຍຸ).

3.3 ພື້ນຖານດ້ານງົບປະມານ ສຳລັບເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2ພາຍໃນກອບເວລາຂອງວາລະແຕ່ນີ້ຮອດປີ 2030, ສປປ ລາວ ມີແຜນທີ່ຈະຫັນປ່ຽນຈາກປະເທດທີ່ມີລາຍຮັບຕ່ຳ ມາເປັນປະເທດທີ່ມີລາຍ ຮັບປານກາງ.
ເຖິງແມ່ນວ່າການກຳນົດເວລາໃນການຄ່ອຍໆຫັນປ່ຽນດັ່ງກ່າຍັງຕ້ອງໄດ້ເບິ່ງຕໍ່ໄປ, ການຈຳກັດຄວາມວຸ້ນວາຍທາງເສດຖະກິດທີ່ເປັນບັນຫາໃຫຍ່ໃນລະດັບປະເທດ ຫຼື ລະດັບພາກພື້ນ, ຄາດວ່າປະເທດລາວຈະສາມາດບັນລຸເປົ້າໝາຍໄລຍະຍາວຂອງຕົນໄດ້ ປະມານປີ 2024. ການເຕີບໂຕທາງດ້ານເສດຖະກິດຄິດວ່າຈະສືບຕໍ່ໄປໃນໄລຍະກາງ, ໂດຍທະນາຄານພັດທະນາອາຊີ ໄດ້ຄາດຄະເນໄວ້ວ່າການເຕີບໃຫ່ຍດ້ານເສດຖະກິດແມ່ນຈະຢູ່ປະມານ 6.8 ແລະ 7 ສ່ວນຮ້ອຍ ສຳລັບປີ 2016 ແລະ 2017, ບວກກັບອັດຕາເງິນເຟີ້ທີ່ຕ່ຳລົງ.
ການເຕີບໃຫ່ຍດ້ານເສດຖະກິດ ຈະສືບຕໍ່ສ້າງຂຶ້ນບົນພື້ນຖານການຂະຫຍາຍເຂື່ອນໄຟຟ້ານ້ຳຕົກ, ບໍ່ແຮ່, ແລະ ການກໍ່ສ້າງ, ແລະ ຈະຂຶ້ນຢູ່ກັບຂໍ້ ຈຳກັດໃນການເຂົ້າເຖິງທຳມະຊາດ ເພື່ອການເຕີບໂຕ ອີງໃສ່ການຂຸດຄົ້ນຊັບພະຍາກອນທຳມະຊາດ.

ໃນໄລຍະກາງ ຮອດປີ 2025, ໂຄງການ ກໍ່ສ້າງພື້ນຖານໂຄງລ່າງໃຫຍ່ໆ ເຊັ່ນ: ເສັ້ນທາງລົດໄຟຄວາມໄວສູງ ຈາກຈີນ ຫາ ໄທ ແລະ ການປັບປຸງໂຄງລ່າງ ທີ່ຕິດພັນກັບ ໂຄງການທະນາຄານພັດທນາອາຊີ, ທະນາຄານລົງທຶນດ້ານໂຄງລ່າງ ອາຊີ (Asian Infrastructure Investment Bank), ໂຄງການ One Belt - One Road initiative, ໂຄງການລະບຽງເສດຖະກິດຂອງພາກພື້ນລຸ່ມແມ່ນ້ຳຂອງ (Greater Mekong Sub-region Economic Corridor) ແລະ ແຜນງານລິເລີ່ມຕ່າງໆຂອງເຂດພາກພື້ນ ແມ່ນມີຄວາມເປັນໄປໄດ້ ທີ່ຈະເກີດດອກອອກຜົນ.

ສປປ ລາວ ມີເປົ້າໝາຍແນໃສ່ສືບຕໍ່ສົກສວຍຜົນປະໂຫຍດຈາກທີ່ຕັ້ງຢູ່ຈຸດໃຈກາງຂອງທະວີບ ເພື່ອປັບປຸງສະຖານະຂອງປະເທດໃຫ້ກາຍເປັນສູນ ກາງ ທາງດ້ານພາລາທິການ (ໂດຍການປັບປຸງໂຄງລ່າງພື້ນຖານ), ແລະພື້ນຖານການຜະລິດ(ໂດຍການຂະຫຍາຍເຂດເສດຖະກິດພິເສດ (SEZ) ແລະ ສ້າງປະເທດໃຫ້ກາຍເປັນ 'ໝໍ້ໄຟແຫ່ງອາຊີ' (ໂດຍການຂະຫຍາຍ ເຂື່ອນໄຟຟ້ານ້ຳຕົກ).
ເສດຖະກິດຂອງ ສປປ ລາວ ໄດ້ມີການເຊື່ອມໂຍງເພີ່ມຂຶ້ນກັບບັນດາເສດຖະກິດພາກພື້ນຂະໜາດໃຫຍ່ (ເຊັ່ນ: ຈີນ, ໄທ ແລະ ຫວຽດ ນາມ), ການຮັກສາການເຕີບໂຕດ້ານເສດຖະກິດຂອງ ສປປ ລາວ ແມ່ນຂຶ້ນກັບຄວາມຕ້ອງການຢ່າງຕໍ່ເນື່ອງຂອງເສດຖະກິດ ຂອງບັນດາປະເທດເຫຼົ່ານັ້ນ - ການຊະລໍໂຕທາງດ້ານເສດຖະກິດຂອງສາກົນ ຫຼື ພາກພື້ນ ແມ່ນມີຄວາມເປັນໄປໄດ້ທີ່ມີຜົນກະທົບຕໍ່ ສປປ ລາວ ເຊັ່ນກັນ.

3.3.1 ການໄຫຼວຽນຂອງ ທຶນຊ່ວຍເຫຼືອເພື່ອການພັດທະນາ: ມູນຄ່າລວມຂອງເງິນໂດລາ ຈາກການໄຫຼວຽນຂອງ ທຶນຊ່ວຍເຫຼືອເພື່ອການພັດທະນາ(ODA)ແມ່ນໄດ້ເພີ່ມຂຶ້ນໃນໄລຍະສິບປີຜ່ານມາ, ແຕ່ວ່າໄດ້ຫຼຸດລົງເມື່ອທຽບກັບອັດຕາສ່ວນຂອງລວມຍອດຜະ ລິດຕະພັນພາຍໃນ ໂດຍລວມ.
ທຶນຊ່ວຍເຫຼືອເພື່ອການພັດທະນາ ໂດຍລວມ ແມ່ນເພີ່ມຂຶ້ນ 700 ລ້ານໂດລາສະຫະລັດຕໍ່ປີ ໃນປີ 2012, ແຕ່ວ່າອັດຕາສ່ວນຂອງລວມຍອດຜະລິດຕະພັນພາຍໃນແມ່ນຫຼຸດລົງຕ່ຳກວ່າ10ສ່ວນຮ້ອຍ (ລັດຖະບານລາວ ແລະ UN 2013).

ເມື່ອເສດຖະກິດສາມາດຮັກສາລະດັບອັດຕາການເຕີບໂຕຂອງມັນໃນລະດັບປະຈຸບັນໄດ້,ທຶນຊ່ວຍເຫຼືອເພື່ອການພັດທະນາໃນນາມທີ່ເປັນສ່ວນໜຶ່ງຂອງ ລວມຍອດຜະລິດຕະພັນພາຍໃນ (GDP) ຈະສືບຕໍ່ຫຼຸດລົງ, ຊີ້ໃຫ້ເຫັນຄວາມຈຳເປັນທີ່ຈະຕ້ອງເລີ່ມຕົ້ນວາງແຜນລ່ວງໜ້າພາຍໃຕ້ສະພາບການ ທີ່ຂໍ້ຜູກພັນດ້ານການເງິນທີ່ສຳຄັນໄດ້ຖືກເອົາເຂົ້າເປັນຮ່ວງງົບປະມານຂອງລັດ.
ຫຼາຍກວ່າ 80 ສ່ວນຮ້ອຍຂອງ ທຶນຊ່ວຍເຫຼືອເພື່ອການພັດທະນາແມ່ນໄດ້ສະໜອງໃຫ້ໃນຮູບແບບເງິນຊ່ວຍເຫຼືອລ້າຫຼືຮູບແບບການກູ້ຢືມໃນອັດຕາດອກເບັ້ຍຕ່ຳ ແລະ ສອງໃນສາມຂອງການຊ່ວຍເຫຼືອແມ່ນໂອນຜ່ານບັນດາກະຊວງ ເຊິ່ງເປັນໜ່ວຍງານຫຼັກໃນການຈັດຕັ້ງປະຕິ ບັດໂຄງການ ທຶນຊ່ວຍເຫຼືອເພື່ອການພັດທະນາ, ເຊິ່ງກໍ່ສະໜອງຊັບພະຍາກອນ ສຳລັບຍຸດທະສາດຂອງຂະແໜງການ. ກະຊວງສາທາລະນະສຸກ ແລະ ກະຊວງສຶກສາທິການ ແລະ ກິລາ ໄດ້ຮັບ ທຶນຊ່ວຍເຫຼືອ ໂດຍລວມ 16 ສ່ວນຮ້ອຍຂອງການເບີກຈ່າຍ ທຶນຊ່ວຍເຫຼືອເພື່ອການພັດທະນາທັງໝົດ, ໃນຂະນະທີ່ກະຊວງກະສິກຳ ແລະ ປ່າໄມ້ ແມ່ນໄດ້ 12 ສ່ວນຮ້ອຍ. ທາງດ້ານການໃຊ້ຈ່າຍ ທຶນຊ່ວຍເຫຼືອເພື່ອການພັດທະນາຕໍ່ຂະ

ແໜງການ, ການສຶກສາ ແລະ ກະສິ ກຳ ໄດ້ຮັບ 18 ສ່ວນຮ້ອຍ, ແລະ ສາທາ ໄດ້ຮັບ 13.5 ສ່ວນຮ້ອຍ. ຫຼາຍກວ່າ 30 ເປີເຊັນຂອງທຶນຊ່ວຍເຫຼືອເພື່ອການພັດທະນາ ທັງໝົດ ໂດຍລວມແມ່ນໄດ້ຮັບການຈັດສັນ ໃຫ້ແກ່ຂະແໜງ ສັງຄົມເພື່ອໃຊ້ຈ່າຍ, ໂດຍສະເພາະແມ່ນສາທາ ແລະ ສຶກສາ (ຂໍ້ມູນທັງໝົດໃນຂະ ແໜງການນີ້ແມ່ນໄດ້ມາຈາກ ລັດຖະບານ ສປປ ລາວ ແລະ UN 2013).
ໃນປີ 2015, ອົງການສະຫະປະຊາຊາດ ປະຈຳລາວ ໄດ້ສຳເລັດການທົບທວນ ການສະໜອງທຶນຊ່ວຍເຫຼືອຈາກໃນປະເທດເມື່ອທຽບກັບ ກອບຄວາມຊ່ວຍເຫລືອ ເພື່ອການພັດທະນາແຫ່ງສະຫະປະຊາຊາດ (UNDAF), ຜພສຄ, ແລະ ເປົ້າໝາຍການພັດທະນາແບບຍືນຍົງ (SDG).

ການວັດແທກເຫຼົ່ານີ້, ຕາມຜົນຮັບທີ 5 ຂອງ UNDAF (ປັບປຸງການຄ້ຳປະກັນ ທາງດ້ານສະບຽງອາຫານ ແລະ ໂພຊະນາການ), ຂອບເຂດບູລິມະສິດ 2.2 ໃນແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ 5ປີ ຄັ້ງທີ VIII (ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ການຂາດໂພຊະນາການມີອັດຕາຫຼຸດລົງ) ຫຼື ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (ລຶບລ້າງຄວາມອຶດຫິວ, ບັນລຸການຄ້ຳປະກັນສະບຽງອາຫານ ແລະ ປັບປຸງດ້ານໂພຊະນາການ ແລະ ສົ່ງເສີມການກະສິກຳແບບຍືນຍົງ), ຄຳໝັ້ນສັນຍາ, ຂໍ້ຜູກມັດ ແລະ ການຄາດຄະເນທຶນຮອນ ສຳລັບວຽກງານຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການແມ່ນສູງກວ່າ ຂະແໜງການອື່ນທັງໝົດໂດຍມີສ່ວນຕ່າງຂ້ອນຂ້າງຫຼາຍ. ໃນສະພາບຂອງ ເປົ້າໝາຍການພັດທະນາແບບຍືນຍົງ, ການສະໜອງທຶນຮອນ ສຳລັບ ເປົ້າໝາຍທີ 2 (SDG2) ໃນ 2015 ແລະ 2016 (37.3 ແລະ 32.4 ລ້ານໂດລາສະຫະລັດຕາມລຳດັບ) ແມ່ນຫຼາຍກວ່າທຸກໆ ເປົ້າໝາຍການພັດທະນາແບບຍືນຍົງ ລວມກັນ).
ງົບປະມານທີ່ຄາດຄະເນ ທີ່ກ່ຽວກັບ ແຜນປະຕິບັດງານດ້ານໂພຊະນາການແຫ່ງຊາດ ແມ່ນຄາດວ່າຈະມີຄ່າໃຊ້ຈ່າຍທັງໝົດ 411 ລ້ານໂດລາສະຫະລັດ ຕະຫຼອດໄລຍະ 4 ປີ (2016-2020), ເຊິ່ງ 174 ລ້ານໂດລາສະຫະລັດ ແມ່ນໄດ້ຖືກຈັດສັນໃຫ້ແກ່ຂະແໜງສາທາ ລະນະສຸກ, 144 ລ້ານ ແມ່ນສຳລັບຂະແໜງກະສິກຳ ແລະ 60 ລ້ານ ສຳລັບຂະແໜງສຶກສາ ແລະ 30 ລ້ານ ແມ່ນສຳລັບຂະແໜງ ການອື່ນໆ. ໃນຕົ້ນປີ 2016, ຍັງຄົງມີຊ່ອງວ່າງດ້ານທຶນຮອນ ປະມານ 200 ລ້ານໂດລາ 2016-2020 (ກະຊວງສາທາລະນະສຸກ 2016).

3.3.2 ທຶນຈາກພາກເອກະຊົນນອກເໜືອຈາກທຶນຊ່ວຍເຫຼືອເພື່ອການພັດທະນາ (ODA), ການຕິດຕາມດ້ານການເງິນຂອງການລົງທຶນທີ່ກ່ຽວຂ້ອງກັບ ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ແມ່ນໄດ້ຮັບການປັບປຸງຢ່າງເຫັນໄດ້ຊັດເຈນໃນປີຜ່ານມາ, ໂດຍມີ ຄະນະປະຕິບັດງານຍ່ອຍ ກ່ຽວກັບກະສິກຳ ແລະພັດທະນາຊົນນະບົດຊຶ່ງໄດ້ສະໜອງຂໍ້ມູນທີ່ສຳຄັນກ່ຽວກັບການສະໜອງທຶນຮອນທີ່ໄດ້ລະບຸໃນບົດລາຍງານປະຈຳປີ 2015 (SWG-ARD 2015). ອີງຕາມຂໍ້ມູນຂອງກະຊວງກະສິກຳ ແລະ ປ່າໄມ້ ທີ່ອ້າງອີງໃນບົດ ລາຍງານດັ່ງກ່າວ, ມີໂຄງການ 64 ໂຄງການ ທີ່ກຳລັງດຳເນີນ ຢູ່ໃນຂະແໜງກະສິກຳ ໃນປີ 2015, ໂດຍມີມູນຄ່າທັງໝົດ 416.8 ລ້ານໂດລາສະຫະລັດ.

ການລົງທຶນຂອງພາກເອກະຊົນ, ລວມທັງພາຍໃນ ແລະ ຕ່າງປະເທດ, ລວມທັງ 624 ບໍລິສັດທີ່ໄດ້ຈົດທະບຽນ ຖືກຕ້ອງ, ໂດຍມີການລົງທຶນລວມມູນຄ່າທັງໝົດ 2.32 ຕື້ໂດລາ ສະຫະລັດ ຈາກບໍລິສັດຫວຽດນາມ ແລະ ບໍລິສັດຈີນ.
ການລົງທຶນຂອງ ລັດໃສ່ກະສິກຳ ພາຍໃຕ້ແຜນງານລົງທຶນຂອງລັດ ແມ່ນ 14 ລ້ານໂດລາສະຫະລັດ. ຕົວເລກເຫຼົ່ານີ້ອ້າງອີງເຖິງການລົງທຶນ ທີ່ຖືກຕ້ອງເປັນ ທາງການເທົ່ານັ້ນ - ມູນຄ່າຂອງການຄ້າຂາຍ ອາຫານແບບຂາຍຍົກ ແລະ ຂາຍຍ່ອຍທີ່ຢູ່ນອກລະບົບ, ທັງການຄ້າຂາຍຂ້າມຊາຍແດນແລະພາຍໃນແມ່ນບໍ່ສາມາດຮູ້ໄດ້.

3.3.3 ກອບວຽກດ້ານງົບປະມານສຳລັບເປົ້າໝາຍການທະນາແບບຍືນຍົງ ເປົ້າໝາຍທີ 2 ເປົ້າໝາຍການພັດທະນາແບບຍືນຍົງ (SDGs) ຈະຕັ້ງເປົ້າໄວ້ສູງກວ່າ MDGs, ໂດຍກວມເອົາຂອບເຂດກວ້າງຂວາງຂອງບັນຫາທີ່ເຊື່ອມຕໍ່ກັນ, ຈາກການເຕີບໂຕດ້ານເສດຖະກິດ ຈົນເຖິງບັນຫາທາງສັງຄົມຈົນເຖິງສິນຄ້າສາທາລນະຂອງສາກົນ. ເພື່ອໃຫ້ສາມາດບັນລຸໄດ້ວິໄສທັດດັ່ງກ່າວ, ຈຳເປັນຕ້ອງໄດ້ມີແຜນການດ້ານການເງິນ ແລະ ການຈັດຕັ້ງປະຕິບັດທີ່ສູງເທົ່າທຽມກັນກັບແຜນການດັ່ງກ່າວ.

ຄວາມສຳຄັນຂອງບັນຫາທ້າທາຍ ດ້ານການ ເງິນຂອງເປົ້າໝາຍການພັດທະນາແບບຍືນຍົງແມ່ນເກີນຂີດຄວາມສາມາດຂອງໜ່ວຍງານໃດໜຶ່ງ ແລະ ຄວາມຕ້ອງການຂອງການຮ່ວມມືກັນຢ່າງແຂງຂັນ ລະຫວ່າງລັດ ຖະບານ, ແລະ ພາກເອກະຊົນ, ແລະ ອົງການຈັດຕັ້ງເພື່ອການພັດທະນາ. (World Bank 2014b)
"ຖ້າປະຕິບັດງານຕາມສະພາບປົກກະຕິພວກເຮົາຈະບໍ່ໄປເຖິງຈຸດທີ່ຕ້ອງການໄດ້ພາຍໃນປີ 2030," ທ່ານ Wu Hongbo ຮອງເລຂາທິການສະຫະປະຊາຊາດ ທີ່ຮັບຜິດຊອບ ດ້ານວຽກງານເສດຖະກິດ-ສັງຄົມ, ກ່າວຕໍ່ປະຊາຄົມໂລກທີ່ Addis Ababa, ປະເທດເອທິໂອເປຍໃນກອງປະຊຸມລະດູຮ້ອນ 2015.

ຄຳເຫັນຂອງທ່ານໄດ້ກ່າວຕໍ່ຜູ້ເຂົ້າຮ່ວມທີ່ໄດ້ມາປະຊຸມເພື່ອປຶກສາຫາລືດ້ານການ ເງິນເພື່ອການພັດທະນາ, ໂດຍຮັບຮູ້ເຖິງ ເປົ້າໝາຍການພັດທະ ນາແບບຍືນຍົງ (SDGs) ທັງ 17 ຂໍ້ແມ່ນຕັ້ງເປົ້າໄວ້ສູງ, ແລະ ມີຄວາມ ຈຳເປັນຕ້ອງໄດ້ເພີ່ມຊັບພະຍາກອນຂຶ້ນເພື່ອໃຫ້ສາມາດບັນລຸເປົ້າໝາຍທີ່ຕັ້ງໄວ້.
ເຖິງແມ່ນວ່າຕົວເລກທີ່ຊັດເຈນດ້ານການເງິນທີ່ຕ້ອງການເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ - ເຊິ່ງລວມທັງ'ລຶບລ້າງຄວາມທຸກຍາກໃນທຸກຮູບແບບບໍ່ວ່າຈະຢູ່ບ່ອນໃດ'-ມັນເປັນຕົວເລກທີ່ບໍ່ແນ່ນອນ , ໄດ້ມີການສະເໜີແນະຢ່າງກວ້າງຂວາງ ເຖິງຄວາມຈຳເປັນຕ້ອງໄດ້ມີການປ່ຽນແປງຈາກ 'ຕື້ ມາເປັນ ໂກດ'. (The Guardian 2016) ດ້ວຍ ເປົ້າໝາຍການພັດທະນາແບບ



ຍືນຍົງແມ່ນເຊື່ອມໂຍງກັນແລະຮຽກຮ້ອງໃຫ້ມີຄວາມພະຍາຍາມເພີ່ມເຕີມ ແລະ ພ້ອມພຽງກັນເພື່ອໃຫ້ສາມາດບັນລຸເປົ້າໝາຍທີ່ຕັ້ງໄວ້, ຄ່າໃຊ້ຈ່າຍທັງໝົດ, ຖ້າຫາກເປັນໄປໄດ້, ຕ້ອງເປັນສ່ວນໜຶ່ງຂອງຂັ້ນຕອນການຫັນປ່ຽນ ເປົ້າໝາຍການພັດທະນາແບບຍືນຍົງ ໃຫ້ແທດເໝາະກັບທ້ອງຖິ່ນ ໃນປະຈຸບັນ.

ເຖິງຢ່າງໃດກໍ່ຕາມ, ອີງໃສ່ຄໍາເຫັນທີ່ໄດ້ຮັບໃນເວລາທົບທວນ, ການທົບທວນຄັ້ງນີ້ ໄດ້ພະຍາຍາມສະໜອງຕົວຊີ້ວັດນອກຊ່ວງ (indicative extrapolations) ໂດຍນໍາໃຊ້ຂໍ້ມູນດ້ານການເງິນຈາກສອງຂັ້ນຕອນທີ່ມີຢູ່ເດີມ ເຊິ່ງງົບປະມານ ແລະ ທຶນທີ່ຄາດຄະເນວ່າມີຢູ່ແລ້ວ, ແຜນປະຕິບັດການດ້ານໂພຊະນາການຂອງຫຼາຍຂະແໜງການ ແລະ ແຜນທີ່ການລຶບລ້າງຄວາມອຶດຫິວແບບຂາດຕົວ (ZHC).

ໂດຍສັງເກດວ່າ PoA ກວມເອົາຮອບວຽນຂອງແຜນງານຫ້າປີ, ລວມທັງ29 ແຜນງານ ເຖິງແມ່ນວ່າການຂາດໂພຊະນາການແບບຊໍາເຮື້ອຈະຫຼຸດລົງປະມານ 10 ສ່ວນຮ້ອຍກໍ່ຕາມ, ຄ່າໃຊ້ຈ່າຍປະເມີນທັງໝົດຈົນເຖິງປີ 2020 ແມ່ນ 411 ລ້ານໂດລາສະຫະລັດ. ໂດຍບໍ່ເບິ່ງເຖິງບັນຫາການປົກຄຸມດ້ານທີ່ຕັ້ງພູມສັນຖານ(ໂດຍຄໍານຶງວ່າ ມີ 18 ແຂວງທົ່ວປະເທດຢູ່ ສປປ ລາວ, ທີ່ເຊິ່ງມີປະຊາກອນທີ່ຂາດສານອາຫານແບບຊໍາເຮື້ອ, ບໍ່ແມ່ນວ່າທັງໝົດຈະຈໍາເປັນຕ້ອງກວມເອົາໂດຍ PoA ແບບເທົ່າທຽມກັນ), ແລະ ພາຍໃຕ້ສົມມຸດຕິຖານວ່າວົງຈອນ 2020-2025 ຈະຕ້ອງການການສະໜອງທຶນຮອນໃນມູນຄ່າເທົ່າກັນ, ຄາດຄະເນວ່າຄ່າໃຊ້ຈ່າຍທັງໝົດຈະຕົກປະມານ 820 ລ້ານໂດລາສະຫະລັດ, ຖ້າຫາກວ່າເປົ້າໝາຍຂອງກອງປະຊຸມສະມັດຊາອະນາໄມໂລກ (WHA) 2025 ຂອງ 25 ສ່ວນຮ້ອຍຂອງການແຜ່ຫຼາຍຂອງການຂາດສານອາຫານແບບຊໍາເຮື້ອ ແມ່ນຈະຕ້ອງໄດ້ປະຕິບັດໃຫ້ໄດ້.

ການສ້າງແຜນງານເພີ່ມເຕີມອີກເກີນປີ 2025 ຈະຮຽກຮ້ອງໃຫ້ມີຄ່າໃຊ້ຈ່າຍເພີ່ມເຕີມ, ນໍາເອົາຄ່າໃຊ້ຈ່າຍໂດຍລວມຂອງການບັນລຸເປົ້າໝາຍ ເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.2 ພຽງຢ່າງດຽວ ແມ່ນຈະຫຼາຍກວ່າໜຶ່ງຕື້ໂດລາສະຫະລັດ.
ແຜນດໍາເນີນງານການລຶບລ້າງຄວາມອຶດຫິວແບບຂາດຕົວ (ZHC), ໂດຍນໍາໃຊ້ກອບເວລາທີ່ຄ້າຍຄືກັນໃນນາມແຜນຍຸດທະສາດ ແລະ ແຜນປະຕິບັດການ ດ້ານໂພຊະນາການແຫ່ງຊາດ (NNSPoA 2016-2020), ຄາດຄະເນຄ່າໃຊ້ຈ່າຍໂດຍປະມານສໍາລັບເຂົ້າ, ສັດລ້ຽງ ແລະ ຂະແໜງປະມົງ ປະມານ 1.6 ຕື້ໂດລາສະຫະລັດ, ສອດຄ້ອງກັບຜົນປະໂຫຍດດ້ານບວກໃສ່ເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.1, ແລະ ອົງປະກອບຂອງ 2.3, ແລະ 2.4. ເທົ່າທີ່ ທີມງານຮັບຮູ້ວ່າ, ບໍ່ໄດ້ມີການປະເມີນຄ່າໃຊ້ຈ່າຍໄວ້ສໍາລັບ ເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.5 ແຕ່ຢ່າງໃດ.

ເຖິງແມ່ນວ່າຕົວເລກເຫຼົ່ານີ້ ຈະສາມາດເຂົ້າໃຈໄດ້ຢ່າງຊັດເຈນວ່າເປັນການບົ່ງບອກພຽງເທົ່ານັ້ນ, ມັນຈະເປັນປະໂຫຍດທີ່ຈະເນັ້ນໜັກວ່າ ເຖິງ ແມ່ນຈະພຽງແຕ່ໃນອີກຫ້າປີຂ້າງໜ້າເຖິງປີ 2020 (ທຽບກັບກອບເວລາ 15 ປີ ຂອງ SDG), ແລະ ເຖິງແມ່ນຈະເປັນພຽງບາງສ່ວນ ກໍ່ຕາມແຕ່ວ່າໜຶ່ງໃນ 17 ເປົ້າໝາຍການພັດທະນາແບບຍືນຍົງ (ຢູ່ລາວຄວາມຈິງແລ້ວມີ 18 ເປົ້າໝາຍ, ລວມທັງການເກັບກູ້ UXO), ຄ່າໃຊ້ຈ່າຍຂອງເປົ້າໝາຍການພັດທະນາແບບຍືນ ຍົງ, ແລະ ໂດຍສະເພາະແມ່ນເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2) ພຽງເປົ້າໝາຍດຽວ, ແມ່ນຢູ່ໃນລະດັບທີ່ບໍ່ເຄີຍມີມາກ່ອນ.

ດ້ວຍງົບປະມານທີ່ໜ້ອຍກວ່າ 10 ສ່ວນຮ້ອຍ ສໍາລັບການໃຊ້ຈ່າຍໃສ່ສັງຄົມ ທີ່ມາຈາກຂະແໜງການຂອງລັດ, ສົມມຸດຕິຖານທີ່ວ່າ



ທຶນຊ່ວຍເຫຼືອດ້ານການພັດທະນາ ຈະສະໜອງສຳລັບຄ່າໃຊ້ຈ່າຍທີ່ເກີດຂຶ້ນຕາມປົກກະຕິວິໄສ ໃນ ເປົ້າໝາຍການພັດທະນາແບບຍືນຍົງ ຈຳເປັນຕ້ອງໄດ້ມີການສຶກສາເພີ່ມເຕີມ.
ການລະດົມຊັບພະຍາກອນພາຍໃນ ແລະ ທຶນຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງ ການ ແມ່ນສິ່ງຍຶດໜ່ຽວທຶນຂອງ ພັດທະນາສຳລັບເປົ້າໝາຍການພັດທະນາແບບຍືນຍົງ
ເປົ້າໝາຍທີ 2 ຢູ່ ສປປ ລາວ.

ການ ນຳພາ ແລະ ຄວາມເປັນເຈົ້າການຂອງປະເທດແມ່ນສິ່ງສຳຄັນທີ່ສຸດຕໍ່ຜົນສຳເລັດຂອງ ການລົງທຶນຫຼັງວາລະ 2015.
ມັນມີຂໍ້ມູນພື້ນຖານທີ່ດີທີ່ຈະເຮັດໃຫ້ເບິ່ງບັນຫານີ້ໃນແງ່ບວກ.
ທະນາຄານພັດທະນາແບບພະຫຸພາຄີ ແລະ ທະນາຄານ ແຫ່ງຊາດ ແມ່ນມີຂໍ້ຜູກພັນທີ່ຈະເຮັດວຽກຮ່ວມກັນດ້ວຍຮູບແບບທີ່ບໍ່ເຄີຍເຮັດມາກ່ອນກ່ຽວກັບການສະໜອງທຶນ ສຳລັບ ແກ້ໄຂບັນຫາການພັດທະນາ.
ທະນາຄານສົ່ງເສີມກະສິກຳ ມີກຸ່ມລູກຄ້າກູ້ຢືມ ທຶນຂະໜາດນ້ອຍ ຈຳນວນ 30,000 ທຶນກູ້ຢືມທີ່ມີສັກກະຍະພາບ ໃນການຂະຫຍາຍ ແລະ ເຂົ້າຮ່ວມຫຼາຍຂຶ້ນໃນຂັ້ນຕອນເປົ້າໝາຍການພັດທະນາແບບຍືນຍົງ.

ເຖິງຢ່າງໃດກໍ່ດີ, ແຜນທີ່ຕັ້ງໄວ້ສູງ ແລະ ແຜນທີ່ມີຄວາມຊັດເຈນສຳລັບການສະໜອງການເງິນ ແລະ ການຈັດຕັ້ງປະຕິບັດວາລະຫຼັງປີ 2015 ແມ່ນມີຄວາມ ຈຳເປັນສຳລັບ ສປປ ລາວ, ໂດຍຕ້ອງມີບົດບາດທີ່ຊັດເຈນ ແລະ ຈະແຈ້ງ ແລະ ຂໍ້ຜູກພັນທີ່ສາມາດເຊື່ອຖືໄດ້ສຳລັບຄູ່ຮ່ວມງານ ທຸກຝ່າຍທີ່ ຖືກນຳສະເໜີ.

### *3.3.4 ຄວາມຍືນຍົງຂອງແຫລ່ງທຶນ*

ການຮັບຮູ້ວ່າທຶນຂອງລັດບໍ່ຈຳເປັນຕ້ອງແມ່ນໃນຮູບແບບການສະໜອງທຶນກ້ອນໃຫຍ່ສຳ
ລັບທຸກໆໄລຍະຂອງການປະຕິບັດ ຍຸດທະສາດ ຂອງຂະແໜງການ ຫຼື ແຜນ ຜພສຄ (ເຊັ່ນຕົວຢ່າງ: 80 ສ່ວນຮ້ອຍຂອງທຶນໂດຍປະມານທີ່ ຈຳເປັນສຳລັບການຈັດຕັ້ງປະຕິບັດ ຍຸດທະສາດການພັດທະນາກະສິກຳ ແມ່ນຄາດວ່າຈະມາຈາກຂະແໜງເອກະຊົນ, ແຕ່ເຖິງຢ່າງໃດກໍ່ດີ, ມັນມີຄວາມສຳຄັນທີ່ຈະໃຫ້ ຂໍ້ສັງເກດວ່າການໃຊ້ຈ່າຍເຂົ້າໃນຂະແໜງສັງຄົມ (ລວມທັງສາທາ ແລະ ສຶກສາ) ສ່ວນໃຫຍ່ແມ່ນເອື່ອຍອີງໃສ່ ທຶນຊ່ວຍເຫຼືອເພື່ອການພັດທະນາ (ODA). ໃນການສ້າງແຜນທີ່ເພື່ອກຳນົດຄູ່ຮ່ວມງານ ແລະ ສະຖາບັນທີ່ກ່ຽວຂ້ອງກັບ ແຜນຍຸດທະສາດ ແລະ ແຜນປະຕິບັດການດ້ານໂພຊະນາການແຫ່ງຊາດ (NNSPoA) ໃນປີ 2016 ໄດ້ຊີ້ໃຫ້ເຫັນວ່າ ໜ້ອຍກວ່າ 10 ສ່ວນຮ້ອຍຂອງທຶນ ສຳລັບການຈັດຕັ້ງປະຕິບັດແຜນປະຕິບັດງານໂດຍລວມ ແມ່ນມາຈາກລັດຖະບານ, ແລະ ໃນນັ້ນ ແມ່ນມາຈາກກະຊວງດຽວເທົ່ານັ້ນ, ເຖິງວ່າ ຈະມີການເຂົ້າຮ່ວມຂອງສາມກະຊວງ ໃນແຜນປະຕິບັດງານກໍ່ຕາມ.

ໃນອີກ 15 ປີຕໍ່ໜ້າ, ພັນທະທາງດ້ານງົບປະມານຂອງລັດເພີ່ມຂຶ້ນ, ມັນຈະມີຄວາມຕ້ອງການເພີ່ມຂຶ້ນ ບໍ່ພຽງແຕ່ການຈັດສັນງົບປະມານສຳລັບຄ່າໃຊ້ຈ່າຍໃສ່ຂະແໜງສັງຄົມເທົ່ານັ້ນແຕ່ຍັງໝາຍເຖິງໃຫ້ມີຄວາມຮັບຜິດຊອບ ແລະ ຄວາມໂປ່ງໃສເພີ່ມຂຶ້ນ ເພື່ອໃຫ້ຮູ້ວ່າ ທຶນ ດັ່ງກ່າວໄດ້ຮັບການຈັດສັນແນວໃດ ແລະ ໃຊ້ຈ່າຍແບບໃດ. ໂດຍຄຳນຶງເຖິງບັນຫານີ້, ຂໍ້ມູນທີ່ມີຢູ່ຄວນຖືວ່າເປັນຂໍ້ມູນທີ່ຊີ້ແນະເທົ່ານັ້ນ, ແຕ່ວ່າໃຫ້ເບິ່ງສອງຈຸດທີ່ສຳຄັນ
ດັ່ງນີ້: ການສ້າງແຜນງານກ່ຽວກັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ແມ່ນເອື່ອຍອີງໃສ່ ທຶນຊ່ວຍເຫຼືອເພື່ອການພັດທະນາ, ແລະມີຄວາມ ຈຳເປັນທີ່ຕ້ອງໃຫ້ຄວາມກະຈ່າງແຈ້ງ ກ່ຽວກັບຂໍ້ມູນທາງການເງິນທີ່ຕິດພັນກັບລາຍຈ່າຍຂອງ ລັດຖະບານ. ຖ້າຫາກບໍ່ມີຂໍ້ມູນນີ້, ມັນຈະເປັນການຍາກທີ່ຈະໃຫ້ຂໍ້ສັງເກດທີ່ຊັດເຈນ ກ່ຽວກັບທຶນຮອນໃນລະດັບ ຂອງລະບົບທີ່ມີຢູ່ ສຳລັບ 17 ຂະແໜງການທີ່ແຕກຕ່າງກັນ, ເປົ້າໝາຍທີ່ເຊື່ອມໂຍງກັນຂອງ ເປົ້າໝາຍການພັດທະນາແບບຍືນຍົງ
(ຢູ່ລາວ ແມ່ນມີ 18 ເປົ້າໝາຍ)



# ຊ່ອງວ່າງ ແລະ ຄຳແນະນຳ



## 4.1 ຮັບປະກັນການເຂົ້າເຖິງ

ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.1 ພາຍໃນປີ 2030, ລຶບລ້າງຄວາມອຶດຫິວ ແລະ ຮັບປະກັນໃຫ້ໝົດທຸກຄົນ ໂດຍສະເພາະຄົນທຸກຍາກ ແລະ ຜູ້ທີ່ມີຄວາມສ່ຽງ, ລວມທັງເດັກອ່ອນສາມາດເຂົ້າ ເຖິງສະບຽງອາຫານທີ່ປອດໄພ, ມີໂພຊະນາການແລະ ພຽງພໍຕະຫຼອດປີ.
ເພື່ອບັນລຸເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.1 ໄດ້ຮັບຜົນສຳເລັດ, ການເຂົ້າເຖິງສະບຽງອາຫານ ຈຳເປັນຕ້ອງໄດ້ຮັບການປັບປຸງທັງປະຊາກອນເຂດຕົວເມືອງ ແລະ ຊົນນະບົດກໍ່ເຊັ່ນກັນ.

ຖ້າຫາກວິຖີທາງຂອງການເຕີບໂຕຂອງເສດຖະກິດໄດ້ຮັບການຮັກສາໄວ້ໃນລະດັບເດີມ, ມັນຈະມີການ ປັບປຸງໃນລະດັບໃດໜຶ່ງຕໍ່ການເຂົ້າເຖິງຂອງສະບຽງອາຫານ ສຳລັບປະຊາກອນ ທີ່ສາມາດມີວຽກເຮັດງານທຳ.
ຖ້າຫາກວິຖີທາງໃນປະຈຸບັນ ບວກກັບຄຳໝັ້ນສັນຍາທີ່ສູງຕໍ່ ການພັດທະນາສັງຄົມ, ການເຂົ້າເຖິງສະບຽງອາຫານຈະມີການແຈກຢາຍຢ່າງເທົ່າທຽມກັນຍິ່ງຂຶ້ນ, ໂດຍການເພີ່ມຊ່ອງທາງ ໃຫ້ແກ່ຄົນທຸກຍາກ ແລະ ຜູ້ທີ່ມີຄວາມສ່ຽງລວມທັງແມ່ຍິງທີ່ເປັນຫົວໜ້າຄອບຄົວໃຫ້ສາມາດເຂົ້າເຖິງແຫຼ່ງທຶນທີ່ ຈຳເປັນ ເພື່ອຮັບປະ ກັນທາງດ້ານສະບຽງອາຫານທີ່ພວກເຂົາເຈົ້າຕ້ອງການ.
ການພັດທະນາເສດຖະກິດ-ສັງຄົມຂອງ ສປປ ລາວ ແມ່ນມາຈາກຂະແໜງກະສິກຳເປັນສ່ວນໃຫຍ່,ສ່ວນຫຼາຍແມ່ນຊາວກະສິກອນ ຂະໜາດນ້ອຍ ທັງຍິງ ແລະ ຊາຍ ຢູ່ເຂດຊົນນະບົດ. ອີກດ້ານໜຶ່ງ, ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ແມ່ນຕິດພັນກັບລະດັບສະມັດຕະພາບຂອງການຜະລິດທີ່ຕ່ຳ ແລະ ຄວາມ ສ່ຽງຕໍ່ການຜັນປ່ຽນກະທັນຫັນຈາກປັດໃຈພາຍນອກ.

ມັນມີຫຼັກຖານຊັດເຈນ ວ່າ ການຄໍ້າປະກັນສະບຽງອາຫານ ແລະ ໂພຊະນາການ ແມ່ນຕິດພັນຢ່າງໃກ້ຊິດກັບຄວາມທຸກຍາກເຂດຊົນນະບົດ ແລະ ຄວາມສ່ຽງ, ໂດຍສະເພາະແມ່ນໃນພື້ນທີ່ທີ່ມີປະຊາກອນກຸ່ມຊົນເຜົ່າອາໄສຢູ່ເປັນສ່ວນໃຫຍ່ (IWGIA, 2015).

ການຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການຍັງແມ່ນຜົນມາຈາກຄວາມບໍ່ເທົ່າທຽມກັນໃນການເຂົ້າເຖິງສະບຽງອາຫານ, ການຮັກສາສຸຂະພາບ ແລະ ສິ່ງອຳນວຍຄວາມສະດວກອື່ນໆ ຂອງການບໍລິການຂອງລັດ.
ບັນຫາການແຈກຢາຍສະບຽງອາຫານ ທີ່ບໍ່ເທົ່າທຽມກັນ, ການບໍລິການດ້ານໂພຊະນາການ ແລະ ຜົນປະໂຫຍດອື່ນໆຂອງສັງຄົມສ່ວນຫລາຍແມ່ນສອດຄ່ອງກັບການຂາດໂຄງລ່າງພື້ນຖານໃນເຂດຊົນນະບົດ ລວມທັງເສັ້ນທາງຕ່າງໆ ທີ່ມີຄວາມຫຍຸ້ງຍາກ

ໃນການເຂົ້າເຖິງ ແລະ ມີຄ່າໃຊ້ຈ່າຍໃນການເດີນທາງສູງ. ອຸປະສັກໃນການເຄື່ອນຍ້າຍສະບຽງອາຫານ, ໂດຍສະເພາະໃນລະດູຝົນ ອາດເຮັດ ໃຫ້ຄອບຄົວ ປະເຊີນກັບບັນຫາ ຂາດໂພຊະນາການແບບກະທັນຫັນ ແລະ ຂາດສານອາຫານ.

ອັນນີ້ສ່ວນໃຫຍ່ແມ່ນພົບໃນກໍລະນີແມ່ຍິງ ແລະ ເດັກຍິງ ທີ່ບໍ່ສາມາດເຂົ້າເຖິງສະບຽງອາຫານໄດ້ຍ້ອນຄວາມຮັບຜິດຊອບຫຼັກຂອງເຂົາເຈົ້າທີ່ຕ້ອງໄດ້ທຳການຜະລິດ, ສ່ວນຜູ້ຊາຍ ແລະ ເດັກຊາຍແມ່ນເຮັດໜ້າທີ່ ຫາປາ ແລະ ລ່າສັດ. ອຸປະສັກໃນແຕ່ລະໄລຍະ ຫຼື ຕາມລະດູການ ໃນການເຄື່ອນຍ້າຍສະບຽງອາຫານ ອາດຈະບໍ່ເປັນອຸປະສັກ ຂອງການເຂົ້າເຖິງ ທາງ ກາຍະພາບຢ່າງສິ້ນເຊີງ, ແຕ່ການຫຼຸດລົງຂອງປະລິມານ ຂອງສະບຽງ ອາຫານທີ່ມີອາດຈະພາໃຫ້ລາຄາເພີ່ມສູງຂຶ້ນ. ໃນບາງປີ, ເຖິງແມ່ນວ່າຄົວເຮືອນ ເຊິ່ງສ່ວນໃຫຍ່ແມ່ນມີຄວາມຮັບປະກັນດ້ານສະບຽງອາຫານ ອາດປະເຊີນກັບບັນຫາການຂາດແຄນເຂົ້າກິນເປັນເວລາຫຼາຍເດືອນ, ໂດຍສະເພາະໃນໄລຍະທ້າຍລະດູມໍລະສຸມ.ຄົວເຮືອນທີ່ມີຄວາມສາມາດທົນທານໄດ້ສ່ວນໃຫຍ່ ແມ່ນມີຊັບສິນ ແລະ ສາມາດເຂົ້າເຖິງການເງິນທຶນ ແລະ ທີ່ດິນ, ທີ່ມີວິຖີຊີວິດທີ່ຫຼາກຫຼາຍໃນລະດັບສູງ ແລະ ບໍ່ໄດ້ເອື່ອຍອີງໃສ່ການເຮັດກະສິກຳທີ່ຕ້ອງອາໄສນ້ຳຝົນແຕ່ພຽງຢ່າງດຽວ.

ການຂາດການເຂົ້າເຖິງສະບຽງອາຫານຢ່າງພຽງພໍ ແລະ ໂພຊະນາການທີ່ດີຍັງຖືກອິດທິພົນມາຈາກລະດັບການສຶກສາທີ່ຕ່ຳ, ລາຍໄດ້/ ການຈ້າງງານ ແລະ ຄວາມທຸກຍາກ.
ການປຶກສາຫາລືຂັ້ນແຂວງໄດ້ຢັ້ງຢືນວ່າການເຊື່ອມໂຍງລະຫວ່າງການເຂົ້າເຖິງການທີ່ມີໂພຊະນາການທີ່ດີ, ການສຶກສາ ແລະການຈ້າງງານ ແມ່ນມີຄວາມຊັດເຈນທີ່ສຸດ ລະດັບການສຶກສາທີ່ຕ່ຳ ແລະ ຄຸນນະພາບການ ສຶກສາທີ່ຕ່ຳ ພາໃຫ້ມີທາງເລືອກໃນການຈ້າງງານທີ່ຈຳກັດ, ສະມັດຖະພາບແຮງງານທີ່ຕ່ຳ, ແລະລາຍຮັບທີ່ຕ່ຳຈະເຮັດໃຫ້ ການເຂົ້າເຖິງສະບຽງອາຫານຖືກຫຼຸດ ລົງ. ນອກຈາກນັ້ນ, ແມ່ຍິງ ແລະ ຊາຍໜຸ່ມຈຳນວນຫຼາຍ ໄດ້ຍົກຍ້າຍເຂົ້າໄປຕົວເມືອງ ຫຼື ປະເທດເພື່ອນບ້ານເພື່ອຊອກຫາວຽກເຮັດງານທຳ, ແຕ່ວ່າບໍ່ສາມາດຊອກຫາວຽກເຮັດງານທຳທີ່ມີລາຍຮັບດີໄດ້ ຍ້ອນພວກເຂົາເຈົ້າ ບໍ່ສາມາດແຂ່ງຂັນກັບປະ ຊາກອນທີ່ຍົກຍ້າຍເຂົ້າມາຈາກປະເທດເພື່ອນບ້ານໄດ້.

ເມື່ອມີຫຼາຍຄົນເຂົ້າຮ່ວມໃນການຈ້າງງານໃນລະບົບ, ມັນຈະມີຄວາມຈຳເປັນທີ່ຈະຕ້ອງໄດ້ແກ້ໄຂຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ການສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ບໍ່ພຽງແຕ່ທີ່ຕິດພັນກັບລາຍຮັບໃນການຈ້າງງານ ແລະ ສະຫວັດດີການສັງຄົມອື່ນໆ, ແຕ່ຍັງຕິດພັນ ກັບບັນທັດຖານທາງສັງຄົມດ້ານ ການສຶກສາ, ຂໍ້ຂັດແຍ່ງ ຫຼື ຄວາມຮຸນແຮງທີ່ຂຶ້ນກັບເພດ, ບົດບາດດັ້ງເດີມພາຍໃນຄອບຄົວຂອງແມ່ຍິງ ແລະ ຜູ້ຊາຍ ແລະ ໃນສະພາບຄອບຄົວທີ່ໃຫຍ່.
ການຕັດສິນໃຈໃນຄອບຄົວ ແມ່ນຂຶ້ນກັບລາຍໄດ້ ແລະ ລາຍຈ່າຍທີ່ກະທົບໃສ່ການ ບໍລິໂພກອາຫານ ແລະ ໂພຊະນາການ, ໂດຍການກຳນົດວ່າໄດ້ຈັດຊື້ອາຫານຫຼາຍປານໃດ,ອາຫານທີ່ມາຈາກການຜະລິດເອງ**ມີຫຼາຍ**ປານໃດ, ປະເພດອາຫານທີ່ຊື້ມີຫຍັງແດ່ ແລະ ໄດ້ບໍລິໂພກແນວໃດ.

ເມື່ອຈຳນວນແມ່ຍິງທີ່ເຂົ້າມາໃນກຳລັງແຮງງານໃນລະບົບມີຈຳນວນເພີ່ມຂຶ້ນ, ແລະ ດ້ວຍຄວາມເຊື່ອແຕ່ດັ້ງເດີມທີ່ວ່າ ໜ້າທີ່ ໃນການດູແລເຮືອນຊານສ່ວນໃຫຍ່ແມ່ນໜ້າທີ່ຂອງແມ່ຍິງ, ມັນຈຶ່ງສ້າງຂໍ້ຈຳກັດໃຫ້ແກ່ຂີດ ຄວາມສາມາດຂອງເດັກນ້ອຍ ໃນການໄດ້ຮັບອາຫານທີ່ມີໂພຊະນາການ, ອາດຈະພາໃຫ້ໄດ້ຮັບໂພຊະນາການຕ່ຳ ແລະ ຂາດສານອາຫານ.
ອາຫານທີ່ມີໂພຊະນາການ, ຜັກທີ່ບໍ່ໄດ້ປຸງແຕ່ງ, ຊີ້ນ ແລະ ປາໂດຍປົກກະຕິແມ່ນຕ້ອງໄດ້ມີການກະກຽມ, ໃຊ້ເວລາ ແລະ ເງິນຖ້າທຽບ ກັບອາຫານທີ່ສຳເລັດຮູບ, ປຸງແຕ່ງ ແລະ ອາຫານວ່າງ ແລະ ອາຫານທີ່ພ້ອມເສີບ. ຂີດຄວາມສາມາດຂອງເດັກໃນການເຂົ້າເຖິງອາຫານ ແລະ ໂພຊະນາການ, ໂດຍສະເພາະແຕ່ອາຍຸຍັງນ້ອຍ, ແມ່ນຂຶ້ນກັບການເບິ່ງແຍງຂອງຜູ້ໃຫຍ່ໃນຄອບຄົວທີ່ໃຫຍ່ (ສ່ວນຫຼາຍແມ່ນແມ່ເຖົ້າ) ຜູ້ທີ່ຕ້ອງຮັບໜ້າທີ່ນີ້ ເມື່ອພໍ່ແມ່ຂອງເດັກຄາວຽກ. ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ຊອກຫາທາງອອກທີ່ເໝາະສົມ ເຊິ່ງແມ່ຍິງ ແລະ ຜູ້ຊາຍ ຈະສາມາດເຂົ້າຮ່ວມໃນກຳລັງແຮງງານໃນລະບົບ ໂດຍບໍ່ຕ້ອງສູນເສຍໂອກາດທີ່ລູກຂອງຕົນ ຈະສາມາດເຂົ້າເຖິງອາຫານໄດ້, ເຊັ່ນ: ຜ່ານສະຖານທີ່ລ້ຽງເດັກທີ່ມີຄຸນນະພາບ ດັ່ງທີ່ໄດ້ຮັບຄຳແນະນຳ ໃນໄລຍະການປຶກສາຫາລືຢູ່ຂັ້ນແຂວງ, ຫຼື ການສະໜອງການຝຶກອົບຮົມ/ຂໍ້ມູນກ່ຽວກັບວ່າ ແມ່ເຖົ້າ ຫຼື ຜູ້ດູແລອື່ນໆ ຄວນປຸງແຕ່ງອາຫານທີ່ມີໂພຊະນາການແນວໃດ.

ເຖິງແມ່ນວ່າຄວາມບໍ່ຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ແມ່ນຕິດພັນຢ່າງແໜ້ນແຟ້ນກັບ ຄວາມທຸກຍາກ ແລະ ຄວາມສ່ຽງ, ສປປ ລາວ ຍັງມີຄວາມຈຳກັດທາງດ້ານ ລະບົບປົກປ້ອງສັງຄົມ ແລະ ຕາໜ່າງຄວາມປອດໄພຂອງສັງຄົມ.
ໃນໄລຍະຜ່ານມາ, ການປົກປ້ອງສັງຄົມແມ່ນຈຳກັດສະເພາະພະນັກງານລັດຖະກອນ ເທົ່ານັ້ນ, ໂດຍມີການຊ່ວຍເຫຼືອທາງດ້ານສັງຄົມ ພຽງ ເລັກນ້ອຍ ທີ່ແນໃສ່ຄົນທຸກຍາກເຂດຊົນນະບົດ ແລະ ກຸ່ມຄົນດ້ອຍໂອກາດ. ປະຊາກອນສ່ວນໃຫຍ່ຂອງລາວແມ່ນບໍ່ສາມາດເຂົ້າເຖິງ ສະຫວັດດີການສັງຄົມ, ລວມທັງການປົກປ້ອງການປະກັນສຸຂະພາບ, ການຈ້າງງານ, ລາຍໄດ້ຂັ້ນພື້ນຖານ ແລະ ການຊ່ວຍເຫຼືອສຸກເສີນ. ການຂາດແຜນງານ ປົກປ້ອງທາງສັງຄົມກີດຂວາງຜົນປະໂຫຍດຈາກການເຕີບໂຕຂອງເສດຖະກິດ ທີ່ຈະສາມາດເຂົ້າເຖິງກຸ່ມທີ່ມີຄວາມສ່ຽງ ແລະ ດ້ອຍໂອກາດ ທີ່ສຸດ ແລະ ເຮັດໃຫ້ບັນຫາຄວາມບໍ່ຮັບປະກັນ ແລະ ຄວາມບໍ່ເທົ່າທຽມມີຄວາມຍືດເຍື້ອຍາວນານຕໍ່ໄປ.

ຄົວເຮືອນທີ່ມີຂໍ້ຈຳກັດໃນການເຂົ້າເຖິງທີ່ດິນ, ການດຳລົງຊີວິດໂດຍອາໃສການປູກພືດພຽງຢ່າງດຽວ, ຂໍ້ຈຳກັດທາງດ້ານແຮງງານທີ່ມີ (ໃນກໍ ລະນີທີ່ແມ່ຍິງ ຫຼື ເດັກເປັນຫົວໜ້າຄອບຄົວ), ຫຼື ສາມາດເຂົ້າເຖິງທີ່ດິນທີ່ບໍ່ມີຄຸນນະພາບເທົ່ານັ້ນ, ແມ່ນເປັນຄວາມສ່ຽງຂອງຄວາມບໍ່ໝັ້ນ ຄົງດ້ານສະບຽງອາຫານ ໃນທາງກົງກັນຂ້າມຄົວເຮືອນທີ່ມີການຜະລິດແບບຫຼາກຫຼາຍແມ່ນມີຄວາມທົນທານຕໍ່ບັນຫາຄວາມ ບໍ່ໝັ້ນຄົງ ໄດ້ດີກວ່າ. ປົກກະຕິແລ້ວຄົນທຸກຍາກກ່ວາ ບໍ່ມີ ທີ່ດິນເປັນຂອງຕົນເອງ ຫຼື ບໍ່ມີໃບຕາດິນ/ ໃບເສຍທີ່ດິນ ທີ່ເກັບ ກຳໄວ້ ເພື່ອ ອ້າງສິດນຳໃຊ້ ທີ່ດິນ. ປະຈຸບັນ, ການຄອບຄອງທີ່ດິນ ຖືເປັນບັນຫາທ້າທາຍໃນທົ່ວປະເທດ ແລະ ມັນຢູ່ເໜືອການຄວບຄຸມຂອງຜູ້ຜະລິດ ຂະໜາດນ້ອຍ.

ດິນສ່ວນໃຫຍ່ແມ່ນຖືກຍາດແຍງຄອບຄອງເພື່ອຜົນປະໂຫຍດທາງດ້ານທຸລະກິດ, ບວກກັບຂໍ້ຈຳກັດ ຂອງຜູ້ຜະລິດ ຂະໜາດນ້ອຍໃນການ ເຂົ້າເຖິງທີ່ດິນທີ່ເໝາະແກ່ການຜະລິດ.
ຊ່ອງວ່າງທີ່ສຳຄັນອີກຢ່າງໜຶ່ງ ແມ່ນການເຂົ້າເຖິງອາຫານທີ່ມີໂພຊະນາການ ແລະ ຄຸນນະພາບສູງ. ສ່ວນໃຫຍ່ຄົນທີ່ຍ້າຍເຂົ້າມາຢູ່ຕົວເມືອງ ແລະ ແຂ່ງຂັນກັນໃນການເຮັດວຽກ, ພວກເຂົາເຈົ້າຈະບໍ່ມີເວລາແຕ່ງກິນເອງ ແຕ່ວ່າມີຫຼາຍທາງເລືອກທີ່ຈະກິນເຂົ້ານອກບ້ານ. ດ້ວຍລະດັບ ລາຍໄດ້ທີ່ຕ່ຳ, ທາງເລືອກໃນການບໍລິໂພກ ແມ່ນຂຶ້ນກັບຄວາມສາມາດໃນການຊື້, ສ່ວນຫຼາຍຈະແມ່ນອາຫານທີ່ມີລາຄາຖືກ, ມີຄຸນຄ່າທາງ ໂພຊະນາການທີ່ຕ່ຳ, ແລະ ອາຫານທີ່ປຸງສຳເລັດໄວ້ແລ້ວ ຫຼື ເຄື່ອງກິນສຸກ ທີ່ກິນໄດ້ເລີຍທັນທີ.

ການເຂົ້າເຖິງອາຫານທີ່ປອດໄພໃນການບໍລິໂພກ ກາຍມາເປັນບັນຫາທີ່ໜ້າເປັນຫ່ວງ ທີ່ໄດ້ຮັບການຍົກຂຶ້ນໃນທຸກໆການປຶກສາຫາລື ທັງຢູ່ຂັ້ນ ແຂວງ ແລະ ຂັ້ນສູນກາງ ແມ່ນບໍ່ແຕກຕ່າງກັນ. ຄວາມເປັນຫ່ວງເຫຼົ່ານີ້ແມ່ນຕິດພັນກັບຜະລິດຕະພັນອາຫານທີ່ປຸງແຕ່ງ ຈາກຜົນຜະລິດທີ່ນຳໃຊ້ຢາຂ້າຫຍ້າ, ຢາຂ້າແມງໄມ້, ປຸ໋ຍເຄມີທີ່ບໍ່ໄດ້ຮັບການກວດກາ ແລະ ບໍ່ຖືກກົດໝາຍ.

ຄວາມຕ້ອງການ ສະບຽງອາຫານເພີ່ມຂຶ້ນ, ໂດຍສະເພາະໃນເທດສະການທາງສາສະໜາ ແລະ ການສະເຫຼີມສະຫຼອງປີໃໝ່, ຜັກດັນໃຫ້ຜູ້ຜະລິດອາຫານ ຢູ່ທ້ອງຖິ່ນ ເພີ່ມສ່ວນປະກອບເຄມີເຂົ້າໃນຂະບວນການຜະລິດ ເພື່ອຈະສາມາດໃຫ້ຜົນຜະລິດໄດ້ຫຼາຍທີ່ສຸດ, ໄວທີ່ສຸດ ແລະ ລາຄາຖືກ ທີ່ສຸດເທົ່າທີ່ຈະເປັນໄປໄດ້.
ການຄ້າຂາຍຢາທີ່ຜິດກົດໝາຍໄດ້ກາຍມາເປັນບັນຫາຢູ່ ສປປລາວ, ໃນບາງກໍລະນີ ແມ່ນພາໃຫ້ມີການອອກໂຮງຮຽນ, ຂາດແຮງງານທີ່ມີ ທັກສະ, ແລະ ສ້າງໃຫ້ມີການວ່າງງານເກີດຂຶ້ນ.
ບາງຄັ້ງຄາວ, ການເພີ່ມຂຶ້ນຂອງການນຳໃຊ້ຢາທີ່ຜິດກົດໝາຍແມ່ນຍ້ອນການເພີ່ມສານ ກະຕຸ້ນເພື່ອໃຫ້ພວກເຂົາເຈົ້າສາມາດເຮັດວຽກໄດ້ຫຼາຍຊົ່ວໂມງຂຶ້ນ, ໂດຍສະເພາະແມ່ນຜູ້ທີ່ເຮັດວຽກກໍ່ສ້າງທີ່ເຮັດວຽກເກີນເວລາ, ແລະ ວຽກຂົນສົ່ງທາງໄກ.
ພາຍໃຕ້ເປົ້າໝາຍເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.1, ທີມງານທົບທວນຍຸດທະສາດ ໄດ້ກຳນົດ 6 ວຽກຍຸດທະສາດທີ່ຕ້ອງໄດ້ຮັບການແກ້ໄຂ ເພື່ອຮັບປະກັນການ ເຂົ້າເຖິງສະບຽງອາຫານສຳລັບທຸກຄົນ:

• ສ້າງ, ສະໜັບສະໜູນ ແລະ ຂະຫຍາຍທາງເລືອກດ້ານເສດຖະກິດ ແລະການດຳລົງຊີວິດ ແລະການປັບປຸງເງື່ອນໄຂການເຮັດວຽກພາຍໃນປະເທດເພື່ອຫຼຸດຜ່ອນການອົບພະຍົກອອກນອກປະເທດ.
ຫຼຸດຜ່ອນການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດພຽງຢ່າງດຽວ,ສົ່ງເສີມ ແລະສ້າງການຈ້າງງານນອກຂະແໜງການກະສິກຳໃນເຂດຊົນນະບົດ; ລວມທັງການເສີມສ້າງໂອກາດຕ່າງໆໃຫ້ແກ່ຂະແໜງເອກະຊົນ ແລະ ໂດຍຜ່ານແຜນງານຂອງລັດຢູ່ທົ່ວປະເທດ.

• ຮັບປະກັນຜົນປະໂຫຍດພື້ນຖານທາງສັງຄົມສຳລັບຄົນທຸກຍາກທີ່ຢູ່ໃນສະພາບການທີ່ສ່ຽງ, ແລະ ສົ່ງເສີມການ ເຂົ້າເຖິງລາຍຮັບ ແລະ ຜົນປະໂຫຍດຈາກການຈ້າງງານໃນລະບົບ ແລະ ນອກລະບົບ ຢ່າງເທົ່າທຽມກັນ.

• ສ້າງກອບແນວຄວາມຄິດ ດ້ານການປົກປ້ອງສັງຄົມຢ່າງຄົບຖ້ວນທີ່ເປັນກົນໄກຍຸດທະສາດທີ່ສຳຄັນສຳລັບຄົນທີ່ສ່ຽງ, ຄົນພິການ ແລະ ຜູ້ທີ່ຖືກຜົນກະທົບຈາກໄພພິບັດ. ອັນນີ້ລວມທັງໂຄງການໃຫ້ເງິນຊ່ວຍເຫຼືອໂດຍບໍ່ມີເງື່ອນໄຂ ແລະ ແບບມີເງື່ອນໄຂ ແລະ ການໂອນຖ່າຍສະບຽງອາຫານໄປໃຫ້ຄົນທຸກຍາກທີ່ມີຄວາມສ່ຽງ ແລະ ຂະຫຍາຍລະບົບປົກປ້ອງສັງຄົມ ເພື່ອໃຫ້ເຂົ້າເຖິງປະຊາຊົນ ທັງໝົດ ໂດຍເນັ້ນໜັກໃສ່ຄອບຄົວຊາວກະສິກອນທີ່ທຸກຍາກ.

• ສົ່ງເສີມການລົງທຶນ ແລະ ກິດຈະກຳທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ແຜນງານເພື່ອປົກປ້ອງສິ່ງ ແວດລ້ອມ ເພື່ອຮັບປະກັນການສະໜອງສະບຽງອາຫານ ທຳມະຊາດ ຢ່າງພຽງພໍ, ດ້ວຍວິທີນີ້ ຈະເປັນການສົ່ງເສີມຄວາມຫຼາກ ຫຼາຍຂອງອາຫານ.

• ກຳນົດ ແລະຮັບມືກັບຄວາມສ່ຽງສະເພາະດ້ານອາຫານທັງທາງດ້ານການຜະລິດ ແລະ ການບໍລິໂພກ ແລະ ສົ່ງເສີມອາຫານທີ່ມີໂພຊະນາການທີ່ດີ ໂດຍຜ່ານວິທີການປູກຝັງທີ່ດີ ແລະ ການຄຸ້ມຄອງຊັບພະຍາກອນ ທຳມະຊາດ.

• ເສີມສ້າງຄວາມທົນທານໃນໄລຍະຍາວໂດຍລວມໃຫ້ແກ່ຊຸມຊົນເຂດຊົນນະບົດ ໂດຍຜ່ານການເພີ່ມທະວີການ ຈັດສັນຊັບພະຍາ ກອນສຳລັບການສຶກສາໃນລະບົບ ແລະ ນອກລະບົບ, ແລະ ທຶນການສຶກສາສະເພາະ.

***4.2*** ລຶບລ້າງການຂາດສານອາຫານພາຍໃນປີ 2030, ລຶບລ້າງການຂາດສານອາຫານທຸກຮູບແບບ, ລວມທັງບັນລຸໃຫ້ໄດ້ພາຍໃນປີ 2025 ຄາດໝາຍທີ່ສາກົນໄດ້ຮັບຮອງ ກ່ຽວ ກັບອັດຕາສ່ວນເດັກລຸ່ມ 5 ປີ ທີ່ເຕ້ຍ ແລະ ຈ່ອຍຜອມກວ່າມາດຕະຖານ ແລະ ແກ້ໄຂຄວາມຕ້ອງການດ້ານໂພຊະນາການໃນກຸ່ມເດັກຍິງ, ຜູ້ຍິງຖືພາ ແລະ ແມ່ທີ່ຍັງໃຫ້ນົມລູກ ແລະ ຜູ້ສູງອາຍຸ.
ການຄາດຄະເນຢູ່ໃນແຜນຍຸດທະສາດແຫ່ງຊາດດ້ານໂພຊະນາການ ແລະ ແຜນປະຕິບັດງານ 2025 ໄດ້ລວມມີການຫຼຸດລົງຂອງອັດຕາການຂາດ ສານອາຫານແບບຊ້ຳເຮື້ອ ຈາກ 35.6 ສ່ວນຮ້ອຍ ມາເປັນ 25 ສ່ວນຮ້ອຍ ພາຍໃນປີ 2025, ແລະ ການຫຼຸດອັດຕາເດັກທີ່ມີນ້ຳໜັກ ຕ່ຳກວ່າມາດຕະຖານ ໃຫ້ເຫຼືອພຽງ 12 ສ່ວນຮ້ອຍ.

ໄດ້ມີການຫຼຸດລົງທີ່ຄ້າຍຄືກັນໃນອັດຕາການແຜ່ຫຼາຍຂອງຕົວຊີ້ວັດທີ່ຕິດພັນກັບໂພຊະນາການໂດຍລວມ ເຊັ່ນ: ໂລກເລືອດຈາງ ແລະ ອັດຕາການເສຍຊີວິດຂອງເດັກ. ອີງໃສ່ອັດຕາການປ່ຽນແປງໃນໄລຍະຜ່ານມາ ທີ່ໄດ້ຮັບການເກັບກຳນັບແຕ່ປີ 1990, ການຫຼຸດລົງຂອງອັດ ຕາການເຕັ້ຍ (ແລະ ນ້ຳໜັກຕ່ຳກວ່າມາດຕະຖານ) ແມ່ນສອດຄ່ອງກັບທ່າອ່ຽງ ທີ່ກຳນົດໄວ້ແຕ່ປີ 1990-2015 ທີ່ຄາດຫວັງວ່າຈະແມ່ນໃນໄລຍະສັ້ນ ແລະ ໄລຍະກາງ.
ຖ້າຫາກທ່າອ່ຽງຍັງຄົງຢູ່ໃນລະດັບເດີມ, ການຫຼຸດລົງ ຂອງການຂາດສານອາຫານຊ້ຳເຮື້ອຈົນເຖິງປີ 2025 ແມ່ນຈະໄປຕາມແຜນຢູ່ທີ່ 10 ສ່ວນຮ້ອຍ, ອາດລຸດເປົ້າໝາຍຂອງກອງປະຊຸມສະມັດຊາອະນາໄມໂລກ (WHO).

ຄວາມຄືບໜ້າໃນວ່າງມໍ່ໆມານີ້, ໃນການປະສານງານດ້ານໂພຊະນາການ, ໂດຍສະເພາະແມ່ນການມີສ່ວນຮ່ວມຂອງທ່ານຮອງນາຍົກລັດ ຖະມົນຕີ ແລະ ສາມກະຊວງຫຼັກ (ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ແລະ ກະຊວງສຶກສາທິການ ແລະກິລາ)ທີ່ເຂົ້າຮ່ວມໃນຄະນະກຳມະການໂພຊະນາການແຫ່ງຊາດ ເຫັນວ່າເປັນການພັດທະນາທີ່ດີ.

ໃນແຜນງານ 22 ແຜນງານທີ່ຕິດພັນກັບໂພຊະນາການ, ກະສິກຳ ແລະ ສຶກສາເຊິ່ງເປັນພື້ນຖານຂອງ ຍຸດທະສາດ ດ້ານໂພຊະນາການແຫ່ງຊາດ ທີ່ໄດ້ປະກາດໃຊ້ຢ່າງເປັນທາງການໃນປີ 2015.

ເຄືອຂ່າຍ ແຜນງານການຜັນຂະຫຍາຍໂພຊະນາການ (SUN) ໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງດ້ວຍການສ້າງຕັ້ງເຄືອຂ່າຍ SUN-CSO. ກຸ່ມຄູ່ຮ່ວມພັດທະນາທີ່ ບໍ່ເປັນທາງການ ກ່ຽວກັບການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ໂດຍການເປັນປະທານຮ່ວມຂອງ ສະຫະພັນເອີລົບ ແລະ UNICEF, ໄດ້ເພີ່ມມຸມມອງທີ່ຫຼາກຫຼາຍໃຫ້ແກ່ກົນໄກການປະສານງານ. ໃນໄລຍະສັ້ນ, ອາດຈຳເປັນຕ້ອງໄດ້ມີທຶນສະໜອງໃຫ້ຢ່າງ ເຕັມສ່ວນ ແລະ ຈັດຕັ້ງປະຕິບັດແຜນປະຕິບັດງານຂອງຫຼາຍຂະແໜງການ, ເຊັ່ນດຽວກັນກັບການຮັກສາລະດັບຊຸກຍູ້ ແລະ ຍົກລະດັບ ການສະໜັບສະໜູນເພີ່ມເຕີມ ຕະຫຼອດໄລຍະກາງ ແລະ ໄລຍະຍາວ.

ປະຊາກອນທີ່ NNS ໃຫ້ຄວາມສົນໃຈເປັນພິເສດ ລວມມີ ເດັກທີ່ມີອາຍຸຕ່ຳກວ່າ 2 ປີ, ເດັກທີ່ມີອາຍຸຕ່ຳກວ່າ 5 ປີ, ແມ່ຍິງຖືພາ,ແມ່ຍິງຫຼັງເກີດລູກ ແລະ ແມ່ຍິງທີ່ໃຫ້ນົມລູກ.

ເຖິງແມ່ນວ່າໂພຊະນາການຂອງແມ່ ໄດ້ຮັບການເນັ້ນ ໜັກເພີ່ມ ຂຶ້ນໃນນະໂຍບາຍດ້ານໂພຊະນາການ, ແຕ່ດ້ວຍຂໍ້ຫ້າມທາງຮີດຄອງປະເພນີ, ຄວາມຄາດຫວັງຂອງສັງຄົມ ແລະ ຄວາມຮູ້ດ້ານໂພຊະນາການທີ່ຍັງຕ່ຳ ໄດ້ສ້າງອຸປະສັກກີດຂວາງຕໍ່ການປະຕິບັດດ້ານໂພຊະນາການທີ່ດີໃນໄລຍະການຖືພາ ແລະ ໃນລະຫວ່າງການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ (IYCF),

ບັນຫາດ້ານໂພຊະນາການ ແລະ ສຸຂະພາບ ສຳລັບແມ່ຍິງທີ່ເປັນເຍົາວະຊົນ (35 ສ່ວນຮ້ອຍຂອງແມ່ຍິງທີ່ແຕ່ງງານ ແລະ ໜຶ່ງໃນຫ້າຂອງແມ່ຍິງທີ່ເກີດລູກຜູ້ທຳອິດ ກ່ອນທີ່ເຂົາເຈົ້າຈະມີອາຍຸຄົບ 18 ປີ) ແມ່ນບໍ່ໄດ້ຮັບການລວມເຂົ້າໃນຍຸດທະສາດດ້ານໂພຊະນາການ.

ການສະໜັບສະໜູນດ້ານໂພຊະນາການ ສຳລັບຜູ້ດູແລເດັກພາຍໃນຄົວເຮືອນ ຫຼື ການຮັບປະກັນທາງດ້ານສະບຽງອາຫານ ແລະ ບັນຫາ ການຂາດສານອາຫານໃນກຸ່ມປະຊາກອນຜູ້ສູງອາຍຸແມ່ນບໍ່ໄດ້ຮັບການສຶກສາຄົ້ນຄວ້າຢ່າງພຽງພໍ.

ການຮັບປະກັນທາງດ້ານສະບຽງ ອາຫານ ແລະ ຂາດສານອາຫານແມ່ນຖືເປັນບັນຫາສຳຄັນຢູ່ເຂດຊົນນະບົດ, ໂດຍມີຂໍ້ມູນທີ່ຈຳກັດຫຼາຍກ່ຽວກັບປະຊາກອນໃນເຂດຕົວເມືອງ ແລະ ຊານເມືອງ.

ສິ່ງທ້າທາຍດ້ານໂພຊະນາການ ທີ່ ສປປ ລາວກຳລັງປະເຊີນຢູ່ແຮ່ງເພີ່ມພູນດ້ວຍການລວມເອົາບັນຫາຕຸ້ຍ ແລະ ນ້ຳໜັກເກີນມາດຕະຖານເຂົ້າມານຳ, ແລະ ພະຍາດທີ່ບໍ່ຕິດຕໍ່, ຈຸດສຸມຂອງຄວາມພະຍາຍາມດ້ານໂພຊະນາການ ໃນ 1,000 ມື້ທຳອິດຂອງຊີວິດແມ່ນຈຳເປັນຕ້ອງໄດ້ສົ່ງເສີມດ້ວຍ ຫຼັກການວົງຈອນ ຊີວິດກັບໂພຊະນາການ (life-cycle approach to nutrition), ເຊິ່ງຄຳນຶງເຖິງ ການຫຼຸດຜ່ອນການເສຍຊີວິດທີ່ສາມາດປ້ອງກັນໄດ້ໃນກຸ່ມຜູ້ໃຫຍ່ ທັງເຂດຊົນນະບົດ ແລະ ຕົວເມືອງ.

ຍ້ອນປະຊາຊົນທີ່ທຸກຍາກ ກຳລັງປະເຊີນກັບບັນຫາຄວາມສ່ຽງຫຼາຍຢ່າງ ຕະຫຼອດການດຳລົງຊີວິດຂອງເຂົາເຈົ້າ, ການຫຼຸດຜ່ອນຄວາມສ່ຽງ ແລະ ຄວາມເປາະບາງ ແມ່ນ ບາດກ້າວທີ່ຈຳເປັນໃນການທັບມ້າງວົງຈອນລະຫວ່າງໄວ (intergenerational cycles) ຂອງການຂາດສານອາຫານ.

ຄວາມຮູ້ດ້ານໂພຊະນາການ ແມ່ນສິ່ງທີ່ໜ້າເປັນຫ່ວງຢ່າງ ຖາວອນໃນກຸ່ມປະຊາກອນເຂດຊົນນະບົດ ແລະ ຕົວເມືອງ ໂດຍບໍ່ແຕກຕ່າງກັນ. ຄວາມເປັນຫ່ວງຕໍ່ກັບແຫຼ່ງທີ່ມີຂອງອາຫານພາຍໃນທ້ອງຖິ່ນ ແລະ ອາຫານທີ່ນຳເຂົ້າ ແມ່ນຖືກຍົກຂຶ້ນມາ, ແລະ ມັນໄດ້ກາຍເປັນ ຈຸດສົນໃຈ ຂອງສັງຄົມ ທີ່ຢາກຮູ້ວ່າ ມີອັນໃດແດ່ຢູ່ໃນອາຫານ, ມັນມາແຕ່ໃສ, ຖືກປຸງແຕ່ງແບບໃດ, ແລະ ມັນຈະເກີດຫຍັງຂຶ້ນກັບຮ່າງກາຍ ຖ້າກິນເຂົ້າໄປ.

ຍ້ອນປະລິມານຂອງອາຫານທີ່ປຸງແຕ່ງແລ້ວ ແລະ ອາຫານທີ່ນຳເຂົ້າທີ່ຊອກຫາໄດ້ຢູ່ຕະຫຼາດ, ບົດບາດດັ້ງເດີມຂອງແມ່ຍິງ ທີ່ເປັນບ່ອນອີງໃຫ້ແກ່ສະມາຊິກໃນຄອບຄົວ ດ້ານໂພຊະນາການ ແມ່ນເຫັນວ່າບໍ່ມີຄວາມໝັ້ນໃຈອີກຕໍ່ໄປ.

ຄົວເຮືອນ ມີຄວາມສົນໃຈທີ່ຈະ ຮູ້ຫຼາຍຂຶ້ນກ່ຽວກັບໂພຊະນາການຍັງມີຂໍ້ສົງໃສວ່າ ຈະຊອກຫາຂໍ້ມູນດັ່ງກ່າວໄດ້ແນວໃດ.

ຄວາມສົນໃຈຂອງສັງຄົມ ຕໍ່ຄວາມຮູ້ດ້ານ ໂພຊະນາການ ແມ່ນໄດ້ຮັບການຍົກຂຶ້ນມາຕະຫຼອດໄລຍະການປຶກສາຫາລື,ນີ້ໄດ້ຊີ້ໃຫ້ເຫັນ ເຖິງຄວາມຢາກຮູ້ຢາກເຫັນທີ່ເພີ່ມທະວີຂຶ້ນທີ່ຢາກໄດ້ຂໍ້ມູນທີ່ຖືກຕ້ອງ ກ່ຽວກັບອາຫານ ແລະ ໂພຊະນາການ, ລວມທັງການລ້ຽງລູກດ້ວຍນົມແມ່ພຽງຢ່າງດຽວ, ການລ້ຽງລູກດ້ວຍ ອາຫານເສີມ, ລວມທັງການປະຕິບັດຕ່າງໆທີ່ຕິດພັນກັບສຸຂະອະນາໄມ ແລະ ຄວາມສະອາດ. ການສ້າງຄວາມຮູ້ຮອບຕົວດ້ານໂພຊະນາການ ສາມາດສົ່ງເສີມໄດ້ຜ່ານການລວມເອົາຂໍ້ມູນດ້ານໂພຊະນາການ ເຂົ້າໃນຫຼັກສູດປະຖົມ ແລະ ມັດທະຍົມ.

ຫຼັກການລະຫວ່າງຂະແໜງ ການຕ່າງໆ ກ່ຽວກັບໂພຊະນາການ, ແລະ ຄວາມຮັບຮູ້ທົ່ວໄປດ້ານໂພຊະນາການ ອາດຈະສາມາດສົ່ງເສີມດ້ວຍການຝຶກອົບຮົມກັບທີ່ ໃຫ້ແກ່ພະນັກງານຂັ້ນເມືອງຈາກຂະແໜງສຶກສາ, ກະສິກຳ ແລະ ສາທາ, ລວມທັງຕາງໜ້າຂອງອົງການ ອສບລ ແລະ ອົງການ ຈັດຕັ້ງມະຫາຊົນ.

ຄວາມຮູ້ດ້ານໂພຊະນາການຍັງມີຄວາມສຳຄັນສຳລັບກະສິກອນທີ່ຕ້ອງເຂົ້າໃຈວ່າ ພືດປະເພດໃດທີ່ເຂົາເຈົ້າຄວນປູກໃຫ້ຄອບຄົວບໍລິໂພກ, ເພີ່ມມູນຄ່າດ້ວຍການປູກພືດຫຼາກຫຼາຍຊະນິດ, ຫຼື ສຳລັບໃຊ້ໃນການຕັດສິນໃຈວ່າຈະຫັນປ່ຽນມາປູກພືດ ປະເພດໃດໃນກໍລະນີທີ່ສະພາບອາກາດມີການປ່ຽນແປງ.

ຍ້ອນຂໍ້ຫ້າມທາງວັດທະນະທຳ ແລະ ປະເພນີປະຕິບັດ ກ່ຽວກັບສຸຂະພາບຂອງແມ່ ແລະ ການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ (IYCF) ແມ່ນຖືກຮັບຮູ້ວ່າມີຜົນກະທົບທີ່ອັນຕະລາຍດ້ານໂພຊະນາການ, ແລະ ໂອກາດແມ່ນມີຢູ່ ເພື່ອປັບປຸງການເຂົ້າ ເຖິງຂໍ້ມູນດ້ານໂພຊະນາການ ຜ່ານສູນຮັກສາສຸຂະພາບຂອງລັດ, ອົງການ ອສບລ ແລະ ສື່ມວນຊົນ. ອັນນີ້ ໄດ້ ນຳສະເໜີໂອກາດທີ່ດີໃນການເຊື່ອມໂຍງໂພຊະນາການກັບວິທີການປະຕິບັດໃນຂະແໜງ ກະສິກຳ ແລະ ຄວາມທົນທານ ຕໍ່ການປ່ຽນແປງສະພາບດິນຟ້າອາກາດ.

ການຮັບຮູ້ເພີ່ມເຕີມວ່າ ສູນບໍລິການສຸຂະພາບຂອງລັດແມ່ນເສັ້ນທາງຫຼັກໃນການສົ່ງຂໍ້ມູນດ້ານໂພຊະນາການ ແລະ ການຮັກສາສຸຂະພາບ, ມັນມີຄວາມຈຳເປັນຕ້ອງໄດ້ສົ່ງເສີມຄຸນນະພາບຂອງການບໍລິການ ແລະ ຂໍ້ມູນທີ່ສະໜອງໃຫ້ຜ່ານ ສູນບໍລິການສຸຂະພາບດັ່ງກ່າວ ດ້ວຍການຍົກລະດັບຄວາມຮູ້ຂອງພະນັກງານແພດທາງດ້ານໂພຊະນາການ.

ສຸດທ້າຍ, ດ້ວຍການມີຂໍ້ຈຳກັດໃນການຮັບຮູ້ ການນຳໃຊ້ການບໍລິການດ້ານໂພຊະນາການ ຂອງ ແມ່ຍິງຊົນເຜົ່າທີ່ບໍ່ເວົ້າພາສາລາວ, ໂດຍສະເພາະແມ່ນຢູ່ເຂດຊົນນະບົດ, ຈຳເປັນຕ້ອງໄດ້ເພີ່ມຄວາມພະຍາຍາມຂຶ້ນ ໃນການສະໜອງ ການບໍລິການ ແລະ ຂໍ້ມູນທີ່ເປັນພາສາທ້ອງຖິ່ນ.

ການກິນອາຫານທີ່ບໍ່ຄົບໝູ່ ປະກອບສ່ວນໃສ່ບັນຫາການຂາດສານອາຫານ. ກຊກປ ແລະ ອົງການອາຫານ ແລະ ກະສິກຳແຫ່ງສະຫະປະຊາຊາດ (2013) ໄດ້ໃຫ້ຂໍ້ສັງເກດວ່າ ມີຫຼາຍກວ່າ 55 ສ່ວນຮ້ອຍຂອງເດັກທີ່ມີອາຍຸຕ່ຳກວ່າຫ້າປີ ບໍລິໂພກອາຫານໜ້ອຍກວ່າສາມໝູ່, ເຖິງແມ່ນວ່າຈະມີອາຫານຫຼາກຫຼາຍປະເພດຢູ່ໃນຄອບຄົວກໍ່ຕາມ.

ອັນນີ້ ໄດ້ຊີ້ໃຫ້ເຫັນເຖິງການເຊື່ອມໂຍງທີ່ສຳຄັນຕໍ່ກັບຄວາມຮູ້ດ້ານໂພຊະນາການ, ໂດຍສະເພາະການລ້ຽງລູກ ດ້ວຍອາຫານເສີມ.

ທາງດ້ານການບໍລິໂພກ, ຄວາມຫຼາກຫຼາຍຂອງອາຫານຢູ່ ສປປ ລາວ ແມ່ນມີຢູ່ໃນຜະລິດ ຕະພັນ ເຄື່ອງປ່າຂອງດົງ, ອາຫານທີ່ມາຈາກແມ່ນ້ຳລຳເຊ ແລະປ່າຖືເປັນແຫຼ່ງອາຫານສຳຄັນທີ່ສະໜອງໂປຼຕີນ, ໄຂມັນ ແລະ ສານອາຫານ.

Foppes et al (2011) ໄດ້ລະບຸ 50 ແນວພັນຂອງແຫຼ່ງອາຫານຈາກປ່າ,ເຊິ່ງກວມເອົາ 15ສ່ວນຮ້ອຍຂອງການບໍລິໂພກ ອາຫານທັງໝົດ ຂອງຄົວເຮືອນ. ເຖິງແມ່ນການເຂົ້າເຖິງຜະລິດຕະພັນເຄືອງປ່າຂອງດົງໃນປະຈຸບັນຈະມີຄວາມຫຍຸ້ງຍາກ, ບົດບາດຂອງ ອາຫານທີ່ອຸດົມໄປດ້ວຍແຮ່ທາດທີ່ສາມາດຊອກຫາໄດ້ຢູ່ທ້ອງຖິ່ນຍັງຄົງເປັນສິ່ງສຳຄັນ, ແລະ ຄວາມພະຍາຍາມໃນການສົ່ງເສີມໂພຊະນາການຄວນຈະເຊື່ອມໂຍງກັບການເພີ່ມສະມັດຕະພາບຜົນຜະລິດໝາກໄມ້ທີ່ມີຫຼາກຫຼາຍປະເພດ, ຜັກ, ຊີ້ນ, ປາ, ສັດນ້ຳ ແລະ ແມງໄມ້ ທີ່ເຮັດ ໃຫ້ປະເທດລາວ ແລະ ເຂດພາກພື້ນແມ່ນ້ຳຂອງມີເອກະລັກສະເພາະໃນໂລກ.

ອັນນີ້ສາມາດເຮັດໄດ້ຜ່ານການໂຄສະນາເຜີຍແຜ່ ເພື່ອສົ່ງເສີມການຂຸດຄົ້ນຜະລິດຕະພັນເຄື່ອງປ່າຂອງດົງແບບຍືນຍົງ,ສົ່ງເສີມການຜະລິດກະສິກຳແບບປະສົມປະສານ, ປັບປຸງດ້ານການຕະຫຼາດຢູ່ບ້ານ ແລະ ອື່ນໆ. ເຖິງແມ່ນວ່າແຫຼ່ງອາຫານທີ່ຫຼາກຫຼາຍທີ່ສາມາດຫາໄດ້ຢູ່ທ້ອງຖິ່ນ ທີ່ສືບຕໍ່ເປັນທາງເລືອກທີ່ແທດເໝາະສຳລັບປະຊາຊົນລາວ ທີ່ສາມາດຂຸດຄົ້ນຜະລິດຕະພັນເຄື່ອງປ່າຂອງດົງ, ອັນນີ້ ຈະຕ້ອງໄດ້ຮັບການປະເມີນຜົນ ທາງດ້ານລະດູການ, ຄ່າໃຊ້ຈ່າຍ (ທັງທີ່ເປັນຮູບ ແບບເງິນ ແລະ ໂອກາດ), ແລະ ຄວາມຍືນຍົງຢູ່ໃນລະດັບທ້ອງຖິ່ນ.

ຍຸດທະສາດເພີ່ມເຕີມ, ໂດຍສະເພາະແມ່ນແຫຼ່ງອາຫານທີ່ເປັນໄຂມັນ, ເຊິ່ງອາດຈະມີຂໍ້ຈຳກັດທາງດ້ານການສະໜອງຢູ່ໃນສະພາບຂອງເຂດຊົນນະບົດ, ອາດຈະມີຄວາມຈຳເປັນ ຖ້າຫາກຕ້ອງການໄດ້ຮັບຜົນ ປະໂຫຍດດ້ານໂພຊະນາການຢ່າງສົມບູນຈາກຄວາມຫຼາກຫຼາຍຂອງອາຫານທ້ອງຖິ່ນ.

ມັນມີຜົນດີໃນການກຳນົດການຂາດສານອາຫານແບບຊ້ຳເຮື້ອ ແລະ ການເຕັ້ຍກວ່າມາດຕະຖານ ທີ່ບໍ່ແມ່ນດັດຊະນີຊີ້ວັດທາງດ້ານ ຄວາມສູງພຽງ ຢ່າງດຽວ ແຕ່ວ່າຕົວຊີ້ວັດຂອງຂີດຄວາມສາມາດດ້ານສະຕິປັນຍາ ແລະ ສັກກະຍະພາບຂອງການໃຊ້ຊີວິດ (World Bank 2014a). ຕະຫຼອດໄລຍະກາງ, ເພື່ອໃຫ້ ສປປ ລາວ ສາມາດສ້າງຂີດຄວາມສາມາດຂອງຊັບພະຍາກອນມະນຸດ, ການປັບປຸງ ການສຶກສາ ແລະ ພັດທະນາກຳລັງແຮງງານ, ຄວາມເຕັ້ຍ ຈຳເປັນຕ້ອງໄດ້ຖືກຮັບຮູ້ວ່າ ເປັນບັນຫາທາງດ້ານເສດຖະກິດ-ສັງຄົມ ເຊິ່ງກີດຂວາງ ການພັດທະນາຂອງປະເທດ. ເພື່ອຮັບໃຊ້ ເປົ້າໝາຍການພັດທະນາແບບຍືນຍົງ ຂໍ້ 2.2, ທີມງານທົບທວນຍຸດທະສາດ ແນະນຳ 4 ຈຸດທີ່ຈະຕ້ອງໄດ້ຮັບການແກ້ໄຂ:

- ສະໜອງຊັບພະຍາກອນໃຫ້ເຕັມສ່ວນ ແລະ ການຈັດຕັ້ງປະຕິບັດ ແຜນປະຕິບັດງານຂອງຫຼາຍຂະແໜງການ

- ຂໍ້ມູນກ່ຽວກັບໂພຊະນາການ, ສຸຂະພາບ ແລະ ຄວາມທົນທານຕໍ່ການປ່ຽນແປງສະພາບດິນຟ້າອາກາດ ຄວນໄດ້ ຮັບການເຊື່ອມສານເຂົ້າໃນຫຼັກສູດການສຶກສາຊັ້ນປະຖົມ ແລະ ມັດທະຍົມ, ແລະ ຜ່ານຫຼັກສູດຝຶກອົບຮົມກັບທີ່ສະໜອງ ໃຫ້ແກ່ພະນັກງານສົ່ງເສີມກະສິກຳ, ສາທາ ແລະສຶກສາ, ພະນັກງານອົງການ ອສບລ ແລະ ພະນັກງານອົງການຈັດຕັ້ງມະຫາຊົນ ຢູ່ຂັ້ນເມືອງເພື່ອຮັບປະກັນວ່າຂໍ້ມູນດັ່ງກ່າວໄດ້ຖືກເຜີຍແຜ່ໃຫ້ແກ່ຊຸມຊົນ ແລະ ຄົວເຮືອນ.

- ສະໜັບສະໜູນຄຸນນະພາບການໃຫ້ບໍລິການສາທາລະນະສຸກ ແກ່ຊຸມຊົນເຂດຊົນນະບົດ ແລະ ກຸ່ມ ຊົນເຜົ່າ ທີ່ບໍ່ເວົ້າພາສາລາວ ດ້ວຍຈຸດປະສົງແນໃສ່ປັບປຸງການບໍລິການດ້ານໂພຊະນາການພາຍໃຕ້ລະບົບບໍລິການດ້ານສຸຂະພາບ. ໃຫ້ການສະໜັບສະໜູນ ໂດຍກົງດ້ານວິຊາການ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານແພດກ່ຽວກັບໂພຊະນາການ, ໂດຍສະເພາະແມ່ນ ພະນັກງານຂັ້ນແຂວງ. ແມ່ຍິງທີ່ພິການ ແລະ ເດັກຈຳເປັນຕ້ອງໄດ້ຮັບການເອົາໃຈໃສ່ເປັນພິເສດ.

- ສົ່ງເສີມຄວາມຫຼາກຫຼາຍຂອງອາຫານ ດ້ວຍການບໍລິໂພກອາຫານທີ່ອຸດົມໄປດ້ວຍແຮ່ທາດ ທີ່ສາມາດຊອກຫາໄດ້ຢູ່ທ້ອງຖິ່ນ. ການ ຂະຫຍາຍໂຄງການອາຫານໂຮງຮຽນຄວນໄດ້ຮັບທຶນຮອນ ແລະ ສະໜອງໃຫ້ ພາຍໃຕ້ມຸມມອງດັ່ງກ່າວນີ້.

***4.3*** ການປັບປຸງສະມັດຕະພາບການຜະລິດເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.3 ພາຍໃນປີ 2030, ເພີ່ມສະມັດຕະພາບການຜະລິດກະສິກຳແລະລາຍຮັບຂອງຜູ້ຜະລິດສະບຽງອາຫານຂະໜາດນ້ອຍ ໂດຍສະເພາະແມ່ຍິງ, ຄົນຊົນເຜົ່າ, ຄອບຄົວຊາວກະສິກອນ, ຜູ້ລ້ຽງສັດ ແລະ ຊາວປະມົງ ໃຫ້ໄດ້ ສອງເທົ່າ ບົນພື້ນຖານການມີສິດສະເໝີພາບໃນການເຂົ້າເຖິງທີ່ດິນ, ຊັບພະຍາກອນ ແລະ ປັດໃຈການຜະລິດ, ຄວາມຮູ້, ການບໍລິການດ້ານການເງິນ, ຕະຫຼາດ ແລະ ກາລະໂອກາດສຳລັບການ ເພີ້ມມູນຄ່າຜະລິດຕະພັນ ແລະ ວຽກນອກຂະແໜງການກະສິກຳ. ໂດຍຖືເອົາຕາມເປົ້າໝາຍເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.3 ດັ່ງທີ່ກຳນົດໄວ້, ການເພີ່ມຜະລິດຕະຜົນເປັນສອງເທົ່າ ດ້ວຍການວັດແທກບໍລິມາດທັງໝົດ ແມ່ນຈະມີຄວາມຫຍຸ້ງຍາກທີ່ຈະບັນລຸຜົນສຳເລັດ, ແຕ່ວ່າສິ່ງທີ່ສຳຄັນກວ່ານັ້ນ,

ການເພີ່ມສະມັດ ຕະພາບການຜະລິດກະສິກຳເປັນສອງເທົ່າໃນທົ່ວທຸກ ຂົງເຂດກຸ່ມເປົ້າໝາຍທີ່ໄດ້ກຳນົດໄວ້ ແມ່ນມີຄວາມທ້າທາຍທີ່ສຸດ ຍ້ອນຂະໜາດ ແລະ ຄວາມຊັບຊ້ອນຂອງການປະຕິບັດງານ ທີ່ຈຳເປັນດັ່ງກ່າວ.

ເພື່ອຮັບປະກັນການຜະລິດສະບຽງອາຫານ, ຜູ້ຜະລິດສະບຽງອາຫານຂະໜາດໃຫຍ່ ແລະ ຂະໜາດນ້ອຍ ຕ້ອງການ ໂອກາດທີ່ເທົ່າທຽມກັນ ໃນການເຂົ້າເຖິງຊັບພະຍາກອນ ແລະ ປັດໃຈຈຳເປັນອື່ນໆ.

ປະຈຸບັນ, ນະໂຍບາຍດ້ານກະສິກຳ ແມ່ນສົ່ງເສີມການຂະຫຍາຍການຜະລິດ ລວມເປັນຫຼັກໂດຍວັດແທກປະລິມານທີ່ເກັບກ່ຽວໄດ້, ແລະ ບໍ່ໄດ້ແຍກໃຫ້ເຫັນຄວາມແຕກຕ່າງລະຫວ່າງຮູບແບບການຜະລິດ.

ການສຳປະທານທີ່ດິນ, ການປູກປ່າ ແລະ ລະບົບສັນຍາຜູກພັນສອງສົ້ນໄດ້ເພີ່ມຄວາມກົດດັນໃຫ້ແກ່ທີ່ດິນທີ່ມີຢູ່ ແລະ ແຫຼ່ງຊັບພະຍາກອນ ນ້ຳ;

ພາກປະຕິບັດໃນການຄຸ້ມຄອງທີ່ດິນທີ່ທັບຊ້ອນກັນ ແລະສິດໃນການຄອບຄອງທີ່ດິນ ໄດ້ກາຍມາເປັນ ບັນຫາທ້າທາຍໃນທົ່ວປະເທດ.

ເຖິງແມ່ນເສດຖະກິດຂອງສປປລາວອີງໃສ່ການກະສິກຳເປັນພື້ນຖານ, ການບໍລິການສົ່ງເສີມກະສິກຳ ກໍ່ຍັງມີຂໍ້ຈຳກັດຢູ່.

ການ ບໍລິການສົ່ງເສີມກະສິກຳ ມີບົດບາດສຳຄັນໃນການເຜີຍແຜ່ຄວາມຮູ້, ເທັກໂນໂລຊີ ແລະ ຂໍ້ມູນດ້ານກະສິກຳ, ແລະ ໃນການເຊື່ອມໂຍງ ຊາວກະສິກອນ ກັບຜູ້ມີບົດບາດອື່ນໆໃນເສດຖະກິດ.

ການບໍລິການສົ່ງເສີມກະສິກຳ ແມ່ນໜຶ່ງໃນຕົວຂັບ ເຄື່ອນທີ່ສຳຄັນໃນການຫັນປ່ຽນວິທີການຜະລິດກະສິກຳ ເພື່ອສົ່ງເສີມການຄ້ຳປະກັນທາງດ້ານສະບຽງອາຫານໃຫ້ແກ່ຄົວເຮືອນ, ການປັບປຸງລາຍຮັບ ແລະ ການຫຼຸດຜ່ອນ ຄວາມທຸກຍາກ.

ພະນັກງານສົ່ງເສີມກະສິກຳແມ່ນມີຈຳນວນຈຳກັດ, ແລະມີຄວາມຂາດ ແຄນດ້ານງົບປະມານ.

ການຂາດການເຊື່ອມໂຍງລະຫວ່າງ ການຄົ້ນຄວ້າ - ການສົ່ງເສີມ - ຊາວກະສິກອນ ເພື່ອອຳນວຍຄວາມສະດວກ ໃຫ້ແກ່ການຄົ້ນຄວ້າທີ່ມາຈາກຄວາມຕ້ອງການ ແລະ ເພີ່ມການນຳໃຊ້ເທັກໂນໂລຊີທີ່ແທດເໝາະ ສືບຕໍ່ເປັນອຸປະສັກກີດຂວາງການເພີ່ມສະມັດຕະພາບ ການຜະ ລິດກະສິກຳ ຍ້ອນຊາວນາ ຍັງສືບຕໍ່ບໍ່ໄດ້ຮັບຄວາມຮູ້ພຽງພໍ ດ້ານເທັກໂນໂລຊີ ແລະ ທາງເລືອກທີ່ຫຼາກຫຼາຍໃນການຜະລິດກະສິກຳ.

ການຈັດຕັ້ງປະຕິບັດລະບຽບການດ້ານ ມາດຕະຖານຄວາມປອດໄພຂອງອາຫານ ແມ່ນຍັງຈຳກັດ ຫຼື ຂໍ້ກຳນົດເພື່ອຄວາມປອດໄພຂອງຜະລິດຕະພັນກະສິກຳ ໄປຄຽງຄູ່ກັບຕ່ອງໂສ້ມູນຄ່າ.

ຍ້ອນວ່າສັດຕູພືດ, ຫຍ້າ ແລະ ພະຍາດອື່ນໆ ຍັງສືບຕໍ່ເປັນສາຍເຫດຂອງການ ສູນເສຍຂອງຊາວກະສິກອນ, ການນຳໃຊ້ສານເຄມີທີ່ບໍ່ໄດ້ຮັບການຄວບຄຸມກວດກາ ມີແນວໂນ້ມເພີ່ມຂຶ້ນ.

ການຂາດຂໍ້ມູນຂອງຊາວນາ ກ່ຽວກັບວ່າຈະນຳໃຊ້ສານເຄມີເຫຼົ່ານັ້ນແນວໃດ ຈະພາໃຫ້ມີຜົນກະທົບຕໍ່ຜະລິດຕະພັນອາຫານແລະຕໍ່ສຸຂະພາບຂອງຊາວກາສິກອນ ແລະ ຜູ້ບໍລິໂພກ.

ຜູ້ຜະລິດຂະໜາດນ້ອຍ ທີ່ເອື່ອຍອີງໃສ່ການເພິ່ງຕົງຂອງຕະ ຫຼາດ, ຍັງຖືກກະທົບຈາກການປ່ຽນແປງຂອງລາຄາຂອງປັດໃຈການຜະລິດ ແລະ ຜົນຜະລິດກະສິກຳ. ຊາວກະສິກອນຂາດອຳນາດໃນການຕໍ່ລອງ, ແລະ ບໍ່ສາມາດເຈລະຈາໃຫ້ໄດ້ລາຄາດີຂຶ້ນ ສຳລັບຜົນຜະລິດຂອງເຂົາເຈົ້າ ໂດຍສະເພາະຊາວນາທີ່ບໍ່ສາມາດເວົ້າພາສາລາວ. ລະດັບຂອງການມີສ່ວນຮ່ວມກຸ່ມຜູ້ຜະລິດ ແລະ ສະຫະກອນ ແມ່ນໄດ້ຮັບການປັບປຸງ ແຕ່ວ່າຍັງຄົງໜ້ອຍຢູ່.

ດ້ວຍຄວາມພະຍາຍາມໃຫ້ສາມາດບັນລຸຕາມເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.3 ທີມງານທົບທວນຍຸດທະສາດ ແນະນຳ 4 ຈຸດ ທີ່ຕ້ອງໄດ້ຮັບການແກ້ໄຂດັ່ງຕໍ່ໄປນີ້:

a. ເສີມສ້າງລະບົບການສະໜັບສະໜູນສະເພາະທີ່ຕ່າງກັນ ໃຫ້ແກ່ການຜະລິດ ກະສິກຳຂະໜາດໃຫຍ່ ແລະ ຜູ້ຜະລິດ ຂະ ໜາດນ້ອຍ. ລະບົບສະໜັບ ສະໜູນ - ສົ່ງເສີມດ້ວຍການບໍລິການສົ່ງເສີມກະສິ ກຳທີ່ມີຄວາມເຂັ້ມແຂງ ແລະ ປະກອບຊັບພະຍາກອນທີ່ຈຳເປັນໃຫ້ຢ່າງພຽງພໍ ຄວນແນໃສ່ການສ້າງຄວາມທົນທານ, ສົ່ງເສີມຄວາມຫຼາກຫຼາຍ ຂອງຜົນ ຜະລິດກະສິກຳ ແລະ ການພັດທະນາຕະຫຼາດ ສຳລັບຜູ້ຜະລິດຂະໜາດນ້ອຍເພື່ອຕອບສະໜອງການຮັບປະກັນທາງດ້ານ ສະບຽງອາຫານ ໃຫ້ແກ່ທ້ອງຖິ່ນ.

ອັນນີ້ ແມ່ນຈຳເປັນຕ້ອງໄດ້ເຊື່ອມສານເຂົ້າໃນນະໂຍບາຍ ແລະ ຍຸດທະສາດທີ່ມີຢູ່ ກ່ຽວກັບການ ປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ, ຊົນລະປະທານ, ການຄຸ້ມຄອງນ້ຳ, ການບໍລິການສົ່ງເສີມ ກະສິ ກຳ, ການຄຸ້ມຄອງປ່າໄມ້ ແລະ ການຄຸ້ມຄອງທີ່ດິນ.

ດິນທີ່ມີຄວາມອຸດົມສົມບູນ ແລະ ເໝາະແກ່ການປູກຝັງ ຄວນຖືກເກັບຮັກສາ ໄວ້ສຳລັບຈຸດປະສົງເພື່ອຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການເທົ່ານັ້ນ.

b. ນຳສະເໜີການເກື້ອກູນທີ່ແທດເໝາະໃນການສະ ໜອງປັດໃຈຜະລິດ ທີ່ຈຳເປັນສຳລັບຜູ້ຜະລິດສະບຽງ ອາຫານຂະໜາດນ້ອຍ, ແລະ ການກະສິກຳແບບຄອບຄົວ ຄຽງຄູ່ກັບຕ່ອງໂສ້ມູນຄ່າ, ລວມທັງ, ແຕ່ບໍ່ຈຳກັດ ພຽງແຕ່ ດ້ານເທັກໂນໂລຊີ, ເຕັກນິກກະສິກຳ,ການສົ່ງຄວາມຮູ້, ຂໍ້ມູນ ແລະ ການເງິນ/ທຶນຮອນ. ອັນນີ້ອາດຈະເຮັດແບບວິທີການ ສ້າງເປັນກຸ່ມ/ສະຫະກອນ ເພື່ອຮັບປະກັນວ່າຊັບພະຍາກອນທີ່ໄດ້ ມີການຈັດສັນເປັນຢ່າງດີ.

ອັນນີ້ ຄວນລວມທັງການ ຮັບປະກັນການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງເທົ່າທຽມກັນ.

ການສະໜັບສະໜູນຄວນລວມທັງການບໍລິການສັດຕະວະແພດ, ຊົນລະປະທານ ຂະໜາດນ້ອຍ, ການປຸງແຕ່ງ ແລະ ການຮັກສາຜົນຜະລິດຫຼັງເກັບກ່ຽວ, ການຈັດການກັບສັດຕູພືດແບບເຊື່ອມສານ, ການເຂົ້າເຖິງຂໍ້ມູນດ້ານການຕະຫຼາດ, ການສະໜັບສະໜູນການພັດທະນາຕະຫຼາດ ພາຍໃນສຳລັບຜູ້ຜະລິດຂະໜາດນ້ອຍ, ການເຂົ້າເຖິງການເງິນຈຸລະພາກ, ການຫຼຸດຜ່ອນເງື່ອນໄຂການກູ້ຢືມສຳລັບຊາວກະສິກອນ,ຮັບປະກັນວ່າທັງໝົດເຫລົ່ານີ້ໄດ້ມີການເຊື່ອມໂຍງເຂົ້າກັບຜະລິດຕະຜົນທີ່ມີຄຸນນະພາບສູງ ແລະ ມີຄຸນນະສົມບັດໃນການຕອບສະໜອງຄຸນຄ່າດ້ານໂພຊະນາການພາຍໃຕ້ສະພາບເງື່ອນໄຂດ້ານນິເວດ-ກະສິກຳທີ່ແທດເໝາະກັບທ້ອງຖິ່ນ.

*c.* ຮັບຮູ້, ສົ່ງເສີມ ແລະ ສະໜັບສະໜູນບົດບາດຂອງແມ່ຍິງ ໃນລະລົບການຜະລິດຂະໜາດນ້ອຍ/ຜະລິດເພື່ອກຸ້ມກິນ. ເອົາໃຈໃສ່ເປັນພິເສດຕໍ່ກັບບົດບາດທີ່ແຕກຕ່າງກັນລະຫວ່າຍິງ-ຊາຍໃນການຜະລິດກະສິກຳ ແລະການອອກແບບແຜນງານສະໜັບ ສະ ໜູນ ໂດຍແນໃສ່ການເພີ່ມຄວາມສົມດູນລະຫວ່າງຍິງ-ຊາຍ ໃນການເຂົ້າເຖິງ ແລະ ຄວບຄຸມປັດໃຈຮັບໃຊ້ການຜະລິດກະສິກຳ, ຜົນຜະລິດ, ແລະ ການບໍລິການດ້ານການເງິນ.

d. ເສີມສ້າງຄວາມເຂັ້ມແຂງໃນການແນະນຳຄວາມປອດໄພໃນການຄຸ້ມຄອງສັດຕູພືດດ້ວຍການແນະນຳລະບົບ ການ ຕິດສະຫຼາກຂໍ້ມູນ ທີ່ລວມເອົາຂໍ້ມູນພື້ນຖານດ້ານເນື້ອໃນ ແລະ ການນຳໃຊ້ເປັນພາສາລາວໃນການຫຸ້ມຫໍ່. ສຳລັບຜົນຜະລິດ ສົດ, ສົ່ງເສີມຄວາມສະອາດ ແລະປັບປຸງລະບົບກວດກາ ເພື່ອຮັບຮອງສຸຂະອະນາໄມຂອງພືດ ໃນລະຫວ່າງການ ຜະລິດ ແລະ ການຕະຫຼາດ. ສ່ວນທີ່ຮອງຮັບຄວາມພະຍາຍາມດັ່ງກ່າວນີ້ ແມ່ນການຍົກລະດັບປູກຈິດສຳນຶກກ່ຽວກັບເນື້ອໃນ ດ້ານໂພຊະ ນາການ ຂອງ ຜະລິດຕະພັນ ທີ່ຜ່ານການຫຸ້ມຫໍ່ ແລະ ອາຫານທີ່ປຸງແຕ່ງ, ໂດຍສະເພາະແມ່ນ ຂໍ້ມູນກ່ຽວ ກັບນ້ຳຕານ, ໄຂມັນ, ແລະ ໂຊດຽມ.

***4.4*** ການຜະລິດສະບຽງອາຫານແບບຍືນຍົງ, ການບໍລິ ການລະບົບນິເວດ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.4 ພາຍໃນປີ 2030, ຮັບປະກັນໃຫ້ມີລະບົບການຜະລິດສະບຽງອາຫານແບບຍືນຍົງ ແລະ ດຳເນີນວິທີການເຮັດກະສິກຳແບບມີຄວາມທົນທານທີ່ເພີ່ມສະມັດຕະພາບ ແລະ ການຜະລິດ, ເຊິ່ງຊ່ວຍຮັກສາລະບົບນິເວດ, ເພີ່ມຂີດຄວາມສາມາດ ໃນການ ປັບຕົວ ເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ, ອາກາດທີ່ປັ່ນປ່ວນ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ໄພພິບັດອື່ນໆ, ກໍຄືປັບປຸງຄຸນ ນະພາບຂອງດິນເປັນກ້າວໆ.

ສ່ວນສຳຄັນຂອງ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.4 ແມ່ນຮຽກຮ້ອງໃຫ້ມີການພັດທະນານະໂຍບາຍທີ່ຍືດຍຸ່ນ, ຍຸດທະສາດ, ຄຳແນະນຳ ແລະ ເທັກໂນໂລ ຊີທີ່ແທດເໝາະ, ພ້ອມທັງການປັບປ່ຽນໃຫ້ແທດເໝາະກັບຫຼາຍຂະແໜງການ ແລະ ຫຼັກການຄຸ້ມຄອງໂດຍລວມ ເພື່ອວາງແຜນ, ປະສານ ງານ ແລະ ຈັດຕັ້ງປະຕິບັດຕາມເຕັກນິກຂອງວຽກງານດັ່ງກ່າວ. ມີການຄາດຄະເນວ່າ ການຈັດຕັ້ງປະຕິບັດເພື່ອບັນລຸຕາມເປົ້າໝາຍ 2.4 ອາດຈະພາໃຫ້ເກີດມີຂໍ້ຂັດແຍ່ງລະຫວ່າງເສດຖະກິດ, ສັງຄົມ ແລະ ຜົນປະໂຫຍດດ້ານສິ່ງແວດລ້ອມທີ່ແຕກຕ່າງກັນ, ທີ່ຂັດກັບການສ້າງເປົ້າ ໝາຍຍ່ອຍ ເນື່ອງຈາກຄວາມສົນໃຈຜົນປະໂຫຍດທີ່ແຕກຕ່າງກັນ.

ບໍ່ມີຂໍ້ສົງໄສທີ່ວ່າ ສປປ ລາວ ໄດ້ມີນະໂຍບາຍ ແລະ ຍຸດທະສາດຈຳນວນໜຶ່ງ ທີ່ແນໃສ່ການເພີ່ມສະມັດຕະພາບການຜະລິດແລະ ຜົນຜະລິດກະສິກ. ກົມທີ່ຮັບຜິດຊອບສະເພາະການຄຸ້ມຄອງທີ່ດິນກະສິກຳພາຍໃຕ້ກະຊວງກະສິກຳ ແລະປ່າໄມ້ໄດ້ຮັບການສ້າງຂຶ້ນ ສາມປີຜ່ານມາ ເພື່ອປັບປຸງການນຳໃຊ້ທີ່ດິນ ແລະ ວິທີການຄຸ້ມຄອງດິນ. ໄດ້ຄ່ອຍໆປັບປຸງຍຸດທະສາດ ແລະ ແຜນຕ່າງໆ ແນໃສ່ປົກປ້ອງ ລະບົບນິເວດຂອງຊາດ. ຄຳແນະນຳຕ່າງໆ ໃນການປັບປຸງການຮັບມືກັບສະພາບການປ່ຽນແປງຂອງດິນຟ້າອາກາດ, ສະພາບອາກາດທີ່ຮຸນແຮງ, ໄພແຫ້ງແລ້ງ ແລະ ໄພນ້ຳຖ້ວມ ແມ່ນກຳລັງໄດ້ຮັບການກະກຽມ. ເຖິງຢ່າງໃດກໍ່ດີ, ເຖິງຈະມີຫຼາຍຍຸດທະສາດຮອມກັນ, ແຕ່ມັນມີໂອກາດສູງທີ່ຈະພົບຄວາມຫຍຸ້ງຍາກ, ຫຼືອາດຈະບໍ່ສາມາດເປັນໄປໄດ້, ທີ່ຈະບັນລຸໄດ້ເປົ້າໝາຍ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.4, ໂດຍສະເພາະແມ່ນໃນການປັບປຸງສະມັດຕະພາບການຜະລິດ ແລະ ລາຍຮັບໃຫ້ ໄດ້ສອງເທົ່າ (ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.3). ຍັງມີຄວາມສ່ຽງຂອງການສ້າງຂໍ້ຂັດແຍ່ງຮຸນແຮງຕໍ່ການເຂົ້າເຖິງ ແລະ ຄຸ້ມຄອງຊັບພະຍາກອນ ທຳມະຊາດ, ດັ່ງທີ່ໄດ້ເກີດຂຶ້ນໃນກໍລະນີການເຂົ້າເຖິງທີ່ດິນ ແລະ ປ່າໄມ້ ຊຶ່ງຖືກຍົກຂຶ້ນຕະຫຼອດໄລຍະການປຶກສາຫາລືຄັ້ງນີ້.

ບັນຫາສຳຄັນທີ່ຈຳເປັນຕ້ອງໄດ້ແກ້ໄຂແມ່ນຄວາມຈຳເປັນໃນການເພີ່ມຂີດຄວາມສາມາດທີ່ຈຳກັດໃນລະດັບຍຸດທະສາດ, ການ ວາງແຜນ ແລະ ເຕັກນິກວິຊາການ ເພື່ອໃຫ້ສາມາດຄາດຫວັງໄດ້ຢ່າງເຕັມສ່ວນຕໍ່ຂໍ້ກຳນົດໃນອະນາຄົດ ສຳລັບຄວາມກົມກຽວກັນ ແລະ ການເຊື່ອມສານຂອງລະບົບການຜະລິດຂອງມະນຸດ, ການເອື່ອຍອີງໃສ່ສິ່ງແວດລ້ອມ ແລະ ຄຸນຄ່າທາງສັງຄົມ-ເສດຖະກິດຂອງລະບົບ ນິເວດວິທະຍາ ທາງທຳມະຊາດ. ກ່ຽວກັບບັນຫານີ້, ຂັ້ນຕອນການປະເມີນຄ່າທາງດ້ານເສດຖະກິດ-ສັງຄົມ ຂອງລະບົບການຜະລິດອາຫານໄດ້ລວມເອົາຄ່າໃຊ້ຈ່າຍຕົວຈິງຂອງການເຊື່ອມໂຊມທາງດ້ານລະບົບນິເວດ (ລວມທັງການຄຸ້ມ ຄອງສິ່ງເສດເຫຼືອ), ແລະວິທີການເພື່ອສາມາດເຮັດໃຫ້ມີການກຸ້ມທຶນການຜະລິດ ແມ່ນໄດ້ຮັບການສ້າງຂຶ້ນ 'ຫຼັກການຂອງຜູ້ກໍ່ມົນລະພິດ (polluter principle)' ອາດຈະໃຫ້ຄຳແນະນຳ ວິທີການສຳລັບນະໂຍບາຍດັ່ງກ່າວ.

ຄວາມຄືບໜ້າຂອງເປົ້າໝາຍນີ້ ຈະຮຽກຮ້ອງໃຫ້ມີການຮັບຮູ້ ແລະ ການປົກປ້ອງການບໍລິການດ້ານລະບົບນິເວດວິທະຍາ- ນ້ຳເຂດຊົນນະບົດ, ທີ່ພັກອາໄສ, ແລະ ອາຫານ ມີຄວາມສາມາດຕອບສະໜອງໃຫ້ໄດ້ທັງໝົດ ຫຼື ບາງສ່ວນ ດ້ວຍຄວາມ ອຸດົມສົມບູນ ຂອງເຂດ ນິເວດ-ກະສິກຳ ທີ່ຫຼາກຫຼາຍ (multiple agro-ecological zones) ຂອງປະເທດ ແລະ ພາກພື້ນ.
ອັນນີ້ ຮຽກຮ້ອງໃຫ້ ມີການຫັນນະໂຍບາຍໄປສູ່ການສ້າງຄຸນຄ່າຂອງລະບົບນິເວດ, ບໍ່ພຽງແຕ່ສັກກະຍະພາບດ້ານການຄ້າ, ແຕ່ຍັງແມ່ນການນຳໃຊ້ທີ່ ບໍ່ຕິດພັນກັບເງິນ ຂອງປະຊາ ຊົນທ້ອງຖິ່ນ. ລະບົບດັ່ງກ່າວ ເປັນສ່ວນໜຶ່ງຂອງ ມໍລະດົກ ແລະ ຄວາມເປັນເອກະລັກສະເພາະ ຂອງພາກພື້ນແມ່ນ້ຳຂອງ, ແລະ ເປັນພື້ນຖານທີ່ແທ້ຈິງສຳລັບການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ໃນລະດັບຄົວເຮືອນ.

ສິ່ງສຳຄັນທີ່ສຸດຂອງພື້ນຖານຜົນຜະລິດກະສິກຳຂອງ ສປປລາວ, ຜູ້ຜະລິດຂະໜາດນ້ອຍຈຳນວນຫຼວງຫຼາຍ ແລະ ລະບົບການປູກຝັງແບບຄອບຄົວ, ຕ້ອງໄດ້ຖືກຮັບຮູ້ວ່າເປັນຊັບພະຍາກອນທີ່ສຳຄັນ ເພື່ອການສ້າງແນວທາງການພັດທະນາຊົນນະບົດທີ່ກົມກຽວກັນ. ການສະໜັບສະໜູນດ້ານການເງິນ, ເຕັກນິກ ແລະ ສະຖາບັນທີ່ສະໜອງໃຫ້ແກ່ຄອບຄົວເຫລົ່ານີ້ ແລະ ຜູ້ຜະລິດຂະໜາດນ້ອຍຄວນໄດ້ຮັບການປັບປຸງໃຫ້ດີຂຶ້ນກວ່າເກົ່າ ແລະເສີມສ້າງໃຫ້ເຂັ້ມແຂງກວ່າເດີມ.

ເພື່ອປະຕິບັດໃຫ້ໄດ້ເຊັ່ນນັ້ນ, ມຸມມອງດ້ານຄວາມ ສະເໝີພາບລະຫວ່າງຍິງ-ຊາຍ ຂອງຜູ້ຜະລິດຂະໜາດນ້ອຍ ຈຳເປັນຕ້ອງໄດ້ຮັບການເຂົ້າໃຈດີຂຶ້ນ ແລະ ສາມາດສະໜອງການສະໜັບສະໜູນທີ່ແທດເໝາະໄດ້.
ໃນສະພາບການດັ່ງກ່າວນີ້, ການຂະຫຍາຍກະສິກຳຂະໜາດ ໃຫຍ່ທີ່ປູກພືດຊະນິດດຽວ ຄວນໄດ້ຮັບການວິເຄາະຢ່າງລະມັດລະວັງໂດຍມີມຸມມອງການວິເຄາະທີ່ລະອຽດ, ແລະ ຜົນກະທົບຕໍ່ສິ່ງ ແວດລ້ອມ-ສັງຄົມ ອາດຈະໄດ້ຮັບການກຳນົດຢ່າງ ລະອຽດ ແລະ ມີການປຶກສາຫາລື ຢ່າງກົງໄປກົງມາກັບຊາວກະສິກອນ, ຊາວບ້ານ ແລະ ເຈົ້າຂອງທີ່ດິນ.

ວິທີການປູກຝັງທີ່ແທດເໝາະ ແລະ ມີການປັບປ່ຽນໃຫ້ຖືກກັບ ສະພາບ ແມ່ນຈຳເປັນຕ້ອງໄດ້ຮັບການແນະນຳຕົວຈິງ ຮ່ວມກັບມາດຕະການທີ່ຈະແນະນຳທາງເລືອກໃນການດຳລົງຊີວິດທີ່ມີຫຼາຍຮູບແບບສຳລັບຊຸມຊົນທຸກຍາກເຂດຊົນນະບົດ.
ຂັ້ນຕອນການວິເຄາະທີ່ກວ້າງຂວາງ ຂຶ້ນຢູ່ກັບຄວາມຈິງທີ່ວ່າ 'ຕະຫຼາດ' ຈະຕ້ອງໄດ້ຮັບການ ພັດທະນາ, ບໍ່ແມ່ນພຽງແຕ່ເຮັດຕາມຕຳນານໃນປະຈຸບັນຂອງທິດສະດີການເຊື່ອມສານເສດຖະກິດມະຫາພາກພຽງເທົ່ານັ້ນ.

ຂະບວນການສ້າງຕັ້ງສະຖາບັນໃຫ້ເປັນລະບົບເພື່ອຮອງຮັບວຽກງານເສີມສ້າງຄວາມທົນທານຕໍ່ການ ການປ່ຽນແປງຂອງ ສະພາບດິນຟ້າອາກາດ ແມ່ນຍັງມີຂໍ້ຈຳກັດ ແລະ ຍັງຢູ່ໃນ ຊ່ວງກະກຽມເລີ່ມຕົ້ນ ຄ້າຍຄືກັນກັບຂັ້ນ ຕອນທີ່ຖືກດຳເນີນຢູ່ໃນທົ່ວ ໂລກ. ຄວາມສ່ຽງທາງດ້ານ ສະພາບ ອາກາດ ທີ່ມີຄວາມຮຸນແຮງ (ນ້ຳຖ້ວມ, ແຫ້ງແລ້ງ, ຮ້ອນແບບກະທັນຫັນ ຫຼື ຄື້ນຄວາມໜາວ) ແມ່ນມີການເພີ່ມຂຶ້ນ ແຕ່ລະບົບເຕືອນໄພລ່ວງໜ້າ ຍັງຄົງຢູ່ໃນໄລຍະເລີ່ມຕົ້ນ; ໂດຍລະບົບເຕືອນໄພລ່ວງໜ້ານີ້ແມ່ນຄວາມຈຳເປັນຮີບດ່ວນ ທາງດ້ານເຕັກນິກ ທີ່ໄດ້ເກີນກຳນົດ ເວລາມາດົນແລ້ວ.

ການຍົກລະດັບຄວາມຮັບຮູ້ກ່ຽວກັບການປ່ຽນແປງດິນຟ້າອາກາດທີ່ ກຳລັງເກີດຂຶ້ນ ແລະ ການປ່ຽນແປງ ໃໝ່ ແລະ ກິດຈະກຳການເພື່ອປັບໂຕ ແມ່ນປະກອບມີການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການດັ່ງເປັນອົງປະກອບ ທີ່ຈຳເປັນໃນຂໍ້ມູນດ້ານສະພາບການປ່ຽນແປງຂອງດິນຟ້າອາກາດ (climate vulnerability profile).

ຍຸດທະສາດແຫ່ງຊາດ ສຳລັບການປ່ຽນແປງດິນຟ້າອາກາດແມ່ນຈຳເປັນຕ້ອງໄດ້ຮັບການຄິດຄົ້ນໃໝ່ໃນທາງປະຕິບັດ, ແລະ ຄຳແນະນຳ ດ້ານຍຸດທະສາດ ທີ່ຍຸດທະສາດດັ່ງກ່າວໄດ້ກວມເອົາຮຽກຮ້ອງໃຫ້ມີການປັບໃຫ້ເຂົ້າກັນ ແລະ ການຫັນປ່ຽນໄປຫາຍຸດທະສາດ ທີ່ແທດເໝາະຂອງຂະແໜງການ.
ການສ້າງຕັ້ງສະຖາບັນ ຊີ້ໃຫ້ເຫັນວ່າ ຍຸດທະສາດດັ່ງກ່າວ ຄວນໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ, ໂດຍຄະນະກຳມະການແຫ່ງຊາດຈາກຫຼາຍຂະແໜງການ ແລະ ຕາງໜ້າວິຊາການ ຈາກທຸກກະຊວງ ແລະ ອົງການຈັດຕັ້ງຂອງລັດທີ່ກ່ຽວຂ້ອງ.

ການສ່ອງແສງທີ່ເກືອບວ່າເປັນພຽງຢ່າງດຽວ ແລະ ການເປັນຕົວແທນຂອງບັນຫາທີ່ກ່ຽວກັບສະພາບດິນຟ້າອາກາດ, ທັງສາກົນ ແລະ ພາຍໃນປະເທດ, ໂດຍຜ່ານ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ/ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ (DDMCC) ຄວນເຂົ້າຮ່ວມຢ່າງກວ້າງຂວາງໃນຂອບເຂດຄວາມຮັບຜິດຊອບ ແລະ ສົມທົບກັບກະຊວງທີ່ກ່ຽວຂ້ອງ ແລະ ສະຖາບັນຄົ້ນຄວ້າ ກະສິກຳ, ອາຫານ ແລະ ໂພຊະນາການ ຂອງ ສປປ ລາວ.

ໃນເງື່ອນໄຂທີ່ໄດ້ມີຂໍ້ຜູກພັນສາກົນ, ການແຍກຂັ້ນຕອນໃນການກະກຽມແຜນສື່ສານແຫ່ງຊາດ (NCs) ແລະ ການກຳນົດເປົ້າໝາຍການ ມີສ່ວນຮ່ວມໃນລະດັບປະເທດຢ່າງ ມຸ່ງໝັ້ນ (INDCs) ຕໍ່ກັບ UNFCCC ຄວນນຳສະເໜີພາຍໃຕ້ກົນໄກສະເພາະ ທີ່ມີລະບົບການ ຕິດຕາມ ແລະ ປະເມີນຜົນ ທີ່ເຂັ້ມແຂງ ທີ່ຖືກສ້າງຂຶ້ນສຳລັບບັນຫານີ້.
ເປັນເວລາຫຼາຍປີ ທີ່ ສປປ ລາວ ໄດ້ມີການໂຕ້ແຍ້ງກ່ຽວກັບຜົນໄດ້ ແລະ ຜົນເສຍຂອງການຖາງປ່າເຮັດໄຮ່.

ຍ້ອນການ ເພີ່ມຂຶ້ນຂອງປະຊາກອນ ເງື່ອນໄຂພື້ນຖານດ້ານສິ່ງແວດລ້ອມ (ເຊັ່ນ: ກຳນົດເວລາສຳລັບ ໝູນວຽນການປູກ ແລະ ການປ່ຽນແປງການນຳໃຊ້ທີ່ດິນດັ່ງກ່າວ ບໍ່ແມ່ນເລື່ອງງ່າຍທີ່ຈະຮັກສາໄວ້.
ໃນອະນາຄົດ, ການເຮັດໄຮ່ ອາດຈະເປັນພຽງທາງເລືອກໜຶ່ງສຳລັບກຸ່ມຜູ້ຜະລິດຂະໜາດນ້ອຍກວ່າ ພາຍໃຕ້ກຸ່ມ ປະຊາກອນໃດໜຶ່ງທີ່ອາໄສຢູ່ໃນເຂດທີ່ຕັ້ງພູມສັນຖານສະເພາະພາຍໃຕ້ເງື່ອນໄຂ ດ້ານກະສິກຳ-ນິເວດ ສະເພາະຂອງມັນ.

ພາຍໃຕ້ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.4,



ທີມງານທົບທວນຍຸດທະສາດ ແນະນຳ 6 ຂໍ້ ທີ່ຕ້ອງໄດ້ຮັບການແກ້ໄຂ ເພື່ອປັບປຸງໂອກາດຕໍ່ຜົນສຳເລັດຂອງເປົ້າໝາຍດັ່ງກ່າວນີ້.

• ສົ່ງເສີມການຈັດຕັ້ງປະຕິບັດຍຸດທະສາດທ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ໂດຍເນັ້ນໜັກໃສ່ຄວາມຫຼາກ ຫຼາຍດ້ານກະສິກຳ ແລະ ຊາວກະສິກອນຂະໜາດນ້ອຍທີ່ເປັນກຸ່ມເປົ້າໝາຍສະເພາະ ໃນທຸກໆຂະແໜງການຍ່ອຍທີ່ ກ່ຽວຂ້ອງ ກັບກະສິກຳ.

• ຈັດສັນຊັບພະຍາກອນທີ່ພຽງພໍ ແລະ ຕາມການປ່ຽນແປງເພື່ອສະໜັບສະໜູນການຜະລິດທີ່ອີງໃສ່ ກະສິກຳ-ນິເວດ, ແລະ ການສະໜອງ, ໂດຍສະເພາະຄຳນຶງເຖິງຜົນກະທົບຕໍ່ທີ່ ດິນ, ນ້ຳ, ແລະ ການຄຸ້ມຄອງປ່າໄມ້. ສຳລັບຜົນປະໂຫຍດຂອງການເຮັດປະກັນໄພເພື່ອຮອງຮັບຄວາມເສຍຫາຍ ຈາກ ຜົນກະທົບຂອງໄພພິບັດ ອາດຈະໄດ້ມີການ ສຶກສາ ເພີ່ມເຕີມອີກ.

• ການອອກແບບ ແລະ ຈັດຕັ້ງປະຕິບັດ ໂຄງການປູກປ່າ ແລະ ອ່າງເກັບກັກ ອາຍກາກບອນ (carbon-sink) ທີ່ເປັນໂຄງການຂະໜາດໃຫຍ່ທົ່ວປະເທດ, ທີ່ມີການປັບປ່ຽນດ້ານຍຸດທະສາດຫຼາຍຢ່າງ: ການເພີ່ມອັດຕາປົກຄຸມຂອງປ່າໄມ້,ການຄຸ້ມຄອງນ້ຳທີ່ແທດເໝາະ ພາຍໃນເຂດອ່າງໂຕ່ງ, ການຂະຫຍາຍຖານທີ່ໝັ້ນຂອງຊີວະນາໆພັນ, ຄວາມຫຼາກຫຼາຍຂອງລະບົບກະສິກຳຂະໜາດນ້ອຍ, ແລະ ການສ້າງວຽກ ເຮັດງານທຳຢູ່ທ້ອງຖິ່ນ (ເຊັ່ນ: ຜ່ານການປູກປ່າ ແລະ ການຜະລິດຂະໜາດນ້ອຍ).

• ນຳໃຊ້ປະສົບການທີ່ໄດ້ຈາກແຜນງານທົ່ວປະເທດເຂົ້າໃນການພັດທະນາຍຸດທະສາດ ແລະ ການປະຕິບັດແນວຄວາມຄິດໃໝ່ ແລະ ວິທີການ ຕໍ່ກັບການພັດທະນາຊົນນະບົດໂດຍລວມ.

• ສ້າງວິທີການປະຕິບັດແບບຈຳລອງໃໝ່ (newparadigm) ສຳລັບການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການຢູ່ ສປປ ລາວ: ການປັບຕົວເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ, ການຜະລິດສະບຽງອາຫານທ້ອງຖິ່ນ ທີ່ມີຄວາມສະດຸ້ງໄວດ້ານໂພຊະນາການ ແລະ ການຜະລິດ ແລະ ການສະໜອງໃນຕ່ອງໂສ້ອາຫານທັງໝົດ, ລວມທັງການກະກຽມ ສະຖາບັນຢ່າງຮີບດ່ວນທີ່ຈຳເປັນສຳລັບລະບົບແຈ້ງເຕືອນໃນເບື້ອງຕົ້ນສຳລັບຜູ້ຜະລິດ ແລະ ຜູ້ບໍລິໂພກ (ຮັບໃຊ້ໄລຍະສັ້ນ ແລະ ໄລຍະຍາວເພື່ອຊ່ວຍໃຫ້ມີເວລາກະກຽມຄວາມພ້ອມໄດ້ພຽງພໍ).
ການປ່ຽນແປງດັ່ງກ່າວໃນແບບຈຳລອງຕ້ອງໄດ້ຮັບການຮອງຮັບເຂົ້າໃນຍຸດທະສາດການສື່ສານທີ່ຮອບດ້ານສຳລັບຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ ຢູ່ ສປປ ລາວ.

• ສະໜັບສະໜູນການພັດທະນາຫຼັກສູດໃນລະບົບ ແລະ ນອກລະບົບ ແລະ ການຍົກລະດັບຄວາມຮັບຮູ້ຂອງສັງຄົມ ໂດຍມີຂໍ້ມູນທີ່ແຍກໃຫ້ເຫັນຊັດເຈນກ່ຽວກັບການເຊື່ອມໂຍງລະຫວ່າງການປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງຂອງດິຟ້າອາກາດ ແລະ ການຮັບປະກັນທາງດ້ານສະບຽງອາຫານ.

***4.5*** ການປົກປ້ອງພັນ ທຸກຳ ແລະ ຊີວະນາໆພັນ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.5 ພາຍໃນປີ 2020, ຮັກສາຄວາມຫລາກຫລາຍດ້ານພັນທຸກຳ ຂອງ ແນວພັນພືດ, ເຄື່ອງປູກຂອງຝັງ ແລະ ສັດລ້ຽງ, ສົ່ງເສີມການປູກແນວພັນພືດ ແລະ ສັດທີ່ມາຈາກແຫຼ່ງທຳມະຊາດ ໂດຍຜ່ານການສ້າງທະນາຄານແນວພັນ ແລະ ພັນພືດທີ່ຫລາກຫລາຍ ແລະ ມີການຄຸ້ມຄອງເປັນຢ່າງດີໃນລະດັບຊາດ, ພາກພື້ນ ແລະ ສາກົນພ້ອມທັງສົ່ງເສີມ ການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳ ແລະ ເທົ່າທຽມກັນ ທີ່ໄດ້ຮັບຈາກ ການນຳໃຊ້ຊັບພະຍາກອນດ້ານພັນທຸ ແລະ ພູມປັນຍາພື້ນເມືອງທີ່ກ່ຽວຂ້ອງທີ່ສາກົນໄດ້ຮັບຮອງເອົາ.

ກອບເວລາສຳລັບເປົ້າໝາຍການພັດທະນາແບບຍືຍົງ (SDG)ຂໍ້ ***2.5*** ( ກຳນົດເປົ້າໝາຍແນໃສ່ 2020) ແມ່ນບໍ່ໄດ້ໝາຍເຖິງຄວາມເປັນຈິງສຳລັບ ສປປ ລາວ ແຕ່ຢ່າງໃດ.
ເຖິງແມ່ນລັດຖະບານຈະຮັບຮອງເອົາ ແຜນງານແຫ່ງຊາດດ້ານຊີວະນາໆພັນ ກະສິກຳ (NABP) ເປັນເອກະສານນະໂຍບາຍໃນປີ 2004, ແຕ່ກໍ່ຍັງມີ ຍຸດທະສາດແຫ່ງຊາດວ່າດ້ວຍຊີວະນາໆພັນ (National Biodiversity Strategy), ແລະ ກິດຈະ ກຳສຳຄັນຕ່າງໆ ແມ່ນໄດ້ຮັບການຈັດຕັ້ງປະຕິບັດຜ່ານ ໂຄງການລິເລີ່ມຕ່າງໆດ້ານຄວາມຫຼາກຫຼາຍຂອງຊີວິນາໆພັນ ກະສິກຳ (TABI) ແລະ ໂຄງການອື່ນໆ, ຫຼັກການພັດທະນາໂດຍລວມຂອງ ສປປ ລາວໃນໄລຍະຜ່ານມາແມ່ນບໍ່ໄດ້ຮັບຮູ້ຢ່າງພຽງພໍເຖິງການປົກປ້ອງ ແລະ ການນຳໃຊ້ແບບຍືນຍົງ ຂອງຄວາມ ຫຼາກຫຼາຍທາງຊີວະນາໆພັນ ກະສິກຳ ແລະ ຜະລິດຕະພັນ ເຄື່ອງປ່າຂອງດົງ ໃນນາມທີ່ເປັນຫຼັກການຍຸດທະສາດທີ່ສຳຄັນສຳລັບການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ ຢູ່ໃນປະເທດ.
ພັນທຸກຳມີສັກກະຍະພາບທີ່ໃຫ່ຍຫຼວງ, ແຕ່ວ່າມັນບໍ່ທັນໄດ້ຮັບການກຳນົດທ່າແຮງທີ່ບົ່ມຊ້ອນ ຂອງແນວພັນທີ່ເໝາະສົມຕໍ່ການປ່ຽນແປງ ຂອງສະພາບເງື່ອນໄຂດິນຟ້າອາກາດ, ຫຼືຄຸນຄ່າດ້ານໂພຊະນາການທີ່ສູງ, ສະໜອງຜູ້ຜະລິດຂະໜາດນ້ອຍດ້ວຍແນວພັນທີ່ມີຄວາມສາມາດປັບຕົວເຂົ້າກັບການປ່ຽນແປງຂອງສະພາບດິນຟ້າອາກາດ.

ນອກນັ້ນ ພັນພືດພື້ນເມືອງ ອາດຈະເປັນພື້ນຖານທີ່ດີສຳລັບໂຄງການ ປູກປ່າທົ່ວປະເທດ ທີ່ສະໜັບສະໜູນເປົ້າໝາຍ ດ້ານປ່າໄມ້ຂອງລັດ ຖະບານ ສ ປປ ລາວໃນປະຈຸບັນ, ຊ່ວຍໃນການສ້າງສະຖານະພາບ ທີ່ມີຄຸນຄ່າ ໃນນາມທີ່ເປັນອ່າງເກັບກັກການປ່ອຍແກ໊ດ ເຮືອນ ແກ້ວຂອງໂລກ ຄ້າຍຄືກັນກັບຍຸດທະສາດແຫ່ງຊາດດ້ານການປ່ຽນແປງສະ ພາບດິນຟ້າອາກາດ, ນະໂຍບາຍຕ່າງໆ ຂອງ ແຜນງານແຫ່ງຊາດ ດ້ານຊີວະນາໆພັນກະສິກຳຍັງ



ຄົງສອດຄ່ອງສຳລັບເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.5 ແລະ ທຸກເປົ້າໝາຍຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2) ໂດຍລວມ. ອີກເທື່ອໜຶ່ງ, ຄ້າຍຄືກັນ, ຍຸດທະສາດທັງສອງສະບັບ ບໍ່ໄດ້ສ້າງແຮງດຶງທີ່ຈຳເປັນເພື່ອບັນລຸເປົ້າໝາຍຍຸດທະສາດດັ່ງກ່າວ. ນອກເໜືອຈາກຍຸດທະສາດທີ່ມີຢູ່ (ແລະ ຄຳແນະນຳ ແລະ ການສຶກສາຫຼາຍໆຢ່າງທີ່ຕິດພັນກັບຫົວຂໍ້ນີ້) ມັນບໍ່ມີຄວາມເປັນໄປໄດ້ປານໃດທີ່ຈະຄາດຫຍວງວ່າມັນຈະເຂັ້ມແຂງພຽງພໍທີ່ຈະຜັກດັນໃຫ້ປະສົບຜົນສຳເລັດ ສຳລັບເປົ້າໝາຍ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.4, ຫຼື ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.5 ຕາມລຳດັບ.

ຍ້ອນມີຄວາມສ່ຽງເພີ່ມຂຶ້ນຕໍ່ຊັບພະຍາກອນທີ່ເປັນພັນທຸກຳພື້ນເມືອງ, ປະເທດກຳລັງປະເຊີນກັບອັນຕະລາຍທີ່ອາດຈະສູນເສຍຜົນປະ ໂຫຍດບົ່ມຊ້ອນ ທີ່ຕິດພັນກັບແນວພັນ, ພືດ ແລະ ສັດທີ່ມີຄວາມເປັນເອກະລັກດັ່ງກ່າວ; ບໍ່ພຽງແຕ່ສຳລັບການກະສິກຳໃນປະຈຸບັນນີ້ເທົ່ານັ້ນ ແລະ ໃນນາມເປັນແຫຼ່ງອາຫານ ແລະ ໂພຊະນາການສຳລັບທ້ອງຖິ່ນ, ແຕ່ ຕະຫຼອດການ.

ເຖິງແມ່ນ ສະຖາບັນຄົ້ນຄ້ວາກະສິກຳ-ປ່າໄມ້ (ສຄກປ ຈະພະຍາຍາມເຮັດທີ່ຈະຮັກສາແນວພັນ ແລະ ທະນາຄານພັນທຸກຳ, ອັນນີແມ່ນຜົນສຳເລັດທີ່ຈຳກັດທີ່ສຸດຍ້ອນການປະຕິບັດແມ່ນອີງໃສ່ການຄົ້ນຄວ້າທີ່ບໍ່ພຽງພໍ ກ່ຽວກັບການນຳໃຊ້ທີ່ອາດເປັນໄປໄດ້ທາງທຸລະກິດ, ເງື່ອນໄຂທີ່ເປັນໄປໄດ້ ແລະ ເຄື່ອງມື ສຳລັບໃຊ້ໃນການປັບໂຕເຂົ້າກັບສະພາບການປ່ຽນແປງຂອງດິນຟ້າ ອາກາດ, ມູນຄ່າທີ່ແທ້ຈິງ ໃນນາມທີ່ເປັນແຫຼ່ງອາຫານ ແລະໂພຊະນາການ, ແລະ ປະກົດການຄວາມສ່ຽງຕໍ່ກັບຊັບສິນທາງປັນຍາໃນຕະຫຼາດສາກົນ ດ້ານການຜະລິດແນວພັນ ແລະ ການນຳໃຊ້ຢາ.

ມີຢາພື້ນເມືອງຫຼວງຫຼາຍຢູ່ ສປປ ລາວ ທີ່ໄດ້ຮັບການຍອມຮັບວ່າສາມາດປິ່ນປົວພະຍາດໄດ້ດີ, ປະຈຸບັນ ສາມາດຖືກ ນຳໃຊ້ ເພື່ອປິ່ນປົວ ແລະ ປ້ອງກັນພະຍາດຫຼາກຫຼາຍຊະນິດ.
ໃນປະຈຸບັນ ຂໍ້ມູນກ່ຽວກັບຢາພື້ນເມືອງ ແມ່ນໄດ້ຮັບການຖ່າຍໂອນດ້ວຍ ການບອກເລົ່າ ຈາກຄົນລຸ້ນເກົ່າມາຫາຄົນລຸ້ນໃໝ່. ເອກະສານທີ່ບັນທຶກເປັນລາຍລັກອັກສອນ ກ່ຽວກັບຢາພື້ນເມືອງນີ້ ແມ່ນ ຍັງຈຳກັດ ຫຼາຍ, ເຮັດໃຫ້ການເຂົ້າເຖິງຜະລິດຕະພັນທຳມາຊາດ ແລະ ຢາພື້ນເມືອງ ແມ່ນມີຄວາມຫຍຸ້ງຍາກເພີ່ມຂຶ້ນ. ທີມງານທົບທວນຍຸດທະສາດ ໄດ້ໃຫ້ຄຳແນະນຳດ້ານຍຸດ ທະສາດ 4ຂໍ້ ເພື່ອສະໜັບສະໜູນການຈັດຕັ້ງປະຕິບັດ ເປົ້າໝາຍເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.5 ດັ່ງນີ້:

- ການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ຢ່າງເຂັ້ມງວດ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (2013) (ແລະ ສະບັບດັດແກ້) ຈະສືບຕໍ່ຖືກ ນຳໃຊ້ເພື່ອປົກປັກຮັກສາສະຖານທີ່ຊີວະນາໆພັນຕ່າງໆທີ່ມີຢູ່ເດີມ ແລະ ເຂດຊີວະນາໆພັນທີ່ເປັນບຸລຸມະສິດ. ແລະມັນຍັງຈະຊ່ວຍໃນ ການຄ່ອຍໆຖ່າຍໂອນພັນທຸກຳຂອງແນວພັນພືດ ແລະ ທະນາຄານແນວພັນຢູ່ ສູນຄົ້ນຄົ້ວກະສິກຳປ່າໄມ້ ເພື່ອຮັບປະກັນການຮັກສາຄວາມ ຫຼາກຫຼາຍ ແລະ ການວິໄຈຕ່າງໆ ໃນອະນາຄົດ.

- ການຂະຫຍາຍຕົວຢ່າງຫຼວງຫຼາຍ ຂອງການສຶກສາຄົ້ນຄວ້າຂອງລາວ ກ່ຽວກັບຊັບພະຍາກອນດ້ານພັນທຸກຳທ້ອງຖິ່ນແມ່ນຄວາມ ຈຳເປັນອັນຮີບດ່ວນ ທີ່ຕິດພັນກັບການປັບຕົວເຂົ້າກັບສະພາບການປ່ຽນແປງທາງດ້ານດິນຟ້າອາກາດ ທີ່ແທດເໝາະກັບຜູ້ຜະລິດ ຂະໜາດນ້ອຍ ແລະ ອາດຈະເຊື່ອມໂຍງກັບການຄໍ້າປະກັນທາງດ້ານສະບຽງອາການ ແລະ ໂພຊະນາການ.
ໂດຍທົ່ວໄປແລ້ວ ການສຶກສາຄົ້ນຄວ້າ ຄວນຈະມີການເຂົ້າຮ່ວມຢ່າງຕັ້ງໜ້າຂອງສະຖາບັນຄົ້ນຄວ້າທ້ອງຖິ່ນຫຼາຍສະຖາບັນ ແລະ ສະຖາບັນອຳນວຍ ຄວາມສະດວກຕ່າງໆ.

- ຕິດຕາມຢ່າງໃກ້ຊິດ ກ່ຽວກັບຂໍ້ຕົກລົງສາກົນດ້ານການຄ້າ ແລະ ການຈົດສິດທິບັດຂອງຊັບພະຍາກອນດ້ານພັນທຸກຳ, ແລະ ເສີມສ້າງການເຂົ້າຮ່ວມຂອງລາວ ໃນຂັ້ນຕອນຂອງສາກົນ, ເຊິ່ງຄວນໄດ້ຮັບການຈັດຕັ້ງປະຕິບັດໂດຍ ກະຊວງວິທະຍາສາດ ແລະ ເທັກໂນໂລຊີ.

- ຍ້ອນຄວາມສອດຄ້ອງສູງຂອງຫຼັກການສົ່ງເສີມກະສິກຳ ແລະ ການບໍລິການ ທີ່ມີປະສິດທິຜົນ ທີ່ໄດ້ຮັບການເນັ້ນໜັກໃນການທົບທວນຄັ້ງນີ້, ມັນມີຄວາມສຳຄັນທີ່ຈະປະກອບສິ່ງທີ່ຈຳເປັນໃຫ້ແກ່ໜ່ວຍງານບໍລິການສົ່ງເສີມກະສິກຳ ໂດຍສະເພາະແມ່ນຄວາມ ຮູ້ດ້ານວິທະ ຍາສາດທີ່ເໝາະສົມ ຈາກການຄົ້ນຄວ້າ. ໃນທາງກັບກັນ, ການຄົ້ນຄວ້າ ດ້ານການກະສິກຳ, ການດຳລົງຊີວິດ, ອາຫານ ແລະ ໂພຊະນາການ ສາມາດນຳມາປະກອບເຂົ້າໃນວິທີການສົ່ງເສີມ ໄດ້ແບບງ່າຍດາຍ.

***4.6*** ການປັບຕົວຂອງລະບົບໂດຍລວມ (ໂດຍເນັ້ນໜັກໃສ່ຄວາມສອດຄ່ອງທາງດ້ານຄວາມສະເໝີພາບດ້ານ ຍິງ-ຊາຍ, ການປົກປ້ອງສັງຄົມ ແລະການປັບຕົວກັບສະພາບການປ່ຽນແປງຂອງດິນຟ້າອາກາດ) ພາກນີ້ອະທິບາຍເຖິງຊ່ອງວ່າງຕ່າງໆທີ່ນອກເໜືອຈາກຂອບເຂດຂອງເປົ້າໝາຍຍ່ອຍຂໍ້ດຽວຂອງ SGD2, ຫຼື ນອກເໜືອຂອບເຂດຂອງ SGD2 ໂດຍລວມ, ແຕ່ວ່າເປັນເງື່ອນໄຂເບື້ອງຕົ້ນທີ່ ສຳຄັນທີ່ສຸດໃນການບັນລຸເປົ້າໝາຍດັ່ງກ່າວໄດ້. ທາງເລືອກໃນການປັບຕົວ ແມ່ນໄດ້ວາງຮູບແບບຂອງຄຳແນະນຳຕ່າງໆ. ມັນມີຄວາມຈຳເປັນທີ່ຈະແກ້ໄຂຊ່ອງວ່າງຕ່າງໆເຫຼົ່ານີ້ ບົນພື້ນຖານຄວາມເທົ່າທຽມກັນກັບຊ່ອງວ່າງ ສະເພາະຂອງ ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2).

ຊ່ອງວ່າງ ແລະ ຄຳແນະນຳທີ່ກ່ຽວຂ້ອງ ສຳລັບລະບົບການຮັບມືໂດຍລວມ:
ຄວາມລ່າຊ້າໃນການຈັດຕັ້ງປະຕິບັດ ຂັ້ນຕອນການແບ່ງ ຄວາມຮັບຜິດຊອບ ແລະ ການເຂົ້າຮ່ວມຂອງທ້ອງຖິ່ນ ໃນຂະບວນການສ້າງນະໂຍບາຍ: ດັ່ງທີ່ໄດ້ຍົກຂຶ້ນຕະຫຼອດໄລຍະການປຶກສາຫາລື, ຂີດຄວາມສາມາດຂອງພາກລັດ ໃນການດຳເນີນງານ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ຍຸດທະສາດ ແລະ ນະໂຍບາຍທົ່ວທຸກຂະແໜງການຢ່າງພ້ອມພຽງກັນ ແມ່ນຍັງຕໍ່າ ແລະ ສ່ວນຫຼາຍຖືກຖ່ວງດຶງຈາກຂັ້ນຕອນທ້ອງຖິ່ນ ແລະ ການລິເລີ່ມໃໝ່ໆ, ເຊິ່ງບາງສ່ວນຂອງການປະຕິບັດງານເຫຼົ່ານັ້ນ ແມ່ນເກີນພື້ນຖານດ້ານນິຕິກຳເພື່ອການປະຕິບັດການ. ລັດຖະ ບານ ສປປ ລາວ ໄດ້ລິເລີ່ມ ‘ນະໂຍບາຍ ສາມສ້າງ’ ເພື່ອເສີມສ້າງຄວາມເຂັ້ມແຂງ

ໃຫ້ແກ່ການແບ່ງຂັ້ນຄຸ້ມຄອງ ແຕ່ວ່າມີ ຄວາມຈຳເປັນອັນຮີບດ່ວນທາງດ້ານເຕັກນິກທີ່ສຳຄັນ ແລະ ຊັບພະຍາກອນທາງດ້ານການເງິນເພື່ອຊ່ວຍການເສີມສ້າງຄວາມເຂັ້ມແຂງດັ່ງກ່າວ.
ການເຂົ້າຮ່ວມຂອງປະຊາສັງຄົມ ຍັງຈຳກັດ (ອົງການຈັດຕັ້ງ ມະຫາຊົນ, ອສບລ ສາກົນ, ສະມາຄົມບໍ່ຫວັງຜົນກຳໄລ, ແຜນງານການຜັນຂະຫຍາຍ ໂພຊະນາການ (SUN), ຄູ່ຮ່ວມງານຂັ້ນທ້ອງຖິ່ນ): ຍ້ອນຮຽກຮ້ອງໃຫ້ມີການເຂົ້າຮ່ວມໃນລະດັບກວ້າງຂວາງ ເພື່ອປັບປຸງການຄ້ຳປະກັນທາງດ້ານສະບຽງອາຫານແລະໂພຊະນາການ, ການແກ້ໄຂຄວາມທົນທານຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະການພັດນາຊົນນະບົດແບບຍືນຍົງ, ຊັບພະຍາກອນ ຈາກພາກ ລັດພຽງຢ່າງດຽວ ຈະບໍ່ພຽງພໍຢ່າງແນ່ນອນ. ການຮ່ວມມື ແລະ ການມີສ່ວນຮ່ວມຂອງປະຊາສັງຄົມໃນສະພາບຂອງ ສປປ ລາວ ຄວນລວມເອົາ ອົງການຈັດຕັ້ງມະຫາຊົນ, ເຊັ່ນ: ສະຫະພັນແມ່ຍິງລາວ, ກຸ່ມແມ່ຍິງ, ອົງການຈັດຕັ້ງຊາວໜຸ່ມ, ແນວລາວສ້າງຊາດ, ສະຫະພັນ ກຳມະບານ, ສະມາຄົມຊາວກະສິກອນ ແລະ ສະຫະກອນ.
ຂາດຕາງໜ້າຂອງແມ່ຍິງຢູ່ຂັ້ນຮາກຖານ, ເມືອງ, ແຂວງ ແລະ ສູນກາງ ໃນການບໍລິການສົ່ງເສີມກະສິກຳ ລວມທັງໃນ ຕຳແໜ່ງທີ່ມີອຳນາດຕັດສິນໃຈ: ຍ້ອນລະດັບການສຶກສາຂອງແມ່ຍິງໃນປະຈຸບັນ, ໂດຍສະເພາະແມ່ນຂັ້ນທ້ອງຖິ່ນ, ມັນຈຶ່ງບໍ່ ແມ່ນເລື່ອງງ່າຍດາຍທີ່ຈະສົ່ງເສີມແມ່ຍິງໃຫ້ໄດ້ເຂົ້າຮັບຕຳ ແໜ່ງທີ່ມີອຳນາດໃນການຕັດສິນໃຈ.

ຂີດຄວາມສາມາດຂອງພະນັກງານ ເພດຍິງ,ສະມາຊິກຂອງກຸ່ມແມ່ຍິງ ແລະ ສະມາຊິກຍິງຂອງກຸ່ມຜະລິດ ຈຳເປັນຕ້ອງໄດ້ຮັບການເສີມສ້າງໃຫ້ເຂັ້ມແຂງ. ເປົ້າໝາຍຄວາມ ດຸ່ນດ່ຽງ ລະຫວ່າງຍິງ-ຊາຍທີ່ໄດ້ກຳນົດໄວ້ໃນນະໂຍບາຍຂອງລັດ ແມ່ນໄດ້ຮັບການຕິດຕາມກວດກາຢ່າງໃກ້ຊິດ ໂດຍ ກອງເລຂາຂອງຄະນະກຳມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ (ຄກມຊ) ເພື່ອ ໃຫ້ສາມາດບັນລຸເປົ້າໝາຍຄວາມເທົ່າທຽມກັນລະຫວ່າງຍິງ-ຊາຍ.

ຄວາມຕ້ອງການທີ່ແຕກຕ່າງ ທາງດ້ານຂໍ້ກຳນົດທາງເສດຖະກິດ-ສັງຄົມ ໃນໄວເດັກ ສຳລັບເດັກນ້ອຍອາດຈຳເປັນຕ້ອງໄດ້ຮັບການແກ້ໄຂ ໂດຍຜ່ານການພັດທະນາຍຸດທະສາດສະເພາະສຳລັບເດັກ. ນະໂຍບາຍ ຈຳເປັນຕ້ອງໄດ້ຕອບສະໜອງຕໍ່ການພັດທະນາປະຊາກອນ: ການພັດທະນາປະຊາກອນ ເຊັ່ນ: ການເຕີບ ໂຕຂອງປະຊາກອນ ໂດຍລວມ ແລະປະຊາກອນຈຳນວນຫຼາຍທີ່ເຮັດວຽກຜະລິດຂະໜາດນ້ອຍ, ການສ້າງຮາກຖານດ້ານເສດຖະກິດ-ສັງຄົມໃຫ້ແກ່ສັງຄົມລາວ, ແມ່ນບໍ່ໄດ້ມີອິດທິພົນ ໂນ້ມນ້າວຕໍ່ ການພັດທະນາຍຸດທະສາດ ແລະ ນະໂຍບາຍ.

ດ້ວຍການນຳໃຊ້ລະບົບ 'ການພັດ ທະນາແບບຈຳລອງ ໃນອະນາຄົດ (future scenario-development)' ສຳລັບໜ່ວຍງານບໍລິຫານທ້ອງຖິ່ນ (ເມືອງ, ບ້ານ, ກຸ່ມບ້ານ) ຊ່ອງວ່າງນີ້ ອາດຈະໄດ້ຖືກຮັດແຄບເຂົ້າ. ປະຊາກອນທ້ອງຖິ່ນ ແລະ ຮູບແບບຈຳລອງຄວາມທົນທານຕໍ່ສະພາບ ການປ່ຽນແປງ ຂອງດິນຟ້າອາກາດ ແລະ ແຜນຕ່າງໆເປັນສິ່ງສຳຄັນ ແລະ ຂໍ້ມູນແນະນຳກ່ຽວກັບການນຳໃຊ້ທີ່ດິນ ແລະ ການກະກຽມຄວາມພ້ອມຕໍ່ໄປພິບັດ.
ຂັ້ນຕອນເບື້ອງຕົ້ນ ໃນຄຳແນະນຳນີ້ ແມ່ນໄດ້ດຳເນີນງານໂດຍ ສຄກປ, ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ (DDMCC), ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ (NDMO), ອື່ນໆ. ການສະໜັບສະໜູນເປົ້າໝາຍ, ເຮັດໃຫ້ການ
ນຳໃຊ້ລະບົບ GIS ມີຄວາມງ່າຍຂຶ້ນ ສຳລັບຫົວໜ່ວຍວາງແຜນຢູ່ຂັ້ນທ້ອງຖິ່ນ ແມ່ນມີປະໂຫຍດ.
ການຮັບຮູ້ຄຸນຄ່າຂອງການບໍລິການຂອງລະບົບນິເວດຍັງບໍ່ທັນພຽງພໍ: ຄຸນຄ່າທາງເສດຖະກິດ ແລະ ຄຸນປະໂຫຍດຂອງຊັບພະຍາກອນ ທຳມະຊາດທີ່ມີຢູ່ (ເຊັ່ນ: ໃນສະພາບທີ່ປ່າໄມ້ເຮັດໜ້າທີ່ເປັນອ່າງເກັບກັກການປ່ອຍແກ໊ດເຮືອນແກ້ວ ) ແມ່ນຍັງບໍ່ທັນໄດ້ຖືກຮັບຮູ້. ຄວາມສຳຄັນຂອງເສດຖະກິດ-ສັງຄົມຂອງການກະສິກຳເພື່ອກຸ້ມຕົນເອງ/ ການກະສິກຳແບບ ຄອບຄົວ, ແລະ ການຄ້າຂາຍອາຫານແບບບໍ່ເປັນທາງການແມ່ນຖືກຫັກລົບກັນ ແລະ ບໍ່ພົບການອ້າງອີງໃນນະໂຍບາຍ ແລະ ຍຸດທະສາດ.

ຄ່າໃຊ້ຈ່າຍສຳລັບຄວາມເສຍຫາຍ ດ້ານສິ່ງແວດລ້ອມ (ຜົນກະທົບຈາກການປ່ຽນແປງຂອງສະພາບດິນຟ້າອາກາດ, ໄພທຳມະຊາດ, ການເຊາະເຈື່ອນ, ການຫຼຸດລົງຂອງຄຸນນະພາບດິນ ແລະ ນ້ຳ) ແລະການເຊື່ອມຖອຍຂອງນິເວດ-ກະສິກຳໃນຂະແໜງການກະສິກຳ (ລວມທັງສະມັດຕະພາບ ໃນການຜະລິດທີ່ຕ່ຳ, ຄຸນນະພາບຂອງອາຫານ ແລະ ຄຸນຄ່າທາງ ໂພຊະນາການ ທີ່ຫຼຸດລົງ) ແມ່ນບໍ່ໄດ້ອະທິບາຍ ວ່າເປັນຕົວຊີ້ວັດ ທີ່ສຳຄັນດ້ານເສດຖະກິດຈຸລະພາກ ຫຼື ມະຫາພາກ ທຽບກັບບັນຫາຕົກຕ່ຳດ້ານເສດຖະກິດ-ສັງຄົມຂອງ ສປປ ລາວ. (ອົງການອາຫານ ແລະ ກະເສດ 2015).

ການປັບປຸງພາລະບົດບາດສະເພາະ ແລະ ຈຸດປະສົງ ສຳລັບຂະແໜງເອກະຊົນ: ດ້ວຍຄວາມຕ້ອງການດ້ານຊັບພະຍາກອນ ແລະ ການເງິນ ທີ່ຫຼວງຫຼາຍ ທີ່ຈຳເປັນ ສຳລັບການປັບ ໂຕໃຫ້ເຂົ້າກັບສະພາບ ການປ່ຽນແປງຂອງດິນຟ້າອາກາດ ແລະ ການກະສິກຳທີ່ຫຼາກຫຼາຍ, ການພົວພັນທີ່ຕໍ່ເນື່ອງທີ່ມີການວາງແຜນເປັນຢ່າງດີ ກັບອົງກອນ ພາກເອກະຊົນຄວນຈະດຳເນີນໄປເປັນປະຈຳ.

ທັດສະນະໃນໄລຍະຍາວທີ່ມຸ່ງໄປສູ່ "ເສດຖະກິດສີຂຽວ" ຫຼື 'ເສດຖະກິດຄາບອນຕ່ຳ' ຄວນຈະໄດ້ຮັບການສ້າງຂຶ້ນ ແລະ ປຶກສາຫາລືກັບຂະແໜງການເອກະຊົນ.
ໂດຍສະເພາະແມ່ນການຮັກສາລະດັບການສະໜອງ ປັດໃຈຮັບໃຊ້ການຜະລິດກະສິກຳທີ່ມີການປັບຕົວຕໍ່ສະພາບພູມີອາກາດ, ລວມທັງການ ນຳໃຊ້ພະລັງງານທົດແທນ ເຂົ້າໃນຂະແໜງການຜະລິດ ຈະຖືເປັນບູລິມະສິດ. ຂົງເຂດທີ່ຕ້ອງພິຈາລະນາເພີ່ມເຕີມລວມທັງການສ້າງສະພາບ ແວດລ້ອມທີ່ເອື້ອອຳນວຍ ແລະ ສະໜັບສະໜູນ ທຸລະກິດໃນເຂດຊົນນະບົດ, ແຮງຈູງໃຈດ້ານອາກອນສຳລັບເທັກໂນ ໂລຊີທີ່ແທດເໝາະ ແລະ ອຳນວຍຄວາມສະດວກດ້ານການ ເຊື່ອມໂຍງ ລະຫວ່າງຕ່ອງໂສ້ການສະໜອງທີ່ສະໜັບສະໜູນຜູ້ຜະລິດຂະໜາດນ້ອຍ. ບົດບາດ ແລະ ໜ້າທີ່ຂອງຕະຫຼາດທ້ອງຖິ່ນ ໃນບ້ານ ແລະ ກຸ່ມບ້ານ ອາດຈຳເປັນຕ້ອງໄດ້ຮັບການຊຸກຍູ້ ແລະ ປັບປຸງເພີ່ມເຕີມ.
ແຜນລົງທຶນໄລຍະຍາວ ທີ່ກວມເອົາມຸມມອງທີ່ແຕກຕ່າງຄວນຈະໄດ້ຮັບການລິເລີ່ມ ໂດຍ ກະຊວງແຜນການ ແລະ ການລົງທຶນ.



# ການປະສານງານ ແລະ ກອບວຽກໃນການຈັດຕັ້ງປະຕິບັດ



## 5.1 ການປະສານງານຢູ່ຂັ້ນສູນກາງ

ດຳລັດ ກ່ຽວກັບການສ້າງຕັ້ງ ຄະນະກຳມະການແຫ່ງຊາດດ້ານ ໂພຊະນາການ (NNC) ແລະ ກອງເລຂາຂອງຄະນະດັ່ງກ່າວ ແມ່ນໄດ້ຮັບ ການສ້າງຂຶ້ນໃນປີ 2013 ຕາມຂໍ້ຕົກລົງເລກທີ 73/ ສນຍ ໂດຍແນໃສ່ໃຫ້ການສະໜັບສະໜູນໃນລະດັບສູງໃຫ້ແກ່ການ ປະສານງານ ຂອງຫຼາຍຂະແໜງການ ແລະ ການບໍລິຫານລະ ຫວ່າງຂະແໜງການຕ່າງໆຢູ່ຂັ້ນສູນກາງ.

ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ເປັນປະທານ ໂດຍທ່ານຮອງນາຍົກ ລັດຖະມົນຕີ ແລະ ໄດ້ມີຕາງໜ້າຈາກກະ ຊວງກ່ຽວຂ້ອງ ເຊັ່ນ: ກະຊວງສາທາລະນະສຸກ, ກະຊວງສຶກສາ ທິການ ແລະ ກິລາ, ກະຊວງການ ເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ຄະນະກຳມະການແຫ່ງຊາດ ເພື່ອແມ່ຍິງ ແລະ ເດັກນ້ອຍ ແລະ ອົງການຈັດຕັ້ງມະຫາຊົນຕ່າງໆ.

ກອງເລຂາຂອງ ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ແມ່ນການເປັນປະທານຂອງ ກະຊວງສາທາລະນະສຸກ ແລະ ປະທານຮ່ວມໂດຍ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງແຜນການ ແລະ ການລົງທຶນ, ແລະ ກະຊວງສຶກສາທິການ ແລະ ກິລາ, ໂດຍໄດ້ຮັບການສ້າງຕັ້ງຂຶ້ນໃນເດືອນສິງຫາ 2013.

ກອງເລຂາ ປະກອບມີສະມາຊິກ 21 ທ່ານ ໃນຂັ້ນຫົວໜ້າ/ ຮອງກົມ, ໂດຍມີໜ້າທີ່ປະສານການພັດທະນາຂອງແຜນປະຕິ ບັດງານດ້ານ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ ຂອງຫຼາຍຂະແໜງການ (FNS-AP).

ສູນໂພຊະນາການທີ່ມີຢູ່ເດີມ ແມ່ນໄດ້ຮັບການມອບໝາຍໃຫ້ ເປັນ ຫ້ອງການສະໜັບສະໜູນ ໃຫ້ແກ່ກອງເລຂາດັ່ງກ່າວ, ເພື່ອຄຸ້ມ ຄອງການປະຕິບັດໜ້າວຽກໃນແຕ່ລະມື້. ໜ້າທີ່ຂອງສູນໂພຊະ ນາການ ແມ່ນໄດ້ຮັບການຊຸກຍູ້ຈາກ ກົມອະນາໄມ ແລະ ສົ່ງເສີມ ສຸຂະພາບ ຂອງກະຊວງສາທາ.

ໂຄງສ້າງການຈັດຕັ້ງເພີ່ມເຕີມສອງໂຄງສ້າງ ໄດ້ຮັບການສ້າງຂຶ້ນ ນອກເໜືອຈາກຄະນະກຳມະການໂພຊະນາການແຫ່ງຊາດ (NNC), ກອງເລຂາຂອງຄະນະກຳມະການໂພຊະນາ ການແຫ່ງຊາດ (NNC), ແລະ ຫ້ອງການສະໜັບສະໜູນໃຫ້ແກ່ກອງເລຂາຂອງ ຄະນະກຳມະການໂພຊະນາການແຫ່ງຊາດ (NNC) (ສູນໂພຊະ ນາການ): ຄະນະວິຊາການ (TWG FNS) ແລະ ຄະນະຮັບຜິດ ຊອບຫຼັກດ້ານ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS) ຂອງລັດ (FNS Government Core Group). ຄະນະວິຊາການ ປະກອບມີສະມາຊິກ 33 ທ່ານທີ່ແມ່ນ ຂັ້ນຫົວໜ້າກົມ/ຮອງກົມ.

ປະທານຂອງຄະນະດັ່ງກ່າວແມ່ນຂອງຮອງລັດຖະມົນຕີກະຊວງສາທາລະນະສຸກ.
ຄະນະຮັບຜິດຊອບຫຼັກດ້ານ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS) ຂອງລັດ ປະກອບມີສະມາຊິກ 5 ທ່ານ ຈາກ ກະຊວງສາທາລະນະສຸກ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສຶກສາທິການ ແລະ ກິລາ, ກະຊວງແຜນການ ແລະ ການລົງທຶນ, ແລະ ກອງທຶນຫຼຸດຜ່ອນຄວາມທຸກຍາກແຫ່ງຊາດ.

ປະຈຸບັນ, ບົດບາດ, ອົງປະກອບຂອງທີມ ແລະ ຄວາມຮັບຜິດຊອບຂອງ ຄະນະແກນນຳຂອງລັດ (Government Core Group) ແລະ ຄະນະວິຊາການ TWG-FNS ແມ່ນຍັງບໍ່ທັນຈະແຈ້ງ ແລະ ການປະຕິບັດໜ້າທີ່ຂອງຄະນະດັ່ງກ່າວຍັງປະປົນກັນ.
ຄູ່ຮ່ວມງານຍັງເກີດຄວາມສັບສົນແລະມີຄວາມເປັນຫ່ວງເປັນໄຍ ເນື່ອງຈາກການທັບຊ້ອນຂອງໜ້າທີ່ລະຫວ່າງ ຫ້ອງການຂອງກອງເລຂາ ແລະ ສູນໂພ ຊະນາການ. ບັນດາກະຊວງກ່ຽວຂ້ອງ ແລະ ກົມກອງທີ່ຮັບຜິດຊອບວຽກງານດັ່ງກ່າວ ຍັງຢູ່ໃນຂັ້ນຕອນແຕກຕ່າງກັນໃນການເຂົ້າຮ່ວມ ວຽກງານຂອງຫຼາຍຂະແໜງການ ແລະ ເຮັດໃຫ້ຄວາມຄືບໜ້າຕໍ່ວຽກງານດັ່ງກ່າວແມ່ນຢູ່ໃນລະດັບທີ່ແຕກຕ່າງກັນ (Wilkinson ແລະ Niramonh 2015).

ການປະສານງານຢູ່ພາຍໃນຂະແໜງການຕ່າງໆຫຼື ຂະແໜງການຍ່ອຍ, ກົມ/ພະແນກການຕ່າງໆ ກໍ່ຍັງບໍ່ທັນໄດ້ດີເທົ່າທີ່ຄວນເນື່ອງຈາກລັກສະນະຂອງຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS) ທີ່ພົວພັນກັບຫຼາຍຂະແໜງການ ແລະ ຫຼາກຫຼາຍສາຂາອາຊີບ. ນອກຈາກນັ້ນ, ອາດຍັງ ມີຄວາມຈຳເປັນຕ້ອງໄດ້ຂະຫຍາຍສະມາຊິກຂອງ ຄະນະວິຊາການ ເພີ່ມເຕີມ ໂດຍໃຫ້ມີສະຖາບັນຕ່າງໆໃນຂະແໜງການອື່ນໆທີ່ກ່ຽວຂ້ອງກັບ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS) ເຂົ້າຮ່ວມນຳ, ເຊິ່ງບາງສ່ວນແມ່ນໄດ້ຮັບການລະບຸໄວ້ໃນບົດລາຍງານການທົບທວນຍຸດທະສາດສະບັບນີ້ເຊັ່ນກັນ.

ຄູ່ຮ່ວມພັດທະນາ ໄດ້ເຮັດໜ້າທີ່ ເພື່ອປະສານວຽກງານຕ່າງໆເຫຼົ່ານີ້ໂດຍຜ່ານ ທີມງານສະເພາະກິດຂອງ UN (UN Task Team).
ການປະຊຸມຮ່ວມກັນຢ່າງບໍ່ເປັນທາງການຂອງຄູ່ຮ່ວມພັດທະນາຕ່າງໆໄດ້ນຳເອົາສາມເຄືອຂ່າຍຫຼັກມາຮວມກັນ: ຜູ້ໃຫ້ທຶນ, UN ແລະ ອົງການຈັດຕັ້ງບໍ່ສັງກັດລັດຖະບານ.
ກອງປະຊຸມໄດ້ຈັດຂຶ້ນທຸກໆໄຕມາດ ໂດຍການເປັນປະທານຮ່ວມຂອງ ສະຫະພັນເອີຣົບ ແລະ ອົງການ ສປຊ ສຳລັບເດັກ UNICEF ໂດຍປ່ຽນ ຫຽນກັນຕາມວະລະ.
ການປະສານງານຂອງ ຄູ່ຮ່ວມພັດທະນາ/ຜູ້ໃຫ້ທຶນແມ່ນມີຄວາມຊັບຊ້ອນ ຍ້ອນວ່າ ຄູ່ຮ່ວມພັດທະນາແຕ່ລະອົງການ ແມ່ນສາມາດເຂົ້າເຖິງກະຊວງຕ່າງໆ ແລະ ຜູ້ມີອຳນາດໃນການຕັດສິນໃຈທີ່ແຕກຕ່າງກັນໄປ, ໂດຍມີອຳນາດໃນການເຈລະຈາຕໍ່ລອງ ແລະ ໂນ້ມນ້າວຂັ້ນຕອນການຕັດສິນໃຈພາຍໃນຢູ່ໃນລະດັບທີ່ແຕກຕ່າງກັນໄປ. ຜ່ານມາ ການເຂົ້າຮ່ວມຢ່າງເປັນທາງການຂອງຄະນະແກນນຳຂອງລັດ ກັບ ຄູ່ຮ່ວມພັດທະນາ/ຜູ້ໃຫ້ທຶນ/ອົງການຈັດຕັ້ງບໍ່ສັງກັດລັດຖະບານ ແມ່ນຍັງຈຳກັດ.

ອັນນີ້ ແມ່ນຂໍ້ຈຳກັດຂອງ ໂອກາດຕ່າງໆ ໃນການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາທີ່ກົມກຽວກັນ. ການສ້າງຕັ້ງ ພັນທະມິດປະຊາສັງຄົມຂອງລາວ ໃນການຜັນຂະຫຍາຍວຽກງານໂພຊະນາການ (Lao SUN Civil Society Alliance) ແມ່ນສ້າງຊ່ອງທາງໃຫ້ມີການເຂົ້າຮ່ວມຂອງອົງການ ອົງການຈັດຕັ້ງບໍ່ສັງກັດລັດຖະບານ ແລະ ປະຊາສັງຄົມ ຮ່ວມກັບ ລັດຖະບານ ທີ່ຕິດພັນກັບການປັບປຸງດ້ານ ໂພຊະນາການ (Wilkinson ແລະ Niramonh 2015).
ທີມງານທົບທວນຍຸດທະສາດສະບັບນີ້ ໄດ້ໃຫ້ຄຳແນະນຳເພື່ອປັບປຸງການປະສານງານ ຢູ່ໃນຂັ້ນສູນກາງດັ່ງນີ້:

- ເສີມສ້າງການເຮັດໜ້າທີ່ຂອງ ກຸ່ມຮັບຜິດຊອບຫຼັກ (Core Group) ແລະ ຄະນະວິຊາການ TWG-FNS, ລວມທັງການ ທົບທວນການມີສ່ວນຮ່ວມຂອງຄູ່ຮ່ວມງານທີ່ກ່ຽວຂ້ອງທຸກພາກສ່ວນ.

- ເສີມສ້າງບົດບາດຂອງຫ້ອງການກອງເລຂາໃຫ້ເຂັ້ມແຂງເພື່ອປະສານການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາຍຸດທະ ສາດດ້ານໂພຊະນາການແຫ່ງຊາດ 2025 ແລະ ແຜນປະຕິບັດງານ 2016-2020, ແລະ ຍຸດທະສາດທີ່ກ່ຽວຂ້ອງຕ່າງໆ, ໃຈ້ແຍກຄວາມແຕກຕ່າງຂອງການປະຕິບັດງານຂອງ ສູນໂພຊະນາການ ໃຫ້ເຫັນໄດ້ຢ່າງຊັດເຈນ.

- ຮັບປະກັນການມີຜູ້ຕາງໜ້າ ຈາກບັນດາກະຊວງຫຼັກເຂົ້າຮ່ວມຢູ່ໃນຫ້ອງການກອງເລຂາ

- ໃຫ້ການສະໜັບສະໜູນທີ່ຈຳເປັນແກ່ ຫ້ອງການກອງເລຂາ ເພື່ອໃຫ້ສາມາດປະຕິບັດງານໄດ້ດ້ວຍຕົນເອງ ແລະ ມີປະສິດທິຜົນ, ແລະ ຍັງສາມາດເກັບກຳ ແລະ ຮັກສາຖານຂໍ້ມູນ ພ້ອມທັງຕິດຕາມກວດກາ ແລະ ລາຍງານຜົນໄດ້ຮັບ ແລະ ຄວາມຄືບ ໜ້າຢ່າງເປັນປະຈຳປົກກະຕິ

- ສົ່ງເສີມການປັບປຸງການປະສານງານ ພາຍໃນ ແລະ ລະຫວ່າງ ຂະແໜງການ, ພ້ອມທັງຮັບເອົາຄຳເຫັນ ແລະ ຄຳແນະນຳຈາກທິດຊີ້ ນຳຂອງ ນາຍົກລັດຖະມົນຕີກ່ຽວກັບການມອບໝາຍວຽກງານໃຫ້ແກ່ຄະນະວິຊາການ ຫຼື ກອງເລຂາທີ່ກ່ຽວຂ້ອງໃນຂະແໜງການຕ່າງໆ.
- ສົ່ງເສີມການປະສານງານກັບຄູ່ຮ່ວມພັດທະນາ/ຜູ້ໃຫ້ທຶນໂດຍຜ່ານການມີສ່ວນຮ່ວມຂອງເຂົາເຈົ້າ ໃນກອງປະຊຸມ Core Group; ຮັບປະກັນການໃຫ້ ຄຳຄິດເຫັນ, ແລະ ປະສານແຜນງານຮ່ວມກັນ ສຳລັບການຊ່ວຍເຫຼືອດ້ານວິຊາການໃຫ້ແກ່ກອງເລຂາ, ກະຊວງກ່ຽວຂ້ອງ ແລະ ໃຫ້ແກ່ຂັ້ນທ້ອງຖິ່ນ.

***5.2*** ການແບ່ງຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນການປະສານແຜນງານລະຫວ່າງຂັ້ນສູນກາງ ແລະ ທ້ອງຖິ່ນ ສ່ວນໃຫຍ່ແມ່ນຜ່ານບັນດາກະຊວງ ແລະ ສະຖາບັນ, ແລະ ປະກົດວ່າຈະມີການດຳເນີນງານຢ່າງມີປະສິດທິຜົນ ພາຍໃຕ້ຂອບເຂດຄວາມຮັບຜິດຊອບຂອງຂະແໜງການ.
ລັດຖະບານ ສປປ ລາວ ໄດ້ຊອກຫາວິທີການເພື່ອຜັນຂະຫຍາຍຄະນະກຳມະການໂພຊະນາການແຫ່ງຊາດ (NNC) ແລະ ກອງເລຂາຂອງ ຄະນະກຳມະການໂພຊະນາການແຫ່ງຊາດ

(NNC) ທີ່ຫາກໍ່ໄດ້ຮັບການສ້າງຕັ້ງຂຶ້ນ ໄປສູ່ລະດັບທ້ອງຖິ່ນ, ເຊິ່ງແມ່ນ ຄະນະກຳມະການໂພຊະນາການຂັ້ນແຂວງ (PNCs) ແລະ ກອງເລຂາຂອງຄະນະດັ່ງກ່າວ.
ໄດ້ຮັບການລາຍງານວ່າ PNCs ໄດ້ຮັບການສ້າງຕັ້ງຢູ່ແຂວງສາລະວັນ, ອຸດົມໄຊ ແລະ ຫຼວງນໍ້າທາ. ຢູ່ແຂວງອຸດົມໄຊ, ຄະນະກຳມະການທີ່ຫາກໍ່ຖືກສ້າງຕັ້ງໃໝ່ແມ່ນມີຮອງເຈົ້າແຂວງເປັນໝປະທານ.

ຄະນະດັ່ງກ່າວ ປະກອບມີຕາງໜ້າ 15 ທ່ານ ຈາກບັນດາພະແນກການສຳຄັນຂອງແຂວງ, ໂດຍໄດ້ຮັບ ການສະເໜີຊື່ໂດຍປະທານ (Wilkinson ແລະ Niramonh 2015). ຄະນະດັ່ງກ່າວຈະປະຊຸມຮ່ວມກັນເປັນບາງໂອກາດ.
ວຽກງານສ່ວນໃຫຍ່ແມ່ນຄະນະເລຂາທີ່ໄດ້ຮັບການສ້າງຂຶ້ນຢ່າງບໍ່ເປັນທາງການ ເປັນຜູ້ຮັບຜິດຊອບ ໂດຍມີສະມາຊິກປະມານ 4 ເຖິງ 5 ທ່ານ.
ແຂວງສາລະວັນ ແລະ ຫຼວງນໍ້າທາ, ເຖິງຢ່າງໃດກໍ່ຕາມ, ໄດ້ເລືອກທີ່ຈະນຳໃຊ້ຄະນະກຳມະການແມ່ແລະເດັກ (MCH) ທີ່ມີຢູ່ເດີມແທນຄະນະ PNC, ໂດຍມີການເພີ່ມໜ້າທີ່ຮັບຜິດຊອບຂຶ້ນ.
ສິ່ງທ້າທາຍຕໍ່ການບໍລິຫານຂອງຫຼາຍພາກສ່ວນ ແລະ ການປະສານງານໃນຂັ້ນທ້ອງຖິ່ນ ແມ່ນຍັງຄົງມີຢູ່.
ການເຮັດໜ້າທີ່ຂອງຄະນະກຳມະການໂພຊະນາການຂັ້ນແຂວງ (PNCs)ທີ່ຫາກໍ່ໄດ້ຮັບການສ້າງຂຶ້ນ ແລະກອງເລຂາຂອງຄະນະດັ່ງກ່າວ ແມ່ນບໍ່ຄືກັນ ທົ່ວທຸກບ່ອນ. ຍັງຄົງບໍ່ມີຄວາມຊັດເຈນວ່າ PNCs ຈະເຮັດແນວໃດ ແລະ ປະສານງານອັນໃດກັບຂະແໜງການຕ່າງໆ.

ອຳນາດການ ປົກຄອງ ຂັ້ນແຂວງ ສືບຕໍ່ເຮັດວຽກຮ່ວມກັບເມືອງບົນພື້ນຖານຂອງແຕ່ລະຂະແໜງການ. PNCs ຈະສະໜັບສະໜູນເມືອງໄດ້ແນວໃດ ເພື່ອປະສານງານການຈັດຕັ້ງປະຕິບັດໃນຂັ້ນເມືອງ ແລະ ຂັ້ນບ້ານ ຍັງຄົງເປັນຄຳຖາມຢູ່ເໝືອນເດີມ.
ການເຂົ້າຮ່ວມຂອງຂັ້ນເມືອງ ແລະ ຂັ້ນບ້ານ ແມ່ນໄດ້ຮັບການລາຍງານວ່າ ດີນງໆມີເທື່ອໜຶ່ງ (Wilkinson ແລະ Niramonh 2015).
ຄູ່ຮ່ວມພັດທະນາ ແລະ ອົງການ ອົງການຈັດຕັ້ງບໍ່ສັງກັດລັດຖະບານຈຳນວນໜຶ່ງໄດ້ເຮັດວຽກຢ່າງຕັ້ງໜ້າໃນໂຄງການທີ່ກ່ຽວກັບໂພຊະນາ ການສະເພາະ ໃນບັນດາ ເມືອງເປົ້າໝາຍ.
ເຖິງແມ່ນວ່າ UN ໃຫ້ການສະໜັບສະໜູນດ້ານການເງິນ ແລະ ວິຊາການ, ຂອບເຂດການເຄື່ອນໄຫວຂອງອົງການ UN ຢູ່ຂັ້ນແຂວງ ແມ່ນມີຈຳກັດ.
ສັງຄົມພົນລະເຮືອນ ຖືເປັນຊັບພະຍາກອນທີ່ສຳຄັນໃນບາງວຽກງານສາທາລະນະສຸກ, ການສຶກສາ ແລະ ກະສິກຳ ໃນ 17 ແຂວງ, ສ່ວນໃຫຍ່ແມ່ນເຂດທຸລະກັນດານ ແລະ ເຂດທີ່ມີຄວາມຫຍຸ້ງຍາກ ໃນການເຂົ້າເຖິງ (Wilkinson ແລະ Niramonh 2015).

ໜຶ່ງໃນເປົ້າໝາຍສູງສຸດຂອງຂະບວນການແບ່ງຄວາມຮັບຜິດຊອບໃຫ້ທ້ອງຖິ່ນຄືດັ່ງກ່າວ ທີ່ເອື້ອຍອຳນວຍໃຫ້ຊຸມຊົນໄດ້ມີຄວາມໝັ້ນໃຈ ຕໍ່ການຮັບປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການຢູ່ທ້ອງຖິ່ນ ພ້ອມຊັບພະຍາກອນ ແລະ ຂີດຄວາມສາມາດຂອງເຂົາເຈົ້າເອງ, ທີມງານທົບທວນຍຸດທະສາດໄດ້ໃຫ້ຄຳແນະນຳຕໍ່ໄປນີ້ ເພື່ອປັບປຸງການປະສານງານ ຢູ່ໃນຂັ້ນທ້ອງຖິ່ນ:

- ເສີມສ້າງບົດບາດ ແລະ ໜ້າທີ່ຂອງ PNC ໃຫ້ເຂັ້ມແຂງ ແລະ ກຸ່ມທີມງານຂັ້ນແຂວງ (Provincial Core Group), ລວມທັງການຊ່ວຍເຫຼືອການປະຕິບັດການ-ການຄົ້ນຄວ້າ ເພື່ອປຶກສາຫາລືກ່ຽວກັບບົດຮຽນທີ່ຖອດຖອນໄດ້ ແລະ ການສ້າງເຄື່ອງມື ແລະ ຄຳແນະນຳຕ່າງໆ.

- ໃຫ້ການສະໜັບສະໜູນດ້ານເຕັກນິກ ແລະ ສະຖາບັນໃຫ້ແກ່ PNCs ເພື່ອ ອຳນວຍຄວາມສະດວກໃນການເຊື່ອມໂຍງລະຫວ່າງການວາງແຜນ ແລະການຕິດຕາມກວດກາຂັ້ນສູນກາງ, ແຂວງ ແລະ ຂັ້ນເມືອງ; ລວມທັງການຊ່ວຍເຫຼືອເພື່ອການສ້າງເຄື່ອງມື ໃນການເອື້ອອຳນວຍໃຫ້ແກ່ການເຮັດໜ້າທີ່ຂອງ PNCs ຢ່າງມີປະສິດທິຜົນ.

- ເພີ່ມຄວາມເຂັ້ມແຂງໃນການບໍລິຫານ ແລະ ການປະສານງານ ຢູ່ຂັ້ນເມືອງ, ຂັ້ນກຸ່ມ ແລະ ຂັ້ນບ້ານ.

- ເພີ່ມການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນ ໃນການວາງແຜນ ແລະ ການຕິດຕາມກວດກາໃຫ້ສູງຂຶ້ນ
- ສົ່ງເສີມ ແລະ ສະໜັບສະໜູນ ການສຶກສາຄົ້ນຄວ້າ ແລະ ການຈັດຕັ້ງປະຕິບັດ ຢູ່ຂັ້ນທ້ອງຖິ່ນ.

***5.3*** ອົງການຈັດຕັ້ງສາກົນ ແລະ ພາກເອກະຊົນ ຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະໂພຊະນາການຂອບເຂດຂອງບັນຫາທີ່ຈະຕ້ອງໄດ້ພິຈາລະນາພາຍໃຕ້ເນື້ອໃນຂອງເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2) ແມ່ນກວ້າງກວ່າບົດບາດໜ້າທີ່ຂອງຄະນະກຳມະການ ໂພຊະນາການແຫ່ງຊາດທີ່ໄດ້ຮັບການສະໜອງຊັບພະຍາ ກອນທີ່ດີທີ່ສຸດ ແລະ ກົນໄກທີ່ຕັ້ງໜ້າ ທີ່ສຸດ.
ເນື່ອງຈາກ ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ຫາກໍ່ຢູ່ໃນປີທຳອິດທີ່ໄດ້ເຮັດໜ້າທີ່ຢ່າງເຕັມສ່ວນ, ຈຶ່ງມີຄວາມຫຍຸ້ງຍາກ ທີ່ຈະສະເໜີໃຫ້ຂະຫຍາຍອອກໄປຫຼາຍກວ່ານີ້ໃນໄລຍະທີ່ຫາກໍ່ເລີ່ມຕົ້ນ, ແຕ່ວ່າໃນ ໄລຍະກາງແມ່ນແນະນຳໃຫ້ປະຕິບັດດັ່ງນີ້:

- ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ຂະຫຍາຍການປຶກສາຫາລືໃນລະດັບປະເທດ ກ່ຽວກັບບັນຫາທີ່ພົ້ນເດັ່ນ ເຊັ່ນ:
ການຄໍ້າປະກັນທາງດ້ານສະບຽງອາຫານ (ສຳລັບທັງຜູ້ຜະລິດສະບຽງອາຫານແລະ ຜູ້ບໍລິໂພກ), ຄວາມຕຸ້ຍ ແລະ ນໍ້າໜັກເກີນມາດຕະຖານ ແລະ ການເຊື່ອມໂຍງ ລະຫວ່າງການຍົກຍ້າຍ ແລະ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS). ການຂະຫຍາຍການຮ່ວມມືກ່ຽວກັບບັນຫາເຫຼົ່ານີ້ ແມ່ນຈຳເປັນບົນພື້ນຖານທີ່ຄອບຄຸມ ຮອບດ້ານ.

- ພ້ອມກັນນັ້ນໃນໄລຍະຮີບດ່ວນນີ້, ພັດທະນາເຄືອຂ່າຍທຸລະກິດSUN (SUN Business Network), ດຶງເອົາຜູ້ມີສ່ວນຮ່ວມຢ່າງກວ້າງຂວາງເຂົ້າຮ່ວມໃນທຸກໆຂັ້ນຕອນໃນລະບົບການຜະລິດສະບຽງອາຫານຈົນເຖິງການບໍລິໂພກ.
ໃນໄລຍະກາງ, ຊອກຫາ ຊ່ອງທາງອື່ນໆທີ່ຫຼາກຫຼາຍໃນການພັດ

ທະນາຮ່ວມມືລະຫວ່າງ ລັດ-ເອກະຊົນ-ຂະແໜງພັດທະນາ, ເພື່ອສ້າງຜົນປະໂຫຍດອັນສະເພາະທີ່ພາກເອກະຊົນ ແລະ ພາກລັດຈະນຳມາປຶກສາຫາລືກັນ.
ໃນສະພາບເງື່ອນໄຂດັ່ງກ່າວນີ້, ຫົວຂໍ້ສຳລັບການ ປຶກສາຫາລືອາດຈະລວມທັງການເພີ່ມສານອາຫານ, ການສື່ສານເພື່ອປ່ຽນແປງດ້ານພຶດຕິກຳ, ແລະ ການລະບຸສະຫຼາກ ໂພຊະນາການ.

- ການທົບທວນຄວາມຄືບໜ້າທຸກທຶກເດືອນ ແລະ ການທົບທວນໄລຍະກາງ ຄວນຈະດຳເນີນເປັນປົກກະຕິ,ເພື່ອຮັບປະກັນວ່າ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຍັງຄົງມີຄວາມແທດເໝາະໃນວາລະການພັດທະນາ.

- ການຂາດການເຂົ້າຮ່ວມຂອງພາກເອກະຊົນໃນວຽກງານຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ແມ່ນການຂາດແຄນ ທີ່ສຳຄັນເຊິ່ງຮຽກຮ້ອງໃຫ້ມີການເອົາໃຈໃສ່ໃນໄລຍະສັ້ນ ແລະ ໄລຍະກາງ. ໂດຍຄຳນຶງເຖິງບັນຫານີ້ສະເໜີ, ການກຳນົດ ແຜນທີ່ຜູ້ມີສ່ວນຮ່ວມຂອງພາກເອກະຊົນທີ່ມີຄວາມສົນໃຈດ້ານການຄໍ້າປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ ຄວນໄດ້ຮັບການພັດທະນາ.

ອັນນີ້ສະແດງໃຫ້ເຫັນວ່າ ຈະສົ່ງເສີມການລົງທຶນໃຫ້ດີທີ່ສຸດແນວໃດ ພ້ອມທັງແກ້ໄຂບັນຫາຕ່າງໆທີ່ກຳນົດໃນ ເປົ້າໝາຍການພັດທະນາແບບຍືນຍົງ (SDG).
***5.4*** ບົດບາດສຳຄັນດ້ານຍຸດທະສາດ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນເມື່ອເວົ້າເຖິງຄຳເຫັນ ຂອງທ່ານຮອງເລຂາທິການສະຫະປະຊາຊາດ ທີ່ໄດ້ກ່າວຢູ່ Addis Ababa ທີ່ໄດ້ອ້າງອີງກ່ອນໜ້ານັ້ນ ('ຖ້າປະຕິບັດ ງານຕາມສະພາບປົກກະຕິ' ພວກເຮົາຈະບໍ່ໄປເຖິງຈຸດທີ່ຕ້ອງການໄດ້ພາຍໃນປີ 2030'), ແລະ ຄາດວ່າຈະມີສິ່ງທ້າທາຍຫຼວງຫຼາຍ ທີ່ ສປປ ລາວ ຈະຕ້ອງໄດ້ຜ່ານຜ່າເພື່ອໃຫ້ບັນລຸເປົ້າໝາຍການພັດທະນາແບບຍືນຍົງ(SDG), ໂດຍສະເພາະເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2), ມັນປະກົດວ່າການອອກແບບໂຄງສ້າງ ຂອງສະຖາບັນ ກ່ຽວກັບລະດັບຍຸດທະສາດ ແມ່ນບໍ່ພຽງພໍທີ່ຈະເອົາຊະນະສິ່ງທ້າທາຍຢ່າງມີຜົນສຳເລັດໄດ້.

ບໍ່ວ່າຈະມອບໝາຍຄວາມຮັບຜິດຊອບດ້ານຍຸດທະສາດ ສຳລັບເປົ້າໝາຍການພັດທະນາແບບຍືນຍົງ (SDG) ແຕ່ລະຂໍ້ ເພື່ອຄັດເລືອກຂະແໜງການຕ່າງໆ ໃນກະຊວງກ່ຽວຂ້ອງ ຫຼືໜ່ວຍງານຂອງຂະແໜງການທີ່ກ່ຽວຂ້ອງ, ທັງການສ້າງຄະນະກຳມະການຮ່ວມຂະແໜງການ ຫຼື ຄະນະວິຊາການ ຈະພຽງພໍເພື່ອຂະຫຍາຍແຮງຂັບເຄື່ອນທີ່ຈຳເປັນໃນການເລີ່ມຕົ້ນ, ເພື່ອໃຫ້ຄຳແນະນຳ ດ້ານຍຸດທະສາດ ແລະ ຄຳແນະນຳໄລຍະຍາວ, ເພື່ອໃຫ້ໝັ້ນໃຈວ່າການສະໜອງທຶນ ແລະ ການເງິນມີຄວາມເໝາະສົມ ແລະທັນເວລາ ໃນໄລຍະອີກ 20-30 ປີຕໍ່ໜ້າ, ເພື່ອຕິດຕາມຢ່າງເປັນລະບົບ ແລະ ບັນທຶກເກັບກຳຄວາມຄືບໜ້າຢ່າງມີຍຸດ ທະສາດ, ແລະ ເພື່ອຮັກສາລະດັບເຕັກນິກທີ່ເປັນໃຈກາງສຳຄັນໃນໄລຍະຍາວໃນຕໍ່ໜ້າ.
ເພື່ອບັນລຸ ສິ່ງທ້າທາຍເຫລົ່ານີ້ໂຄງສ້າງອົງການຈັດຕັ້ງປະເພດໂຄງການ ແມ່ນຮຽກຮ້ອງໃຫ້ມີສາຍການລາຍງານສື່ສານ, ມີສິດອຳນາດການຕັດສິນໃຈໃນລະດັບໜຶ່ງ, ການຮັບປະກັນເງິນທຶນພັດທະນາ, ແລະ ບຸກຄະລາກອນທີ່ມີຄຸນນະວຸດ ທີ່ມາຈາກ ແຫຼ່ງລວມ ຂອງບັນດາຊ່ຽວຊານຈາກຫຼາຍຂະແໜງການ.

ນອກຈາກນັ້ນ, ສິດອຳນາດດ້ານຍຸດທະສາດໂດຍລວມຂັ້ນສຸດທ້າຍສຳລັບທຸກໆ ເປົ້າໝາຍການພັດທະນາແບບຍືນຍົງ (SDG), ອີກເທື່ອໜຶ່ງ ແມ່ນຕິດພັນກັບ ເປົ້າໝາຍການພັດທະນາແບບຍືນຍົງ ເປົ້າໝາຍທີ 2 (SDG2) ໂດຍສະເພາະ, ຄວນຈະນອນຢູ່ໃນພື້ນຖານສະຖາບັນທີ່ເຂັ້ມແຂງ, ທີ່ມາຈາກສິດອຳນາດໃນການວາງແຜນໃນລະດັບທີ່ເຂັ້ມແຂງທີ່ສຸດ ແລະ ມີຄວາມກ່ຽວຂ້ອງ, ປະ ກອບກັບສິດອຳນາດໃນດ້ານການເງິນທີ່ເຂັ້ມແຂງທີ່ສຸດເທົ່າທີ່ຈະເປັນໄປໄດ້ ແລະ ມີຄວາມສອດຄ່ອງ.

ການວິເຄາະດັ່ງກ່າວຈະເຮັດໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນຢູ່ໃນບົດບາດທີ່ຈະຮັບເອົາຄວາມຮັບຜິດຊອບ ທາງຍຸດທະສາດນີ້ຢ່າງຊັດເຈນ, ແລະ ເພື່ອເຮັດໃຫ້ໄດ້ເຊັ່ນນັ້ນ, ເພື່ອໃຫ້ຄຳແນະນຳດ້ານຍຸດທະສາດ, ຄວາມໝັ້ນໃຈ ແລະ ຮັບປະກັນການ ວາງແຜນທີ່ແທດເໝາະກັບສະພາບຕົວຈິງ, ການສະໜອງທຶນ ແລະ ການຈັດຕັ້ງປະຕິບັດໂດຍລວມຕໍ່ຄູ່ຮ່ວມງານທີ່ມີຢ່າງກວ້າງຂວາງ ທີ່ພວມຕັ້ງໜ້າຈັດຕັ້ງປະຕິບັດເປົ້າໝາຍ ການພັດທະນາແບບຍືນຍົງ (SDG) ໃນປະຈຸບັນ.

# ສັງລວມຫຍໍ້ ຄຳແນະນຳທີ່ສຳຄັນ

ອີງຕາມຄຳແນະນຳຈາກກະຊວງແຜນການ ແລະການລົງທຶນ ແລະ ຄຳເຫັນຈາກຄູ່ຮ່ວມງານ ທີ່ໄດ້ຮັບໃນໄລຍະທົບທວນ, ຄຳແນະນຳຕ່າງໆ ທີ່ໄດ້ລວມໄວ້ໃນພາກ 4 ແລະ ພາກ 5 ໄດ້ຮັບການຈັດລຽງຕາມບູລິມະສິດ ພາຍໃຕ້ແຕ່ລະເປົ້າໝາຍຂອງເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ຂະແໜງການ. ການຮັບຮູ້ເຖິງການຄຸ້ມຄອງຂອງອົງການຈັດຕັ້ງ ແລະ ສະຖາບັນ ທີ່ກ່ຽວຂ້ອງໃນການນຳໃຊ້ຍຸດທະສາດ, ເຕັກນິກ, ແລະ ຊິ້ນຳການປະຕິບັດງານ ເພື່ອເລີ່ມຕົ້ນ, ຈັດຕັ້ງປະຕິບັດ, ຕິດຕາມກວດກາ ແລະ ປັບປຸງຂັ້ນຕອນ, ການຈັດລຽງບູລິມະສິດ ແມ່ນໄດ້ດຳເນີນໄປໂດຍຄຳນຶງເຖິງຍຸດ ທະສາດ, ເຕັກນິກ ຫຼື ຜົນສະທ້ອນຈາກການປະຕິບັດງານ ຂອງແຕ່ລະຄຳແນະນຳໂດຍມີຄວາມເຂົ້າໃຈວ່າ:

- ການຄຸ້ມຄອງຍຸດທະສາດ ໃຫ້ທິດທາງໂດຍລວມໃຫ້ແກ່ແຕ່ລະຫົວໜ່ວຍວິສາຫະກິດ
- ຈຳເປັນຕ້ອງມີເຕັກນິກທີ່ກ່ຽວຂ້ອງໃນຂັ້ນຕອນຕົວຈິງ ເພື່ອໃຫ້ສາມາດບັນລຸໄດ້ຕາມທິດທາງໂດຍລວມ.
- ເຕັກນິກປະຕິບັດແມ່ນ ຂັ້ນ ຕອນປະຕິບັດຕົວຈິງ ເພື່ອຈັດຕັ້ງປະຕິບັດຍຸດທະສາດ.
- ການປະຕິບັດງານ ກ່ຽວພັນກັບການໄດ້ຮັບໝາກຜົນ ແລະ ຜົນໄດ້ຮັບຂອງການບໍລິການ ທີ່ມີຄຸນນະພາບສູງ, ຜົນກະທົບ/ ຜົນສະທ້ອນ ແລະ ທັນເວລາ.

ຄຳແນະນຳແຕ່ລະຂໍ້ ແມ່ນໄດ້ຮັບການປະເມີນຜົນ ໂດຍອີງຕາມເງື່ອນໄຂບັນທັດຖານ ແລະ ໄດ້ຈັດລຽງດັ່ງນີ້:
ເງື່ອນໄຂບັນທັດຖານສຳລັບການປະເມີນ (*** - ** - *)
(S) ຄວາມແທດເໝາະກັບຍຸດທະສາດໄລຍະຍາວ: ສູງຫຼາຍ - ສູງ - ປານກາງ
(T) ມີຄວາມສຳຄັນດ້ານເຕັກນິກໄລຍະກາງ: ສຳຄັນຫຼາຍ - ສຳຄັນ - ສຳຄັນພໍສົມຄວນ
(O) ຜົນກະທົບຕໍ່ການປະຕິບັດງານໃນໄລຍະສັ້ນ: ສູງ - ກາງ - ຕໍ່າ
ຢູ່ໃນຕາຕະລາງຂ້າງລຸ່ມນີ້, ຄຳແນະນຳຕ່າງໆ ແມ່ນໄດ້ຖືກຈັດອັນດັບເປັນ 8 ຫຼື 9 ດາວ (*) ໂດຍໝາຍເປັນໂຕເຂັ້ມ, ແລະ ຄຳແນະນຳໃດທີ່ເຫັນວ່າເປັນບູລິມະສິດສູງສຸດ, ແມ່ນໝາຍເປັນສີແດງໃສ່ດ້ານເທິງຂອງການຈັດລຽງ.

## 4.1 ຮັບປະກັນການເຂົ້າເຖິງ

ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ທີ 2.1 ພາຍໃນປີ 2030, ລຶບລ້າງຄວາມອຶດຫິວ ແລະ ຮັບປະກັນໃຫ້ໝົດທຸກຄົນ ໂດຍສະເພາະຄົນທຸກຍາກ ແລະ ຜູ້ທີ່ມີຄວາມສ່ຽງ, ລວມທັງແອນ້ອຍ ສາມາດເຂົ້າ ເຖິງສະບຽງອາຫານທີ່ປອດໄພ, ມີໂພຊະນາການ ແລະ ພຽງພໍຕະຫລອດປີ.

| | |
|---|---|
| a. ສ້າງ, ສະໜັບສະໜູນ ແລະ ຂະຫຍາຍທາງເລືອກດ້ານເສດຖະກິດ ແລະ ການດຳລົງຊີວິດ ແລະ ການປັບປຸງເງື່ອນໄຂການເຮັດວຽກພາຍໃນປະເທດ ເພື່ອຫຼຸດຜ່ອນການອົບພະຍົກອອກນອກປະເທດ. ຫຼຸດຜ່ອນການເອື່ອຍອີງໃສ່ຊັບພະຍາກອນທຳມະຊາດພຽງຢ່າງດຽວ, ສົ່ງເສີມ ແລະ ສ້າງການຈ້າງງານນອກຂະແໜງ ກະສິກຳໃນເຂດຊົນນະບົດ; ລວມທັງການເສີມສ້າງໂອກາດຕ່າງໆໃຫ້ແກ່ຂະແໜງເອກະຊົນ ແລະ ໂດຍຜ່ານແຜນງານຂອງລັດຢູ່ທົ່ວປະເທດ. | S ***<br>T ***<br>O *** |
| b. ຮັບປະກັນຜົນປະໂຫຍດພື້ນຖານທາງສັງຄົມ ສຳລັບຄົນທຸກຍາກ ທີ່ຢູ່ໃນສະພາບການທີ່ສ່ຽງ, ແລະ ສົ່ງເສີມການເຂົ້າເຖິງລາຍຮັບ ແລະ ຜົນປະໂຫຍດຈາກການຈ້າງງານໃນລະບົບ ແລະ ນອກລະບົບຢ່າງເທົ່າທຽມກັນ. | S *<br>T **<br>O *** |
| **c.** ສ້າງກອບແນວຄວາມຄິດ ດ້ານການປົກປ້ອງສັງຄົມ ຢ່າງຄົບຖ້ວນ ທີ່ເປັນກົນໄກຍຸດທະສາດທີ່ສຳຄັນສຳລັບຄົນທີ່ມີຄວາມສ່ຽງ, ຄົນພິການ ແລະ ຜູ້ທີ່ຖືກຜົນກະທົບຈາກໄພພິບັດ. ອັນນີ້ ລວມທັງໂຄງການ ໃຫ້ເງິນຊ່ວຍເຫຼືອໂດຍບໍ່ມີເງື່ອນໄຂ ແລະ ແບບມີເງື່ອນໄຂ ແລະ ການໂອນຖ່າຍສະບຽງອາຫານໄປໃຫ້ ຄົນທຸກຍາກທີ່ສ່ຽງ ແລະ ຂະຫຍາຍລະບົບປົກປ້ອງສັງຄົມ ເພື່ອໃຫ້ເຂົ້າເຖິງປະຊາຊົນທັງໝົດ ໂດຍເນັ້ນ ໜັກໃສ່ຄອບຄົວຊາວກະສິກອນທີ່ທຸກຍາກ. | S ***<br>T **<br>O * |
| d. ສົ່ງເສີມການລົງທຶນ ແລະ ກິດຈະກຳທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນທຳມະຊາດ ແລະ ແຜນງານເພື່ອປົກປ້ອງສິ່ງແວດລ້ອມ ເພື່ອຮັບປະກັນການສະໜອງສະບຽງອາຫານທຳມະຊາດ ຢ່າງພຽງພໍ, ດ້ວຍວິທີນີ້ ຈະເປັນການສົ່ງເສີມຄວາມຫຼາກຫຼາຍຂອງອາຫານ. | S **<br>T **<br>O ** |
| e. ກຳນົດ ແລະ ຮັບມືກັບຄວາມສ່ຽງສະເພາະດ້ານອາຫານ ທັງທາງດ້ານການຜະລິດ ແລະ ການບໍລິໂພກ ແລະ ສົ່ງເສີມອາຫານທີ່ມີໂພຊະນາການທີ່ດີ ໂດຍຜ່ານວິທີການປູກຝັງທີ່ດີ ແລະ ການຄຸ້ມຄອງຊັບພະຍາກອນທຳມະຊາດ. | S ***<br>T ***<br>O ** |
| f. ເສີມສ້າງຄວາມທົນທານໃນໄລຍະຍາວໂດຍລວມໃຫ້ແກ່ຊຸມຊົນເຂດຊົນນະບົດ ໂດຍຜ່ານການເພີ່ມ ທະວີການຈັດສັນຊັບພະຍາກອນເພື່ອປັບປຸງ ການສຶກສາໃນລະບົບ ແລະ ນອກລະບົບ, ແລະ ທຶນການສຶກສາ. | S ***<br>T **<br>O * |

## 4.2 ລຶບລ້າງການຂາດສານອາຫານ

ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ທີ 2.2 ພາຍໃນປີ 2030, ລຶບລ້າງການຂາດສານອາຫານທຸກຮູບແບບ, ລວມທັງບັນລຸໃຫ້ໄດ້ພາຍໃນປີ 2025 ຄາດໝາຍທີ່ສາກົນໄດ້ຮັບຮອງ ກ່ຽວກັບອັດຕາສ່ວນເດັກລຸ່ມ 5 ປີ ທີ່ເຕ້ຍ ແລະ ຈ່ອຍຜອມກວ່າມາດຕະຖານ ແລະ ແກ້ໄຂຄວາມຕ້ອງການດ້ານໂພຊະນາການໃນກຸ່ມເດັກຍິງ, ຜູ້ຍິງຖືພາ ແລະ ແມ່ທີ່ຍັງໃຫ້ນົມລູກ ແລະ ຜູ້ສູງອາຍຸ.

| | |
|---|---|
| a. ສະໜອງຊັບພະຍາກອນເຕັມສ່ວນ ແລະ ການຈັດຕັ້ງປະຕິບັດ ແຜນປະຕິບັດງານຂອງຫຼາຍ ຂະແໜງການ | S * *<br>T * * *<br>O * * * |
| b. ຂໍ້ມູນກ່ຽວກັບໂພຊະນາການ, ສຸຂະພາບ ແລະ ຄວາມທົນທານຕໍ່ການປ່ຽນແປງ ຂອງສະພາບ ດິນຟ້າອາກາດຄວນໄດ້ຮັບການເຊື່ອມສານເຂົ້າໃນຫຼັກສູດການສຶກສາຊັ້ນປະຖົມ ແລະ ມັດທະຍົມ, ແລະ ຜ່ານຫຼັກສູດຝຶກອົບຮົມກັບທີ່ ທີ່ສະໜອງໃຫ້ແກ່ພະນັກງານສົ່ງເສີມກະສິກຳ, ສາທາ ແລະ ສຶກສາ, ພະນັກງານອົງການ ອສບລ ແລະ ພະນັກງານອົງການຈັດຕັ້ງມະຫາຊົນ ຢູ່ຂັ້ນເມືອງ ເພື່ອຮັບປະກັນວ່າ ຂໍ້ມູນດັ່ງກ່າວໄດ້ຖືກເຜີຍແຜ່ໃຫ້ແກ່ຊຸມຊົນ ແລະ ຄົວເຮືອນ. | S * * *<br>T * *<br>O * * * |
| c. ສະໜັບສະໜູນຄຸນນະພາບການໃຫ້ບໍລິການສາທາລະນະສຸກ ແກ່ຊຸມຊົນເຂດຊົນນະບົດ ແລະ ກຸ່ມຊົນເຜົ່າ ທີ່ບໍ່ເວົ້າ ພາສາລາວ ດ້ວຍຈຸດປະສົງແນໃສ່ປັບປຸງການບໍລິການດ້ານໂພຊະນາການ ພາຍໃຕ້ລະບົບບໍລິການດ້ານສຸຂະພາບ. ໃຫ້ການ ສະໜັບສະໜູນໂດຍກົງດ້ານວິຊາການ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ພະນັກງານແພດ ກ່ຽວກັບໂພຊະນາການ, ໂດຍສະ ເພາະແມ່ນພະນັກງານຂັ້ນແຂວງ. ແມ່ຍິງທີ່ພິການ ແລະ ເດັກຈຳເປັນຕ້ອງໄດ້ຮັບການເອົາໃຈໃສ່ເປັນພິເສດ. | S * * *<br>T * * *<br>O * * * |
| d ສົ່ງເສີມຄວາມຫຼາກຫຼາຍຂອງອາຫານ ດ້ວຍການບໍລິໂພກອາຫານທີ່ອຸດົມໄປດ້ວຍແຮ່ທາດ ທີ່ສາມາດຊອກຫາໄດ້ຢູ່ທ້ອງຖິ່ນ. ການຂະຫຍາຍໂຄງການອາຫານໂຮງຮຽນ ຄວນໄດ້ຮັບທຶນຮອນ ແລະ ສະໜອງ ໃຫ້ ພາຍໃຕ້ມຸມມອງດັ່ງກ່າວນີ້. | S * *<br>T * * *<br>O * * * |

## 4.3 ປັບປຸງສະມັດຕະພາບການຜະລິດ

ເປົ້າໝາຍການພັດທະນາແບບຍືນຍົງ (SDG) ຂໍ້ 2.3 ພາຍໃນປີ 2030, ເພີ່ມສະມັດຕະພາບການຜະລິດກະສິກຳແລະ ລາຍຮັບຂອງຜູ້ຜະລິດສະບຽງອາຫານຂະໜາດນ້ອຍ ໂດຍສະເພາະແມ່ຍິງ, ຄົນຊົນເຜົ່າ, ຄອບຄົວຊາວກະສິກອນ, ຜູ້ລ້ຽງສັດ ແລະ ຊາວປະມົງ ໃຫ້ໄດ້ ສອງເທົ່າ ບົນພື້ນຖານການມີສິດສະເໝີພາບໃນການເຂົ້າເຖິງທີ່ດິນ, ຊັບພະຍາກອນ ແລະ ປັດໃຈການຜະລິດ, ຄວາມຮູ້, ການບໍລິການດ້ານການເງິນ, ຕະຫຼາດ ແລະ ກາລະໂອກາດສຳລັບການ ເພີ້ມມູນຄ່າຜະລິດຕະພັນ ແລະ ວຽກນອກຂະແໜງການກະສິກຳ.

| | |
|---|---|
| a. ເສີມສ້າງລະບົບການສະໜັບສະໜູນສະເພາະ ທີ່ຕ່າງກັນ ໃຫ້ແກ່ການຜະລິດ ກະສິກຳຂະໜາດໃຫຍ່ ແລະ ຜູ້ຜະລິດຂະໜາດນ້ອຍ . ລະບົບສະໜັບສະໜູນ - ສົ່ງເສີມດ້ວຍການບໍລິການສົ່ງເສີມກະສິກຳທີ່ມີຄວາມເຂັ້ມແຂງ ແລະ ປະ ກອບຊັບພະຍາກອນທີ່ຈຳເປັນໃຫ້ຢ່າງພຽງພໍ - ຄວນແນໃສ່ ການສ້າງຄວາມທົນທານ, ສົ່ງເສີມຄວາມຫຼາກຫຼາຍ ຂອງຜົນ ຜະລິດກະສິກຳ ແລະ ການພັດທະນາ ຕະຫຼາດ ສຳລັບຜູ້ຜະລິດຂະໜາດນ້ອຍ ເພື່ອຕອບສະໜອງການຮັບປະກັນ ທາງດ້ານ ສະບຽງອາຫານ ໃຫ້ແກ່ທ້ອງຖິ່ນ. ອັນນີ້ ແມ່ນຈຳເປັນຕ້ອງໄດ້ເຊື່ອມສານເຂົ້າໃນນະໂຍບາຍ ແລະ ຍຸດທະສາດທີ່ມີຢູ່ ກ່ຽວກັບການ ປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ, ຊົນລະປະທານ, ການຄຸ້ມຄອງນ້ຳ, ການບໍລິການສົ່ງເສີມ ກະສິ ກຳ, ການຄຸ້ມຄອງປ່າໄມ້ ແລະ ການຄຸ້ມຄອງທີ່ດິນ. | S ***<br>T ***<br>O * |
| b. ນຳສະເໜີການເກື້ອກູນທີ່ແທດເໝາະໃນການສະໜອງປັດໃຈຜະລິດທີ່ຈຳເປັນສຳລັບຜູ້ຜະລິດສະບຽງອາຫານຂະໜາດນ້ອຍ, ແລະ ການກະສິກຳແບບຄອບຄົວ ຄຽງຄູ່ກັບຕ່ອງໂສ້ມູນຄ່າ, ລວມທັງ, ແຕ່ບໍ່ຈຳກັດພຽງແຕ່ດ້ານເທັກໂນໂລຊີ, ເຕັກນິກກະສິກຳ, ການສົ່ງຄວາມຮູ້, ຂໍ້ມູນ ແລະ ການເງິນ /ທຶນຮອນ.<br>ອັນນີ້ ອາດຈະເຮັດແບບວິທີການ ສ້າງເປັນກຸ່ມ/ສະຫະກອນ ເພື່ອຮັບປະກັນວ່າຊັບພະຍາກອນທີ່ໄດ້ມີການຈັດສັນເປັນຢ່າງດີ. ອັນນີ້ ຄວນລວມທັງການ ຮັບປະກັນການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດຢ່າງເທົ່າທຽມກັນ.<br>ການສະໜັບສະໜູນຄວນລວມທັງ ການບໍລິການ ສັດຕະວະແພດ, ຊົນລະປະທານຂະໜາດນ້ອຍ, ການປຸງແຕ່ງ ແລະ ການຮັກສາຜົນຜະລິດຫຼັງເກັບກ່ຽວ, ການຈັດການກັບ ສັດຕູພືດແບບເຊື່ອມສານ, ການເຂົ້າເຖິງຂໍ້ມູນດ້ານການຕະຫຼາດ, ການສະໜັບສະໜູນ ການພັດທະນາຕະຫຼາດ ພາຍໃນສຳລັບຜູ້ຜະລິດຂະໜາດນ້ອຍ, ການເຂົ້າເຖິງການເງິນຈຸລະພາກ, ການຫຼຸດຜ່ອນເງື່ອນໄຂການກູ້ຢືມ ສຳລັບຊາວກະສິກອນ, ຮັບປະກັນວ່າທັງໝົດເຫລົ່ານີ້ ໄດ້ມີການເຊື່ອມໂຍງເຂົ້າກັບຜະລິດຕະຜົນທີ່ມີຄຸນນະພາບສູງ ແລະມີຄຸນນະສົມບັດໃນການຕອບສະໜອງຄຸນຄ່າດ້ານໂພຊະນາການ ພາຍໃຕ້ສະພາບເງື່ອນໄຂດ້ານນິເວດ-ກະສິກຳທີ່ແທດ ເໝາະ ກັບທ້ອງຖິ່ນ. | S ***<br>T ***<br>O *** |
| c. ຮັບຮູ້, ສົ່ງເສີມ ແລະ ສະໜັບສະໜູນບົດບາດຂອງແມ່ຍິງ ໃນລະບົບການຜະລິດ ຂະໜາດນ້ອຍ / ຜະລິດເພື່ອກຸ້ມກິນ. ເອົາໃຈໃສ່ເປັນພິເສດຕໍ່ກັບບົດບາດທີ່ແຕກຕ່າງກັນລະຫວ່າງຍິງ-ຊາຍ ໃນການຜະລິດກະສິກຳ ແລະ ການອອກແບບແຜນງານສະໜັບສະໜູນ ໂດຍແນໃສ່ການເພີ່ມຄວາມສົມດູນ ລະຫວ່າງຍິງ-ຊາຍ ໃນການເຂົ້າເຖິງ ແລະ ຄວບຄຸມປັດໃຈຮັບໃຊ້ການຜະລິດກະສິກຳ, ຜົນຜະລິດ, ແລະ ການບໍລິການດ້ານການເງິນ. | S **<br>T ***<br>O *** |
| **d.** ເສີມສ້າງຄວາມເຂັ້ມແຂງໃນການແນະນຳຄວາມປອດໄພໃນການຄຸ້ມຄອງສັດຕູພືດດ້ວຍການແນະນຳລະບົບການຕິດສະຫຼາກ ຂໍ້ມູນ ທີ່ລວມເອົາຂໍ້ມູນພື້ນຖານດ້ານເນື້ອໃນ ແລະ ການນຳໃຊ້ເປັນພາສາລາວໃນການຫຸ້ມຫໍ່. ສຳລັບຜົນຜະລິດ ສົດ, ສົ່ງເສີມຄວາມສະອາດ ແລະປັບປຸງລະບົບກວດກາ ເພື່ອຮັບຮອງສຸຂະອະນາໄມຂອງພືດ ໃນລະຫວ່າງການ ຜະລິດ ແລະ ການຕະຫຼາດ.<br>ສ່ວນທີ່ຮອງຮັບ ຄວາມພະຍາຍາມດັ່ງກ່າວນີ້ ແມ່ນການຍົກລະດັບ ປູກຈິດສຳນຶກ ກ່ຽວກັບເນື້ອໃນ ດ້ານໂພຊະນາການ ຂອງ ຜະລິດຕະພັນ ທີ່ຜ່ານການຫຸ້ມຫໍ່ ແລະ ອາຫານທີ່ປຸງແຕ່ງ, ໂດຍສະເພາະແມ່ນ ຂໍ້ມູນກ່ຽວກັບນ້ຳຕານ, ໄຂມັນ, ແລະ ໂຊດຽມ.ໂດຍແນໃສ່ການເພີ່ມຄວາມສົມດູນ ລະຫວ່າງຍິງ-ຊາຍ ໃນການເຂົ້າເຖິງ ແລະ ຄວບຄຸມປັດໃຈຮັບໃຊ້ການຜະລິດກະສິກຳ, ຜົນຜະລິດ, ແລະ ການບໍລິການດ້ານການເງິນ. | S *<br>T **<br>O ** |

## *4.4 ການຜະລິດສະບຽງອາຫານແບບຍືນຍົງ, ລະບົບນິເວດ ແລະ ການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ ເປົ້າໝາຍການພັດທະນາແບບຍືນຍົງ*

(SDG) ຂໍ້ 2.4 ພາຍໃນປີ 2030, ຮັບປະກັນໃຫ້ມີລະບົບການຜະລິດສະບຽງອາຫານແບບຍືນ ຍົງ ແລະ ດຳເນີນວິທີການເຮັດກະສິກຳແບບມີຄວາມທົນທານ ທີ່ເພີ້ມສະມັດຕະພາບ ແລະ ການຜະລິດ, ເຊິ່ງຊ່ວຍຮັກສາລະບົບນິເວດ, ເພີ້ມຂີດຄວາມສາມາດໃນການປັບຕົວ ເຂົ້າກັບການປ່ຽນແປງຂອງດິນຟ້າອາກາດ, ອາກາດທີ່ປັ່ນປ່ວນ, ໄພແຫ້ງແລ້ງ, ໄພນ້ຳຖ້ວມ ແລະ ໄພພິບັດອື່ນໆ, ກໍຄືປັບປຸງຄຸນນະພາບຂອງດິນ ເປັນກ້າວໆ.

| | |
|---|---|
| a. ສົ່ງເສີມການຈັດຕັ້ງປະຕິບັດ ຍຸດທະສາດແຫ່ງຊາດ ກ່ຽວກັບການປ່ຽນແປງດິນຟ້າອາກາດ ໂດຍເນັ້ນໜັກໃສ່ຄວາມຫຼາກ ຫຼາຍດ້ານກະສິກຳ ແລະ ຊາວກະສິກອນຂະໜາດນ້ອຍທີ່ເປັນກຸ່ມເປົ້າໝາຍສະເພາະໃນທຸກໆຂະແໜງການຍ່ອຍທີ່ ກ່ຽວຂ້ອງກັບກະສິກຳ. | S *** <br>T *** <br>O * |
| b. ຈັດສັນຊັບພະຍາກອນທີ່ພຽງພໍ ແລະ ຕາມການປ່ຽນແປງ ເພື່ອສະໜັບສະໜູນການຜະລິດທີ່ອີງໃສ່ກະສິກຳ-ນິເວດ, ແລະການສະໜອງ, ໂດຍສະເພາະຄຳນຶງເຖິງຜົນກະທົບຕໍ່ທີ່ດິນ, ດິນ, ນ້ຳ, ແລະການຄຸ້ມຄອງປ່າໄມ້. | S *** <br>T *** <br>O *** |
| c. ການອອກແບບ ແລະ ຈັດຕັ້ງປະຕິບັດ ໂຄງການປູກປ່າ ແລະ ອ່າງເກັບກັກ ອາຍກາກບອນ (carbon-sink) ທີ່ເປັນໂຄງການ ຂະໜາດໃຫຍ່ທົ່ວປະເທດ, ທີ່ມີການປັບປ່ຽນດ້ານຍຸດທະສາດຫຼາຍຢ່າງ: ການເພີ່ມອັດຕາປົກຄຸມຂອງປ່າໄມ້, ການຄຸ້ມຄອງນ້ຳ ທີ່ແທດເໝາະ ພາຍໃນເຂດອ່າງໂຕ່ງ, ການຂະຫຍາຍຖານທີ່ໝັ້ນຂອງຊີວະນາໆພັນ, ຄວາມຫຼາກຫຼາຍ ຂອງລະບົບກະສິກຳ ຂະໜາດນ້ອຍ, ແລະ ການສ້າງວຽກເຮັດງານທຳຢູ່ທ້ອງຖິ່ນ (ເຊັ່ນ: ຜ່ານການປູກປ່າ ແລະ ການຜະລິດຂະໜາດນ້ອຍ). | S ** <br>T *** <br>O *** |
| d. ສ້າງວິທີການປະຕິບັດແບບຈຳລອງໃໝ່ (new paradigm) ສຳລັບການຮັບປະກັນທາງດ້ານ ສະບຽງອາຫານ ແລະ ໂພຊະນາການ ຢູ່ ສປປ ລາວ: ການປັບຕົວເຂົ້າກັບການປ່ຽນແປງ ຂອງດິນຟ້າອາກາດ, ການຜະລິດສະບຽງອາຫານທ້ອງຖິ່ນ ທີ່ມີ ຄວາມສະດຸ້ງໄວດ້ານໂພຊະນາການ ແລະ ການຜະລິດ ແລະ ການສະໜອງ ໃນຕ່ອງໂສ້ອາຫານທັງໝົດ, ລວມທັງການກະກຽມ ສະຖາບັນ ຢ່າງຮີບດ່ວນ ທີ່ຈຳເປັນສຳລັບລະບົບແຈ້ງເຕືອນໃນເບື້ອງຕົ້ນ ສຳລັບຜູ້ຜະລິດ ແລະ ຜູ້ບໍລິໂພກ (ຮັບໃຊ້ ໄລຍະສັ້ນ ແລະ ໄລຍະຍາວ ເພື່ອຊ່ວຍໃຫ້ມີເວລາກະກຽມຄວາມພ້ອມໄດ້ພຽງພໍ). ການປ່ຽນແປງດັ່ງກ່າວ ໃນແບບຈຳລອງ ຕ້ອງໄດ້ຮັບການ ຮອງຮັບ ເຂົ້າໃນຍຸດທະສາດການສື່ສານທີ່ຮອບດ້ານ ສຳລັບ ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS) ຢູ່ ສປປ ລາວ. | S *** <br>T *** <br>O ** |
| e. ສະໜັບສະໜູນການພັດທະນາຫຼັກສູດໃນລະບົບ ແລະ ນອກລະບົບ ແລະ ການຍົກລະດັບຄວາມຮັບຮູ້ຂອງສັງຄົມໂດຍມີຂໍ້ມູນທີ່ແຍກໃຫ້ເຫັນຊັດເຈນກ່ຽວກັບການເຊື່ອມໂຍງລະຫວ່າງການປັບຕົວໃຫ້ເຂົ້າກັບສະພາບການປ່ຽນແປງຂອງດິນຟ້າອາກາດ ແລະ ການຮັບປະກັນທາງດ້ານສະບຽງອາຫານ. | S*** <br>T *** <br>O *** |

## *4.5 ການປົກປ້ອງພັນທຸກຳ ແລະ ຊີວະນາໆພັນ*

ພາຍໃນປີ 2020, ຮັກສາຄວາມຫລາກຫລາຍດ້ານພັນທຸກຳຂອງ ແນວພັນພືດ, ເຄື່ອງປູກຂອງຝັງ ແລະ ສັດລ້ຽງ, ສົ່ງເສີມການປູກແນວພັນພືດ ແລະ ສັດ ທີ່ມາຈາກແຫຼ່ງທຳມະຊາດ ໂດຍຜ່ານການສ້າງທະນາຄານແນວພັນ ແລະ ພັນພືດທີ່ຫລາກຫລາຍ ແລະ ມີການຄຸ້ມຄອງເປັນຢ່າງດີ ໃນລະດັບຊາດ, ພາກພື້ນ ແລະ ສາກົນ ພ້ອມທັງສົ່ງເສີມການເຂົ້າເຖິງ ແລະ ການແບ່ງປັນຜົນປະໂຫຍດທີ່ເປັນທຳແລະ ເທົ່າທຽມກັນ ທີ່ໄດ້ຮັບຈາກການນຳໃຊ້ຊັບພະຍາກອນດ້ານພັນທຸກຳແລະ ພູມປັນຍາພື້ນເມືອງທີ່ກ່ຽວຂ້ອງທີ່ສາກົນໄດ້ຮັບຮອງເອົາ.

| | |
|---|---|
| a. ການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ຢ່າງເຂັ້ມງວດ ກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (2013) (ແລະ ສະບັບດັດແກ້)ຈະສືບຕໍ່ຖືກ ນຳໃຊ້ເພື່ອປົກປັກຮັກສາສະຖານທີ່ຊີວະນາໆພັນຕ່າງໆທີ່ມີຢູ່ເດີມ ແລະ ເຂດຊີວະນາໆພັນທີ່ເປັນບຸລຸມະສິດ. ແລະ ມັນຍັງຈະຊ່ວຍໃນ ການຄ່ອຍໆຖ່າຍ ໂອນພັນຖຸກຳຂອງແນວພັນພືດ ແລະ ທະນາຄານແນວພັນ ຢູ່ ສູນຄົ້ນຄົ້ວກະສິກຳປ່າໄມ້ ເພື່ອຮັບປະກັນການຮັກສາຄວາມຫຼາກຫຼາຍ ແລະ ການວິໄຈຕ່າງໆ ໃນອະນາຄົດ. | S ***<br>T ***<br>O *** |
| b. ການຂະຫຍາຍຕົວຢ່າງຫຼວງຫຼາຍ ຂອງການສຶກສາຄົ້ນຄວ້າຂອງລາວ ກ່ຽວກັບຊັບພະຍາກອນດ້ານພັນທຸກຳທ້ອງຖິ່ນ ແມ່ນຄວາມຈຳເປັນອັນຮີບດ່ວນທີ່ຕິດພັນກັບການປັບຕົວເຂົ້າກັບສະພາບ ການປ່ຽນແປງທາງດ້ານດິນຟ້າອາກາດ ທີ່ແທດເໝາະກັບຜູ້ຜະລິດຂະໜາດນ້ອຍ ແລະ ອາດຈະເຊື່ອມໂຍງກັບການຄ້ຳປະກັນທາງດ້ານສະບຽງອາການ ແລະ ໂພຊະນາການ | S **<br>T **<br>O * |
| c. ຕິດຕາມຢ່າງໃກ້ຊິດ ກ່ຽວກັບຂໍ້ຕົກລົງສາກົນ ດ້ານການຄ້າ ແລະ ການຈົດສິດທິບັດຂອງຊັບພະຍາກອນດ້ານພັນທຸກຳ, ແລະ ເສີມສ້າງການເຂົ້າຮ່ວມຂອງລາວໃນຂັ້ນຕອນຂອງສາກົນ, ເຊິ່ງຄວນໄດ້ຮັບ ການຈັດຕັ້ງປະຕິບັດໂດຍ ກະຊວງວິທະຍາສາດ ແລະ ເທັກໂນໂລຊີ (MOST) | S ***<br>T ***<br>O * |
| d. ຍ້ອນຄວາມສອດຄ້ອງສູງຂອງຫຼັກການສົ່ງເສີມກະສິກຳ ແລະ ການບໍລິການ ທີ່ມີປະສິດທິຜົນ ທີ່ໄດ້ຮັບການເນັ້ນໜັກ ໃນການທົບທວນຄັ້ງນີ້, ມັນມີຄວາມສຳຄັນທີ່ຈະປະກອບສິ່ງທີ່ຈຳເປັນ ໃຫ້ແກ່ໜ່ວຍງານບໍລິການສົ່ງເສີມກະສິກຳ ໂດຍສະເພາະ ແມ່ນຄວາມ ຮູ້ດ້ານວິທະ ຍາສາດທີ່ເໝາະສົມ ຈາກການຄົ້ນຄວ້າ. ໃນທາງກັບກັນ, ການຄົ້ນຄວ້າ ດ້ານການກະສິກຳ, ການດຳລົງຊີວິດ, ອາຫານ ແລະ ໂພຊະນາການ ສາມາດນຳມາປະກອບເຂົ້າໃນວິທີການສົ່ງເສີມ ໄດ້ແບບງ່າຍດາຍ. | S **<br>T **<br>O *** |

## 4.6 *ການປັບຕົວຂອງລະບົບ ໂດຍລວມ (ໂດຍເນັ້ນໜັກໃສ່ຄວາມສອດຄ່ອງທາງດ້ານຄວາມສະເໝີພາບລະຫວ່າງຍິງ-ຊາຍ, ການປົກປ້ອງສັງຄົມ ແລະ ຄວາມທົນທານຕໍ່ສະພາບການປ່ຽນແປງຂອງດິນຟ້າອາກາດ)*

ຊ່ອງວ່າງ ແລະ ຄຳແນະນຳທີ່ກ່ຽວຂ້ອງ ສຳລັບລະບົບການຮັບມືໂດຍລວມ

| | |
|---|---|
| a. ເພີ່ມທະວີການຈັດຕັ້ງປະຕິບັດຂັ້ນຕອນການແບ່ງຄວາມຮັບຜິດຊອບ ແລະ ການມີສ່ວນຮ່ວມຂອງຂັ້ນທ້ອງຖິ່ນ ໃນຂັ້ນຕອນການພັດທະນານະໂຍບາຍ: ລັດຖະບານ ແຫ່ງ ສປປ ລາວ ໄດ້ນຳໃຊ້ນະໂຍບາຍວຽກງານ 'ສາມສ້າງ' ເພື່ອເສີມສ້າງການແບ່ງຄວາມຮັບຜິດຊອບໃຫ້ເຂັ້ມແຂງ ແຕ່ວ່າຮຽກຮ້ອງໃຫ້ມີຊັບພະຍາກອນດ້ານວິຊາການທີ່ຈຳເປັນ ແລະ ຊັບພະຍາກອນການເງິນ ຢ່າງຮີບດ່ວນ. | S ***<br>T ***<br>O *** |
| b. ການເຂົ້າຮ່ວມຂອງປະຊາສັງຄົມ ຍັງຈຳກັດ (ອົງການຈັດຕັ້ງມະຫາຊົນ, ອສບລ ສາກົນ, ສະມາຄົມບໍ່ຫວັງຜົນກຳໄລ, ແຜນງານການຜັນຂະຫຍາຍໂພຊະນາການ (SUN), ຄູ່ຮ່ວມງານຂັ້ນທ້ອງຖິ່ນ):<br>ຍ້ອນຮຽກຮ້ອງໃຫ້ມີການເຂົ້າຮ່ວມໃນລະດັບກວ້າງຂວາງ ເພື່ອປັບປຸງ ການຄ້ຳປະກັນທາງດ້ານສະບຽງອາຫານ ແລະ ໂພຊະນາການ, ການແກ້ໄຂຄວາມທົນທານ ຕໍ່ການປ່ຽນແປງຂອງສະພາບດິນຟ້າອາກາດ ແລະ ການພັດນາຊົນນະບົດແບບຍືນຍົງ, ຊັບພະຍາກອນ ຈາກພາກ ລັດພຽງຢ່າງດຽວ ຈະບໍ່ພຽງພໍຢ່າງແນ່ນອນ. ການຮ່ວມມື ແລະ ການມີສ່ວນຮ່ວມ ຂອງປະຊາສັງຄົມໃນສະພາບຂອງ ສປປ ລາວ ຄວນລວມເອົາອົງການຈັດຕັ້ງມະຫາຊົນ, ເຊັ່ນ: ສະຫະພັນແມ່ຍິງລາວ, ກຸ່ມແມ່ຍິງ, ອົງການຈັດຕັ້ງຊາວໜຸ່ມ, ແນວລາວສ້າງຊາດ, ສະຫະພັນກຳມະບານ, ສະມາຄົມຊາວກະສິກອນ ແລະ ສະຫະກອນ. | S *<br>T **<br>O *** |
| c. ນະໂຍບາຍ ຈຳເປັນຕ້ອງໄດ້ຕອບສະໜອງຕໍ່ການພັດທະນາປະຊາກອນ: ການພັດທະນາປະຊາກອນ ເຊັ່ນ: ການເຕີບໂຕຂອງປະຊາກອນ ໂດຍລວມ ແລະ ປະຊາກອນຈຳນວນຫຼາຍທີ່ເຮັດວຽກຜະລິດຂະໜາດນ້ອຍ, ການສ້າງຮາກຖານດ້ານເສດຖະກິດ-ສັງຄົມ ໃຫ້ແກ່ສັງຄົມລາວ, ແມ່ນບໍ່ໄດ້ມີອິດທິພົນໂນ້ມນ້າວຕໍ່ການພັດທະນາຍຸດທະສາດ ແລະ ນະໂຍບາຍ. ດ້ວຍການນຳໃຊ້ລະບົບ 'ການພັດ ທະນາແບບຈຳລອງນອະນາຄົດ (future scenario-development)' ສຳລັບໜ່ວຍງານບໍລິຫານທ້ອງຖິ່ນ (ເມືອງ, ບ້ານ, ກຸ່ມບ້ານ) ຊ່ອງວ່າງນີ້ ອາດຈະໄດ້ຖືກຮັດແຄບເຂົ້າ. ປະຊາກອນທ້ອງຖິ່ນ ແລະ ຮູບແບບຈຳລອງ ຄວາມທົນທານຕໍ່ສະພາບການປ່ຽນແປງ ຂອງດິນຟ້າອາກາດ ແລະ ແຜນຕ່າງໆ ເປັນສິ່ງສຳຄັນ ແລະ ຂໍ້ມູນແນະນຳ ກ່ຽວກັບການນຳໃຊ້ທີ່ດິນ ແລະ ການກະກຽມຄວາມ ພ້ອມຕໍ່ໄປພິບັດ. | S ***<br>T ***<br>O * |
| d. ການຮັບຮູ້ຄຸນຄ່າຂອງການບໍລິການລະບົບນິເວດວິທະຍາທີ່ບໍ່ພຽງພໍ: ມູນຄ່າທາງເສດຖະກິດ ແລະ ຂອງມີຄ່າຕ່າງໆ ທີ່ໄດ້ຈາກຊັບພະຍາກອນທຳມະຊາດທີ່ມີຢູ່ (ເຊັ່ນ: ໃນສະພາບທີ່ປ່າໄມ້ເຮັດໜ້າທີ່ເປັນແຫຼ່ງເກັບກັກແກ໊ສເຮືອນກະຈົກ) ຕ້ອງໄດ້ກຳນົດປະລິມານ ແລະ ຄຸນນະພາບ ໃນທຸກໆການວາງແຜນຢ່າງ ເປັນທາງການໃນທົ່ວທຸກສະຖາບັນ ແລະ ລະດັບການປົກຄອງ. | S ***<br>T ***<br>O * |
| e. ພາລະບົດບາດຂອງບັນດາເມືອງ ແລະ ຄວາມຄາດຫວັງທີ່ຊັດເຈນ ສຳລັບຂະແໜງເອກະຊົນ: ຕ້ອງມີການຕໍ່ເນື່ອງ ທີ່ມີການວາງແຜນເປັນຢ່າງດີ ກັບອົງກອນພາກເອກະຊົນ ຄວນຈະດຳ ເນີນໄປຢ່າງເປັນປະຈຳ. | S ***<br>T ***<br>O ** |

## ການປະສານງານ ແລະ ກອບການຈັດຕັ້ງປະຕິບັດ

### 5.1 ການປະສານງານຢູ່ຂັ້ນລະດັບຊາດ

ປັບປຸງການປະສານງານ ຢູ່ໃນຂັ້ນລະດັບຊາດ:

| | |
|---|---|
| a. ເສີມສ້າງການເຮັດໜ້າທີ່ຂອງ ກຸ່ມຮັບຜິດຊອບຫຼັກ (Core Group) ແລະ ໜ່ວຍງານຂະແໜງການ ວຽກງານຄໍາປະກັນສະບຽງອາຫານ ແລະໂພຊະນາການ TWG-FNS, ລວມທັງການທົບທວນການມີສ່ວນຮ່ວມ ຂອງຄູ່ຮ່ວມງານທີ່ກ່ຽວຂ້ອງທຸກພາກສ່ວນ. | S *<br>T * *<br>O * * * |
| b. ເສີມສ້າງບົດບາດຂອງຫ້ອງການກອງເລຂາ ໃຫ້ເຂັ້ມແຂງ ເພື່ອປະສານການຈັດຕັ້ງປະຕິບັດ ແລະ ການຕິດຕາມກວດກາ ຍຸດທະສາດດ້ານໂພຊະນາການແຫ່ງຊາດ 2025 ແລະ ແຜນປະຕິບັດງານ 2016-2020, ແລະ ຍຸດທະສາດທີ່ກ່ຽວຂ້ອງຕ່າງໆ, ໄຈ້ແຍກຄວາມແຕກຕ່າງຂອງການ ປະຕິບັດ ວຽກງານ ຂອງ ສູນໂພຊະນາ ການ ໃຫ້ເຫັນໄດ້ຢ່າງຊັດເຈນ. | S * *<br>T * * *<br>O * * * |
| c. ຮັບປະກັນການມີຜູ້ຕາງໜ້າ ຈາກບັນດາກະຊວງຫຼັກ ເຂົ້າຮ່ວມຢູ່ໃນຫ້ອງການກອງເລຂາຂອງວຽກ ງານຄໍາປະກັນສະບຽງອາຫານ ແລະໂພຊະນາການ | S *<br>T * *<br>O * |
| d. ໃຫ້ການສະໜັບສະໜູນທີ່ຈຳເປັນແກ່ ຫ້ອງການກອງເລຂາ ເພື່ອໃຫ້ສາມາດປະຕິບັດງານໄດ້ດ້ວຍ ຕົນເອງ ແລະ ມີປະສິດທິຜົນ, ແລະ ຍັງສາມາດເກັບກຳ ແລະ ຮັກສາຖານຂໍ້ມູນ ພ້ອມທັງຕິດຕາມກວດກາ ແລະ ລາຍງານຜົນໄດ້ຮັບ ແລະ ຄວາມຄືບໜ້າຢ່າງເປັນປະຈຳປົກກະຕິ | S *<br>T * *<br>O * * |
| e. ສົ່ງເສີມການປັບປຸງການປະສານງານ ພາຍໃນ ແລະ ລະຫວ່າງ ຂະແໜງການ. | S *<br>T * *<br>O * * * |
| f. ສົ່ງເສີມການປະສານງານກັບຄູ່ຮ່ວມພັດທະນາ/ຜູ້ໃຫ້ທຶນ ໂດຍຜ່ານການມີສ່ວນຮ່ວມຂອງເຂົາເຈົ້າໃນ ກອງປະຊຸມກຸ່ມຮັບຜິດຊອບຫລັກ Core Group; ຮັບປະກັນການໃຫ້ຄໍາຄິດເຫັນ, ແລະປະສານແຜນງານຮ່ວມກັນ ສໍາລັບການຊ່ວຍເຫຼືອດ້ານວິຊາການ ໃຫ້ແກ່ກອງເລຂາ, ກະຊວງກ່ຽວຂ້ອງ ແລະ ໃຫ້ແກ່ຂັ້ນທ້ອງຖິ່ນ. | S *<br>T * *<br>O * |

## 5.2 ການແບ່ງຄວາມຮັບຜິດຊອບໃຫ້ແກ່ທ້ອງຖິ່ນ

ປັບປຸງການປະສານງານ ຢູ່ໃນຂັ້ນທ້ອງຖິ່ນໃນການເຂົ້າຮ່ວມ ເຊັ່ນ:

| | |
|---|---|
| a. ເສີມສ້າງບົດບາດ ແລະ ໜ້າທີ່ຂອງ PNC ໃຫ້ເຂັ້ມແຂງ ໃຫ້ແກ່ວິຊາການຂັ້ນແຂວງ (Provincial Core Group), ລວມທັງການຊ່ວຍເຫຼືອການຈັດຕັ້ງປະຕິບັດ-ການຄົ້ນຄວ້າ ເພື່ອປຶກສາຫາລືກ່ຽວກັບບົດຮຽນທີ່ຖອດຖອນໄດ້ ແລະ ການສ້າງຄູ່ມື ແລະ ຄຳແນະນຳຕ່າງໆ. | S *<br>T * *<br>O * |
| b. ໃຫ້ການສະໜັບສະໜູນດ້ານເຕັກນິກ ແລະ ສະຖາບັນ ໃຫ້ແກ່ຄະນະກຳມະການໂພຊະການ ຂັ້ນແຂວງ PNCs ເພື່ອອຳນວຍຄວາມສະດວກໃນການເຊື່ອມໂຍງ ລະຫວ່າງ ການວາງແຜນ ແລະ ການຕິດຕາມກວດກາ ຂັ້ນສູນກາງ, ແຂວງ ແລະ ຂັ້ນເມືອງ; ລວມທັງການຊ່ວຍເຫຼືອເພື່ອການສ້າງເຄື່ອງມື ໃນການເອື້ອອຳນວຍໃຫ້ແກ່ການເຮັດໜ້າທີ່ຂອງ ຄະນະກຳມະການໂພຊະການ ຂັ້ນແຂວງ PNCs ຢ່າງມີປະສິດທິຜົນ. | S * * *<br>T * * *<br>O * * * |
| c. ເພີ່ມຄວາມເຂັ້ມແຂງໃນການບໍລິຫານ ແລະ ການປະສານງານ ຢູ່ຂັ້ນເມືອງ, ຂັ້ນກຸ່ມ ແລະ ຂັ້ນບ້ານ. | S * *<br>T * *<br>O * |
| d. ເພີ່ມການເຂົ້າຮ່ວມຂອງຜູ້ມີສ່ວນຮ່ວມທີ່ກ່ຽວຂ້ອງຢູ່ຂັ້ນທ້ອງຖິ່ນ ໃນການວາງແຜນ ແລະ ການຕິດຕາມກວດກາ ໃຫ້ສູງຂຶ້ນ | S * *<br>T * *<br>O * * |

## 5.3 ອົງການຈັດຕັ້ງສາກົນ ແລະ ພາກເອກະຊົນຕໍ່ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ (FNS).

| | |
|---|---|
| a. ຄະນະກຳມະການໂພຊະນາການແຫ່ງຊາດ (NNC) ຂະຫຍາຍການປຶກສາຫາລືໃນລະດັບ ຊາດ ກ່ຽວກັບບັນຫາທີ່ພົ້ນເດັ່ນ ເຊັ່ນ: ການຄ້ຳປະກັນທາງດ້ານສະບຽງອາຫານ (ສຳລັບທັງຜູ້ຜະລິດສະບຽງອາຫານ ແລະ ຜູ້ບໍລິໂພກ), ຄວາມຕຸ້ຍ ແລະ ນ້ຳໜັກເກີນມາດຕະຖານ ແລະ ການເຊື່ອມໂຍງລະຫວ່າງການເຄື່ອນຍ້າຍທີ່ອາໃສ ແລະ ຄວາມໝັ້ນຄົງທາງດ້ານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ (FNS) . ການຂະຫຍາຍການຮ່ວມມືກ່ຽວກັບບັນຫາເຫຼົ່ານີ້ແມ່ນຈຳເປັນບົນພື້ນຖານທີ່ຄອບຄຸມຮອບດ້ານ. | S *<br>T * *<br>O* |
| b. ພ້ອມທັງໃນໄລຍະຮີບດ່ວນນີ້, ພັດທະນາເຄືອຂ່າຍທຸລະກິດ SUN (SUN Business Network), ດຶງເອົາຜູ້ມີສ່ວນຮ່ວມຢ່າງກວ້າງຂວາງເຂົ້າຮ່ວມໃນທຸກໆຂັ້ນຕອນໃນລະບົບການຜະລິດສະບຽງອາຫານຈົນເຖິງ ການບໍລິໂພກ. ຍ້ອນລະບົບເຄືອຂ່າຍຂ້າງເທິງ,ການຊອກຫາຊ່ອງທາງອື່ນໆທີ່ຫຼາກຫຼາຍ ໃນການພັດທະນາຮ່ວມມືລະຫວ່າງ ລັດ-ເອກະຊົນ-ຂະແໜງພັດທະນາ, ເບິ່ງໃນໄລຍະກາງແລ້ວ,ແມ່ນສ້າງຜົນປະໂຫຍດອັນສະເພາະທີ່ພາກເອກະຊົນ ແລະ ພາກລັດ ຈະນຳມາປຶກສາຫາລືກັນ. | S *<br>T * *<br>O* |
| c. ພັດທະນາແຜນງານຮ່ວມກັບ ທຸກຂະແໜງການໃຫ້ພາກເອກຊົນມີຄວາມສົນໃຈ ເຂົ້າຮ່ວມ ໃນວຽກງານຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ. ຕໍ່ຂັ້ນຕອນດັ່ງກ່າວນີ້ ແມ່ນມອບຄວາມຮັບຜິດຊອບ ການເຂົ້າຮ່ວມຂອງພາກເອກະຊົນ ໃນການສົ່ງເສີມ ການລົງທຶນໃຫ້ດີທີ່ສຸດ ພ້ອມທັງແກ້ໄຂ ບັນຫາຕ່າງໆທີ່ກຳນົດໃນ ເປົ້າໝາຍການພັດທະນາແບບຍືນຍົງ(SDG). | S *<br>T * *<br>O * |

## *5.4 ບົດບາດສຳຄັນດ້ານຍຸດທະສາດ ຂອງກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ*

| | |
|---|---|
| ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງ ການເງິນ ຢູ່ໃນບົດບາດທີ່ຈະຮັບເອົາຄວາມຮັບຜິດຊອບທາງຍຸດທະສາດນີ້ຢ່າງຊັດເຈນ, ແລະ ເພື່ອເຮັດໃຫ້ໄດ້ເຊັ່ນນັ້ນ, ເພື່ອໃຫ້ຄຳແນະນຳດ້ານຍຸດທະສາດ, ຄວາມໝັ້ນໃຈ ແລະ ຮັບປະກັນການ ວາງແຜນທີ່ ແທດເໝາະກັບສະພາບຕົວຈິງ, ການສະໜອງທຶນ ແລະ ການຈັດຕັ້ງປະຕິບັດໂດຍລວມ ຕໍ່ຄູ່ຮ່ວມງານທີ່ມີຢ່າງກວ້າງຂວາງ ທີ່ພວມຕັ້ງໜ້າຈັດຕັ້ງປະຕິບັດ ເປົ້າໝາຍການພັດທະນາແບບຍືນຍົງ (SDG) ທີ່ຕິດພັນກັບທິດທາງຂອງຍຸທະສາດໃນການຈັດຕັ້ງປະຕິບັດ ແຜນວຽກ ແລະ ງົບປະມານ. | S* * *<br>T* * *<br>O * * |

# *ການປຶກສາຫາລືຮູບແບບສອງຝ່າຍ ແລະ ຂັ້ນແຂວງ*

***ຂະແໜງການຂອງລັດຖະບານ***
ສະພາແຫ່ງຊາດ
ກະຊວງກະສິກຳ ແລະ ປ່າໄມ້
ກະຊວງສຶກສາທິການ ແລະ ກິລາ
ກະຊວງການເງິນ
ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ການທ່ອງທ່ຽວ
ກະຊວງແຮງງານ ແລະ ສະຫວັດດີການສັງຄົມ
ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ
ກະຊວງແຜນການ ແລະ ການລົງທຶນ
ກະຊວງສາທາລະນະສຸກ

ສະຫະພັນກຳມະບານລາວ
ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້ແຫ່ງຊາດ
ຄະນະກຳມະການເພື່ອແມ່ ແລະ ເດັກແຫ່ງຊາດ
ຄະນະກຳມະການໂພສະນາການແຫ່ງຊາດ,
ກະຊວງສາທາລະນະສຸກ
ສະຫະພັນແມ່ຍິງລາວ

***ອົງການສະຫະປະຊາຊາດ ແລະ ສະຖາບັນການເງິນສາກົນ***
ອົງການອາຫານ ແລະ ການກະເສດ
ອົງການແຮງງານສາກົນ
ອົງການສະຫະປະຊາຊາດ ສຳລັບເດັກ
ອົງການສະຫະປະຊາຊາດເພື່ອການພັດທະນາ
ອົງການສະຫະປະຊາຊາດດ້ານແຜນງານສິ່ງແວດລ້ອມ
ຫ້ອງການປະສານງານຂອງອົງການສະຫະປະຊາຊາດ
ອົງການສະຫະປະຊາຊາດ ສຳລັບແມ່ຍິງ
ອົງການອາຫານໂລກ

ທະນາຄານພັດທະນາອາຊີ
ອົງການ ການຮ່ວມມືກການເງິນສາກົນ (IFC)
ທະນາຄານໂລກ

***ອົງການຈັດຕັ້ງທີ່ເປັນຕົວແທນຜູ້ໃຫ້ທຶນ***
ກົມພົວພັນຕ່າງປະເທດ ແລະ ການຄ້າປະເທດອົດສະຕຣາລີ
ສະຫາພາບຢູໂຣບ
ທຶນຊ່ວຍເຫລືອຈາກລັດຖະບານອາເມລິກາ

***ອົງການທີ່ບໍ່ຂຶ້ນກັບລັດຖະບານ***
ສູນກຽມພ້ອມໄພພິບັດອາຊີ
ອົງການແຄຣ ປະຈຳລາວ
ອົງການ ກອງທຶນສຳລັບເດັກ
ອົງການ ຄົ້ນຄ້ວາ ແລະການແລກປ່ຽນທາງດ້ານເຕັກນິກ
(Gret)

ອົງການຮີວວິຕາດສ
ອົງການ ການຄຸ້ມຄອງທີ່ດິນເຂດລຸ່ມແມ່ນ້ຳຂອງ
ອົງການອອກຊຟາມ (Oxfam)
ອົງການ ແພລນ (Plan International)
ອົງການຊ່ວຍເຫຼືອເດັກ

ວຽກງານການຜັນຂະຫຍາຍວຽກງານໂພສະນາການ
(Nutrition SUN CSA Laos)
ອົງການບ້ານຈຸດສົມ (Village Focus)

***ສະຖາບັນຄົ້ນຄ້ວາຕ່າງໆ***
ສູນຄົ້ວຄ້ວາທາງດ້ານກະສິກຳສາກົນ
ສະຖາບັນບໍລິຫານຈັດການນ້ຳສາກົນ
ກຸ່ມຄຸ້ມຄອງການນຳໃຊ້ທີ່ດິນ
ຄະນະກຳມະການແມ່ນ້ຳຂອງ
ມະຫາວິທະຍາໄລແຫ່ງຊາດ
ຫ້ອງການຄຸ້ມຄອງຊັບພະຍາກອນນ້ຳ, ດິນ ແລະ ລະບົບນິເວດ

***ພາກສວນເອກະຊົນ***
ທະນາຄານສົ່ງເສີມກະສິກຳ
ກຸ່ມບໍລິສັດດາວເຮືອງ
ບໍລິສັດຂຸດຄົ້ນບໍ່ແຮ່

***ການປຶກສາຫາລືໃນຂັ້ນແຂວງ***
ແຂວງ ອັດຕະປື
ແຂວງ ບໍ່ແກ້ວ
ແຂວງ ບໍລິຄຳໄຊ
ແຂວງ ຈຳປາສັກ
ແຂວງ ຫົວພັນ
ແຂວງ ຄຳມ່ວນ
ແຂວງ ຫລວງນ້ຳທາ
ແຂວງ ຫລວງພະບາງ
ແຂວງ ອຸດົມໄຊ
ແຂວງ ຜົ້ງສາລີ
ແຂວງ ສາລະວັນ
ແຂວງ ສະຫວັນນະເຂດ
ແຂວງ ເຊກອງ
ແຂວງ ວຽງຈັນ
ແຂວງ ໄຊຍະບູລີ
ແຂວງ ຊຽງຂວາງ

# ຄຳນິຍາມ ຄຳສັບ

***ການປ່ຽນແປງດິນຟ້າອາກາດ/ຄວາມທົນທານ:*** ການປ່ຽນແປງຂອງດິນຟ້າອາກາດ ເປັນຜົນໂດຍກົງ ຫຼື ໂດຍທາງອ້ອມຈາກກິດຈະກຳຂອງມະນຸດທີ່ປ່ຽນແປງອົງປະກອບຂອງຊັ້ນບັນຍາກາດໂລກ ແລະ ເປັນການປ່ຽນແປງທີ່ຫຼາຍກວ່າການປ່ຽນແປງຈາກຄວາມແປປວນທາງສະພາບພູມີອາກາດທີ່ເກີດຂຶ້ນຕາມທຳມະຊາດໃນຊ່ວງເວລາດຽວກັນ. ຜົນກະທົບດ້ານລົບຂອງການປ່ຽນແປງສະພາບດິນຟ້າອາກາດທີ່ມີຕໍ່ກັບສິ່ງແວດລ້ອມທາງກາຍະພາບ ຫຼື ຊີວະຊາດ ເຊິ່ງມີຜົນຮ້າຍຢ່າງໃຫຍ່ຫຼວງຕໍ່ອົງປະກອບ, ຄວາມທົນທານ ຫຼື ຜະລິດຕະຜົນຂອງທຳມະຊາດ ແລະ ການຄຸ້ມຄອງລະບົບນິເວດ ຫຼື ຕໍ່ການດຳເນີນງານຂອງລະບົບເສດຖະກິດ-ສັງຄົມ ຫຼື ສຸຂະພາບ ແລະ ສະຫວັດດີພາບຂອງຄົນ (UNFCCC 1992)

***ການເຕີບໂຕດ້ານເສດຖະກິດ:*** ການເພີ່ມຂຶ້ນໂດຍລວມຂອງມູນຄ່າຂອງສິນຄ້າ ແລະ ການບໍລິການພາຍໃນປະເທດ ທີ່ວັດແທກໄດ້ສຳລັບໄລຍະເວລາໃດໜຶ່ງ, ໂດຍສະເພາະແມ່ນການນຳໃຊ້ ຕົວຊີ້ວັດດ້ານລວມຍອດຜະລິດຕະພັນພາຍໃນ (GDP).
ການເຕີບໂຕດ້ານເສດຖະກິດ ແມ່ນເພີ່ມພູນຄວາມຮັ່ງມີໂດຍລວມຂອງປະເທດ, ແຕ່ວ່າບໍ່ໄດ້ເຊື່ອມໂຍງໂດຍກົງກັບການພັດທະນາມະນຸດ ຫຼື ການປົກປ້ອງສິ່ງແວດລ້ອມ. ການແຈກຢາຍທີ່ບໍ່ເທົ່າທຽມກັນຂອງການເຕີບໂຕດ້ານເສດຖະກິດ ອາດຈະເຮັດໃຫ້ຄວາມບໍ່ເທົ່າທຽມກັນຮຸນແຮງຍິ່ງຂຶ້ນ, ການບໍລິໂພກ ທີ່ຫຼາຍກວ່າ ແລະ ການສືບຕໍ່ເສື່ອມໂຊມ ຂອງຊັບພະຍາກອນທຳມະຊາດ (ທະນາຄານໂລກ 2009a).
ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການ: ການຄ້ຳປະກັນສະບຽງອາຫານ ແລະ ໂພຊະນາການທີ່ມີຢູ່ ເມື່ອປະຊາຊົນທຸກໆຄົນ ທຸກໆເວລາ ສາມາດເຂົ້າເຖິງສະບຽງອາຫານ ທາງກາຍະພາບ, ສັງຄົມ ແລະ ທາງເສດຖະກິດ, ເຊິ່ງມີຄວາມປອດໄພ ແລະ ໄດ້ບໍລິໂພກໃນປະລິມານທີ່ພຽງພໍ ແລະ ມີຄຸນນະພາບ ເພື່ອຕອບສະໜອງອາຫານໃຫ້ໄດ້ຕາມຄວາມຈຳເປັນຕໍ່ຮ່າງກາຍ ແລະ ຕາມຄວາມມັກ, ແລະ ໃນສະພາບແວດລ້ອມທີ່ສະອາດພຽງພໍ, ການບໍລິການ ແລະ ປິ່ນປົວສຸຂະພາບ, ທີ່ຊ່ວຍໃຫ້ສາມາດດຳເນີນຊີວິດຢ່າງມີສຸຂະພາບດີ ແລະ ຄ່ອງແຄ່ວ. (CFS 2012a)

***ບົດບາດຍິງ-ຊາຍ:*** ໝາຍເຖິງຄຸນລັກສະນະທາງສັງຄົມ ແລະ ໂອກາດຕ່າງໆທີ່ຕິດພັນກັບເພດຍິງ ແລະ ເພດຊາຍ ແລະ ສາຍສຳພັນລະຫວ່າງ ຍິງ-ຊາຍ ແລະ ເດັກຍິງ ແລະ ເດັກຊາຍ, ລວມທັງສາຍສຳພັນລະຫວ່າງແມ່ຍິງນຳກັນ ແລະ ລະຫວ່າງຊາຍ. ມີຄຸນລັກສະນະຫຼາຍຂໍ້, ໂອກາດ ແລະ ສາຍສຳພັນ ທີ່ຖືກສັງຄົມຕັ້ງຂຶ້ນມາ ແລະ ໄດ້ຮຽນຮູ້ຜ່ານຂະບວນການຂັດເກົາທາງສັງຄົມ. ສະພາບດັ່ງກ່າວແມ່ນມີ ເນື້ອໃນ/ໄລຍະເວລາສະເພາະ ແລະ ສາມາດປ່ຽນແປງໄດ້ຕະຫຼອດເວລາ. ບົດບາດຍິງ-ຊາຍ ກຳນົດວ່າແມ່ຍິງຄົນໜຶ່ງ ຫຼື ຊາຍຄົນໜຶ່ງ ໄດ້ຖືກຄາດຫວັງໄວ້ໃຫ້ເປັນຄືແນວໃດ, ໄດ້ຮັບອະນຸຍາດໃຫ້ ແລະ ມີຄຸນຄ່າຄືແນວໃດແດ່ໃນສະພາບການໃດໜຶ່ງ. ສັງຄົມສ່ວນໃຫຍ່ ແມ່ນມີຄວາມແຕກຕ່າງກັນ ແລະ ຄວາມບໍ່ເທົ່າທຽມກັນລະຫວ່າງຍິງ-ຊາຍ ດ້ານຄວາມຮັບຜິດຊອບທີ່ໄດ້ຮັບມອບໝາຍ, ກິດຈະກຳທີ່ດຳເນີນ, ການເຂົ້າເຖິງ ແລະ ການຄວບຄຸມຊັບພະຍາກອນຕ່າງໆ, ລວມໄປເຖິງໂອກາດໃນການຕັດສິນໃຈ. ບົດບາດຍິງ-ຊາຍ ເປັນສ່ວນໜຶ່ງຂອງສະພາບວັດທະນະທຳ-ສັງຄົມທີ່ກວ້າງຂວາງ. ບັນທັດຖານທີ່ສຳຄັນອີກຢ່າງໜຶ່ງສຳລັບການວິເຄາະທາງດ້ານວັດທະນະທຳ-ສັງຄົມ ລວມທັງຊົນຊັ້ນ, ເຊື້ອຊາດ, ລະດັບຄວາມທຸກຍາກ, ກຸ່ມຄົນ, ເຜົ່າ ແລະ ອາຍຸ. (UN Women 2001)

***ຄວາມອຶດຫິວ:*** ຊ່ຽວຊານດ້ານໂພຊະນາການ ໄດ້ປະເມີນປະລິມານພະລັງງານອາຫານທີ່ຄົນໃນໄວອາຍຸ ແລະ ເພດ ທີ່ເຮັດກິດຈະກຳໃນລະດັບຕ່າງໆກັນ ໃນສະພາບວັດທະນະທຳທີ່ແຕກຕ່າງກັນ ມີຄວາມຕ້ອງການ ເພື່ອເຮັດໃຫ້ສາມາດດຳລົງຊີວິດໄດ້ຢ່າງມີສຸຂະພາບດີ ແລະ ແຂງແຮງ. ເມື່ອຄົນບໍ່ສາມາດເຂົ້າເຖິງປະລິມານພະລັງງານອາຫານທີ່ຕ້ອງການໄດ້ຢ່າງພຽງພໍ ເພື່ອໃຫ້ສາມາດເຮັດກິດຈະກຳໃນລະດັບ ປົກກະຕິໄດ້, ພວກເຂົາເຈົ້າຈະຮູ້ສຶກຫິວ. ຖ້າຫາກສະຖານະການດັ່ງກ່າວ ສືບຕໍ່ຍືດເຍື້ອເປັນເວລາດົນນານ, ມັນຈະພາໃຫ້ເຂົາເຈົ້າ ປະສົບບັນຫາການຂາດໂພຊະນາການ. ການຂາດພະລັງງານແບບຊ້ຳເຮື້ອ ອາດນຳໄປສູ່ການຫຼຸດຜ່ອນກິດຈະກຳທີ່ນຳໃຊ້ຮ່າງກາຍ, ເຮັດໃຫ້ ນ້ຳໜັກຫຼຸດລົງ ຫຼື ທັງສອງຢ່າງ. ໃນຮູບແບບທີ່ຮຸນແຮງ, ການຂາດພະລັງງານແບບຊ້ຳເຮື້ອ ອາດພາໃຫ້ບັ່ນທອນສຸຂະພາບເຮັດໃຫ້ຈ່ອຍຜອມ ແລະ ສຸດທ້າຍອາດພາໃຫ້ເສຍຊີວິດໄດ້. ຄວາມອຶດຫິວ ບໍ່ໄດ້ມີຄວາມໝາຍຄືກັນກັບການຂາດສານອາຫານ ຫຼື ໂພຊະນາການຕ່ຳ, ແຕ່ວ່າ ເປັນການຊ້ຳຊ້ອນກັນກັນລະຫວ່າງສອງອາການດັ່ງກ່າວ. (CFS 2012a)

***ໂພຊະນາການ:*** ໂພຊະນາການ ແມ່ນຜົນມາຈາກປະລິມານອາຫານທີ່ເຮົາໄດ້ຮັບ ແລະ ການນໍາໃຊ້ປະໂຫຍດຈາກສານອາຫານຂອງຮ່າງກາຍ. ໂພຊະນາການທີ່ດີ ຈະຊ່ວຍສ້າງຮ່າງກາຍໃຫ້ມີສຸຂະພາບດີ ແລະ ສຸຂະພາບຈິດທີ່ດີ. ມັນຈະມີຄວາມປອດໄພເມື່ອການບໍລິໂພກອາຫານ, ການດູດຊຶມ ແລະ ການນໍາໃຊ້ປະໂຫຍດຈາກສານອາຫານ ຊ່ວຍໃຫ້ໄດ້ຮັບ ສານອາຫານທີ່ຈໍາເປັນທັງໝົດໃນຈໍານວນທີ່ຕ້ອງການ. ໂພຊະນາ ການທີ່ບໍ່ດີ ຈະເຮັດໃຫ້ສຸຂະພາບຈິດບໍ່ດີ ແລະ ມີສາເຫດມາຈາກການຂາດແຄນທາງກາຍະພາບ, ການເຂົ້າເຖິງທາງເສດຖະກິດ-ສັງຄົມ ຫຼື ສະລິລະວິທະຍາ ໃນປະລິມານທີ່ເໝາະສົມຂອງພະລັງງານຈາກອາຫານ ແລະ ສານອາຫານ. ຜົນທີ່ຕາມມາຂອງໂພຊະນາການທີ່ບໍ່ດີ ອາດຈະ ເຮັດໃຫ້ການພັດທະນາຮ່າງກາຍ ແລະ ມັນສະໜອງມີຄວາມບົກພ່ອງ, ພູມຄຸ້ມກັນຫຼຸດລົງ, ເພີ່ມຄວາມສ່ຽງໃນການເກີດພະຍາດ, ຫຼຸດຜ່ອນຄວາມສາມາດໃນການເຮັດວຽກ ແລະ ຫຼຸດຜ່ອນສະມັດຕະພາບໃນການຜະລິດ. ຍ້ອນປໍລະສິດ, ສຸຂະອະນາໄມທີ່ບໍ່ດີ ແລະ ເຊື້ອພະຍາດຕ່າງໆ ຈະເຮັດໃຫ້ຄວາມສາມາດໃນການດູດຊຶມສານອາຫານຂອງຮ່າງກາຍ ແລະ ການນໍາໃຊ້ປະໂຫຍດຈາກສານອາຫານ ທີ່ບໍລິໂພກນັ້ນ ຫຼຸດລົງ, ການສະໜອງອາຫານຢ່າງປອດໄພ, ການດື່ມນໍ້າສະອາດ, ສະພາບແວດລ້ອມທີ່ຖືກອະນາໄມ, ສຸຂະ ພາບທີ່ແຂງແຮງ, ການສຶກສາ ແລະ ການເບິ່ງແຍງສຸຂະພາບ ແມ່ນມີຄວາມຈໍາເປັນເພື່ອໂພຊະນາການທີ່ດີ, ພ້ອມກັບອາຫານທີ່ສົມດູນ. ໂພຊະນາການທີ່ເໝາະສົມທີ່ສຸດ ຈະຊ່ວຍສະໜັບສະໜູນການພັດທະນາ ເພື່ອໃຫ້ສາມາດ ພັດທະນາສັກກະຍະພາບທາງພັນທຸກໍາຂອງແຕ່ ລະຄົນ ຢ່າງເຕັມຮູບແບບ (CFS 2012a).

***ຄວາມທຸກຍາກ:*** ໂດຍອີງໃສ່ລະດັບເສັ້ນຄວາມທຸກຍາກສາກົນທີ່ໄດ້ຮັບການຍອມຮັບ, ຄວາມທຸກຍາກໝາຍເຖິງທຸກຄົນທີ່ດໍາລົງຊີວິດ ຢູ່ໂດຍມີລາຍໄດ້ສະເລ່ຍຕໍ່ມື້ຕໍ່າກວ່າ 1.25 ໂດລາສະຫະລັດ. ນອກເໜືອຈາກຕົວຊີ້ວັດທາງການເງິນ, ຄວາມທຸກຍາກຍັງໝາຍເຖິງບຸກຄົນຫຼືທຸກຄົນທີ່ບໍ່ສາມາດຕອບສະໜອງຄວາມຕ້ອງການຂັ້ນຕໍ່າສຸດຂອງຕົນໄດ້ບໍ່ວ່າຈະແມ່ນລາຍຮັບຫຼືການບໍລິໂພກ. ຄວາມທຸກຍາກບັ່ນທອນຂີດຄວາມສາມາດຂອງບຸກຄົນ ໃນການເຮັດໜ້າທີ່ຢູ່ໃນສັງຄົມຢ່າງເຕັມສ່ວນ (World Bank, 2009a). ໃນສະພາບການຂອງລາວ, ຄວາມທຸກຍາກໄດ້ຖືກກໍານົດໄວ້ໃນ ດໍາລັດ ສະບັບເລກທີ 309/ນຍ ລົງວັນທີ 24 ພະຈິກ 2013, ເຊິ່ງດໍາລັດດັ່ງກ່າວ ໄດ້ກໍານົດມາດຕະຖານ ກ່ຽວກັບຄວາມທຸກຍາກ ສໍາລັບໄລຍະ 2012-2015 (ຫ້ອງການສໍານັກງານນາຍົກລັດຖະມົນຕີ 2013). ເສັ້ນຄວາມທຸກຍາກແຫ່ງຊາດ ແມ່ນໄດ້ຮັບການກໍານົດດ້ວຍລາຍຮັບຕໍ່ເດືອນຕໍ່ຄົນ ຢູ່ທີ່ 180,000 ກີບ (22.05 ໂດລາສະຫະລັດ) ຫຼື ໜ້ອຍກວ່າ ສໍາລັບເຂດຊົນນະບົດ ແລະ 240,000 ກີບ (30 ໂດລາສະຫະລັດ) ຫຼື ຕໍ່າກວ່າ ສໍາລັບເຂດຕົວເມືອງ. ຍ້ອນຄວາມແຕກຕ່າງລະຫວ່າງເສັ້ນຄວາມທຸກຍາກແຫ່ງຊາດ ແລະ ເສັ້ນຄວາມທຸກຍາກສາກົນ, ຄວາມທຸກຍາກ ຢູ່ ສປປ ລາວ ໄດ້ຮັບການວັດແທກໂດຍທຽບກັບທັງສອງດັດຊະນີ (ລັດຖະບານລາວ ແລະ UN 2013).

***ການປົກປ້ອງທາງສັງຄົມ:*** ການປົກປ້ອງທາງສັງຄົມ ບັນຍາຍເຖິງທຸກໆການລິເລີ່ມຕ່າງໆ ທີ່: (1) ສະໜອງລາຍຮັບ (ເງິນສົດ) ຫຼື ການບໍລິໂພກ (ອາຫານ) ທີ່ຖ່າຍໂອນໃຫ້ຄົນທຸກຍາກ; (2) ປົກປ້ອງຜູ້ທີ່ດ້ອຍໂອກາດຈາກຄວາມສ່ຽງໃນການດໍາລົງຊີວິດ; (3) ເສີມສ້າງສະຖານະພາບ ທາງສັງຄົມໃຫ້ເຂັ້ມແຂງ ແລະ ສິດທິຕ່າງໆທີ່ຖືກກີດກັ້ນ ແລະ ດ້ອຍໂອກາດ. (Devereux ແລະ Sabates-Wheeler 2004, ຖືກອ້າງອີງໃນ CFS 2012b).

***ຄວາມຍືນຍົງ:*** ການພັດທະນາມະນຸດ ເຊິ່ງຕອບສະໜອງໄດ້ຕາມຄວາມຕ້ອງການປະຈຸບັນ ໂດຍບໍ່ສູນເສຍຄວາມສາມາດຂອງຄົນລຸ້ນຫຼັງທີ່ຈະສາມາດຕອບສະໜອງຄວາມຕ້ອງການຂອງເຂົາເຈົ້າໄດ້ໃນອະນາຄົດ. ການພັດທະນາແບບຍືນຍົງ ຮຽກຮ້ອງໃຫ້ມີການເຊື່ອມສານລະຫວ່າງ ການພັດທະນາເສດຖະກິດ ແລະ ຄວາມເທົ່າທຽມກັນທາງສັງຄົມ ແລະ ການຄຸ້ມຄອງສິ່ງແວດລ້ອມ. (UN 2010)

# *ຄຳຫຍໍ້*

| | |
|---|---|
| ADB | ທະນາຄານ ພັດທະນາອາຊີ |
| ADS | ຍຸດທະສາດການພັດທະນາກະສິກຳ ຮອດປີ 2025 |
| AEC | ປະຊາຄົມເສດຖະກິດ ອາຊຽນ |
| APTERR | ອົງການສຳຮອງເຂົ້າສຸກເສີນ ຂອງ ອາຊຽນ ບວກສາມ |
| ASEAN | ສະມາຄົມປະຊາຊາດແຫ່ງອາຊີຕາເວັນອອກສ່ຽງໃຕ້ |
| ASEAN DSP | ຖະແຫຼງການອາຊຽນ ວ່າດ້ວຍການຄຸ້ມຄອງທາງສັງຄົມ |
| CBD | ອະນຸສັນຍາ ວ່າດ້ວຍການຄູ້ມຄອງຊີວະນາໆພັນ |
| CEB | ປະທານຄະນະກຳມະການບໍລິຫານ |
| CEDAW | ອະນຸສັນຍາ ວ່າດ້ວຍການກຳຈັດການເລືອກປະຕິບັດຕໍ່ແມ່ຍິງໃນທຸກຮູບແບບ |
| CFS | ຄະນະກຳມະການຄ້ຳປະກັນສະບຽງອາຫານໂລກ |
| CGIAR | ສະພາທີ່ປຶກສາດ້ານການວິໄຈກະສິກຳນາໆຊາດ |
| COP | ການປະຊຸມລັດພາຄີ ອະນຸສັນຍາສະຫະປະຊາຊາດ |
| CSO | ອົງການຈັດຕັ້ງສັງຄົມ |
| DAEC | ກົມສົ່ງເສີມກະສິກຳ ແລະ ສະຫະກອນ |
| DAFO | ຫ້ອງການກະສິກຳ ແລະ ປ່າໄມ້ເມືອງ |
| DDG | ຮອງຫົວໜ້າກົມ |
| DDMCC | ກົມຄຸ້ມຄອງໄພພິບັດ ແລະ ການປ່ຽນແປງດິນຟ້າອາກາດ |
| DG | ຫົວໜ້າກົມ |
| DMH | ກົມອຸຕຸນິຍົມ ແລະ ອຸທົກກະສາດ |
| DP | ຄູ່ຮ່ວມພັດທະນາ |
| EU | ສະຫະພັນເອີລົບ |
| FAO | ອົງການອາຫານ ແລະ ການກະເສດ |
| FNS | ຄວາມໝັ້ນຄົງທາງດ້ານສະບຽງອາຫານ ແລະ ໂພຊະນາການ |
| GCF | ກອງທຶນສະພາບພູມິອາກາດສີຂຽວ |
| GDP | ລວມຍອດຜະລິດຕະພັນພາຍໃນ |
| GNP | ລວມຍອດຜະລິດຕະພັນແຫ່ງຊາດ |
| GoL | ລັດຖະບານ ແຫ່ງ ສປປ ລາວ |
| HLPE | ກຸ່ມຜູ້ຊ່ຽວຊານລະດັບສູງຂອງຄະນະກຳມະການອາຫານໂລກ |
| IFAD | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| IFI | ສະຖາບັນການເງິນສາກົນ |
| INDC | ການກຳນົດເປົ້າໝາຍການມີສ່ວນຮ່ວມໃນລະດັບປະເທດຢ່າງມຸ່ງໝັ້ນ |
| IRRI | ສະຖາບັນວິໄຈເຂົ້ານາໆຊາດ |
| IUCN | ອົງການສາກົນ ເພື່ອການອະນຸລັກທຳມະຊາດ ແລະ ຊັບພະຍາກອນທຳມະຊາດ |
| IWGIA | ຄະນະປະຕິບັດງານສາກົນເພື່ອກິດຈະການຊົນເຜົ່າພື້ນເມືອງ |
| IWMI | ສະຖາບັນຄຸ້ມຄອງນ້ຳສາກົນ |
| IYCF | ການລ້ຽງດູເດັກອ່ອນ ແລະ ເດັກນ້ອຍ |
| LANN | ການເຊື່ອມໂຍງລະຫວ່າງກະສິກຳ, ໂພຊະນາການ ແລະ ຊັບພະຍາກອນທຳມະຊາດ |
| LDC | ປະເທດດ້ອຍພັດທະນາ |
| LEAP | ໂຄງການສົ່ງເສີມກະສິກຳ |
| LIWG | ຄະນະປະຕິບັດງານດ້ານບັນຫາທີ່ດິນ |
| LNMC | ຄະນະກຳມະການແມ່ນ້ຳຂອງແຫ່ງຊາດລາວ |
| LSIS | ການສຳຫຼວດດັດສະນີໝາຍ ສັງຄົມລາວ |
| LWU | ສະຫະພັນແມ່ຍິງລາວ |
| LURAS | ໂຄງການສົ່ງເສີມການໃຫ້ບໍລິການຄຳປຶກສາດ້ານກະສິກຳ ຊົນນະບົດເຂດເນີນສູງ ຂອງລາວ |
| MAF | ກະຊວງກະສິກຳ ແລະ ປ່າໄມ້ |
| MCH | ສຸຂະພາບແມ່ ແລະ ເດັກ |

| | |
|---|---|
| MDG | ເປົ້າໝາຍສະຫັດສະວັດດ້ານການພັດທະນາ |
| MDG MAF | ການປະຕິບັດໜ້າວຽກເລັ່ງດ່ວນ ເພື່ອເລັ່ງເປົ້າໝາຍສະຫັດສະວັດດ້ານການພັດທະນາ |
| MICS-NNS | ການສຳຫຼວດໂພຊະນາການແຫ່ງຊາດທີ່ມີຫຼາຍກຸ່ມເປັນຕົວຊີ້ວັດ |
| MICT | ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ |
| MoES | ກະຊວງສຶກສາທິການ ແລະ ກິລາ |
| MoF | ກະຊວງການເງິນ |
| MoH | ກະຊວງສາທາລະນະສຸກ |
| MPT | ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ |
| MLSW | ກະຊວງແຮງງານ ແລະ ສະຫວັດດີການສັງຄົມ |
| MoNRE | ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ |
| MoST | ກະຊວງວິທະຍາສາດ ແລະ ເທັກໂນໂລຊີ |
| MPI | ກະຊວງແຜນການ ແລະ ການລົງທຶນ |
| MRCS | ກອງເລຂາ ຄະນະກຳມະທິການແມ່ນ້ຳຂອງສາກົນ |
| NABD | ແຜນງານແຫ່ງຊາດ ວ່າດ້ວຍ ຊີວະນາໆພັນກະສິກຳ |
| NAFES | ກອງສົ່ງເສີມກະສິກຳ ແລະ ປ່າໄມ້ແຫ່ງຊາດ |
| NAFRI | ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ |
| NAPA | ແຜນດຳເນີນງານແຫ່ງຊາດໃນການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ |
| NC | ການສື່ສານແຫ່ງຊາດ (ຕໍ່ ອະນຸສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງ ດິນຟ້າອາກາ) |
| NCAW | ຄະນະກຳມາທິການ ເພື່ອຄວາມກ້າວໜ້າຂອງແມ່ຍິງແຫ່ງຊາດ |
| NCSA | ການປະເມີນຂີດຄວາມສາມາດດ້ວຍຕົນເອງລະດັບປະເທດ |
| NDMO | ຫ້ອງການຄຸ້ມຄອງໄພພິບັດແຫ່ງຊາດ |
| NERI | ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ |
| NFSCDC | ຄະນະກຳມະການແຫ່ງຊາດ ວ່າດ້ວຍການຄ້ຳປະກັນທາງດ້ານສະບຽງອາຫານ ແລະ<br>ການພັດທະນາສິນຄ້າ |
| NGOs | ອົງການຈັດຕັ້ງທີ່ບໍ່ສັງກັດລັດ |
| NLMA | ຄະນະກຳມະການຄຸ້ມຄອງທີ່ດິນແຫ່ງຊາດ |
| NNC | ຄະນະກຳມະການແຫ່ງຊາດດ້ານໂພຊະນາການ |
| NNF | ກອງປະຊຸມປຶກສາຫາລືດ້ານໂພຊະນາການແຫ່ງຊາດ |
| NNSPoA | ແຜນຍຸດທະສາດ ແລະ ແຜນປະຕິບັດການ ດ້ານໂພຊະນາການແຫ່ງຊາດ |
| NPA | ສະມາຄົມບໍ່ຫວັງຜົນກຳໄລ |
| NPoA | ແຜນປະຕິບັດງານແຫ່ງຊາດ |
| NSAW | ຍຸດທະສາດແຫ່ງຊາດເພື່ອຄວາມກ້າວໜ້າຂອງແມ່ຍິງ |
| NSCCC | ຄະນະກຳມະການຊີ້ນຳແຫ່ງຊາດ ກ່ຽວກັບການປ່ຽນແປງທາງດ້ານດິນຟ້າອາກາດ |
| NSEDP | ແຜນພັດທະນາເສດຖະກິດ-ສັງຄົມ |
| NSGE | ຍຸດທະສາດແຫ່ງຊາດ ເພື່ອຄວາມສະເໝີພາບລະຫວ່າງຍິງ-ຊາຍ |
| NTFP | ຜະລິດຕະພັນເຄື່ອງປ່າຂອງດົງ |
| NUOL | ມະຫາວິທະຍາໄລ ແຫ່ງຊາດລາວ |
| ODA | ທຶນຊ່ວຍເຫຼືອເພື່ອການພັດທະນາ |
| PAFO | ພະແນກກະສິກຳ ແລະ ປ່າໄມ້ ແຂວງ |
| RTM | ກອງປະຊຸມໂຕະມົນ |
| SCC | ຍຸດທະສາດດ້ານການປ່ຽນແປງດິນຟ້າອາກາດ |
| SDG | ເປົ້າໝາຍການພັດທະນາແບບຍືນຍົງ |
| SDGF | ກອງທຶນສຳລັບເປົ້າໝາຍການພັດທະນາແບບຍືນຍົງ |
| SEZ | ເຂດເສດຖະກິດພິເສດ |
| SSWGFAB | ຄະນະປະຕິງານຍ່ອຍ ກ່ຽວກັບການປູກຝັງ ແລະ ທຸລະກິດກະສິກຳ |
| SUN ການຜັນ | ຂະຫຍາຍໂພຊະນາການ |
| SWG-ARD | ຄະນະປະຕິງານຍ່ອຍ ກ່ຽວກັບກະສິກຳ ແລະ ພັດທະນາຊົນນະບົດ |
| TABI | ໂຄງການລິເລີ່ມ ຊີວະນາໆພັນ ກະສິກຳ |
| TNC | ແຜນງານສື່ສານແຫ່ງຊາດ ສະບັບທີສາມ |
| TWG | ຄະນະປະຕິບັດງານ |

| | |
|---|---|
| UN | ສະຫະປະຊາຊາດ |
| UNDAF | ກອບຄວາມຊ່ວຍເຫລືອ ເພື່ອການພັດທະນາ ແຫ່ງສະຫະປະຊາຊາດ |
| UNDP | ອົງການສະຫະປະຊາຊາດ ເພື່ອການພັດທະນາ |
| UNFCCC | ອະນຸສັນຍາສະຫະປະຊາຊາດ ວ່າດ້ວຍການປ່ຽນແປງ ດິນຟ້າອາກາດ |
| UNICEF | ອົງການ ສະຫະປະຊາຊາດ ສຳລັບເດັກ |
| USD | ສະກຸນເງິນໂດລາສະຫະລັດ |
| WASH | ນ້ຳ, ສຸຂະອະນາໄມ ແລະ ຄວາມສະອາດ |
| WB | ທະນາຄານໂລກ |
| WCS | ປະຊາຄົມອະນຸລັກສາກົນ |
| WLE | ນ້ຳ, ດິນ ແລະ ລະບົບນິເວດ |
| WFP | ອົງການອາຫານໂລກ |
| WHO | ອົງການ ອະນາໄມໂລກ |
| ອຊສ | ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ |
| WWF | ອົງການ ກອງທຶນອະນຸລັກສັດປ່າ / ກອງທຶນສັດປ່າສາກົນ |
| ZHC | ການລຶບລ້າງຄວາມອຶດຫິວແບບຂາດຕົວ |

# ເອກະສານຄົ້ນຄວ້າ


ASEAN (2009) ASEAN Integrated Food Security (AIFS) Framework and Strategic Plan of Action on Food Security in the ASEAN Region (SPA-FS) 2015-2020. Jakarta: ASEAN

ASEAN (2013) ASEAN Declaration on Strengthening Social Protection. ASEAN: Bandar Seri Begawan, Brunei Darussalam.

ASEAN Sustainable Agrifood Systems (2016), 'Training on Food and Nutrition Security in Lao PDR' [online] Available: http://www.asean-agrifood.org/training-on-food-and-nutrition-security-in-lao-pdr/ [15 June 2016]

Asian Development Bank (2015) Key Indicators for Asia Pacific: Lao PDR [online]: http://www.adb.org/sites/default/files/publication/175162/lao.pdf [10 May 2016]

Barbier, E (2003) 'The Role of Natural Resources in Economic Development', Australian Economic Papers, 42 (2), 253-272

CARE (2015) Remote Ethnic Women Program Strategy. CARE: Vientiane

Committee on World Food Security (2012a) Coming to Terms with Terminology. 39th Session, Rome, Italy, 15-20 October 2012. FAO: Rome

Committee on World Food Security (2012b) Social protection for food security: a report by the High Level Panel of Experts on Food Security and Nutrition. CFS: Rome

COP21 (2015) [online] Available: http://www.cop21paris.org/ [10 May 2016]

Department of Statistics and UNICEF (2008) Lao PDR Multiple Indicator Cluster Survey 2006, Final Report. Vientiane, Lao PDR: MPI.

FAO (2015) Natural Capital Impacts in Agriculture: Supporting Better Business Decision-Making. Rome: FAO

FAO (2016a) Climate change and food security: risks and responses. Rome: FAO

FAO (2016b) FAO and the 17 Sustainable Development Goals. [online] Available: https://sustainabledevelopment.un.org/content/documents/2205FAOpercent20andpercent20thepercent2017percent 20SDGs.pdf [15 June 2016]

Foppes J, Keonakone T, Chanthavong N, Chitpanya S, Phengkhammy A (2011) Understanding Food Security in Northern Laos. Vientiane: NAFRI.

ForestCarbonAsia (2016) 'Strategy for Agricultural Development 2011 to 2020 (Lao PDR)' [online] Available:http://www.forestcarbonasia.org/other-publications/strategy-for-agricultural-development-2011-to-2020/ [15 June 2016]

Government of Lao PDR (2004) National Biodiversity Strategy and Action Plan. GoL: Vientiane.

Government of Lao PDR (2009) National Adaptation Programme of Action to Climate Change. UN/

GoL: Vientiane
Government of Lao PDR (2010) Strategy on Climate Change in Lao PDR. GoL: Vientiane

Government of Lao PDR (2015a) National Nutrition Strategy to 2025 and Plan of Action 2016-2020. GoL: Vientiane

Government of Lao PDR (2015b) The Millennium Development Goals and Lessons Learnt for the post-2015 Period: A Summary Review. GoL: Vientiane

Government of Lao PDR and United Nations (2013) The Millennium Development Goals Progress Report. GoL and UN: Vientiane

Government of Lao PDR and United Nations (2015). Evaluation Report: United Nations Development Assistance Framework 2012 – 2016. UN: Vientiane
Guardian (2016) 'Live Q&A: Financing the SDGs - where will the money come from?' [online] Available:http://www.theguardian.com/global-development-professionals-network/2016/jan/15/live-qa-financing-the-sdgs-where-will-the-money-come-from [15 June 2016]

IFPRI, Concern Worldwide, Welt Hunger Hilfe (2015) Global Hunger Index. Washington, DC: IFPRI
International Food Policy Research Institute (2016) Global Nutrition Report 2016: From Promise to Impact: Ending Malnutrition by 2030. Washington, DC: IFPRI.

ILO (2015) Preliminary ABND report: Assessment-Based National Dialogue on Social Protection in Lao PDR (October 2015). Vientiane

International Panel of Experts on Sustainable Food Systems (2016) From Uniformity to Diversity: A paradigm shift from industrial agriculture to diversified agroecological systems. IPES Food: Brussels

International Work Group for Indigenous Affairs (2016) Laos Yearly Update. [online] Available: http://www.iwgia.org/images/stories/sections/regions/asia/documents/IW2016/Laos_IW2016_web_redu.pdf [15 June 2016]

IPCC (2016) Intergovernmental Panel on Climate Change. [online] Available: http://www.ipcc.ch/ [10 May 2016]
IUCN (2011) NBSAP Assessment: An Assessment of Lao PDR's National Biodiversity Strategy to 2020 and Action Plan to 2010. Gland, Switzerland: IUCN

Johnson A, Krahn J, Seatun S (2010) Finding the Linkages between Wildlife Management and Household Food Consumption in the Uplands of Lao People's Democratic Republic. Wildlife Conservation Society: Vientiane

LADLF (2015) Sam Sang in practice: early lessons from pilot implementation. Australian Aid & Adam Smith International: Vientiane

Land Issues Working Group (2012) Managing Land, Forests and Natural Resources: Growing in Equity or Growing Inequity? LIWG: Vientiane

Lao Statistics Bureau (2012) Food Security in Lao PDR: A Trend Analysis. MAF: Vientiane

LURAS (2016) The toxic landscape: LURAS Discussion Paper. Vientiane.

Met Office and World Food Programmme (2015) Climate impacts on food security and nutrition: A review of existing knowledge [online] Available: http://documents.wfp.org/stellent/groups/public/documents/communications/wfp258981.pdf [10 May 2016]

Ministry of Agriculture (2015a) Agriculture Development Strategy to 2025 and Vision to 2030. MAF: Vientiane

Ministry of Agriculture (2015b) Strategy for Gender Equality in Agriculture and Forestry Sector 2016-2025, Vision Towards 2030 MAF: Vientiane

Ministry of Agriculture and FAO (2013) Risk and Vulnerability Survey. MAF and FAO: Vientiane.

Ministry of Agriculture and LSB (2012) Lao Census of Agriculture 2010/11 Highlights. Vientiane: MAF/LSB.

Ministry of Agriculture (2014) Lao Census of Agriculture: Analysis of Selected Themes. MAF: Vientiane

Ministry of Education and Sports (2015) Vision 2030, Strategy 2025 and Education and Sports VIII Five Year Development Plan 2016-2017 MoES: Vientiane

Ministry of Health (2012) Lao Social Indicators Survey 2011-2012. MOH: Vientiane

Ministry of Health (2016) Nutrition Stakeholder & Intervention Mapping: Key Findings. Presentation to Nutrition Development Partners Meeting, 12 January 2016, Vientiane

Ministry of Natural Resources and Environment (2012) National Rio+20 Report for Lao PDR. Vientiane.

Ministry of Natural Resources and Environment (2016) Fifth National Report to the United Nations Convention on Biological Diversity. MoNRE: Vientiane

Ministry of Natural Resources and Environment and World Food Programme (2016) CLEAR: Consolidated Livelihood Exercise for Analysing Resilience. Vientiane: WFP

Ministry of Planning and Investment (2015a) 12th High Level Round Table Meeting Background Document.

Ministry of Planning and Investment (2015b) Study to Analyze Institutional Constraints to Effective Implementation of the National Nutrition Policy in Lao PDR. Vientiane

Ministry of Planning and Investment (2016) The Eighth National Socio-Economic Development Plan (2016-2020) Vientiane: MPI

MPI (2015) 'National Roundtable Process: Agriculture and Rural Development' [online] Available: http://rtm.org.la/themes/agriculture-rural-development/ [15 June 2016]

NAFRI (2009) National Adaptation Programme of Action (NAPA): Improving the Resilience of the Agriculture Sector to Climate Change Impacts. Vientiane.

NAFRI (2015) Agriculture and Forestry Research Strategy 2025 and 'Vision up to 2030'. Vientiane

NASA (2016) Global Climate Change. [online] Available: http://climate.nasa.gov/ [10 May 2016]

National Food Security and Commodity Development Committee (2015) Zero Hunger Challenge Road Map. Vientiane: GoL.

National Nutrition Committee (2015) Report on First National Nutrition Forum. GoL: Vientiane

NERI and UNICEF (2013) The Economic Consequences of Malnutrition in Lao PDR: A Damage Assessment Report. NERI: Vientiane

NOAA (2016) National Oceanic and Atmospheric Administration. [online] Available: http://www.noaa.gov/ [10 May 2016]

Oxfam (2015) Harmless Harvest: How sustainable agriculture can help ASEAN countries adapt to a changing climate. Oxford, UK: Oxfam

Plan International and Child Fund (2011) Social and Cultural Barriers To Rural Adolescent Ethnic Community Girls Accessing Lower Secondary Schools in Northern Laos. Plan and Child Fund: Vientiane

Prime Minister's Office (2013) PM Decree No 309 on Poverty and Development Standards for 2012-2015. Prime Minster's Office: Vientiane

Prime Minister's Office (2016) PM Decree No. 79. Vision 2030, National Strategy for Gender Equality 2016-2025 and the Third Five Year National Plan of Action for Gender Equality 2016-2020. Prime Minister's Office: Vientiane

Sector Working Group- Agriculture and Rural Development (2015) Progress Report 2015 (draft Sept 2015). Vientiane

SREP (2016) Scaling Up Renewable Energy Program. [online] Available: https://www-cif.climateinvestmentfunds.org/fund/scaling-renewable-energy-program [10 May 2016]

Sub-sector Working group on Farmers and Agribusiness (2016) 10 Years of Supporting Policy Dialogue for Farmers and Agribusiness, SSWG-FAB meeting, 13 May 2016

SUN Network (2015a) 2015 Annual Report [online] Available: http://scalingupnutrition.org/wp-content/uploads/2015/10/SUN_Report2015_EN_Lao_PDR.pdf [10 May 2016]

SUN Network (2015b) 'Nutrition at COP21, the UN Climate Change Conference in Paris, France', [online] Available: http://scalingupnutrition.org/news/nutrition-at-cop21-the-un-climate-change-conference-in-paris-france#.VzGQ7-SW2-c [10 May 2016]

SUN Network (2016) 'Lao PDR' [online] Available: http://scalingupnutrition.org/sun-countries/lao-pdr [30 June 2016]

UN Women (2001) 'Concepts and Definitions', [online] Available: http://www.un.org/womenwatch/osagi/conceptsandefinitions.htm [15 June 2016]

UNDP (2015) 'Human development Reports: Country Profiles: Lao PDR' [online] Available: http://hdr.undp.org/en/countries/profiles/LAO [15 June 2016]

UNDP (2015) Gender Inequality Index [online] Available: http://hdr.undp.org/sites/default/files/hdr_2015_statistical_annex.pdf [10 May 2016]

UNESCAP (2014) Lao PDR: Country Profile [online] Available: http://www.unescap.org/sites/default/files/Lao_PDR_Country-profiles_SYB2014.pdf [10 May 2015]

UNFPA(2016) 'Landmark Report: Violence against women a 'hidden scourge' in Lao PDR' [online] Available: http://countryoffice.unfpa.org/lao/2016/03/10/13622/landmark_report_violence_against_women_a_lsquo_hidden_scourge_rsquo_in_lao_pdr/ [28 June 2016]
UNICEF (2015) 'At a Glance: Lao People's Democratic Republic', [online] Available: http://www.unicef.org/infobycountry/laopdr_statistics [15 June 2016]

UNICEF (2016) 'What we do: Nutrition' [online] Available: http://www.unicef.org/laos/activities_22349.html [30 June 2016]

United Nations (1992) United Nations Framework Convention on Climate Change. New York: United Nations

United Nations (2010) 'Sustainable Development: From Brundtland to Rio 2012' [online] Available: http://www.un.org/wcm/webdav/site/climatechange/shared/gsp/docs/GSP1-6_Background%20on%20Sustainable%20Devt.pdf [15 June 2016]

United Nations (2015a) Progress Report: United Nations Development Assistance Framework in Lao PDR. Vientiane: United Nations

United Nations (2015b) Country Analysis Report: Analysis to inform the Lao People's Democratic Republic–United Nations Partnership Framework (2017-2021). Vientiane.

United Nations (2015c) Discussion Paper: The Sustainable Development Goals in the context of the Lao People's Democratic Republic. United Nations: Vientiane.

United Nations (2015d) A Partnership for Sustainable Development: Lao PDR – United Nations Partnership Framework 2017-2021. Vientiane

United Nations (2015e) UN Sustainable Development Summit: WFP Briefing and Key Messages. United Nations: New York

United Nations (2016) 2015 Progress Report: United Nations Development Assistance Framework in Lao PDR. Vientiane: United Nations

United Nations SDGF (2016) 'From MDGs to SDGs', [online] Available: http://www.sdgfund.org/mdgs-sdgs [15 June 2016]

UNSCN (2013) SCN News: Changing Food Systems for Better Nutrition. Number 40, SCN: Geneva
UNSCN (2014) Country Level Programming In Nutrition Sensitive Agriculture. [online] http://www.unscn.org/files/Publications/Briefs_on_Nutrition/UN_agencies_BRIEFS_nutrition_sensitive_agriculture_FINAL.pdf [10 May 2016]
Vientiane Times (2010) 'Govt launches strategy to tackle global warming' 30 March 2010

Warr P, Rasphone S, Menon J (2015) Two Decades of Rising Inequality and Declining Poverty in the Lao People's Democratic Republic. ADB Economics Working Paper Series #461, Manila: ADB

Wickramasinghe U, Southavilay B, Hanephom S (2015) Smallholder Market Participation, Structural Transformation and Inclusive Growth in Lao People's Democratic Republic. Bogor, Indonesia: CASPA-ESCAP

Wilkinson D and Chanlivong N (2015). Study to Analyze Institutional Constraints to Effective Implementation of the National Nutrition Policy in Lao PDR, Phase 1 Report. MoH and MPI: Vientiane.

World Bank (2000) Beyond Economic Growth: Meeting the Challenges of Global Development. Washington DC: World Bank.

World Bank (2009a) Handbook on Poverty and Inequality. Washington DC: World Bank.

World Bank (2009b) Scaling Up Nutrition: What will it cost? Washington DC: World Bank

World Bank (2014a) 'Investing in the Next Generation: Children grow taller, and smarter, in rural villages of Lao PDR where all community members use improved sanitation' Water and Sanitation Program Research Brief, Vientiane: WSP/World Bank.

World Bank (2014b) 'Financing the Post-2015 Agenda: Toward a Shared Vision', [online} Available: http://www.worldbank.org/en/news/feature/2014/10/16/financing-the-post-2015-agenda-toward-a-shared-vision [16 June 2016]

World Bank, Lao Statistics Bureau, Australian Aid (2015) Drivers of Poverty Reduction in Lao PDR. Vientiane: World Bank

World Education, Health Poverty Action, Australian Aid, IDC (2015) Nutrition Baseline Report. Vientiane

World Food Programme (2007) Comprehensive Food Security and Vulnerability Analysis. Vientiane: WFP
World Food Programme (2013) Food and Nutrition Security Atlas of Lao PDR. Vientiane: WFP

World Food Programme (2015) Sustainable Development Goals: Quick Guide for WFP Staff. Rome: WFP

World Population Review (2016) 'Laos Population 2016', [online] Available: http://worldpopulationreview.com/countries/laos-population/ [15 June 2016]

